## ສາລະບານ


**ປະເພດ 1 ຊັບສິນຂອງທະນາຄານ ............................................................ 1**

ໝວດທີ 1 ເງິນສົດ ແລະ ໜີ້ຕ້ອງຮັບຈາກທະນາຄານອື່ນ ........................................ 1

ໝວດທີ 2 ໜີ້ຕ້ອງຮັບຈາກລູກຄ້າ ........................................................ 12

ໝວດທີ 3 ເງິນລົງທຶນໃນຫຼັກຊັບ ແລະ ຊັບສິນອື່ນໆ ............................................ 27

ໝວດທີ 4 ຊັບສິນຄົງທີ່ ........................................................ 43

**ປະເພດ 2 ໜີ້ສິນຂອງທະນາຄານ ............................................................ 58**

ໝວດທີ1 ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ ........................................ 58

ໝວດທີ 2 ໜີ້ຕ້ອງສົ່ງໃຫ້ລູກຄ້າ ........................................................ 65

ໝວດທີ 3 ໜີ້ຕ້ອງສົ່ງກ່ຽວກັບຫຼັກຊັບ ແລະ ໜີ້ຕ້ອງສົ່ງອື່ນໆ ........................................ 69

**ປະເພດ 3 ທຶນທະນາຄານ ............................................................ 78**

310 ທຶນຈົດທະບຽນ ........................................................ 78

320 ຄັງຂອງທະນາຄານ ........................................................ 79

330 ເງິນແຮເພື່ອຄວາມສ່ຽງ ແລະ ລາຍຈ່າຍ ........................................................ 80

340 ເງິນແຮຕາມຂໍ້ກຳນົດ ........................................................ 81

350 ຄັງສຳຮອງເພື່ອຄວາມສ່ຽງລວມຂອງທະນາຄານ ........................................ 82

360 ໜີ້ຕ້ອງສົ່ງສຳຮອງ ........................................................ 82

370 ທຶນຊ່ວຍໜູນ ແລະ ເງິນທຶນທີ່ລັດໄດ້ຈັດສັນ ........................................ 83

380 ກຳໄລ - ຂາດທຶນສະສົມ ........................................................ 84

390 ຜົນໄດ້ຮັບໃນປີ ........................................................ 84

**ປະເພດ 4 ລາຍຈ່າຍ ............................................................ 86**

410 ລາຍຈ່າຍໃນການທຸລະກິດທະນາຄານ ........................................................ 86

420 ລາຍຈ່າຍທາງດ້ານພະນັກງານ ........................................................ 94

430 ລາຍຈ່າຍຄ່າພາສີ ແລະ ອາກອນ ........................................................ 95

440 ລາຍຈ່າຍບໍລິການທົ່ວໄປຈາກທາງນອກ ........................................................ 96

450 ລາຍຈ່າຍສຳຮອງອື່ນໆໃນການທຸລະກິດ ........................................................ 97

460 ຫັກຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າຂອງ ຊ.ຄ.ທ ທີ່ບໍ່ມີ ແລະ ມີຕົວຕົນ ........................ 98

470 ຫັກເງິນແຮຄ່າເສື່ອມມູນຄ່າ ແລະ ຂາດທຶນບ້ວງໜີ້ຕ້ອງຮັບເກັບຄືນບໍ່ໄດ້ ........................ 98

480 ລາຍຈ່າຍບັງເອີນ ( ຫຼື ຈ່າຍພິເສດ ) ........................................................ 100

490 ອາກອນກຳໄລ ........................................................ 101

**ປະເພດ 5 ລາຍຮັບ ............................................................ 102**

510 ລາຍຮັບໃນທຸລະກິດທະນາຄານ ........................................................ 102

550 ລາຍຮັບສຳຮອງອື່ນໆ ........................................................ 109

560 ເກັບຄືນຄ່າເສື່ອມມູນຄ່າຊັບສິນຄົງທີ່ ........................................................ 110

570 ເກັບຄືນເງິນແຮ ແລະ ໜີ້ທວງຍາກທີ່ໄດ້ຈົດເປັນການຂາດທຶນ ........................................ 110

580 ລາຍຮັບບັງເອີນ ( ຫຼື ລາຍຮັບພິເສດ ) ........................................................ 112

# ປະເພດ 1
# ຊັບສິນຂອງທະນາຄານ

ບັນຊີຕ່າງໆຢູ່ໃນປະເພດນີ້ ແມ່ນບັນຊີການເຄື່ອນໄຫວທາງດ້ານເງິນຕາ ລະຫວ່າງທະນາຄານ ແລະ ສະຖາບັນການເງິນອື່ນ ທີ່ຢູ່ທັງພາຍໃນ ແລະ ຕ່າງປະເທດ ຊຶ່ງກ່ຽວພັນກັບຊັບສິນຂອງທະນາຄານ ເຊັ່ນ: ເງິນສົດ ແລະ ທີ່ຖືວ່າຄືເງິນສົດ, ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ສະຖາບັນເງິນຝາກໄປສະນີ ແລະ ຄັງເງິນແຫ່ງຊາດ, ເງິນຝາກ ແລະ ເງິນໃຫ້ກູ້ຢືມລະຫວ່າງທະນາຄານ, ເງິນໃຫ້ກູ້ຢືມໂດຍມີມູນຄ່າຫຼັກຊັບຄໍ້າປະກັນ, ເງິນຈ່າຍລ່ວງໜ້າ, ໜີ້ທວງຍາກຈາກທະນາຄານ ແລະ ສະຖາບັນການເງິນອື່ນ, ສິນເຊື່ອທີ່ປ່ອຍໃຫ້ລູກຄ້າ, ເງິນໃຫ້ກູ້ຢືມແກ່ລູກຄ້າວິງການການເງິນ, ໜີ້ທວງຍາກຈາກລູກຄ້າ, ເງິນລົງທຶນໃນຫຼັກຊັບ, ເອກະສານອະນຸພັນທີ່ກຳນົດເງື່ອນໄຂ, ລູກໜີ້ອື່ນໆ, ເຄື່ອງໃນສາງ ແລະ ການນຳໃຊ້ຕ່າງໆ, ບັນຊີລໍຖ້າສະສາງດ້ານຊັບສິນ, ແລະ ລາຍການອື່ນໆ, ເງິນໃຫ້ກູ້ຢືມສຳຮອງ, ເງິນລົງທຶນນຳວິສາຫະກິດໃນກຸ່ມ, ບໍລິສັດຮ່ວມທຶນ ແລະ ຫຼັກຊັບໃນກິດຈະການຄຸ້ມຄອງຫຼັກຊັບ, ທຶນທີ່ປະກອບໃຫ້ສາຂາຢູ່ຕ່າງປະເທດ, ຊັບສິນບັດພວມຊື້ ແລະ ພວມກໍ່ສ້າງ, ຊັບສິນບັດຄົງທີ່ໃນ ແລະ ນອກທຸລະກິດ, ສິນເຊື່ອເຊົ່າ-ຊື້ ແລະ ກິດຈະກຳປະເພດດຽວກັນ, ລາຍການເຄື່ອນໄຫວໃຫ້ເຊົ່າທຳມະດາ, ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າຂອງຊັບສິນອື່ນໆ.

ບັນຊີຊັບສິນຂອງທະນາຄານຖືກແບ່ງອອກເປັນ 4 ໝວດດັ່ງນີ້:

① ໝວດທີ 1 ເງິນສົດ ແລະ ໜີ້ຕ້ອງຮັບຈາກທະນາຄານອື່ນ

② ໝວດທີ 2 ໜີ້ຕ້ອງຮັບຈາກລູກຄ້າ

③ ໝວດທີ 3 ເງິນລົງທຶນໃນຫຼັກຊັບ ແລະ ຊັບສິນອື່ນໆ

④ ໝວດທີ 4 ຊັບສິນຄົງທີ່

## • ໝວດທີ 1 ເງິນສົດ ແລະ ໜີ້ຕ້ອງຮັບຈາກທະນາຄານອື່ນ

ບັນຊີ 110 ເງິນສົດ ແລະ ຖືວ່າຄືເງິນສົດ, ໃຊ້ເພື່ອບັນທຶກຈຳນວນເງິນສົດຊຶ່ງໃນນັ້ນລວມມີທະນະບັດ ແລະ ເງິນຫຼຽນທີ່ເປັນເງິນກີບ, ເງິນຕາຕ່າງປະເທດ, ຄຳ ຫຼື ວັດຖຸມີຄ່າອື່ນໆ ແລະ ໃບຢັ້ງຢືນຊັບຢູ່ໃນຄັງເຊັ່ນ: ແຊັກເດີນທາງ.

110 ເງິນສົດ ແລະ ຖືວ່າຄືເງິນສົດ

- 1101 ເງິນສົດ
  - 11011 ເງິນສົດໃນຄັງ
  - 11012 ເງິນສົດໃນຄັງຂອງໜ່ວຍບໍລິການຍ່ອຍ
  - 11013 ເງິນສົດໃນເຄື່ອງ ATM
  - 11016 ເງິນສົດກຳລັງເຄື່ອນຍ້າຍ
- 1103 ຄຳ ແລະ ວັດຖຸມີຄ່າອື່ນໆ
  - 11031 ຄຳ ແລະ ວັດຖຸມີຄ່າໃນຄັງ(ສາງ)ຂອງທະນາຄານ

11032 ຄຳ ແລະ ວັດຖຸມີຄ່າອື່ນໆ ໃນຄັງຂອງໜ່ວຍບໍລິການ

11033 ຄຳ ແລະ ວັດຖຸມີຄ່າອື່ນໆ ຝາກໄວ້ນຳບ່ອນອື່ນ

11034 ຄຳ ແລະ ວັດຖຸມີຄ່າອື່ນໆໃນລະຫວ່າງການປຸງແຕ່ງ

11036 ຄຳ ແລະ ວັດຖຸມີຄ່າອື່ນໆ ກຳລັງເຄື່ອນຍ້າຍ

1108 ໃບຢັ້ງຢືນຊັບເປັນເງິນຕາຕ່າງປະເທດ(ແຊັກເດີນທາງ)

11081 ໃບຢັ້ງຢືນຊັບຢູ່ໃນຄັງ

11083 ໃບຢັ້ງຢືນຊັບກຳລັງສົ່ງໄປຮຽກເກັບ

11086 ໃບຢັ້ງຢືນຊັບກຳລັງເຄື່ອນຍ້າຍ

ບັນຊີ 1101, 1103 ແລະ 1108 ບັນທຶກດັ່ງນີ້:

**ເບື້ອງໜີ້ຈິດ:** ຮັບເງິນສົດ, ຄຳ, ວັດຖຸມີຄ່າອື່ນໆ ແລະໃບຢັ້ງຢືນຊັບເປັນເງິນຕາຕ່າງປະເທດເຂົ້າຄັງ

**ເບື້ອງມີຈິດ:** ຈ່າຍເງິນສົດ, ຄຳ, ວັດຖຸມີຄ່າອື່ນໆ ແລະໃບຢັ້ງຢືນຊັບເປັນເງິນຕາຕ່າງປະເທດສົ່ງໄປຮຽກເກັບ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນສົດ, ຄຳ, ວັດຖຸມີຄ່າອື່ນໆ ແລະ ໃບຢັ້ງຢືນຊັບເປັນເງິນຕາຕ່າງປະເທດຄ້າງຄັງ ຫຼື ກຳລັງສົ່ງໄປຮຽກເກັບ

ບັນຊີ 112 ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ, ສະຖາບັນເງິນຝາກໄປສະນີລາວ ແລະ ຄັງເງິນແຫ່ງຊາດ. ບັນຊີນີ້ໃຊ້ເພື່ອຕິດຕາມຈຳນວນເງິນຝາກ ແລະ ຖອນຢູ່ທະນາຄານແຫ່ງ ສປປ ລາວ ສະຖາບັນເງິນຝາກໄປສະນີ ແລະ ຄັງເງິນແຫ່ງຊາດ ເຊັ່ນ: ເງິນຝາກກະແສລາຍວັນ, ເງິນຝາກແຮບັງຄັບ, ແລະ ເງິນຝາກຄ້ຳປະກັນທຶນຈົດທະບຽນການສ້າງຕັ້ງທະນາຄານຕາມອັດຕາສ່ວນທີ່ທະນາຄານແຫ່ງ ສປປ ລາວ ກຳນົດ.

112 ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ, ສະຖາບັນເງິນຝາກໄປສະນີລາວ ແລະ ຄັງເງິນແຫ່ງຊາດ

1121 ເງິນຝາກຢູ່ທະນາຄານກາງພາຍໃນ ແລະ ຕ່າງປະເທດ

11211 ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ

112111 ເງິນຝາກກະແສລາຍວັນ

112116 ເງິນຝາກແຮບັງຄັບ

112117 ເງິນຝາກຄ້ຳປະກັນ (ທຶນຈົດທະບຽນ)

11212 ເງິນຝາກຢູ່ທະນາຄານກາງ ຕ່າງປະເທດ

112121 ເງິນຝາກກະແສລາຍວັນ

112123 ເງິນຝາກປະຢັດ

112124 ເງິນຝາກປະຈຳ

1121241 ເງິນຝາກເພື່ອຮຽກເກັບ (call)

1121242 ເງິນຝາກຂ້າມຄືນ (overnigth)

112125 ເງິນຝາກມີກຳນົດ

1121251 ໜຶ່ງປີລົງມາ

1121252 ໜຶ່ງປີຂຶ້ນໄປ

112126 ເງິນຝາກແຮບັງຄັບ

112127 ເງິນຝາກຄ້ຳປະກັນ

1122 ເງິນຝາກຢູ່ສະຖາບັນເງິນຝາກໄປສະນີ

1123 ເງິນຝາກຢູ່ຄັງເງິນແຫ່ງຊາດ

1127 ດອກເບ້ຍຄ້າງຮັບ

ບັນຊີ 11211, 11212 ໃຊ້ບັນທຶກຕິດຕາມການຝາກ ແລະ ຖອນຈຳນວນເງິນທີ່ທະນາຄານໄດ້ຝາກໄວ້ນຳສະຖາບັນການເງິນທີ່ໄດ້ກ່າວມາຂ້າງເທິງ. ເງິນຝາກປະເພດນີ້ສາມາດຝາກຖອນໄດ້ຕະຫຼອດເວລາໂດຍບໍ່ມີການແຈ້ງໃຫ້ຊາບລ່ວງໜ້າ.

**ເບື້ອງໜີ້ຈົດ:** ຈຳນວນເງິນຝາກ ຫຼື ເງິນທີ່ໂອນມາຈາກບັນຊີອື່ນ

**ເບື້ອງ ມີຈົດ:** ຈຳນວນທີ່ຖອນອອກ ຫຼື ໂອນໄປບັນຊີອື່ນ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນຝາກທີ່ຍັງເຫຼືອໃນບັນຊີ

ບັນຊີ 112116 ຕິດຕາມເງິນແຮຝາກບັງຄັບ. ບັນຊີນີ້ໃຊ້ເພື່ອບັນທຶກຕິດຕາມຈຳນວນເງິນຂອງທະນາຄານທຸລະກິດ ທີ່ຝາກໄວ້ກັບທະນາຄານແຫ່ງ ສປປ ລາວ ຊຶ່ງຈຳນວນເງິນດັ່ງກ່າວແມ່ນໄດ້ມາຈາກການຄິດໄລ່ຕາມຍອດເຫຼືອສະເລ່ຍຂອງເງິນຝາກ (ໜີ້ສິນ) ທີ່ທະນາຄານທຸລະກິດລະດົມໄດ້ຄູນດ້ວຍ ອັດຕາສ່ວນຮ້ອຍ(ເປີເຊັນ) ທີ່ທະນາຄານກາງກຳນົດໃຫ້; ສຳລັບອັດຕາສ່ວນຮ້ອຍ (ເປີເຊັນ) ເງິນແຮຝາກບັງຄັບແມ່ນບໍ່ຄົງຕົວ ມັນຈະປ່ຽນແປງຂຶ້ນລົງຕາມນະໂຍບາຍເງິນຕາຂອງທະນາ ຄານກາງວາງອອກໃນແຕ່ລະໄລຍະ. ບັນຊີນີ້ມີການເຄື່ອນໄຫວກົງກັນກັບບັນຊີ 2131160 ເງິນແຮຝາກບັງຄັບຂອງທະນາຄານທຸລະກິດຝາກໄວ້ນຳທະນາຄານກາງ.

**ເບື້ອງໜີ້ຈົດ:** ຈຳນວນເງິນຝາກ ຫຼື ເງິນທີ່ໂອນມາຈາກບັນຊີອື່ນ

**ເບື້ອງ ມີຈົດ:** ຈຳນວນທີ່ຖອນອອກ ຫຼື ໂອນໄປບັນຊີອື່ນ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນທີ່ ເຫຼືອຝາກໄວ້ນຳທະນາຄານກາງ

ບັນຊີ 112117 ຕິດຕາມເງິນຝາກຄ້ຳປະກັນ (ທຶນຈົດທະບຽນ). ບັນຊີນີ້ໃຊ້ເພື່ອບັນທຶກຕິດຕາມຈຳນວນເງິນທຶນຈົດທະບຽນທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຝາກໄວ້ກັບທະນາຄານກາງຕາມລະບຽບຂອງທະນາຄານກາງວາງອອກ. ບັນຊີນີ້ຍັງສາມາດໃຊ້ບັນທຶກຈຳນວນເງິນທີ່ນຳໄປຝາກ ຫຼື ນຳໄປລົງທຶນເພື່ອຮັບໃຊ້ສະເພາະໂຄງການໃດໜຶ່ງ. ບັນຊີນີ້ມີການເຄື່ອນໄຫວກົງກັນກັບບັນຊີ 213117 ເງິນຝາກຄ້ຳປະກັນຂອງທະນາຄານທຸລະກິດຝາກໄວ້ນຳທະນາຄານກາງ.

**ເບື້ອງໜີ້ຈົດ:** ຈຳນວນເງິນຝາກ ຫຼື ເງິນທີ່ໂອນມາຈາກບັນຊີອື່ນ

**ເບື້ອງ ມີຈົດ:** ຈຳນວນເງິນທີ່ຖອນອອກ ຫຼື ໂອນໄປບັນຊີອື່ນ

**ຍອດເຫຼືອ ໜີ້:** ສະແດງເຖິງຈຳນວນທີ່ເຫຼືອຝາກໄວ້ນຳທະນາຄານກາງ

ບັນຊີ 112123 ຕິດຕາມເງິນຝາກປະຢັດທີ່ຝາກໄວ້ທະນາຄານກາງຢູ່ຕ່າງປະເທດ. ໃຊ້ເພື່ອຕິດຕາມການຝາກ ແລະ ການຖອນເງິນຝາກປະຢັດຂອງທະນາຄານທຸລະກິດ.

**ເບື້ອງໜີ້ຈິດ:** ຈຳນວນເງິນຝາກ ຫຼື ເງິນທີ່ໂອນມາຈາກບັນຊີອື່ນ

**ເບື້ອງ ມີຈິດ:** ຈຳນວນເງິນທີ່ຖອນອອກ ຫຼື ໂອນໄປບັນຊີອື່ນ

**ຍອດເຫຼືອ ໜີ້:** ສະແດງເຖິງຈຳນວນເງິນທີ່ເຫຼືອຝາກໄວ້ນຳທະນາຄານກາງຢູ່ຕ່າງປະເທດ

ບັນຊີ 112124 ຕິດຕາມເງິນຝາກປະຈຳວັນຢູ່ທະນາຄານກາງຕ່າງປະເທດ ໃຊ້ເພື່ອຕິດຕາມເງິນຝາກເປັນປະຈຳສາມາດຖອນໄດ້ໂດຍມີການ ແຈ້ງໃຫ້ຊາບລ່ວງໜ້າກ່ອນ 24 ຊົ່ວໂມງ ຫຼື ໜຶ່ງວັນລັດຖະການ. ການເປີດບັນຊີເງິນຝາກຕ້ອງປະຕິບັດ ຕາມເງື່ອນໄຂຂອງທະນາຄານວາງອອກ.

**ເບື້ອງໜີ້ຈິດ:** ຈຳນວນເງິນຝາກ ຫຼື ເງິນທີ່ໂອນມາຈາກບັນຊີອື່ນ

**ເບື້ອງ ມີຈິດ:** ຈຳນວນເງິນທີ່ຖອນອອກ ຫຼື ໂອນໄປບັນຊີອື່ນ

**ຍອດເຫຼືອ ໜີ້:** ສະແດງເຖິງຈຳນວນເງິນທີ່ເຫຼືອຝາກໄວ້ນຳທະນາຄານກາງ ຢູ່ທະນາຄານກາງຕ່າງປະເທດ

ບັນຊີ 112125 ຕິດຕາມເງິນຝາກມີກຳນົດ ໃຊ້ເພື່ອຕິດຕາມການຝາກ ແລະ ຖອນເງິນຝາກມີກຳນົດ ຢູ່ທະນາຄານກາງຕ່າງປະເທດ ເຊັ່ນ: 3 ເດືອນ, 6 ເດືອນ,12 ເດືອນ ແລະ ເກີນໜຶ່ງປີ. ເງິນຝາກປະເພດນີ້ ແມ່ນຕ້ອງໃຊ້ບັດຝາກເງິນ ຫຼື ປຶ້ມເງິນຝາກເພື່ອຕິດຕາມ ການຝາກ ແລະ ຖອນເງິນ.

ສຳລັບບັດຝາກເງິນຈະຕ້ອງສົ່ງຄືນໃຫ້ແກ່ທະນາຄານພາຍຫຼັງການຖອນເງິນຝາກພ້ອມດ້ວຍດອກເບ້ຍເມື່ອຮອດກຳນົດເວລາ.

**ເບື້ອງໜີ້ຈິດ:** ຈຳນວນເງິນຝາກ ຫຼື ເງິນທີ່ໂອນມາຈາກບັນຊີອື່ນ

**ເບື້ອງ ມີຈິດ:** ຈຳນວນເງິນທີ່ຖອນອອກ ຫຼື ໂອນໄປບັນຊີອື່ນ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເຫຼືອທີ່ຝາກໄວ້ນຳທະນາຄານກາງຕ່າງປະເທດ

ບັນຊີ 1122 ຕິດຕາມເງິນຝາກຢູ່ສະຖາບັນເງິນຝາກປະຢັດໄປສະນີ ໃຊ້ເພື່ອຕິດຕາມການຝາກ ແລະ ການຖອນເງິນຢູ່ສະຖາບັນເງິນຝາກປະຢັດໄປສະນີ.

**ເບື້ອງໜີ້ຈິດ:** ຈຳນວນເງິນຝາກ ຫຼື ເງິນທີ່ໂອນມາຈາກບັນຊີອື່ນ

**ເບື້ອງ ມີຈິດ:** ຈຳນວນເງິນທີ່ຖອນອອກ ຫຼື ໂອນໄປບັນຊີອື່ນ

**ຍອດເຫຼືອ ໜີ້:** ສະແດງເຖິງຈຳນວນເງິນເຫຼືອທີ່ຝາກໄວ້ນຳສະຖາບັນເງິນຝາກປະຢັດໄປສະນີ

ບັນຊີ 1123 ຕິດຕາມເງິນຝາກຢູ່ຄັງເງິນແຫ່ງຊາດໃຊ້ເພື່ອຕິດຕາມການຝາກ ແລະ ການຖອນເງິນຢູ່ຄັງເງິນແຫ່ງຊາດ.

**ເບື້ອງໜີ້ຈິດ:** ຈຳນວນເງິນຝາກ ຫຼື ຈຳນວນເງິນທີ່ໂອນມາຈາກບັນຊີອື່ນ

**ເບື້ອງ ມີຈິດ:** ຈຳນວນເງິນທີ່ຖອນອອກ ຫຼື ຈຳນວນເງິນທີ່ໂອນໄປບັນຊີອື່ນ

**ຍອດເຫຼືອ ໜີ້:** ສະແດງເຖິງຈຳນວນເງິນເຫຼືອທີ່ຝາກໄວ້ນຳຄັງເງິນແຫ່ງຊາດ

ບັນຊີ 1127 ໃຊ້ບັນທຶກຕິດຕາມດອກເບ້ຍຄ້າງຮັບທີ່ພົວພັນກັບບັນຊີເງິນຝາກຂອງທະນາຄານທຸລະກິດທີ່ຝາກໄວ້ກັບທະນາຄານກາງ, ສະຖາບັນການເງິນ ແລະ ຄັງເງິນແຫ່ງຊາດ ທີ່ທະນາຄານໄດ້ຄິດໄລ່ດອກເບ້ຍໄວ້ແລ້ວເມື່ອຮອດກຳນົດເວລາ ແຕ່ຍັງບໍ່ທັນໄດ້ຮັບ.

**ເບື້ອງໜີ້ຈິດ:** ຈຳນວນດອກເບ້ຍທີ່ຄິດໄລ່ໄວ້ແລ້ວແຕ່ຍັງບໍ່ທັນໄດ້ຮັບ

**ເບື້ອງ ມີຈິດ:** ຈຳນວນເງິນຊຳລະດອກເບ້ຍທີ່ຄິດໄລ່ໄວ້ແລ້ວ

**ຍອດເຫຼືອ ໜີ້:** ສະແດງເຖິງຈຳນວນດອກເບ້ຍທີ່ຍັງຄ້າງຮັບ

113 ເງິນຝາກ ແລະ ເງິນໃຫ້ກູ້ຢືມ ລະຫວ່າງທະນາຄານ

1131 ເງິນຝາກຢູ່ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ

- 11311 ເງິນຝາກຢູ່ທະນາຄານອື່ນ
  - 113111 ເງິນຝາກກະແສລາຍວັນ
  - 113113 ເງິນຝາກປະຢັດ
  - 113114 ເງິນຝາກປະຈຳວັນ
  - 113115 ເງິນຝາກມີກຳນົດ
    - 1131151 ເງິນຝາກມີກຳນົດໜຶ່ງປີລົງມາ
    - 1131152 ເງິນຝາກມີກຳນົດເກີນໜຶ່ງປີຂຶ້ນໄປ
- 11312 ເງິນຝາກຢູ່ທະນາຄານຕ່າງປະເທດ
  - 113121 ເງິນຝາກກະແສລາຍວັນ
  - 113123 ເງິນຝາກປະຢັດ
  - 113124 ເງິນຝາກມີກຳນົດ
    - 1131241 ເງິນຝາກເພື່ອຮຽກເກັບ
    - 1131242 ເງິນຝາກຂ້າມຄືນ
  - 113125 ເງິນຝາກມີກຳນົດ
    - 1131251 ໜຶ່ງປີລົງມາ
    - 1131252 ເກີນໜຶ່ງປີຂຶ້ນໄປ

1132 ເງິນໃຫ້ກູ້ຢືມແກ່ທະນາຄານອື່ນ

- 11321 ເງິນໃຫ້ກູ້ຢືມແກ່ທະນາຄານພາຍໃນ
  - 113211 ເງິນໃຫ້ກູ້ຢືມເປັນປະຈຳ
  - 113212 ເງິນໃຫ້ກູ້ຢືມເບີກເກີນບັນຊີ
  - 113213 ເງິນໃຫ້ກູ້ຢືມຕາມສຳນວນຂໍກູ້ຢືມຂອງບຸກຄົນທີສາມ

1132131 ໜຶ່ງປີລົງມາ

1132132 ເກີນໜຶ່ງປີຂຶ້ນໄປແຕ່ບໍ່ເກີນຫ້າປີ

1132133 ເກີນຫ້າປີຂຶ້ນໄປ

113215 ເງິນໃຫ້ກູ້ຢືມມີກຳນົດ

1132151 ໜຶ່ງປີລົງມາ

1132152 ເກີນໜຶ່ງປີຂຶ້ນໄປແຕ່ບໍ່ເກີນຫ້າປີ

1132153 ເກີນຫ້າປີຂຶ້ນໄປ

11322 ເງິນໃຫ້ກູ້ແກ່ທະນາຄານຕ່າງປະເທດ

113221 ເງິນໃຫ້ກູ້ຢືມເປັນປະຈຳວັນ

113222 ເງິນໃຫ້ກູ້ເບີກເກີນບັນຊີ

113223 ເງິນໃຫ້ກູ້ຢືມຕາມສຳນວນຂໍກູ້ຢືມຂອງບຸກຄົນທີສາມ

1132231 ໜຶ່ງປີລົງມາ

1132232 ເກີນໜຶ່ງປີຂຶ້ນໄປແຕ່ບໍ່ເກີນຫ້າປີ

1132233 ເກີນຫ້າປີຂຶ້ນໄປ

113225 ເງິນໃຫ້ກູ້ຢືມມີກຳນົດ

1132251 ໜຶ່ງປີລົງມາ

1132252 ເກີນໜຶ່ງປີຂຶ້ນໄປແຕ່ບໍ່ເກີນຫ້າປີ

1132253 ເກີນຫ້າປີຂຶ້ນໄປ

1137 ດອກເບ້ຍເງິນຝາກ ແລະ ເງິນໃຫ້ກູ້ຢືມແກ່ທະນາຄານອື່ນຄ້າງຮັບ

11371 ດອກເບ້ຍເງິນຝາກຢູ່ທະນາຄານອື່ນຄ້າງຮັບ

113711 ດອກເບ້ຍເງິນຝາກຢູ່ທະນາຄານພາຍໃນປະເທດ

113712 ດອກເບ້ຍຄ້າງຮັບຈາກເງິນຝາກຢູ່ທະນາຄານຕ່າງປະເທດ

11372 ດອກເບ້ຍຄ້າງຮັບຈາກເງິນໃຫ້ກູ້ຢືມແກ່ທະນາຄານອື່ນ

113721 ດອກເບ້ຍເງິນໃຫ້ກູ້ຢືມແກ່ທະນາຄານພາຍໃນປະເທດ

113722 ດອກເບ້ຍເງິນໃຫ້ກູ້ຢືມແກ່ທະນາຄານຕ່າງປະເທດ

ບັນຊີ 11311, 11312, ໃຊ້ເພື່ອບັນທຶກຕິດຕາມຈຳນວນເງິນຝາກ ແລະ ຖອນເງິນ ຂອງທະນາຄານທຸລະກິດ ທີ່ຝາກໄວ້ກັບທະນາຄານອື່ນ ທີ່ຢູ່ພາຍໃນປະເທດ ແລະ ຕ່າງປະເທດ, ໂດຍແຍກຕາມປະເພດບັນຊີເງິນຝາກ ແລະ ກຳນົດເວລາ. ນອກຈາກນັ້ນຍັງໃຊ້ຕິດຕາມ ຈຳນວນເງິນໃຫ້ກູ້ຢືມແກ່ທະນາຄານທຸລະກິດທັງພາຍໃນ ແລະ ຕ່າງປະເທດ ແລະ ດອກເບ້ຍຄ້າງຮັບ ເຊັ່ນ: ດອກເບ້ຍເງິນຝາກ ແລະ ດອກເບ້ຍເງິນໃຫ້ກູ້ຢືມແກ່ທະນາຄານອື່ນທີ່ຄ້າງຮັບ.

**ເບື້ອງໜີ້ຈິດ**: ຈຳນວນເງິນຝາກ ຫຼື ຈຳນວນເງິນທີ່ໂອນມາຈາກບັນຊີອື່ນ

**ເບື້ອງ ມີຈິດ:** ຈຳນວນເງິນຖອນອອກຈາກບັນຊີ ຫຼື ໂອນໄປບັນຊີອື່ນ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນເຫຼືອຝາກ ໄວ້ນຳທະນາຄານອື່ນທີ່ຢູ່ພາຍໃນປະເທດ ແລະ ຕ່າງປະເທດ

ບັນຊີ 11321, 11322 ໃຊ້ບັນທຶກຈຳນວນເງິນທີ່ໃຫ້ກູ້ຢືມແກ່ທະນາຄານອື່ນທີ່ຢູ່ພາຍໃນ ຫຼື ຕ່າງປະເທດໂດຍມີກຳນົດເວລາໃດໜຶ່ງທີ່ແນ່ນອນ.

**ເບື້ອງໜີ້ຈິດ**: ຈຳນວນເງິນໃຫ້ກູ້ຢືມແກ່ທະນາຄານອື່ນ ທີ່ຢູ່ພາຍໃນ ຫຼື ຕ່າງປະເທດ
**ເບື້ອງ ມີຈິດ**: ຈຳນວນເງິນທົດແທນ (ຊຳລະ) ເງິນໃຫ້ກູ້ຢືມຄືນໂອນໄປເປັນໜີ້ຕ້ອງຮັບທວງຍາກ (ໜີ້ເກີນກຳນົດ)
**ຍອດເຫຼືອໜີ້**: ສະແດງເຖິງຍອດເຫຼືອຂອງເງິນກູ້ທີ່ທະນາຄານອື່ນຍັງຕິດໜີ້ທະນາຄານຕົນ

ບັນຊີ 11371, 11372, ໃຊ້ເພື່ອບັນທຶກດອກເບ້ຍທີ່ຄິດໄລ່ໄວ້ຂອງເງິນໃຫ້ກູ້ຢືມເມື່ອຮອດກຳນົດເວລາ.

**ເບື້ອງໜີ້ຈິດ:** ຈຳນວນເງິນດອກເບ້ຍທີ່ຄິດໄລ່ໄວ້
**ເບື້ອງມີຈິດ:** ການຊຳລະຈຳນວນເງິນດອກເບ້ຍທີ່ຄິດໄລ່ໄວ້ແລ້ວ
**ຍອດເຫຼືອໜີ້**: ສະແດງເຖິງຈຳນວນດອກເບ້ຍທີ່ຍັງຄ້າງຮັບ

114 ເງິນໃຫ້ກູ້ຢືມໂດຍມີມູນຄ່າຫຼັກຊັບຄ້ຳປະກັນ
- 1141 ເງິນໃຫ້ກູ້ຢືມແກ່ທະນາຄານພາຍໃນ
  - 11411 ເງິນໃຫ້ກູ້ຢືມເປັນປະຈຳວັນ
  - 11415 ເງິນໃຫ້ກູ້ຢືມມີກຳນົດ (ບໍ່ເກີນໜຶ່ງເດືອນ)
- 1142 ເງິນໃຫ້ກູ້ຢືມແກ່ທະນາຄານຕ່າງປະເທດ
  - 11421 ເງິນໃຫ້ກູ້ຢືມເປັນປະຈຳວັນ
  - 11425 ເງິນໃຫ້ກູ້ຢືມມີກຳນົດ (ບໍ່ເກີນໜຶ່ງເດືອນ)
- 1147 ດອກເບ້ຍເງິນໃຫ້ກູ້ຢືມໂດຍມີມູນຄ່າຫຼັກຊັບຄ້ຳປະກັນຄ້າງຮັບ
  - 11471 ດອກເບ້ຍຄ້າງຮັບຈາກທະນາຄານພາຍໃນປະເທດ
  - 11472 ດອກເບ້ຍຄ້າງຮັບຈາກທະນາຄານຕ່າງປະເທດ

ບັນຊີ 1141 ແລະ 1142 ໃຊ້ເພື່ອບັນທຶກຕິດຕາມຈຳນວນເງິນໃຫ້ກູ້ຢືມແກ່ທະນາຄານພາຍໃນ ແລະ ທະນາຄານຕ່າງປະເທດໂດຍມີມູນຄ່າຫຼັກຊັບຄ້ຳປະກັນ.

**ເບື້ອງໜີ້ຈິດ**: ຈຳນວນເງິນໃຫ້ກູ້ຢືມແກ່ທະນາຄານພາຍໃນ ແລະ ຕ່າງປະເທດ
**ເບື້ອງ ມີຈິດ**: ການຊຳລະຈຳນວນເງິນທີ່ໃຫ້ກູ້ຢືມ
**ຍອດເຫຼືອໜີ້**: ສະແດງເຖິງຈຳນວນເງິນຍອດເຫຼືອຂອງເງິນໃຫ້ກູ້ຢືມແກ່ທະນາຄານອື່ນໂດຍມີຫລັກຊັບຄ້ຳປະກັນ

ບັນຊີ 1147 ໃຊ້ເພື່ອບັນທຶກດອກເບ້ຍຄ້າງຮັບບັນຊີເງິນໃຫ້ກູ້ຢືມໂດຍມີມູນຄ່າຫລັກຊັບຄ້ຳປະກັນຂອງທະນາຄານພາຍໃນ ແລະ ຕ່າງປະເທດທີ່ໄດ້ຄິດໄລ່ໄວ້ແລ້ວແຕ່ຍັງບໍ່ທັນໄດ້ຮັບການຊຳລະ.

**ເບື້ອງໜີ້ຈິດ:** ຈຳນວນເງິນດອກເບ້ຍຄ້າງຮັບທີ່ຄິດໄລ່ໄວ້

**ເບື້ອງ ມີຈິດ:** ການຊຳລະຈຳນວນເງິນດອກເບ້ຍຄ້າງຮັບທີ່ຄິດໄລ່ໄວ້ແລ້ວ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນດອກເບ້ຍທີ່ຍັງຄ້າງຮັບ

116 ເງິນຈ່າຍລ່ວງໜ້າ ເພື່ອທະນາຄານອື່ນ

1161 ເງິນຈ່າຍລ່ວງໜ້າເພື່ອທະນາຄານພາຍໃນປະເທດ

1162 ເງິນຈ່າຍລ່ວງໜ້າເພື່ອທະນາຄານຕ່າງປະເທດ

1167 ດອກເບ້ຍເງິນຈ່າຍລ່ວງໜ້າເພື່ອທະນາຄານອື່ນຄ້າງຮັບ

11671 ດອກເບ້ຍຄ້າງຮັບຈາກທະນາຄານພາຍໃນ

11672 ດອກເບ້ຍຄ້າງຮັບຈາກທະນາຄານຕ່າງປະເທດ

ບັນຊີ 1161, 1162 ໃຊ້ເພື່ອບັນທຶກຕິດຕາມຈຳນວນເງິນທີ່ໄດ້ຈ່າຍລ່ວງໜ້າແກ່ທະນາຄານ ແລະ ສະຖາບັນການເງິນອື່ນທັງພາຍໃນ ແລະ ຕ່າງປະເທດ. ການຈ່າຍລ່ວງໜ້າດັ່ງກ່າວ ແມ່ນບົນພື້ນຖານຂໍ້ຕົກລົງ ລະຫວ່າງທະນາຄານຕົນກັບທະນາຄານ ຫຼື ສະຖາບັນການເງິນອື່ນ.

**ເບື້ອງໜີ້ຈິດ:** ຈຳນວນເງິນທີ່ໄດ້ຈ່າຍລ່ວງໜ້າໃຫ້ທະນາຄານ ແລະ ສະຖາບັນການເງິນ ທັງພາຍໃນ ແລະ ຕ່າງປະເທດ

**ເບື້ອງ ມີຈິດ:** ຈຳນວນເງິນທີ່ໄດ້ຮັບຊຳລະ ຫຼື ໂອນໄປບັນຊີອື່ນ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນຈ່າຍລ່ວງໜ້າທີ່ຍັງບໍ່ໄດ້ຮັບຊຳລະຄືນ

ບັນຊີ 1167 ໃຊ້ເພື່ອບັນທຶກດອກເບ້ຍຄ້າງຮັບເງິນຈ່າຍລ່ວງໜ້າໃຫ້ແກ່ທະນາຄານພາຍໃນ ແລະ ຕ່າງປະເທດທີ່ໄດ້ຄິດໄລ່ໄວ້ແລ້ວແຕ່ຍັງບໍ່ທັນໄດ້ຮັບການຊຳລະ.

**ເບື້ອງໜີ້ຈິດ:** ຈຳນວນເງິນດອກເບ້ຍທີ່ຄິດໄລ່ໄວ້

**ເບື້ອງ ມີຈິດ:** ການຊຳລະຈຳນວນເງິນດອກເບ້ຍທີ່ຄິດໄລ່ໄວ້ແລ້ວ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນດອກເບ້ຍທີ່ຍັງຄ້າງຮັບ

119 ໜີ້ທວງຍາກຈາກທະນາຄານ ແລະ ສະຖາບັນການເງິນອື່ນ

1191 ໜີ້ຕ້ອງຮັບທວງຍາກ

11911 ໜີ້ຕ່ຳກວ່າມາດຕະຖານ

119112 ເງິນໃຫ້ກູ້ຢືມແກ່ທະນາຄານອື່ນທວງຍາກ

1191121 ທະນາຄານພາຍໃນປະເທດ

1191122 ທະນາຄານຕ່າງປະເທດ

119114 ໜີ້ທວງຍາກເງິນໃຫ້ກູ້ຢືມຕາມການຊີ້ນຳຂອງລັດຖະບານ

1191141 ທະນາຄານພາຍໃນປະເທດ

1191142 ທະນາຄານຕ່າງປະເທດ

119116 ເງິນຈ່າຍລ່ວງໜ້າໃຫ້ແກ່ທະນາຄານອື່ນທວງຍາກ

1191161 ທະນາຄານພາຍໃນປະເທດ

1191162 ທະນາຄານຕ່າງປະເທດ

11912 ໜີ້ສົງໃສ

119122 ເງິນໃຫ້ກູ້ຢືມແກ່ທະນາຄານອື່ນທວງຍາກ

1191221 ທະນາຄານພາຍໃນປະເທດ

1191222 ທະນາຄານຕ່າງປະເທດ

119124 ເງິນໃຫ້ກູ້ຢືມໂດຍມີມູນຄ່າຫຼັກຊັບຄໍ້າປະກັນທວງຍາກ

1191241 ທະນາຄານພາຍໃນປະເທດ

1191242 ທະນາຄານຕ່າງປະເທດ

119126 ເງິນຈ່າຍລ່ວງໜ້າເພື່ອທະນາຄານອື່ນຄ້າງຮັບ

1191261 ທະນາຄານພາຍໃນປະເທດ

1191262 ທະນາຄານຕ່າງປະເທດ

11913 ໜີ້ສູນ

119132 ເງິນໃຫ້ກູ້ຢືມແກ່ທະນາຄານອື່ນທວງຍາກ

1191321 ທະນາຄານພາຍໃນປະເທດ

1191322 ທະນາຄານຕ່າງປະເທດ

119134 ເງິນໃຫ້ກູ້ຢືມໂດຍມີມູນຄ່າຫຼັກຊັບຄໍ້າປະກັນທວງຍາກ

1191341 ທະນາຄານພາຍໃນປະເທດ

1191342 ທະນາຄານຕ່າງປະເທດ

119136 ເງິນຈ່າຍລ່ວງໜ້າເພື່ອທະນາຄານອື່ນຄ້າງຮັບ

1191361 ທະນາຄານພາຍໃນປະເທດ

1191362 ທະນາຄານຕ່າງປະເທດ

1197 ດອກເບ້ຍຄ້າງຮັບຂອງໜີ້ທວງຍາກ

11972 ດອກເບ້ຍຄ້າງຮັບຈາກເງິນໃຫ້ກູ້ຢືມແກ່ທະນາຄານອື່ນທວງຍາກ

119721 ດອກເບ້ຍຄ້າງຮັບຈາກເງິນໃຫ້ກູ້ຢືມແກ່ທະນາຄານພາຍໃນປະເທດ

119722 ດອກເບ້ຍຄ້າງຮັບຈາກເງິນໃຫ້ກູ້ຢືມແກ່ທະນາຄານຕ່າງປະເທດ

11974 ດອກເບ້ຍທວງຍາກຈາກເງິນໃຫ້ກູ້ຢືມໂດຍມີມູນຄ່າຫຼັກຊັບຄໍ້າປະກັນ

119741 ດອກເບ້ຍຄ້າງຮັບຈາກທະນາຄານພາຍໃນປະເທດ

119742 ດອກເບ້ຍຄ້າງຮັບຈາກທະນາຄານຕ່າງປະເທດ

11976 ດອກເບ້ຍທວງຍາກຈາກເງິນຈ່າຍລ່ວງໜ້າເພື່ອທະນາຄານທຸລະກິດທວງຍາກ

119761 ດອກເບ້ຍຄ້າງຮັບຈາກທະນາຄານພາຍໃນປະເທດ

119762 ດອກເບ້ຍຄ້າງຮັບຈາກທະນາຄານຕ່າງປະເທດ

1199 ເງິນແຮຄ່າເສື່ອມມູນຄ່າໜີ້ທວງຍາກ

11991 ເງິນແຮຄ່າເສື່ອມມູນຄ່າໜີ້ຕໍ່າກວ່າມາດຕະຖານ

119912 ເງິນແຮຄ່າເສື່ອມມູນຄ່າຂອງເງິນໃຫ້ກູ້ຢືມແກ່ທະນາຄານອື່ນ

119121 ທະນາຄານພາຍໃນປະເທດ

119122 ທະນາຄານຕ່າງປະເທດ

119914 ເງິນແຮຄ່າເສື່ອມມູນຄ່າເງິນໃຫ້ກູ້ຢືມໂດຍມີຫຼັກຊັບຄ້ຳປະກັນ

1199141 ທະນາຄານພາຍໃນປະເທດ

1199142 ທະນາຄານຕ່າງປະເທດ

119916 ເງິນແຮຄ່າເສື່ອມມູນຄ່າເງິນຈ່າຍລ່ວງໜ້າເພື່ອທະນາຄານອື່ນ

1199161 ທະນາຄານພາຍໃນປະເທດ

1199162 ທະນາຄານຕ່າງປະເທດ

11992 ເງິນແຮຄ່າເສື່ອມມູນຄ່າໜີ້ສົງໃສ

119922 ເງິນແຮຄ່າເສື່ອມມູນຄ່າຂອງເງິນໃຫ້ກູ້ຢືມແກ່ທະນາຄານອື່ນ

1199221 ທະນາຄານພາຍໃນປະເທດ

1199222 ທະນາຄານຕ່າງປະເທດ

119934 ເງິນແຮຄ່າເສື່ອມມູນຄ່າເງິນໃຫ້ກູ້ຢືມໂດຍມີມູນຄ່າຫຼັກຊັບຄ້ຳປະກັນ

1199341 ທະນາຄານພາຍໃນປະເທດ

1199342 ທະນາຄານຕ່າງປະເທດ

119936 ເງິນແຮຄ່າເສື່ອມມູນຄ່າເງິນຈ່າຍລ່ວງໜ້າເພື່ອທະນາຄານອື່ນ

1199361 ທະນາຄານພາຍໃນປະເທດ

1199362 ທະນາຄານຕ່າງປະເທດ

ບັນຊີ 119 ໜີ້ທວງຍາກຈາກທະນາຄານ ແລະ ສະຖາບັນການເງິນອື່ນ ໃຊ້ເພື່ອບັນທຶກຕິດຕາມຈຳນວນເງິນໜີ້ຕ້ອງຮັບທວງຍາກຈາກທະນາຄານ ແລະ ສະຖາບັນການເງິນອື່ນ.

ບັນຊີ 11911, 11912, 11913 ໃຊ້ເພື່ອບັນທຶກຕິດຕາມໜີ້ທວງຍາກຈາກທະນາຄານ ແລະ ສະຖາບັນການເງິນ ຂອງເງິນໃຫ້ກູ້ຢືມແກ່ທະນາຄານອື່ນພາຍໃນປະເທດ ແລະ ຕ່າງປະເທດເມື່ອເຖິງເວລາຊຳລະທະນາຄານ ບໍ່ສາມາດຊຳລະຕົ້ນທຶນ ແລະ ດອກເບ້ຍຂອງເງິນໃຫ້ກູ້ຢືມ. ທະນາຄານຕ້ອງໄດ້ໂອນໜີ້ດັ່ງກ່າວໄປເປັນໜີ້ທວງຍາກ ແລະ ຕ້ອງໄດ້ຈັດຊັ້ນໜີ້ຕາມກຳນົດເວລາ ຂອງແຕ່ລະປະເພດໜີ້ເຊັ່ນ: ໜີ້ຕ່ຳກ່ວາມາດຕະຖານ, ໜີ້ສົງໃສ ແລະ ໜີ້ສູນ ຊຶ່ງມີຄຸນລັກສະນະດັ່ງນີ້:

- ເກັບຄືນບໍ່ໄດ້ທັງໝົດ ຫຼື ເກັບຄືນໄດ້ສ່ວນໃດສ່ວນໜຶ່ງ
- ມີລັກສະນະເປັນຄະດີລົ້ມລະລາຍ
- ການເກັບກູ້ເງິນຄືນຕ້ອງໄດ້ຜ່ານຄະດີ

**ເບື້ອງໜີ້ຈິດ:** ຈຳນວນເງິນທີ່ໂອນມາຈາກບັນຊີເງິນໃຫ້ກູ້ຢືມຕາມປົກກະຕິ

**ເບື້ອງ ມີຈິດ:** ຈຳນວນເງິນທີ່ທົດແທນ (ຊຳລະ) ເງິນໃຫ້ກູ້ຢືມຄືນ ຫຼື ໂອນໄປບັນຊີອື່ນ

**ຍອດເຫຼືອໜີ້:** ສະແດງຈຳນວນໜີ້ຕ້ອງຮັບທວງຍາກທີ່ທະນາຄານ ແລະ ສະຖາບັນການເງິນອື່ນຍັງຄ້າງຊຳລະ

ບັນຊີ 11972, 11974, 11976 ໃຊ້ເພື່ອຕິດຕາມຈຳນວນດອກເບ້ຍຂອງໜີ້ທວງຍາກຊຶ່ງໂອນມາຈາກບັນຊີດອກເບ້ຍຄ້າງຮັບຂອງບັນຊີເງິນໃຫ້ກູ້ຢືມແກ່ທະນາຄານ ແລະ ສະຖາບັນການເງິນ.

**ເບື້ອງໜີ້ຈິດ:** ຈຳນວນເງິນທີ່ໂອນມາຈາກບັນຊີດອກເບ້ຍຄ້າງຮັບປົກກະຕິ

**ເບື້ອງ ມີຈິດ:** ຈຳນວນເງິນທີ່ໄດ້ຮັບຊຳລະດອກເບ້ຍ ຫຼື ໂອນໄປເປັນໜີ້ສູນ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນດອກເບ້ຍຄ້າງຮັບຂອງໜີ້ທວງຍາກຍັງຄ້າງຮັບຊຳລະ

ບັນຊີ 11991, 11992, 11993 ໃຊ້ເພື່ອບັນທຶກເງິນແຮຄ່າເສື່ອມມູນຄ່າຂອງໜີ້ຕ້ອງຮັບທວງຍາກເຊັ່ນ: ເງິນແຮຄ່າເສື່ອມມູນຄ່າຂອງໜີ້ຕ່ຳກວ່າມາດຕະຖານ, ເງິນແຮຄ່າເສື່ອມມູນຄ່າໜີ້ສົງໃສ ແລະ ເງິນແຮຄ່າເສື່ອມມູນຄ່າໜີ້ສູນທີ່ໄດ້ສຳຮອງໄວ້ເພື່ອປ້ອງກັນການສູນເສຍພາຍຫຼັງການປະເມີນ ຄວາມສາມາດທີ່ຈະເກັບກູ້ໜີ້ຄືນມາໄດ້ (ໂດຍອີງຕາມໃບຈັດຊັ້ນໜີ້ຂອງທະນາຄານ).

**ເບື້ອງມີຈິດ:** ຈຳນວນເງິນແຮຄ່າເສື່ອມມູນຄ່າໜີ້ຕ້ອງຮັບທວງຍາກ

**ເບື້ອງໜີ້ຈິດ:** ການເກັບຄືນເງິນແຮຄ່າເສື່ອມມູນຄ່າໜີ້ຕ້ອງຮັບທວງຍາກ

**ຍອດເຫຼືອມີ:** ສະແດງເຖິງຈຳນວນເງິນຍັງເຫຼືອຂອງເງິນແຮຄ່າເສື່ອມມູນຄ່າໜີ້ຕ້ອງຮັບທວງຍາກ

- **ໝວດທີ 2 ໜີ້ຕ້ອງຮັບຈາກລູກຄ້າ**

ໜີ້ຕ້ອງຮັບຈາກລູກຄ້າປະກອບມີ: ສິນເຊື່ອປ່ອຍໃຫ້ລູກຄ້າ, ເງິນໃຫ້ກູ້ຢືມໂດຍມີຫຼັກຊັບຄ້ຳປະກັນ, ເງິນຈ່າຍລ່ວງໜ້າເພື່ອລູກຄ້າ ແລະ ໜີ້ທວງຍາກຈາກລູກຄ້າ.

120 ສິນເຊື່ອປ່ອຍໃຫ້ລູກຄ້າ

1201 ໜີ້ຕ້ອງຮັບການຄ້າ

12011 ໜີ້ຕ້ອງຮັບການຄ້າ

120111 ຊື້ຫຼຸດ ແລະ ຖືວ່າຊື້ຫຼຸດ

120118 ໜີ້ຕ້ອງຮັບການຄ້າອື່ນໆ

12017 ດອກເບ້ຍຄ້າງຮັບຂອງໜີ້ຕ້ອງຮັບການຄ້າ

120171 ດອກເບ້ຍການ ຊື້ຫຼຸດ ແລະ ທີ່ຖືວ່າຊື້ຫຼຸດ

120178 ໜີ້ຕ້ອງຮັບການຄ້າອື່ນໆ

**ສິນເຊື່ອປ່ອຍໃຫ້ລູກຄ້າ** ແມ່ນຮູບການໜຶ່ງຂອງເງິນໃຫ້ກູ້ຢືມແກ່ລູກຄ້າດ້ວຍຮູບການຊື້ຫຼຸດໃບຢັ້ງຢືນການຄ້າ ຊຶ່ງລວມມີ: ພັນທະບັດແລກເງິນ ແລະ ໃບສັນຍາໃຊ້ໜີ້.

ບັນຊີ 12011 ໜີ້ຕ້ອງຮັບການຄ້າ ໃຊ້ເພື່ອຕິດຕາມການໃຫ້ກູ້ຢືມໄລຍະສັ້ນ ດ້ວຍຮູບການຊື້ຫຼຸດໃບຢັ້ງຢືນການຄ້າ ເພື່ອໃຫ້ຜູ້ກູ້ຢືມ(ຜູ້ຂາຍ)ໄດ້ຮັບເງິນສົດເພື່ອສາມາດລົງທຶນໄດ້ໄວຂຶ້ນ, ຜູ້ຂາຍຈະມອບໃບຢັ້ງຢືນການຄ້າໃຫ້ແກ່ທະນາຄານ ແລະ ພ້ອມດຽວກັນນັ້ນທະນາຄານຈະຮັກສາໃບຢັ້ງຢືນການຄ້າດັ່ງກ່າວໄວ້ຈົນຮອດກຳນົດ ແລ້ວຈຶ່ງຮຽກເກັບ.

**ເບື້ອງໜີ້ຈົດ**: ຈຳນວນເງິນທີ່ທະນາຄານຊື້ຫຼຸດຕາມມູນຄ່າໃນນາມຂອງໃບຢັ້ງຢືນການຄ້າ

**ເບື້ອງ ມີຈົດ**: ຈຳນວນເງິນສົ່ງໄປຮຽກເກັບ ຫຼື ຈຳນວນເງິນທີ່ໄດ້ຮັບທົດແທນຄືນ

**ຍອດເຫຼືອໜີ້**: ສະແດງເຖິງຈຳນວນເງິນຂອງໃບຢັ້ງຢືນການຄ້າທີ່ຍັງຄ້າງຊຳລະ

ບັນຊີ 12017 ດອກເບ້ຍຄ້າງຮັບຂອງໜີ້ຕ້ອງຮັບການຄ້າໃຊ້ເພື່ອຕິດຕາມ ດອກເບ້ຍທີ່ຖືກຄິດໄລ່ໄວ້ແລ້ວເມື່ອປັບປຸງບັນຊີທ້າຍເດືອນ.

**ເບື້ອງໜີ້ຈົດ**: ຈຳນວນດອກເບ້ຍທີ່ຖືກຄິດໄລ່ໄວ້ແລ້ວ

**ເບື້ອງ ມີຈົດ**: ການຊຳລະຈຳນວນດອກເບ້ຍທີ່ຖືກຄິດໄລ່ໄວ້ແລ້ວ

**ຍອດເຫຼືອໜີ້**: ສະແດງເຖິງຈຳນວນດອກເບ້ຍທີ່ຍັງຄ້າງຊຳລະ

**1202** ສິນເຊື່ອເພື່ອການສົ່ງອອກ

12021 ສິນເຊື່ອເພື່ອການສົ່ງອອກ

120211 ເງິນໃຫ້ກູ້ຢືມແກ່ຜູ້ຊື້ຢູ່ຕ່າງປະເທດ

1202111 ໜຶ່ງປີລົງມາ

1202112 ເກີນໜຶ່ງປີຂຶ້ນໄປ (ແຕ່ບໍ່ເກີນ ຫ້າປີ)

120212 ເງິນໃຫ້ກູ້ຢືມແກ່ຜູ້ສົ່ງອອກ

1202121 ໜຶ່ງປີລົງມາ

1202122 ເກີນໜຶ່ງປີຂຶ້ນໄປ (ແຕ່ບໍ່ເກີນ ຫ້າປີ)

1202123 ເກີນຫ້າປີຂຶ້ນໄປ

120213 ເງິນໃຫ້ກູ້ຢືມການຄ້າແກ່ຜູ້ທີ່ບໍ່ຕັ້ງຢູ່ລາວ

1202131 ໜຶ່ງປີລົງມາ

1202132 ເກີນໜຶ່ງປີຂຶ້ນໄປ (ແຕ່ບໍ່ເກີນ ຫ້າປີ)

120218 ສິນເຊື່ອເພື່ອການສົ່ງອອກອື່ນໆ

1202181 ໜຶ່ງປີລົງມາ

1202182 ເກີນໜຶ່ງປີຂຶ້ນໄປ (ແຕ່ບໍ່ເກີນ ຫ້າປີ)

**ສິນເຊື່ອເພື່ອການສົ່ງອອກ** ແມ່ນສິນເຊື່ອທີ່ໃຫ້ກູ້ຢືມເພື່ອປະກອບທຶນໃຫ້ແກ່ການສົ່ງອອກສິນຄ້າ ແລະບໍລິການຂອງວິສາຫະກິດລາວ.

ສາລະບານບັນຊີທະນາຄານທຸລະກິດໄດ້ຈຳແນກສິນເຊື່ອເພື່ອການສົ່ງອອກອອກເປັນປະເພດຕ່າງໆດັ່ງລຸ່ມນີ້:

**ກ. ຊື້ຫຼຸດໃບຢັ້ງຢືນການຄ້າທີ່ຜູ້ນຳເຂົ້າຢູ່ຕ່າງປະເທດເປັນຜູ້ຈ່າຍ : (ບ/ຊ 120211)**

ບັນຊີນີ້ໃຊ້ເພື່ອບັນທຶກລາຍການຊື້ຫຼຸດໃບຢັ້ງຢືນການຄ້າທີ່ເປັນເງິນຕາຕ່າງປະເທດອັນເກີດມາຈາກການສົ່ງສິນຄ້າ ແລະ ບໍລິການຈາກຜູ້ສົ່ງອອກຢູ່ລາວ ຊຶ່ງແມ່ນຜູ້ນຳເຂົ້າ(ຜູ້ຊື້) ຢູ່ຕ່າງປະເທດເປັນຜູ້ຈ່າຍເງິນ.

**ຂ. ເງິນໃຫ້ກູ້ຢືມແກ່ຜູ້ສົ່ງອອກ: (ບັນຊີ:120212)**

ບັນຊີນີ້ໃຊ້ເພື່ອບັນທຶກລາຍການໃຫ້ກູ້ຢືມແກ່ຜູ້ສົ່ງອອກລາວ ເພື່ອດຳເນີນການຜະລິດ ຫຼື ຊື້ສິນຄ້າເພື່ອສົ່ງອອກໄປຕ່າງປະເທດ.

**ຄ. ເງິນໃຫ້ກູ້ຢືມການຄ້າແກ່ຜູ້ທີ່ບໍ່ຕັ້ງຢູ່ລາວ (ບ/ຊ : 120213)**

ບັນຊີນີ້ໃຊ້ເພື່ອບັນທຶກລາຍການໃຫ້ກູ້ຢືມ ໂດຍກົງແກ່ຜູ້ຊື້ຢູ່ຕ່າງປະເທດເພື່ອຊຳລະຄ່າສິນຄ້າໃຫ້ແກ່ຜູ້ສົ່ງອອກລາວ.

**ງ. ສິນເຊື່ອເພື່ອການສົ່ງອອກອື່ນໆ. (ບ/ຊ : 120218)**

ບັນຊີນີ້ໃຊ້ເພື່ອບັນທຶກເງິນໃຫ້ກູ້ຢືມ ເພື່ອການສົ່ງອອກອື່ນໆນອກຈາກທີ່ໄດ້ກ່າວມາຂ້າງເທິງນີ້.

ບັນຊີ **12021** ໃຊ້ເພື່ອບັນທຶກການໃຫ້ກູ້ຢືມເງິນໄລຍະສັ້ນຂອງທະນາຄານທຸລະກິດ ເພື່ອການສົ່ງອອກສິນຄ້າ ແລະ ບໍລິການ ເຊັ່ນ: ເງິນໃຫ້ກູ້ຢືມແກ່ຜູ້ຊື້ຢູ່ຕ່າງປະເທດ ເງິນກູ້ຢືມແກ່ຜູ້ສົ່ງອອກ, ເງິນໃຫ້ກູ້ຢືມການຄ້າແກ່ຜູ້ທີ່ບໍ່ຕັ້ງຢູ່ລາວ ແລະ ສິນເຊື່ອເພື່ອການສົ່ງອອກອື່ນໆ.

**ເບື້ອງໜີ້ຈິດ**: ຈຳນວນເງິນທີ່ທະນາຄານໃຫ້ກູ້ຢືມ

**ເບື້ອງ ມີຈິດ**: ຈຳນວນເງິນທີ່ຊຳລະ

**ຍອດເຫຼືອໜີ້**: ສະແດງເຖິງຈຳນວນເງິນທີ່ລູກຄ້າຍັງຄ້າງຊຳລະ

12027 ດອກເບ້ຍຄ້າງຮັບສິນເຊື່ອເພື່ອການສົ່ງອອກ

120271 ດອກເບ້ຍເງິນໃຫ້ກູ້ຢືມແກ່ຜູ້ຊື້ຢູ່ຕ່າງປະເທດຄ້າງຮັບ

1202711 ໜຶ່ງປີລົງມາ

1202712 ເກີນໜຶ່ງປີຂຶ້ນໄປ (ແຕ່ບໍ່ເກີນຫ້າປີ)

120272 ດອກເບ້ຍເງິນໃຫ້ກູ້ຢືມແກ່ຜູ້ສົ່ງອອກຄ້າງຮັບ

1202721 ໜຶ່ງປີລົງມາ

1202722 ເກີນໜຶ່ງປີຂຶ້ນໄປ (ແຕ່ບໍ່ເກີນຫ້າປີ)

1202723 ເກີນຫ້າປີຂຶ້ນໄປ

120273 ດອກເບ້ຍເງິນໃຫ້ກູ້ຢືມການຄ້າແກ່ຜູ້ທີ່ບໍ່ຕັ້ງຢູ່ລາວຄ້າງຮັບ

1202731 ດອກເບ້ຍເງິນໃຫ້ກູ້ຢືມໄລຍະສັ້ນ

1202732 ດອກເບ້ຍເງິນໃຫ້ກູ້ຢືມໄລຍະກາງ

120278 ດອກເບ້ຍສິນເຊື່ອເພື່ອການສົ່ງອອກອື່ນໆ ຄ້າງຮັບ

1202181 ດອກເບ້ຍເງິນໃຫ້ກູ້ຢືມໄລຍະສັ້ນ

1202182 ດອກເບ້ຍເງິນໃຫ້ກູ້ຢືມໄລຍະກາງ

ບັນຊີ 12027 ໃຊ້ເພື່ອຕິດຕາມໜີ້ຕ້ອງຮັບທີ່ພົວພັນກັບສິນເຊື່ອເພື່ອການສົ່ງອອກທີ່ໄດ້ຄິດໄລ່ໄວ້ແລ້ວ ເມື່ອປັບປຸງບັນຊີ.

**ເບື້ອງໜີ້ຈົດ**: ຈຳນວນດອກເບ້ຍທີ່ຖືກຄິດໄລ່ໄວ້ແລ້ວ

**ເບື້ອງ ມີຈົດ**: ການຊຳລະຈຳນວນດອກເບ້ຍທີ່ຖືກຄິດໄລ່ໄວ້ແລ້ວ

**ຍອດເຫຼືອໜີ້**: ສະແດງເຖິງຈຳນວນດອກເບ້ຍທີ່ຍັງຄ້າງຊຳລະ

1203 ສິນເຊື່ອເພື່ອຄັງເງິນລວມ

12031 ສິນເຊື່ອຄັງເງິນລວມ

120311 ສິນເຊື່ອເພື່ອການຂາຍຜ່ອນ

1203111 ໜຶ່ງປີລົງມາ

1203112 ເກີນໜຶ່ງປີຂຶ້ນໄປ (ແຕ່ບໍ່ເກີນຫ້າປີ)

120312 ເງິນໃຫ້ກູ້ຢືມແກ່ບຸກຄົນທົ່ວໄປ

1203121 ໜຶ່ງປີລົງມາ

1203122 ເກີນໜຶ່ງປີຂຶ້ນໄປ (ແຕ່ບໍ່ເກີນຫ້າປີ)

120313 ສິນເຊື່ອເພື່ອນຳໃຊ້ບັດເຄຣດິດ

1203131 ໜຶ່ງປີລົງມາ

1203132 ເກີນໜຶ່ງປີຂຶ້ນໄປ (ແຕ່ບໍ່ເກີນຫ້າປີ)

120314 ສິນເຊື່ອຕາມລະດູການ

1203141 ໜຶ່ງປີລົງມາ

1203142 ເກີນໜຶ່ງປີຂຶ້ນໄປ (ແຕ່ບໍ່ເກີນຫ້າປີ)

120315 ເງິນຈ່າຍລ່ວງໜ້າໂດຍມີບັດເງິນສົດ, ສະຫຼາກປະຢັດ, ເງິນຝາກມີກຳນົດ ລວມທັງພັນທະບັດລັດຖະບານເປັນຫຼັກຄ້ຳປະກັນ

1203151 ໜຶ່ງປີລົງມາ

1203152 ເກີນໜຶ່ງປີຂຶ້ນໄປ (ແຕ່ບໍ່ເກີນຫ້າປີ)

120316 ສິນເຊື່ອເພື່ອການດຳເນີນງານລວມຂອງຜູ້ປະກອບການ

1203161 ໜຶ່ງປີລົງມາ

1203162 ເກີນໜຶ່ງປີຂຶ້ນໄປ (ແຕ່ບໍ່ເກີນຫ້າປີ)

120317 ສິນເຊື່ອເພື່ອການນຳເຂົ້າ

1203171 ໜຶ່ງປີລົງມາ

1203172 ເກີນໜຶ່ງປີຂຶ້ນໄປ (ແຕ່ບໍ່ເກີນຫ້າປີ)

120318 ສິນເຊື່ອເພື່ອຄັງເງິນລວມອື່ນໆ

1203181 ໜຶ່ງປີລົງມາ

1203182 ເກີນໜຶ່ງປີຂຶ້ນໄປ (ແຕ່ບໍ່ເກີນຫ້າປີ)

ສິນເຊື່ອຄັງເງິນລວມແມ່ນການໃຫ້ກູ້ຢືມ ເພື່ອອຳນວຍຄວາມສະດວກທາງດ້ານການເງິນເພື່ອນຳໃຊ້ເຂົ້າໃນວັດຖຸປະສົງຕ່າງໆ ດັ່ງຕໍ່ໄປນີ້:

(1). **ສິນເຊື່ອເພື່ອການຂາຍຜ່ອນ (ບ/ຊ: 120311)**

ບັນຊີນີ້ໃຊ້ເພື່ອບັນທຶກການໃຫ້ກູ້ຢືມເພື່ອຊື້ ຫຼື ຂາຍຜ່ອນເຄື່ອງອຸປະໂພກ ບໍລິໂພກ ລວມທັງເຄື່ອງມືຂະໜາດນ້ອຍເພື່ອປະກອບອາຊີບດ້ວຍການຊຳລະຄືນເປັນງວດໆໄປຊຶ່ງຜູ້ກູ້ຢືມອາດເປັນວິສາຫະກິດ ຫຼື ບຸກຄົນທຳມະດາກໍ່ໄດ້.

(2). **ເງິນໃຫ້ກູ້ຢືມແກ່ບຸກຄົນທົ່ວໄປ (ບ/ຊ 120312)**

ບັນຊີນີ້ໃຊ້ເພື່ອບັນທຶກລາຍການໃຫ້ກູ້ຢືມແກ່ບຸກຄົນທຳມະດາ ຫຼື ຄອບຄົວເພື່ອການບໍລິໂພກສ່ວນຕົວເຊັ່ນ : ການປິ່ນປົວພະຍາດ, ເພື່ອການພັກຜ່ອນ, ເພື່ອຊື້ລົດ ແລະ ຂອງກິນຂອງໃຊ້ອື່ນໆ ໂດຍມີກຳນົດຊຳລະຄືນ ເປັນງວດໆໄປຕາມລາຍໄດ້ທີ່ແທ້ຈິງຂອງຜູ້ກູ້ຢືມ.

(3). **ສິນເຊື່ອເພື່ອນຳໃຊ້ Credit Card (ບ/ຊ 120313)**

ບັນຊີນີ້ໃຊ້ເພື່ອບັນທຶກຄ່າໃຊ້ຈ່າຍຕ່າງໆ ທີ່ຜູ້ຖື CREDIT CARD ໄດ້ຈ່າຍໄປດ້ວຍການຮູດບັດ.

(4). **ສິນເຊື່ອຕາມລະດູການ (ບ/ຊ 120314)**

ບັນຊີນີ້ ໃຊ້ເພື່ອບັນທຶກ ການໃຫ້ກູ້ຢືມສະເພາະ ສຳຫຼັບລາຍການທີ່ມີລັກສະນະລະດູການເຊັ່ນ: ການໃຫ້ກູ້ຢືມເພື່ອການກະສິກຳ ທີ່ມີລັກສະນະເປັນລະດູການເຊັ່ນ :ໃຫ້ຊາວກະສິກອນກູ້ຢືມເພື່ອໃຊ້ເຂົ້າໃນການຜະລິດຕາມລະດູການເຊັ່ນ : ຊື້ແນວພັນ, ຊື້ປຸ໋ຍ, ຊື້ຢາປາບສັດຕູພືດ, ຄ່າແຮງງານ ຕ່າງໆ ແລະ ອື່ນໆ ທີ່ຈຳເປັນ; ໃຫ້ກູ້ຢືມເພື່ອເກັບຊື້ເຄື່ອງນາຂອງປ່າຕາມລະດູການເຊັ່ນ: ເຂົ້າເປືອກ, ໝາກສາລີ, ກາເຟ,ໝາກແໜ່ງ ແລະ ອື່ນໆ .....

(5). **ເງິນຈ່າຍລ່ວງໜ້າໂດຍມີບັດເງິນສົດ, ສະຫຼາກປະຢັດ ແລະ ເງິນຝາກມີກຳນົດລວມທັງພັນທະບັດຂອງລັດເປັນຫຼັກຄ້ຳປະກັນ (ບ/ຊ : 120315)**

ບັນຊີນີ້ໃຊ້ເພື່ອບັນທຶກເງິນໃຫ້ລູກຄ້າກູ້ຢືມ ເພື່ອການອຸປະໂພກ ບໍລິໂພກສ່ວນຕົວໂດຍເອົາບັດເງິນສົດ, ສະຫຼາກປະຢັດ, ໃບຢັ້ງຢືນເງິນຝາກມີກຳນົດ ແລະ ພັນທະບັດຂອງລັດມາເປັນຫຼັກຄ້ຳປະກັນ

(6). <u>**ສິນເຊື່ອເພື່ອການດຳເນີນງານລວມຂອງຜູ້ປະກອບການ**</u> (ບ/ຊ : 120316)

ບັນຊີໃຊ້ເພື່ອບັນທຶກເງິນໃຫ້ກູ້ຢືມເພື່ອໃຊ້ເຂົ້າໃນການດຳເນີນງານລວມຂອງຜູ້ປະກອບການເຊັ່ນ: ໃຫ້ບໍລິສັດກໍ່ສ້າງຂົວທາງກູ້ຢືມ ເພື່ອຊື້ວັດຖຸກໍ່ສ້າງທີ່ຈຳເປັນ, ຄ່າແຮງງານ, ຄ່າເຊື້ອໄຟ ແລະ ອື່ນໆ ເພື່ອໃຊ້ເຂົ້າໃນການກໍ່ສ້າງໃຫ້ສຳເລັດທັນເວລາ.

(7). <u>**ສິນເຊື່ອເພື່ອການນຳເຂົ້າສິນຄ້າ ແລະ ບໍລິການ**</u> (ບ/ຊ: 120317)

ບັນຊີນີ້ໃຊ້ເພື່ອບັນທຶກ ການໃຫ້ກູ້ຢືມເພື່ອໃຊ້ເຂົ້າໃນການນຳເຂົ້າສິນຄ້າ ແລະ ບໍລິການເຊັ່ນ:

- ສິນເຊື່ອເພື່ອເປີດ L/C
- ໃຫ້ກູ້ຢືມເປັນເງິນຕາຕ່າງປະເທດ ແກ່ຜູ້ນຳເຂົ້າສິນຄ້າ ແລະ ບໍລິການ

(8). <u>**ສິນເຊື່ອຄ້າງເງິນລວມອື່ນໆ (ບ/ຊ 120318)**</u>

ບັນຊີນີ້ໃຊ້ເພື່ອບັນທຶກ ການໃຫ້ກູ້ຢືມເພື່ອອຳນວຍຄວາມສະດວກທາງດ້ານການເງິນແກ່ລູກຄ້າ ເພື່ອໃຊ້ເຂົ້າໃນວັດຖຸປະສົງອື່ນ ນອກຈາກທີ່ໄດ້ກ່າວມາໃນຂ້າງເທິງນີ້.

ບັນຊີ 120311, 120312, 120313, 120314, 120315, 120316, 120317, ແລະ 120318 ໃຊ້ເພື່ອບັນທຶກການໃຫ້ກູ້ຢືມເງິນໄລຍະສັ້ນ ແລະ ໄລຍະກາງຂອງທະນາຄານທຸລະກິດ ເພື່ອຊ່ວຍຜູ້ກູ້ຢືມສາມາດມີທຶນຈຳນວນໃດໜຶ່ງ ເພື່ອດຳເນີນທຸລະກິດ ເຮັດການຂາຍຜ່ອນ, ໃຫ້ກູ້ຢືມແກ່ບຸກຄົນທົ່ວໄປ, ສິນເຊື່ອເພື່ອການໃຊ້ບັດເຄຣດິດ, ສິນເຊື່ອຕາມລະດູການ, ເງິນຈ່າຍລ່ວງໜ້າໂດຍມີເອກະສານທາງການເງິນຄ້ຳປະກັນ, ສິນເຊື່ອເພື່ອການດຳເນີນງານຂອງຜູ້ປະກອບການລວມ, ສິນເຊື່ອເພື່ອການນຳເຂົ້າ ແລະ ສິນເຊື່ອຄ້າງເງິນລວມອື່ນໆ.

**ເບື້ອງໜີ້ຈິດ**: ຈຳນວນເງິນທີ່ທະນາຄານໃຫ້ກູ້ຢືມ

**ເບື້ອງ ມີຈິດ**: ຈຳນວນເງິນທີ່ໄດ້ຮັບຈາກການທົດແທນຄືນ ຫຼື ຈຳນວນເງິນທີ່ຕ້ອງໂອນໄປເປັນໜີ້ຕ້ອງຮັບທວງຍາກ

**ຍອດເຫຼືອໜີ້**: ສະແດງເຖິງຈຳນວນເງິນທີ່ລູກຄ້າຍັງຄ້າງຊຳລະ

12037 ດອກເບ້ຍສິນເຊື່ອຄ້າງເງິນລວມຄ້າງຮັບ

120371 ດອກເບ້ຍສິນເຊື່ອເພື່ອການຂາຍຜ່ອນ

1203711 ດອກເບ້ຍເງິນໃຫ້ກູ້ຢືມໄລຍະສັ້ນ

1203712 ດອກເບ້ຍເງິນໃຫ້ກູ້ຢືມໄລຍະກາງ

120372 ດອກເບ້ຍເງິນໃຫ້ກູ້ຢືມແກ່ບຸກຄົນທົ່ວໄປຄ້າງຮັບ

1203721 ດອກເບ້ຍເງິນໃຫ້ກູ້ຢືມໄລຍະສັ້ນ

1203722 ດອກເບ້ຍເງິນໃຫ້ກູ້ຢືມໄລຍະກາງ

120373 ດອກເບ້ຍສິນເຊື່ອເພື່ອນຳໃຊ້ບັດເຄຣດິດຄ້າງຮັບ

1203731 ດອກເບ້ຍເງິນໃຫ້ກູ້ຢືມໄລຍະສັ້ນ

1203732 ດອກເບ້ຍເງິນໃຫ້ກູ້ຢືມໄລຍະກາງ

120374 ດອກເບ້ຍສິນເຊື່ອຕາມລະດູການຄ້າງຮັບ

1203741 ດອກເບ້ຍເງິນໃຫ້ກູ້ຢືມໄລຍະສັ້ນ

1203742 ດອກເບ້ຍເງິນໃຫ້ກູ້ຢືມໄລຍະກາງ

120375 ດອກເບ້ຍ ເງິນຈ່າຍລ່ວງໜ້າໂດຍມີບັດເງິນສົດ, ສະຫຼາກປະຢັດ ແລະ ເງິນຝາກມີກຳນົດລວມທັງພັນທະບັດຂອງລັດເປັນຫຼັກຄ້ຳປະກັນຄ້າງຮັບ

1203751 ດອກເບ້ຍເງິນໃຫ້ກູ້ຢືມໄລຍະສັ້ນ

1203752 ດອກເບ້ຍເງິນໃຫ້ກູ້ຢືມໄລຍະກາງ

120376 ດອກເບ້ຍສິນເຊື່ອເພື່ອການດຳເນີນງານລວມຂອງຜູ້ປະກອບການຄ້າງຮັບ

1203761 ດອກເບ້ຍເງິນໃຫ້ກູ້ຢືມໄລຍະສັ້ນ

1203762 ດອກເບ້ຍເງິນໃຫ້ກູ້ຢືມໄລຍະກາງ

120377 ດອກເບ້ຍສິນເຊື່ອເພື່ອການນຳເຂົ້າຄ້າງຮັບ

1203771 ດອກເບ້ຍເງິນໃຫ້ກູ້ຢືມໄລຍະສັ້ນ

1203772 ດອກເບ້ຍເງິນໃຫ້ກູ້ຢືມໄລຍະກາງ

120378 ດອກເບ້ຍສິນເຊື່ອຄັງເງິນລວມອື່ນໆຄ້າງຮັບ

1203781 ດອກເບ້ຍເງິນໃຫ້ກູ້ຢືມໄລຍະສັ້ນ

1203782 ດອກເບ້ຍເງິນໃຫ້ກູ້ຢືມໄລຍະກາງ

ບັນຊີ 120371, 120372, 120373, 120374, 120375, 120376, 120377, 120378 ໃຊ້ເພື່ອບັນທຶກດອກເບ້ຍທີ່ຄິດໄລ່ໄວ້ແລ້ວ ຂອງສິນເຊື່ອເພື່ອການຂາຍຜ່ອນ, ເງິນໃຫ້ກູ້ຢືມແກ່ບຸກຄົນທົ່ວໄປ, ສິນເຊື່ອເພື່ອການໃຊ້ບັດເຄຣດິດ, ສິນເຊື່ອຕາມລະດູການ, ເງິນຈ່າຍລ່ວງໜ້າ ໂດຍມີເອກະສານທາງການເງິນຄ້ຳປະກັນ, ສິນເຊື່ອເພື່ອການດຳເນີນງານຂອງຜູ້ປະກອບການລວມ, ສິນເຊື່ອເພື່ອ ການນຳເຂົ້າ ແລະ ສິນເຊື່ອຄັງເງິນລວມອື່ນໆ ເມື່ອປັບປຸງບັນຊີທ້າຍເດືອນ ແຕ່ຍັງບໍ່ທັນໄດ້ຮັບການຊຳລະ.

**ເບື້ອງໜີ້ຈິດ**: ຈຳນວນດອກເບ້ຍທີ່ຖືກຄິດໄລ່ໄວ້ແລ້ວ

**ເບື້ອງ ມີຈິດ**: ການຊຳລະຈຳນວນດອກເບ້ຍທີ່ຖືກຄິດໄລ່ໄວ້ແລ້ວ

**ຍອດເຫຼືອໜີ້**: ສະແດງເຖິງຈຳນວນດອກເບ້ຍທີ່ຖືກຄິດໄລ່ໄວ້ແລ້ວແຕ່ຍັງບໍ່ທັນໄດ້ຮັບການຊຳລະ

1204 ສິນເຊື່ອເພື່ອປະກອບວັດຖຸອຸປະກອນເຕັກນິກ

12041 ສິນເຊື່ອເພື່ອປະກອບວັດຖຸອຸປະກອນເຕັກນິກ

120411 ເງິນໃຫ້ກູ້ຢືມດ້ວຍແຫຼ່ງທຶນທີ່ທະນາຄານໄດ້ຮັບການຈັດສັນ

1204111 ໜຶ່ງປີລົງມາ

1204112 ເກີນໜຶ່ງປີຂຶ້ນໄປ (ແຕ່ບໍ່ເກີນຫ້າປີ)

1204113 ເກີນຫ້າປີຂຶ້ນໄປ

120418 ເງິນກູ້ຢືມດ້ວຍແຫຼ່ງທຶນອື່ນໆຂອງທະນາຄານ

1204181 ໜຶ່ງປີລົງມາ

1204182 ເກີນໜຶ່ງປີຂຶ້ນໄປ(ແຕ່ບໍ່ເກີນຫ້າປີ)

1204183 ເກີນຫ້າປີຂຶ້ນໄປ

**ສິນເຊື່ອເພື່ອປະກອບວັດຖຸອຸປະກອນເຕັກນິກ** ແມ່ນສິນເຊື່ອທີ່ໃຫ້ລູກຄ້າກູ້ຢືມເພື່ອຈັດຊື້ ຫຼື ກໍ່ສ້າງຊັບສິນບັດຄົງທີ່ທັງ ທີ່ມີຕົວຕົນ ແລະ ບໍ່ມີຕົວຕົນເຊັ່ນ: ຊື້ເຄື່ອງກົນຈັກ, ຊື້ ຫຼື ກໍ່ສ້າງອາຄານ, ຊື້ຊັບສິນບັດຄົງທີ່ບໍ່ມີຕົວຕົນ ທັງນີ້ເພື່ອໃຊ້ເຂົ້າໃນການດຳເນີນງານຂອງກິດຈະການ. ຕົວຢ່າງເຊັ່ນ:

- ໃນຂະແໜງກະສິກຳ : ຈັດຊື້ນາ, ຊື້ທີ່ດິນເພື່ອເຮັດນາເຮັດສວນ, ຊື້ສັດລາກແກ່, ຊື້ລົດໄຖນາ , ລົດກ່ຽວເຂົ້າ, ສ້າງສາງ, ສ້າງຄອກໝູ, ຄອກໄກ່ ຄອກງົວ ......................
- ໃນຂະແໜງອຸດສາຫະກຳ : ຈັດຊື້ເຄື່ອງຈັກ, ສ້າງໂຮງງານ, ສ້າງອາຄານບໍລິຫານ, ສ້າງສາງ
- ໃນຂະແໜງບໍລິການ : ສ້າງໂຮງແຮມ, ຊື້ລົດ bus, ລົດ Taxi.....
- ໃນຂະແໜງກໍ່ສ້າງ : ຈັດຊື້ເຄື່ອງກົນຈັກຕ່າງໆ.
- ຂະແໜງຂົນສົ່ງ : ຈັດຊື້ລົດຂົນສົ່ງ, ເຮືອບິນ, ສ້າງສະຖານີຂົນສົ່ງ ... ແລະ ອື່ນໆ

ໂດຍທົ່ວໄປແລ້ວ ສິນເຊື່ອປະເພດນີ້ຈະມີອາຍຸເກີນໜຶ່ງປີຂຶ້ນໄປຊຶ່ງອາດຈະເປັນ 3 ປີ, 5 ປີ,10 ປີ, ຫຼື 25 ປີແລ້ວ ແຕ່ກໍລະນີ ສິນເຊື່ອປະເພດນີ້ໄດ້ຈຳແນກຕາມແຫຼ່ງທຶນທີ່ໄດ້ນຳໃຊ້ເຂົ້າໃນການໃຫ້ກູ້ຢືມດັ່ງນີ້:

(1). ໃຫ້ກູ້ຢືມດ້ວຍແຫຼ່ງທຶນທີ່ໄດ້ຮັບຈັດສັນ (ບັນຊີ= 120411)

(2). ໃຫ້ກູ້ຢືມດ້ວຍແຫຼ່ງທຶນອື່ນໆຂອງທະນາຄານ (ບັນຊີ= 120418)

ບັນຊີ 120411, 120418 ໃຊ້ບັນທຶກຈຳນວນເງິນໃຫ້ກູ້ຢືມ ເພື່ອປະກອບວັດຖຸເຕັກນິກເຊັ່ນ: ການຊື້ອຸປະກອນເຄື່ອງຈັກ ແລະ ຊັບສິນບັດຄົງທີ່ອື່ນໆ ດ້ວຍບ້ວງເງິນທຶນຂອງລັດທີ່ທະນາຄານໄດ້ຮັບການຈັດສັນ ແລະ ດ້ວຍແຫຼ່ງທຶນອື່ນໆຂອງທະນາຄານ.

**ເບື້ອງໜີ້ຈິດ**: ຈຳນວນເງິນທີ່ທະນາຄານໃຫ້ກູ້ຢືມ

**ເບື້ອງມີຈິດ:** ຈຳນວນເງິນທີ່ໄດ້ຮັບຊຳລະ ຫຼື ຈຳນວນເງິນທີ່ໂອນໄປເປັນໜີ້ຕ້ອງຮັບທວງຍາກ

**ຍອດເຫຼືອໜີ້**: ສະແດງເຖິງຈຳນວນເງິນທີ່ລູກຄ້າຍັງຄ້າງຊຳລະຄືນໃຫ້ທະນາຄານ

**12047** ດອກເບ້ຍສິນເຊື່ອເພື່ອປະກອບວັດຖຸອຸປະກອນເຕັກນິກຄ້າງຮັບ

120471 ດອກເບ້ຍເງິນໃຫ້ກູ້ຢືມດ້ວຍແຫຼ່ງທຶນທີ່ທະນາຄານໄດ້ຈັດສັນຄ້າງຮັບ

1204711 ໜຶ່ງປີລົງມາ

1204712 ເກີນໜຶ່ງປີຂຶ້ນໄປ(ແຕ່ບໍ່ເກີນ ຫ້າປີ)

1204713 ເກີນຫ້າປີຂຶ້ນໄປ

120478 ດອກເບ້ຍເງິນກູ້ຢືມດ້ວຍແຫຼ່ງທຶນອື່ນໆຂອງທະນາຄານຄ້າງຮັບ

1204781 ໜຶ່ງປີລົງມາ

1204782 ເກີນໜຶ່ງປີຂຶ້ນໄປ(ແຕ່ບໍ່ເກີນ ຫ້າປີ)

1204783 ເກີນຫ້າປີຂຶ້ນໄປ

ບັນຊີ 12047 ດອກເບ້ຍສິນເຊື່ອເພື່ອປະກອບວັດຖຸອຸປະກອນເຕັກນິກຄ້າງຮັບ ໃຊ້ເພື່ອຕິດຕາມຈຳນວນດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວເມື່ອປັບປຸງບັນຊີທ້າຍເດືອນ.

**ເບື້ອງໜີ້ຈິດ**: ຈຳນວນດອກເບ້ຍທີ່ຄິດໄລ່ໄວ້ແລ້ວເມື່ອຮອດກຳນົດເວລາ

**ເບື້ອງ ມີຈິດ:** ການຊຳລະດອກເບ້ຍທີ່ຄິດໄລ່ໄວ້ແລ້ວ

**ຍອດເຫຼືອໜີ້**: ສະແດງເຖິງຈຳນວນດອກເບ້ຍທີ່ຄິດໄລ່ໄວ້ແລ້ວແຕ່ຍັງຄ້າງຊຳລະ

1205 ສິນເຊື່ອເພື່ອເຄຫາສະຖານ

12051 ສິນເຊື່ອເພື່ອເຄຫາສະຖານ

120511  ປ່ອຍໃຫ້ແກ່ຜູ້ລົງທຶນ (ຢູ່ເອງ ຫຼື ໃຫ້ຜູ້ອື່ນໆເຊົ່າ)

1205111 ໜຶ່ງປີລົງມາ

1205112 ເກີນໜຶ່ງປີຂຶ້ນໄປ(ແຕ່ບໍ່ເກີນ ຫ້າປີ)

1205113 ເກີນຫ້າປີຂຶ້ນໄປ

120512 ປ່ອຍໃຫ້ແກ່ຜູ້ດຳເນີນທຸລະກິດອະສັງຫາລິມະຊັບ(ເພື່ອຂາຍ)

1205121 ໜຶ່ງປີລົງມາ

1205122 ເກີນໜຶ່ງປີຂຶ້ນໄປ(ແຕ່ບໍ່ເກີນ ຫ້າປີ)

1205123 ເກີນຫ້າປີຂຶ້ນໄປ

ສິນເຊື່ອເພື່ອເຄຫາສະຖານ ແມ່ນສິນເຊື່ອທີ່ໃຫ້ລູກຄ້າກູ້ຢືມເພື່ອຈັດຊື້ ຫຼື ກໍ່ສ້າງທີ່ຢູ່ອາໃສເພື່ອຢູ່ເອງ ໃຫ້ເຊົ່າ ຫຼື ຂາຍ. ສິນເຊື່ອປະເພດນີ້ໄດ້ຈຳແນກປະເພດດັ່ງນີ້:

(1). ສິນເຊື່ອປ່ອຍໃຫ້ແກ່ຜູ້ລົງທຶນ: (ບັນຊີ= 120511)

ບັນຊີນີ້ໃຊ້ເພື່ອບັນທຶກເງິນໃຫ້ກູ້ຢືມແກ່ບຸກຄົນທຳມະດາ ຫຼື ນິຕິບຸກຄົນເພື່ອຊື້ ຫຼື ກໍ່ສ້າງທີ່ຢູ່ອາໃສ (ເຮືອນ) ໂດຍມີວັດຖຸປະສົງທີ່ຈະຢູ່ເອງ ຫຼື ໃຫ້ເຊົ່າ.

(2). ສິນເຊື່ອປ່ອຍໃຫ້ແກ່ຜູ້ດຳເນີນທຸລະກິດອະສັງຫາລິມະຊັບ (ບັນຊີ= 120512)

ບັນຊີນີ້ໃຊ້ເພື່ອບັນທຶກເງິນໃຫ້ກູ້ຢືມແກ່ບໍລິສັດອະສັງຫາລິມະຊັບ ເພື່ອຈັດສ້າງທີ່ຢູ່ອາໃສ ໂດຍມີຈຸດປະສົງເພື່ອຂາຍເຊັ່ນ: ການຊື້ທີ່ດິນ ແລະ ປຸກສ້າງທີ່ຢູ່ອາໃສເພື່ອຂາຍ.

ໝາຍເຫດ: ສິນເຊື່ອທີ່ປ່ອຍໃຫ້ບໍລິສັດກໍ່ສ້າງເພື່ອໃຊ້ເຂົ້າໃນການກໍ່ສ້າງເຄຫະສະຖານດັ່ງກ່າວມາໃນຂ້າງເທິງນີ້ແມ່ນບໍ່ໃຫ້ບັນທຶກລົງບັນຊີນີ້ ແຕ່ໃຫ້ບັນທຶກລົງໃນບັນຊີ 120316 "ສິນເຊື່ອເພື່ອການດຳເນີນງານລວມ ຂອງຜູ້ປະກອບການ"

ບັນຊີ 1205 ສິນເຊື່ອເພື່ອການເຄຫະສະຖານ ໃຊ້ເພື່ອບັນທຶກຕິດຕາມຈຳນວນເງິນໃຫ້ກູ້ຢືມແກ່ບໍລິສັດກໍ່ສ້າງເຄຫະສະຖານ ເພື່ອຮັບເໝົາກໍ່ສ້າງທີ່ຢູ່ອາໃສເຊັ່ນ: ການຊື້ທີ່ດິນເພື່ອປຸກສ້າງທີ່ຢູ່ອາໃສ ຫຼື ຂາຍ ໄດ້ແກ່ບັນຊີ.

ບັນຊີ 120511, 120512 ໃຊ້ເພື່ອຕິດຕາມການປ່ອຍສິນເຊື່ອໃຫ້ແກ່ຜູ້ລົງທຶນທາງດ້ານອະສັງຫາລິມະຊັບເພື່ອການຄ້າ (ຂາຍ) ແລະ ຢູ່ອາໃສເອງ.

**ເບື້ອງໜີ້ ຈິດ**: ຈຳນວນເງິນທີ່ທະນາຄານໃຫ້ກູ້ຢືມ

**ເບື້ອງມີ ຈິດ**: ຈຳນວນເງິນທີ່ຊຳລະ ຫຼື ຈຳນວນເງິນທີ່ໂອນໄປເປັນໜີ້ຕ້ອງຮັບທວງຍາກ

**ຍອດເຫຼືອໜີ້**: ສະແດງເຖິງຈຳນວນເງິນທີ່ລູກຄ້າຍັງຄ້າງຊຳລະຄືນໃຫ້ທະນາຄານ

120571  ດອກເບ້ຍປ່ອຍໃຫ້ແກ່ຜູ້ລົງທຶນ (ຢູ່ເອງ ຫຼື ໃຫ້ຜູ້ອື່ນໆເຊົ່າ)

1205711 ໜຶ່ງປີລົງມາ

1205712 ເກີນໜຶ່ງປີຂຶ້ນໄປ(ແຕ່ບໍ່ເກີນຫ້າປີ)

1205713 ເກີນຫ້າປີຂຶ້ນໄປ

120572 ດອກເບ້ຍສິນເຊື່ອເພື່ອເຄຫາສະຖານປ່ອຍໃຫ້ແກ່ຜູ້ດຳເນີນທຸລະກິດ

1205721 ໜຶ່ງປີລົງມາ

1205722 ເກີນໜຶ່ງປີຂຶ້ນໄປ(ແຕ່ບໍ່ເກີນຫ້າປີ)

1205723 ເກີນຫ້າປີຂຶ້ນໄປ

ບັນຊີ 120571, 120572 ແມ່ນໃຊ້ເພື່ອບັນທຶກດອກເບ້ຍຄ້າງຮັບທີ່ເກີດຈາກການໃຫ້ກູ້ຢືມແກ່ຜູ້ລົງທຶນເພື່ອການເຄຫາສະຖານ ທີ່ດຳເນີນທຸລະກິດອະສັງຫາລິມະຊັບ.

**ເບື້ອງໜີ້ຈິດ**: ຈຳນວນດອກເບ້ຍທີ່ຄິດໄລ່ໄວ້ແລ້ວເມື່ອຮອດກຳນົດເວລາ

**ເບື້ອງ ມີຈິດ:** ການຊຳລະດອກເບ້ຍທີ່ຄິດໄລ່ໄວ້ແລ້ວ ຫຼື ຈຳນວນເງິນທີ່ໂອນໄປເປັນດອກເບ້ຍທວງຍາກ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນດອກເບ້ຍທີ່ຄິດໄລ່ໄວ້ແລ້ວແຕ່ຍັງຄ້າງຊຳລະ

1206 ສິນເຊື່ອອື່ນໆປ່ອຍໃຫ້ລູກຄ້າ

12061 ສິນເຊື່ອອື່ນໆປ່ອຍໃຫ້ລູກຄ້າ

120611 ໜຶ່ງປີລົງມາ

120612 ເກີນໜຶ່ງປີຂຶ້ນໄປ(ແຕ່ບໍ່ເກີນຫ້າປີ)

120613 ເກີນຫ້າປີຂຶ້ນໄປ

12067 ດອກເບ້ຍສິນເຊື່ອອື່ນໆປ່ອຍໃຫ້ລູກຄ້າຄ້າງຮັບ

120671 ໜຶ່ງປີລົງມາ

120672 ເກີນໜຶ່ງປີຂຶ້ນໄປ(ແຕ່ບໍ່ເກີນຫ້າປີ)

120673 ເກີນຫ້າປີຂຶ້ນໄປ

1207 ເງິນເບີກເກີນບັນຊີ

**ສິນເຊື່ອອື່ນໆປ່ອຍໃຫ້ລູກຄ້າ** ແມ່ນສິນເຊື່ອທີ່ໃຫ້ກູ້ຢືມແກ່ລູກຄ້າລາຍຍ່ອຍອື່ນໆທີ່ບໍ່ສາມາດຈິດເຂົ້າບັນຊີເງິນໃຫ້ກູ້ຢືມ ປະເພດຕ່າງໆດັ່ງກ່າວມາຂ້າງເທິງນີ້.

ບັນຊີ 1206 ສິນເຊື່ອອື່ນໆປ່ອຍໃຫ້ລູກຄ້າແມ່ນເງິນໃຫ້ກູ້ຢືມປະເພດອື່ນໆ (ນອກຈາກ 5 ປະເພດທີ່ກ່າວມາຂ້າງເທິງ) ທີ່ໄດ້ປ່ອຍໃຫ້ລູກຄ້າທັງໃນໄລຍະສັ້ນ ແລະ ໄລຍະຍາວ.

**ເບື້ອງໜີ້ຈິດ:** ຈຳນວນເງິນທີ່ທະນາຄານໃຫ້ກູ້ຢືມແກ່ລູກຄ້າລາຍຍ່ອຍ

**ເບື້ອງ ມີຈິດ:** ຈຳນວນເງິນທີ່ໄດ້ຮັບຊຳລະ ຫຼື ຈຳນວນເງິນທີ່ໂອນ ໄປເປັນໜີ້ຕ້ອງຮັບທວງຍາກ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນທີ່ລູກຄ້າຍັງຄ້າງຊຳລະຄືນໃຫ້ທະນາຄານ

ບັນຊີ 12067 ໃຊ້ເພື່ອບັນທຶກດອກເບ້ຍຄ້າງຮັບທີ່ເກີດຈາກສິນເຊື່ອອື່ນໆປ່ອຍໃຫ້ແກ່ລູກຄ້າ ທີ່ໄດ້ຄິດໄລ່ໄວ້ເມື່ອປັບປຸງບັນຊີທ້າຍເດືອນ.

**ເບື້ອງໜີ້ຈິດ**: ຈຳນວນດອກເບ້ຍທີ່ຄິດໄລ່ໄວ້ເມື່ອຮອດກຳນົດເວລາ
**ເບື້ອງ ມີຈິດ**: ການຊຳລະດອກເບ້ຍທີ່ຄິດໄລ່ໄວ້ ຫຼື ໂອນໄປເປັນດອກເບ້ຍຄ້າງຮັບທວງຍາກ
**ຍອດເຫຼືອໜີ້**: ສະແດງເຖິງຈຳນວນດອກເບ້ຍທີ່ຄິດໄລ່ໄວ້ແຕ່ຍັງຄ້າງຊຳລະ

**ເງິນເບີກເກີນບັນຊີ** ແມ່ນລາຍການສິນເຊື່ອທີ່ທະນາຄານ ຫຼື ສະຖາບັນການເງິນອະນຸມັດໃຫ້ລູກຄ້າສາມາດຖອນໄດ້ເກີນຈຳນວນເງິນຍອດເຫຼືອຂອງບັນຊີເງິນຝາກກະແສລາຍວັນ. ເພາະສະນັ້ນບັນຊີດັ່ງກ່າວຈຶ່ງຕິດພັນກັບບັນຊີເງິນຝາກກະແສລາຍວັນ (ບັນຊີ 2201100). ສຳລັບດອກເບ້ຍຂອງເງິນເບີກເກີນບັນຊີ (ບັນຊີ 1207000) ຕ້ອງໄດ້ຄິດໄລ່ຈາກຍອດເຫຼືອແຕ່ລະມື້ໂດຍຄິດໄລ່ເປັນລາຍເດືອນ ແລະ ໃຫ້ບັນທຶກເຂົ້າບັນຊີລາຍຮັບທັນທີ (510217)ໂດຍຈິດໜີ້ບັນຊີຂອງລູກຄ້າທົບເປັນເງິນຕົ້ນ.

ບັນຊີ 1207 ເງິນເບີກເກີນບັນຊີ ແມ່ນການໃຫ້ສິນເຊື່ອທີ່ຜູ້ຂໍກູ້ຢືມຈະຕ້ອງມີບັນຊີເງິນຝາກກະແສລາຍວັນກັບທະນາຄານຢູ່ກ່ອນແລ້ວ ເປັນການໃຫ້ສິນເຊື່ອໂດຍທະນາຄານຍິນຍອມ ໃຫ້ຜູ້ຝາກເງິນຖອນເງິນຈາກບັນຊີເກີນກ່ວາຍອດເຫຼືອໃນບັນຊີເງິນຝາກທີ່ມີຢູ່. ການໃຫ້ສິນເຊື່ອປະເພດນີ້ລູກຄ້າຕ້ອງເຮັດສັນຍາກັບທະນາຄານ ຊຶ່ງມີຂໍ້ກຳນົດກ່ຽວກັບວົງເງິນສູງສຸດທີ່ຈະເບີກເກີນບັນຊີ, ອັດຕາດອກເບ້ຍ ແລະ ກຳນົດເວລາຊຳລະຄືນ. ດອກເບ້ຍເງິນເບີກເກີນບັນຊີຈະຄິດໄລ່ຈາກຍອດເຫຼືອແຕ່ລະມື້ ໂດຍຄິດໄລ່ເປັນລາຍເດືອນ ແລ້ວຈິດໜີ້ບັນຊີຂອງລູກຄ້າທົບ (ບວກເຂົ້າ) ເປັນເງິນຕົ້ນ.

**ເບື້ອງໜີ້ຈິດ:** ຈຳນວນເງິນເບີກເກີນບັນຊີເງິນຝາກກະແສລາຍວັນຂອງລູກຄ້າ
**ເບື້ອງ ມີຈິດ:** ຈຳນວນເງິນທີ່ຮັບຊຳລະຄືນ ທີ່ໂອນມາຈາກບັນຊີເງິນຝາກກະແສລາຍວັນ ຫຼື ຈຳນວນເງິນທີ່ໂອນ ໄປເປັນໜີ້ຕ້ອງຮັບທວງຍາກ
**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນເບີກເກີນບັນຊີທີ່ລູກຄ້າຍັງຄ້າງຊຳລະຄືນໃຫ້ທະນາຄານ

123 ເງິນໃຫ້ກູ້ຢືມແກ່ລູກຄ້າວົງການການເງິນ
- 1231 ເງິນໃຫ້ກູ້ຢືມແກ່ລູກຄ້າວົງການການເງິນ
  - 12311 ເງິນໃຫ້ກູ້ຢືມເປັນປະຈຳ
  - 12315 ເງິນໃຫ້ກູ້ຢືມມີກຳນົດ
    - 123151 ໜຶ່ງປີລົງມາ
    - 123152 ເກີນໜຶ່ງປີຂຶ້ນໄປ (ແຕ່ບໍ່ເກີນຫ້າປີ)
- 1237 ດອກເບ້ຍເງິນໃຫ້ກູ້ຢືມແກ່ລູກຄ້າວົງການການເງິນຄ້າງຮັບ
    - 12371 ເງິນໃຫ້ກູ້ຢືມເປັນປະຈຳວັນ
    - 12375 ເງິນໃຫ້ກູ້ຢືມມີກຳນົດ

ບັນຊີ 1231 ໃຊ້ເພື່ອຕິດຕາມການບັນທຶກຈຳນວນເງິນໃຫ້ກູ້ຢືມແກ່ລູກຄ້າວິງການການເງິນ ຊຶ່ງທະນາຄານໄດ້ເຊັນສັນຍາການໃຫ້ກູ້ຢືມເງິນ ຕາມເງື່ອນໄຂທີ່ລະບຸໄວ້ໃນສັນຍາ.

ລູກຄ້າວິງການການເງິນປະກອບມີ: ບໍລິສັດປະກັນໄພ, ກອງທຶນເບ້ຍບຳນານ, ອົງການປະກັນສັງຄົມ ລວມທັງສະຖາບັນການເງິນຈຸລະພາກ.

**ເບື້ອງໜີ້ຈິດ:** ຈຳນວນເງິນທີ່ທະນາຄານໃຫ້ກູ້ຢືມແກ່ລູກຄ້າວິງການການເງິນ

**ເບື້ອງ ມີຈິດ:** ຈຳນວນເງິນທີ່ໄດ້ຮັບຊຳລະ ຫຼື ຈຳນວນເງິນທີ່ໂອນໄປເປັນໜີ້ຕ້ອງຮັບທວງຍາກ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນທີ່ລູກຄ້າວິງການການເງິນຍັງຄ້າງຊຳລະຄືນໃຫ້ທະນາຄານ

ບັນຊີ 1237 ໃຊ້ເພື່ອບັນທຶກຕິດຕາມດອກເບ້ຍຄ້າງຮັບຂອງເງິນໃຫ້ກູ້ຢືມແກ່ລູກຄ້າວິງການ ການເງິນທີ່ຄິດໄລ່ໄວ້ເມື່ອປັບປຸງບັນຊີທ້າຍເດືອນ.

**ເບື້ອງໜີ້ຈິດ:** ຈຳນວນດອກເບ້ຍທີ່ຄິດໄລ່ໄວ້ເມື່ອຮອດກຳນົດເວລາ

**ເບື້ອງ ມີຈິດ:** ການຊຳລະດອກເບ້ຍທີ່ຄິດໄລ່ໄວ້ ຫຼື ໂອນໄປເປັນດອກເບ້ຍຄ້າງຮັບທວງຍາກ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນດອກເບ້ຍທີ່ຄິດໄລ່ໄວ້ແຕ່ຍັງຄ້າງຊຳລະ

124 ເງິນໃຫ້ກູ້ຢືມໂດຍມີມູນຄ່າຫຼັກຊັບຄ້ຳປະກັນ

- 1241 ເງິນໃຫ້ກູ້ຢືມໂດຍມີມູນຄ່າຫຼັກຊັບຄ້ຳປະກັນ
  - 12411 ເງິນໃຫ້ກູ້ຢືມເປັນປະຈຳວັນ
  - 12415 ເງິນກູ້ຢືມມີກຳນົດ (ບໍ່ເກີນໜຶ່ງເດືອນ)
- 1247 ດອກເບ້ຍຄ້າງຮັບ
  - 12471 ດອກເບ້ຍຄ້າງຮັບຂອງເງິນໃຫ້ກູ້ຢືມເປັນປະຈຳວັນ
  - 12475 ດອກເບ້ຍຄ້າງຮັບຂອງເງິນກູ້ຢືມມີກຳນົດ

ບັນຊີ 1241 ເງິນໃຫ້ກູ້ຢືມໂດຍມີມູນຄ່າຫຼັກຊັບຄ້ຳປະກັນ ໃຊ້ເພື່ອບັນທຶກເງິນໃຫ້ກູ້ຢືມຂອງທະນາຄານທຸລະກິດທີ່ໃຫ້ແກ່ລູກຄ້າໃດໜຶ່ງກູ້ຢືມ ໂດຍເອົາມູນຄ່າຫຼັກຊັບມາຄ້ຳປະກັນ ແລະ ໄດ້ເຊັນສັນຍາການກູ້ຢືມນຳກັນ ບົນພື້ນຖານຕາມກຳນົດເວລາໃນສັນຍາ.

**ເບື້ອງໜີ້ຈິດ:** ຈຳນວນເງິນທີ່ທະນາຄານໃຫ້ກູ້ຢືມແກ່ລູກຄ້າ

**ເບື້ອງ ມີຈິດ:** ຈຳນວນເງິນທີ່ໄດ້ຮັບຊຳລະ ຫຼື ຈຳນວນເງິນທີ່ໂອນໄປເປັນໜີ້ຕ້ອງຮັບທວງຍາກ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນທີ່ລູກຄ້າຍັງຄ້າງຊຳລະຄືນໃຫ້ ທະນາຄານ

ບັນຊີ 1247 ໃຊ້ເພື່ອບັນທຶກຕິດຕາມດອກເບ້ຍຄ້າງຮັບຂອງເງິນໃຫ້ກູ້ຢືມໂດຍມີມູນຄ່າຫຼັກຊັບຄ້ຳປະກັນ ທີ່ຄິດໄລ່ໄວ້ເມື່ອປັບປຸງບັນຊີທ້າຍເດືອນ.

**ເບື້ອງໜີ້ຈິດ**: ຈຳນວນດອກເບ້ຍທີ່ຄິດໄລ່ໄວ້ເມື່ອຮອດກຳນົດເວລາ

**ເບື້ອງ ມີຈິດ:** ການຊຳລະດອກເບ້ຍທີ່ຄິດໄລ່ໄວ້ ຫຼື ໂອນໄປເປັນດອກເບ້ຍຄ້າງຮັບທວງຍາກ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນດອກເບ້ຍທີ່ຄິດໄລ່ໄວ້ແຕ່ຍັງຄ້າງຮັບຊຳລະ

126 ເງິນຈ່າຍລ່ວງໜ້າເພື່ອລູກຄ້າ

1261 ເງິນຈ່າຍລ່ວງໜ້າເພື່ອລູກຄ້າ

1267 ດອກເບ້ຍຄ້າງຮັບ

ບັນຊີ 1261 ເງິນຈ່າຍລ່ວງໜ້າເພື່ອລູກຄ້າ ໃຊ້ຕິດຕາມຈຳນວນເງິນທີ່ທະນາຄານໃຫ້ລູກຄ້າກູ້ຢືມໂດຍການຈ່າຍລ່ວງໜ້າເພື່ອລູກຄ້າ.

**ເບື້ອງໜີ້ຈິດ:** ຈຳນວນເງິນທີ່ທະນາຄານຈ່າຍລ່ວງໜ້າເພື່ອລູກຄ້າ

**ເບື້ອງ ມີຈິດ:** ຈຳນວນເງິນທີ່ທົດແທນການຈ່າຍລ່ວງໜ້າ ຫຼື ໂອນໄປເປັນໜີ້ຕ້ອງຮັບທວງຍາກ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນທີ່ລູກຄ້າຍັງຄ້າງຊຳລະຄືນໃຫ້ທະນາຄານ

ບັນຊີ 1267 ດອກເບ້ຍຄ້າງຮັບເງິນຈ່າຍລ່ວງໜ້າເພື່ອລູກຄ້າ ໃຊ້ຕິດຕາມດອກເບ້ຍເງິນຈ່າຍລ່ວງໜ້າໃຫ້ລູກຄ້າຄ້າງຮັບທີ່ຄິດໄລ່ເມື່ອປັບປຸງບັນຊີທ້າຍເດືອນແຕ່ຍັງບໍ່ທັນໄດ້ຮັບ.

**ເບື້ອງໜີ້ຈິດ**: ຈຳນວນດອກເບ້ຍທີ່ຄິດໄລ່ໄວ້ເມື່ອຮອດກຳນົດເວລາ

**ເບື້ອງ ມີຈິດ:** ການຊຳລະດອກເບ້ຍທີ່ຄິດໄລ່ໄວ້ ຫຼື ໂອນໄປເປັນດອກເບ້ຍຄ້າງຮັບທວງຍາກ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນດອກເບ້ຍທີ່ຄິດໄລ່ໄວ້ແຕ່ຍັງຄ້າງຮັບຊຳລະ

1291 ໜີ້ທວງຍາກຈາກລູກຄ້າ

12911 ໜີ້ຕ່ຳກວ່າມາດຕະຖານ

129111 ສິນເຊື່ອປ່ອຍໃຫ້ລູກຄ້າທວງຍາກ

1291111 ໜີ້ຕ້ອງຮັບການຄ້າທວງຍາກ

1291112 ສິນເຊື່ອເພື່ອການສົ່ງອອກທວງຍາກ

1291113 ສິນເຊື່ອເພື່ອສ້າງເງິນລວມທວງຍາກ

1291114ສິນເຊື່ອເພື່ອປະກອບວັດຖຸອຸປະກອນເຕັກນິກທວງຍາກ

1291115 ສິນເຊື່ອເພື່ອເຄຫາສະຖານທວງຍາກ

1291116 ສິນເຊື່ອອື່ນໆທວງຍາກ

1291117 ເງິນໃຫ້ກູ້ຢືມເບີກເກີນບັນຊີທວງຍາກ

129113 ເງິນໃຫ້ກູ້ຢືມແກ່ລູກຄ້າວິງການການເງິນທວງຍາກ

129114 ເງິນໃຫ້ກູ້ຢືມໂດຍມີມູນຄ່າຫຼັກຊັບຄ້ຳປະກັນທວງຍາກ

129116 ເງິນຈ່າຍລ່ວງໜ້າເພື່ອລູກຄ້າທວງຍາກ

12912 ໜີ້ສົງໃສ

12921 ສິນເຊື່ອປ່ອຍໃຫ້ລູກຄ້າທວງຍາກ

1291211 ໜີ້ຕ້ອງຮັບການຄ້າທວງຍາກ

1291212 ສິນເຊື່ອເພື່ອການສົ່ງອອກທວງຍາກ

1291213 ສິນເຊື່ອເພື່ອຄັງເງິນລວມທວງຍາກ

1291214ສິນເຊື່ອເພື່ອປະກອບວັດຖຸອຸປະກອນເຕັກນິກທວງຍາກ

1291215 ສິນເຊື່ອເພື່ອເຄຫາສະຖານທວງຍາກ

1291216 ສິນເຊື່ອອື່ນໆທວງຍາກ

1291217 ເງິນໃຫ້ກູ້ຢືມເບີກເກີນບັນຊີທວງຍາກ

129123 ເງິນໃຫ້ກູ້ຢືມແກ່ລູກຄ້າວິງການການເງິນທວງຍາກ

129124 ເງິນໃຫ້ກູ້ຢືມໂດຍມີມູນຄ່າຫຼັກຊັບຄ້ຳປະກັນທວງຍາກ

129126 ເງິນຈ່າຍລ່ວງໜ້າເພື່ອລູກຄ້າທວງຍາກ

12913 ໜີ້ສູນ

129131 ສິນເຊື່ອປ່ອຍໃຫ້ລູກຄ້າທວງຍາກ

1291311 ໜີ້ຕ້ອງຮັບການຄ້າທວງຍາກ

1291312 ສິນເຊື່ອເພື່ອການສົ່ງອອກທວງຍາກ

1291313 ສິນເຊື່ອເພື່ອຄັງເງິນລວມທວງຍາກ

1291314ສິນເຊື່ອເພື່ອປະກອບວັດຖຸອຸປະກອນເຕັກນິກທວງຍາກ

1291315 ສິນເຊື່ອເພື່ອເຄຫາສະຖານທວງຍາກ

1291316 ສິນເຊື່ອອື່ນໆທວງຍາກ

1291317 ເງິນໃຫ້ກູ້ຢືມເບີກເກີນບັນຊີທວງຍາກ

129133 ເງິນໃຫ້ກູ້ຢືມແກ່ລູກຄ້າວິງການການເງິນທວງຍາກ

129134 ເງິນໃຫ້ກູ້ຢືມໂດຍມີມູນຄ່າຫຼັກຊັບຄ້ຳປະກັນທວງຍາກ

129136 ເງິນຈ່າຍລ່ວງໜ້າເພື່ອລູກຄ້າທວງຍາກ

12918 ໜີ້ຕ້ອງຮັບທວງຍາກແຕ່ປີ 1999 ຄືນຫຼັງ

1297 ດອກເບ້ຍຄ້າງຮັບຂອງໜີ້ທວງຍາກຈາກລູກຄ້າ

12971 ດອກເບ້ຍຄ້າງຮັບຈາກສິນເຊື່ອປ່ອຍໃຫ້ລູກຄ້າ

129711 ດອກເບ້ຍໜີ້ຕ້ອງຮັບການຄ້າທວງຍາກ

129712 ດອກເບ້ຍສິນເຊື່ອເພື່ອການສົ່ງອອກທວງຍາກ

129713 ດອກເບ້ຍສິນເຊື່ອເພື່ອຄັງເງິນລວມທວງຍາກ

129714 ດອກເບ້ຍສິນເຊື່ອເພື່ອປະກອບວັດຖຸອຸປະກອນເຕັກນິກທວງຍາກ

129715 ດອກເບ້ຍສິນເຊື່ອເພື່ອເຄຫາສະຖານທວງຍາກ

129716 ດອກເບ້ຍສິນເຊື່ອອື່ນໆທວງຍາກ

12973 ດອກເບ້ຍເງິນໃຫ້ກູ້ຢືມແກ່ລູກຄ້າວິງການການເງິນທວງຍາກ

12974 ດອກເບ້ຍເງິນໃຫ້ກູ້ຢືມໂດຍມີມູນຄ່າຫຼັກຊັບຄ້ຳປະກັນທວງຍາກ

12976 ດອກເບ້ຍເງິນຈ່າຍລ່ວງໜ້າເພື່ອລູກຄ້າທວງຍາກ

12978 ດອກເບ້ຍໜີ້ຕ້ອງຮັບທວງຍາກປີ 1999 ຄືນຫຼັງ

ບັນຊີ 1291 ໜີ້ທວງຍາກຈາກລູກຄ້າ ແມ່ນບັນຊີໃຊ້ຕິດຕາມຈຳນວນໜີ້ທີ່ທະນາຄານປ່ອຍສິນເຊື່ອໃຫ້ແກ່ລູກຄ້າແຍກຕິດຕາມ ຕາມການຈັດຊັ້ນໜີ້ປະກອບມີ: ໜີ້ຕ່ຳກວ່າມາດຕະຖານ, ໜີ້ສົງໃສ, ໜີ້ສູນ, ໜີ້ຕ້ອງຮັບທວງຍາກແຕ່ປີ 1999 ຄືນຫຼັງ,

ບັນຊີ 12911, 12912, 12913 ແລະ 12918 ໃຊ້ເພື່ອບັນທຶກຈຳນວນເງິນໜີ້ຕ້ອງຮັບທວງຍາກຈາກລູກຄ້າໂດຍອີງຕາມການຈັດຊັ້ນໜີ້.

**ເບື້ອງໜີ້ຈິດ:** ຈຳນວນເງິນທີ່ໂອນມາຈາກບັນຊີເງິນໃຫ້ກູ້ຢືມປົກກະຕິ ມາເປັນໜີ້ຕ້ອງຮັບທວງຍາກ

**ເບື້ອງມີຈິດ:** ຈຳນວນເງິນທີ່ທົດແທນຄືນເງິນໃຫ້ກູ້ຢືມ ຫຼື ຈຳນວນເງິນທີ່ໄດ້ຈິດເປັນການຂາດທຶນ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນໜີ້ທວງຍາກທີ່ລູກຄ້າຍັງຄ້າງຮັບຊຳລະ

ບັນຊີ 1297 ໃຊ້ເພື່ອບັນທຶກຕິດຕາມດອກເບ້ຍທວງຍາກທີ່ໂອນມາຈາກບັນຊີດອກເບ້ຍຄ້າງຮັບປົກກະຕິ ທີ່ຍັງບໍ່ທັນໄດ້ຮັບການຊຳລະ.

**ເບື້ອງໜີ້ຈິດ:** ຈຳນວນດອກເບ້ຍທີ່ໂອນມາຈາກບັນຊີດອກເບ້ຍຄ້າງຮັບປົກກະຕິ

**ເບື້ອງມີຈິດ:** ຈຳນວນເງິນທີ່ໄດ້ຮັບຊຳລະຄືນ ຫຼື ຈຳນວນເງິນທີ່ໄດ້ຈິດເປັນການຂາດທຶນ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນດອກເບ້ຍຄ້າງຮັບທວງຍາກທີ່ຍັງຄ້າງຮັບຊຳລະ

12991 ເງິນແຮຄ່າເສື່ອມມູນຄ່າໜີ້ຕ້ອງຮັບທວງຍາກ

129911 ເງິນແຮຄ່າເສື່ອມມູນຄ່າຂອງສິນເຊື່ອປ່ອຍໃຫ້ລູກຄ້າ

1299111 ເງິນແຮຄ່າເສື່ອມມູນຄ່າຂອງ ໜີ້ຕ້ອງຮັບການຄ້າ

1299112 ເງິນແຮຄ່າເສື່ອມມູນຄ່າຂອງສິນເຊື່ອເພື່ອການສົ່ງອອກ

1299113 ເງິນແຮຄ່າເສື່ອມມູນຄ່າຂອງ ສິນເຊື່ອເພື່ອຄັງເງິນລວມ

1299114 ເງິນແຮຄ່າເສື່ອມມູນຄ່າຂອງສິນເຊື່ອເພື່ອປະກອບວັດຖຸເຕັກນິກ

1299115 ເງິນແຮຄ່າເສື່ອມມູນຄ່າຂອງສິນເຊື່ອເພື່ອເຄຫາສະຖານ

1299116 ເງິນແຮຄ່າເສື່ອມມູນຄ່າຂອງ ສິນເຊື່ອອື່ນໆທວງຍາກ

1299117 ເງິນແຮຄ່າເສື່ອມມູນຄ່າຂອງເງິນໃຫ້ກູ້ຢືມເບີກເກີນບັນຊີ

129913 ເງິນແຮຄ່າເສື່ອມມູນຄ່າຂອງເງິນໃຫ້ກູ້ຢືມແກ່ລູກຄ້າວົງການການເງິນ

129914 ເງິນແຮຄ່າເສື່ອມມູນຄ່າເງິນໃຫ້ກູ້ຢືມໂດຍມີມູນຄ່າຫຼັກຊັບຄ້ຳປະກັນ

129916 ເງິນແຮຄ່າເສື່ອມມູນຄ່າຂອງເງິນຈ່າຍລ່ວງໜ້າເພື່ອລູກຄ້າ

12992 ເງິນແຮຄ່າເສື່ອມມູນຄ່າຂອງໜີ້ສົງໃສ

129921ເງິນແຮຄ່າເສື່ອມມູນຄ່າຂອງສິນເຊື່ອປ່ອຍໃຫ້ລູກຄ້າທວງຍາກ

1299211 ເງິນແຮຄ່າເສື່ອມມູນຄ່າຂອງໜີ້ຕ້ອງຮັບການຄ້າ

1299212 ເງິນແຮຄ່າເສື່ອມມູນຄ່າຂອງສິນເຊື່ອເພື່ອການສົ່ງອອກ

1299213 ເງິນແຮຄ່າເສື່ອມມູນຄ່າຂອງສິນເຊື່ອເພື່ອຄັງເງິນລວມ

1299214 ເງິນແຮຄ່າເສື່ອມມູນຄ່າສິນເຊື່ອເພື່ອປະກອບວັດຖຸເຕັກນິກ

1299215 ເງິນແຮຄ່າເສື່ອມມູນຄ່າຂອງສິນເຊື່ອເພື່ອເຄຫາສະຖານ

1299216 ເງິນແຮຄ່າເສື່ອມມູນຄ່າຂອງສິນເຊື່ອອື່ນໆທວງຍາກ

1299217 ເງິນແຮຄ່າເສື່ອມມູນຄ່າຂອງເງິນໃຫ້ກູ້ຢືມເບີກເກີນບັນຊີ

129923 ເງິນແຮຄ່າເສື່ອມມູນຄ່າຂອງເງິນໃຫ້ກູ້ຢືມແກ່ລູກຄ້າວົງການການເງິນ

129924 ເງິນແຮຄ່າເສື່ອມມູນຄ່າເງິນໃຫ້ກູ້ຢືມໂດຍມີມູນຄ່າຫຼັກຊັບຄ້ຳປະກັນ

129926 ເງິນແຮຄ່າເສື່ອມມູນຄ່າຂອງເງິນຈ່າຍລ່ວງໜ້າເພື່ອລູກຄ້າທວງຍາກ

12993 ເງິນແຮຄ່າເສື່ອມມູນຄ່າຂອງໜີ້ສູນ

129931 ເງິນແຮຄ່າເສື່ອມມູນຄ່າຂອງສິນເຊື່ອປ່ອຍໃຫ້ລູກຄ້າທວງຍາກ

1299311 ເງິນແຮຄ່າເສື່ອມມູນຄ່າຂອງໜີ້ຕ້ອງຮັບການຄ້າທວງຍາກ

1299312 ເງິນແຮຄ່າເສື່ອມມູນຄ່າຂອງສິນເຊື່ອເພື່ອການສົ່ງອອກ

1299313 ເງິນແຮຄ່າເສື່ອມມູນຄ່າຂອງສິນເຊື່ອເພື່ອຄັງເງິນລວມ

1299314 ເງິນແຮຄ່າເສື່ອມມູນຄ່າສິນເຊື່ອເພື່ອປະກອບວັດຖຸເຕັກນິກ

1299315 ເງິນແຮຄ່າເສື່ອມມູນຄ່າຂອງສິນເຊື່ອເພື່ອເຄຫາສະຖານ

1299316 ເງິນແຮຄ່າເສື່ອມມູນຄ່າຂອງສິນເຊື່ອອື່ນໆ ທວງຍາກ

1299317 ເງິນແຮຄ່າເສື່ອມມູນຄ່າຂອງເງິນໃຫ້ກູ້ຢືມເບີກເກີນບັນຊີ

129933 ເງິນແຮຄ່າເສື່ອມມູນຄ່າຂອງເງິນໃຫ້ກູ້ຢືມແກ່ລູກຄ້າວົງການການເງິນ

129934 ເງິນແຮຄ່າເສື່ອມມູນຄ່າເງິນໃຫ້ກູ້ຢືມໂດຍມີມູນຄ່າຫຼັກຊັບຄ້ຳປະກັນ

29936 ເງິນແຮຄ່າເສື່ອມມູນຄ່າຂອງເງິນຈ່າຍລ່ວງໜ້າເພື່ອລູກຄ້າ

12998 ເງິນແຮຄ່າເສື່ອມມູນຄ່າຂອງໜີ້ຕ້ອງຮັບທວງຍາກປີ 1999 ຄືນຫຼັງ

ບັນຊີ 1299 ເງິນແຮຄ່າເສື່ອມມູນຄ່າໜີ້ຕ້ອງຮັບທວງຍາກປະກອບມີ: ເງິນແຮຄ່າເສື່ອມມູນຄ່າຂອງໜີ້ຕ່ຳກ່ວາມາດຕະຖານ, ເງິນແຮຄ່າເສື່ອມມູນຄ່າຂອງໜີ້ສົງໃສ, ເງິນແຮຄ່າເສື່ອມມູນຄ່າຂອງໜີ້ສູນ ແລະ ເງິນແຮຄ່າເສື່ອມມູນຄ່າໜີ້ຕ້ອງຮັບທວງຍາກ ປີ 1999 ຄືນຫຼັງ.

ບັນຊີ 12991, 12992, 12993, 12998 ໃຊ້ບັນທຶກຕິດຕາມເງິນແຮຄ່າເສື່ອມມູນຄ່າຂອງໜີ້ຕ້ອງຮັບທວງຍາກທີ່ທະນາຄານໄດ້ກັນສຳຮອງໄວ້ເພື່ອປ້ອງກັນຄວາມສ່ຽງຂອງເງິນໃຫ້ກູ້ຢືມ ໂດຍອີງຕາມການຈັດຊັ້ນໜີ້ຂອງທະນາຄານ.

**ເບື້ອງໜີ້ຈິດ:** ຈຳນວນເງິນແຮຄ່າເສື່ອມມູນຄ່າໜີ້ຕ້ອງຮັບທວງຍາກທີ່ໄດ້ເກັບຄືນເຂົ້າລາຍຮັບ

**ເບື້ອງມີຈິດ:** ຈຳນວນເງິນແຮຄ່າເສື່ອມມູນຄ່າໜີ້ຕ້ອງຮັບທວງຍາກທີ່ໄດ້ສຳຮອງໄວ້

**ຍອດເຫຼືອມີ:** ສະແດງເຖິງຈຳນວນເງິນແຮຄ່າເສື່ອມມູນຄ່າຂອງໜີ້ຕ້ອງຮັບທວງຍາກ

- **ໝວດທີ 3 ເງິນລົງທຶນໃນຫຼັກຊັບ ແລະ ຊັບສິນອື່ນໆ**

ບັນຊີນີ້ໃຊ້ບັນທຶກສະເພາະຈຳນວນເງິນ ກ່ຽວກັບລາຍການເຄື່ອນໄຫວທາງດ້ານຫຼັກຊັບ ທີ່ທະນາຄານໄດ້ນຳເງິນໄປລົງທຶນໃນຫຼັກຊັບໄລຍະສັ້ນ, ສາມາດປ່ຽນເປັນເງິນສົດໄດ້ງ່າຍ ແລະ ທັງເປັນຫຼັກຊັບທີ່ເຮັດໃຫ້ເກີດລາຍໄດ້. ໂດຍທົ່ວໄປແລ້ວຫຼັກຊັບທີ່ຈະກ່າວເຖິງນີ້ ແມ່ນປະເພດໃບຢັ້ງຢືນຊັບ ເຊິ່ງລວມມີ: ໃບຮຸ້ນ, ພັນທະບັດ (ຄັງເງິນ, ທະນາຄານກາງ...) ລວມທັງ ໜີ້ຕ້ອງຮັບ ທີ່ສະແດງອອກເປັນໃບຢັ້ງຢືນ ທີ່ປ່ຽນມືໄດ້ໃນຕະຫຼາດຫຼັກຊັບ (ຕະຫຼາດລະຫວ່າງທະນາຄານ) ເຊັ່ນ: ໃບຢັ້ງຢືນເງິນຝາກ. ໃບຢັ້ງຢືນຊັບ ແບ່ງອອກເປັນ 2 ປະເພດ: (1) ປະເພດຫຼັກຊັບໃຫ້ລາຍໄດ້ຜັນແປ: ໃບຢັ້ງຢືນຊັບທີ່ໃຫ້ລາຍໄດ້ຜັນແປຕົ້ນຕໍ ແມ່ນບັນດາຮຸ້ນຊຶ່ງໃຫ້ຜົນຕອບແທນເປັນເງິນປັນຜົນ. (2) ປະເພດ ຫຼັກຊັບທີ່ໃຫ້ລາຍໄດ້ຄົງທີ່ໄດ້ແກ່ ຮຸ້ນກູ້ ແລະ ພັນທະບັດທີ່ໃຫ້ຜົນຕອບແທນເປັນດອກເບ້ຍ. ນອກຈາກນີ້ໃບຢັ້ງຢືນຊັບຍັງຖືກຈັດປະເພດ ແລະ ຕີມູນຄ່າຫຼັກຊັບ ຄືນໃໝ່ ຕາມເຈດຈຳນົງທີ່ພາໃຫ້ໄດ້ໃບ ຢັ້ງຢືນຊັບເຫຼົ່ານັ້ນມາເປັນກຳມະສິດ. ຫຼັກຊັບດັ່ງກ່າວອາດປ່ຽນແປງໄດ້ ແລະ ຕ້ອງມີເຫດຜົນຄັກແນ່ ຈຶ່ງສາມາດຈັດສັນເຂົ້າໃສ່ປະເພດ ບັນຊີຕາມຄວາມເໝາະສົມໂດຍມີການຈັດປະເພດຕາມລັກສະນະເນື້ອໃນຂອງລາຍໄດ້ (ຄົງທີ່ ຫຼື ຜັນແປ) (fixed or variable).

130 ເງິນລົງທຶນໃນຫຼັກຊັບ

1301 ຫຼັກຊັບຊື້ ໂດຍມີສັນຍາຂາຍຄືນ

13011 ຫຼັກຊັບຊື້ ໂດຍມີສັນຍາຂາຍຄືນ

130111 ຈາກທະນາຄານອື່ນ

130112 ຈາກລູກຄ້າ

13017 ດອກເບ້ຍຄ້າງຮັບ

130171 ດອກເບ້ຍຄ້າງຮັບຈາກທະນາຄານອື່ນ

130172 ດອກເບ້ຍຄ້າງຮັບຈາກລູກຄ້າ

ບັນຊີ 1301 ໃຊ້ເພື່ອຕິດຕາມມູນຄ່າຫຼັກຊັບໃນລັກສະນະການໃຫ້ກູ້ຢືມທີ່ໄດ້ຮັບຫຼັກຊັບພ້ອມ ໂດຍມີສັນຍາຂາຍຄືນເມື່ອຮອດກຳນົດເວລາ. ຫຼັກຊັບປະເພດນີ້ມີການຖືຄອງບໍ່ເກີນ 6 ເດືອນ ແລະ ບໍ່ເຖິງກຳນົດໄຖ່ຖອນ.

**ເບື້ອງໜີ້ຈົດ:** ຈຳນວນເງິນຕາມມູນຄ່າຫຼັກຊັບທີ່ໄດ້ຮັບໂດຍມີສັນຍາຂາຍຄືນ
**ເບື້ອງມີຈົດ:** ຈຳນວນເງິນທີ່ຊຳລະໃນເວລາສົ່ງມອບເອກະສານຄືນ
**ຍອດເຫຼືອໜີ້:** ສະແດງເຖິງມູນຄ່າຍັງເຫຼືອຂອງໃບຢັ້ງຢືມຊັບທີ່ໄດ້ຮັບໂດຍມີສັນຍາຂາຍຄືນ

ບັນຊີ 13017 ໃຊ້ຕິດຕາມດອກເບ້ຍຄ້າງຮັບທີ່ເກີດຈາກຫຼັກຊັບຊື້ໂດຍມີສັນຍາຂາຍຄືນຊຶ່ງໄດ້ຄິດໄລ່ໄວ້ ເມື່ອປັບປຸງບັນຊີທ້າຍເດືອນ.

**ເບື້ອງໜີ້ຈົດ:** ຈຳນວນດອກເບ້ຍທີ່ໄດ້ຄິດໄລ່ໄວ້
**ເບື້ອງມີຈົດ:** ຈຳນວນເງິນທີ່ຊຳລະ ຫຼື ໂອນໄປບັນຊີອື່ນ
**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນດອກເບ້ຍທີ່ຍັງບໍ່ທັນໄດ້ຊຳລະ

1302 ຫຼັກຊັບເພື່ອຄ້າ

13021 ຫຼັກຊັບເພື່ອຄ້າທີ່ໄດ້ຊື້ມາ

130211 ຫຼັກຊັບພາຍໃນປະເທດ

1302111 ພັນທະບັດຂອງລັດ ແລະ ຫຼັກຊັບປະເພດດຽວກັນ

1302112 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຄົງທີ່

1302113 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຜັນແປ

1302114 ຮຸ້ນທຶນຕົນເອງ

130212 ຫຼັກຊັບຕ່າງປະເທດ

1302121 ພັນທະບັດຂອງລັດ ແລະ ຫຼັກຊັບປະເພດດຽວກັນ

1302122 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຄົງທີ່

1302123 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຜັນແປ

13025 ຫຼັກຊັບເພື່ອຄ້າທີ່ໄດ້ໃຫ້ກູ້ຢືມ

130251 ຫຼັກຊັບພາຍໃນປະເທດ

1302511 ພັນທະບັດຂອງລັດ ແລະ ຫຼັກຊັບປະເພດດຽວກັນ

1302512 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຄົງທີ່

1302513 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຜັນແປ

1302514 ຮຸ້ນທຶນຕົນເອງ

130252 ຫຼັກຊັບຕ່າງປະເທດ

1302521 ພັນທະບັດຂອງລັດ ແລະ ຫຼັກຊັບປະເພດດຽວກັນ

1302522 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຄົງທີ່

1302523 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຜັນແປ

130257 ດອກເບ້ຍຫຼັກຊັບທີ່ໄດ້ໃຫ້ກູ້ຢືມຄ້າງຮັບ

1302571 ດອກເບ້ຍຫຼັກຊັບພາຍໃນປະເທດ

1302572 ດອກເບ້ຍຫຼັກຊັບຕ່າງປະເທດ

13026 ຫຼັກຊັບເພື່ອຄ້າທີ່ໄດ້ກູ້ຢືມມາ

130261 ຫຼັກຊັບພາຍໃນປະເທດ

1302611 ພັນທະບັດຂອງລັດ ແລະ ຫຼັກຊັບປະເພດດຽວກັນ

1302612 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຄົງທີ່

1302613 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຜັນແປ

1302614 ຮຸ້ນທຶນຕົນເອງ

130262 ຫຼັກຊັບຕ່າງປະເທດ

1302621 ພັນທະບັດ ແລະ ຫຼັກຊັບປະເພດດຽວກັນ

1302622 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຄົງທີ່

1302623 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຜັນແປ

ບັນຊີ 13021 ໃຊ້ເພື່ອຕິດຕາມຈຳນວນເງິນຂອງຫຼັກຊັບເພື່ອຄ້າທີ່ໄດ້ຊື້ມາ ໂດຍມີວັດຖຸປະສົງຕົ້ນຕໍທີ່ຈະຂາຍອອກໃນອະນາຄົດອັນໃກ້, ສາມາດປ່ຽນມືໄດ້, ຖືຄອງໄວ້ເປັນໄລຍະສັ້ນໆ (ບໍ່ເກີນ 6 ເດືອນ) ເພື່ອເອົາກຳໄລ ຈາກການປ່ຽນແປງລາຄາຂອງຫຼັກຊັບໃນຕະຫຼາດຫຼັກຊັບ.

ບັນຊີ 13025 ໃຊ້ເພື່ອຕິດຕາມຫຼັກຊັບເພື່ອຄ້າທີ່ໄດ້ໃຫ້ກູ້ຢືມແກ່ທະນາຄານ ແລະ ສະຖາບັນການເງິນອື່ນເປັນໄລຍະສັ້ນໆ ໂດຍມີວັດຖຸປະສົງຕົ້ນຕໍ ທີ່ຈະຮັບຊຳລະຄືນຊະນິດດຽວກັນກັບຫຼັກຊັບທີ່ໄດ້ໃຫ້ກູ້ຢືມ.

ການບັນທຶກຕົ້ນທຶນຂອງຫຼັກຊັບເພື່ອຄ້າທີ່ໄດ້ຊື້ມາແມ່ນບັນທຶກຕາມຕົ້ນທຶນຊື້ຊຶ່ງລວມທັງຄ່າໃຊ້ຈ່າຍຕ່າງໆທີ່ໄດ້ມາເປັນກຳມະສິດ ແລະ ລວມທັງດອກເບ້ຍທີ່ຖືກຄິດໄລ່ໄວ້ (ຖ້າມີ).

ໃນເວລາປິດບັນຊີແຕ່ລະຄັ້ງສຳລັບຫຼັກຊັບເພື່ອຄ້າທີ່ພວມຖືຄອງ (ທຸກໆທ້າຍເດືອນ) ຕ້ອງໄດ້ຕີມູນຄ່າຄືນໃໝ່ຕາມລາຄາຕະຫຼາດ ແລະ ໃຫ້ບັນທຶກສ່ວນຜິດດ່ຽງຈາກການປ່ຽນແປງເຂົ້າບັນຊີພົນໄດ້ຮັບ ແລະ ຕ້ອງໄດ້ມີການສຳຫຼວດຄືນ ຫຼັກຊັບດັ່ງກ່າວກ່ຽວກັບການຈັດປະເພດຫຼັກຊັບໃຫ້ຖືກຕ້ອງຕາມແຕ່ລະຊ່ວງໄລຍະ; ຖ້າຖືຫຼັກຊັບເພື່ອຄ້າ ເກີນ 6 ເດືອນ ຂຶ້ນໄປ ຕ້ອງໄດ້ໂອນໄປເປັນ ຫຼັກຊັບເພື່ອຂາຍ ຫຼື ຫຼັກຊັບລົງທຶນ ຕາມລາຄາຕະຫຼາດ ໃນມື້ໂອນຫຼັກຊັບດັ່ງກ່າວທັນທີ.

**ເບື້ອງໜີ້ຈິດ:** ຈຳນວນເງິນຕາມມູນຄ່າຂອງຫຼັກຊັບເພື່ອຄ້າທີ່ໄດ້ຊື້ມາ
**ເບື້ອງມີ ຈິດ:** ຈຳນວນເງິນທີ່ຊຳລະຫຼັກຊັບເພື່ອຄ້າທີ່ໄດ້ຊື້ມາ ຫຼື ໂອນໄປບັນຊີອື່ນ
**ຍອດເຫຼືອໜີ້:** ສະແດງເຖິງມູນຄ່າຍັງເຫຼືອຂອງ ຫຼັກຊັບເພື່ອຄ້າທີ່ໄດ້ຊື້ມາຢູ່ໃນຄັງ

ບັນຊີ 130257 ໃຊ້ເພື່ອບັນທຶກຈຳນວນດອກເບ້ຍຄ້າງຮັບຂອງຫຼັກຊັບເພື່ອຄ້າທີ່ໄດ້ໃຫ້ກູ້ຢືມ ທີ່ໄດ້ຄິດໄລ່ເປັນແຕ່ລະງວດແຕ່ຍັງບໍ່ທັນໄດ້ຮັບການຊຳລະ.

**ເບື້ອງໜີ້ຈິດ** : ຈຳນວນດອກເບ້ຍທີ່ຄິດໄວ້ເພື່ອຈິດເຂົ້າບັນຊີລາຍຮັບ
**ເບື້ອງມີຈິດ:** ຈຳນວນດອກເບ້ຍທີ່ຖືກຊຳລະ ຫຼື ໂອນໄປບັນຊີອື່ນ
**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນດອກເບ້ຍທີ່ຍັງບໍ່ທັນໄດ້ຮັບຊຳລະ

ບັນຊີ 130261, 130262 ໃຊ້ເພື່ອບັນທຶກຈຳນວນມູນຄ່າຫຼັກຊັບທີ່ໄດ້ກູ້ຢືມມາຈາກທະນາຄານທຸລະກິດອື່ນ ຫຼື ສະຖາບັນການເງິນອື່ນ ໂດຍມີວັດຖຸປະສົງຕົ້ນຕໍທີ່ຈະຊຳລະຄືນຊະນິດດຽວກັນກັບຫຼັກຊັບທີ່ໄດ້ກູ້ຢືມມາ.

**ເບື້ອງໜີ້ຈິດ:** ຈຳນວນເງິນຕາມມູນຄ່າຫຼັກຊັບທີ່ໄດ້ກູ້ຢືມມາ
**ເບື້ອງມີຈິດ:** ຈຳນວນເງິນທີ່ຖືກຊຳລະ
**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນເຫຼືອຂອງມູນຄ່າຫຼັກຊັບທີ່ໄດ້ກູ້ຢືມມາ

1303 ຫຼັບຊັບຊື້ເພື່ອຂາຍ
13031 ຫຼັກຊັບທີ່ໄດ້ຊື້
130311 ຫຼັກຊັບພາຍໃນປະເທດ
1303111 ພັນທະບັດຂອງລັດ ແລະ ຫຼັກຊັບປະເພດດຽວກັນ
1303112 ຮຸ້ນກູ້ ຫຼື ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຄົງທີ່

1303113 ຮຸ້ນທຶນ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຜັນແປ

1303114 ຮຸ້ນທຶນຕົນເອງ

130312 ຫຼັກຊັບຕ່າງປະເທດ

1303121 ພັນທະບັດຂອງລັດ ແລະ ຫຼັກຊັບປະເພດດຽວກັນ

1303122 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຄົງທີ່

1303123 ຮຸ້ນທຶນ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຜັນແປ

13035 ຫຼັກຊັບຊື້ເພື່ອຂາຍ ທີ່ໄດ້ໃຫ້ກູ້ຢືມ

130351 ຫຼັກຊັບພາຍໃນປະເທດ

1303511 ພັນທະບັດຂອງລັດ ແລະ ຫຼັກຊັບປະເພດດຽວກັນ

1303512 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຄົງທີ່

1303513 ຮຸ້ນທຶນ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຜັນແປ

1303514 ຮຸ້ນທຶນຕົນເອງ

130352 ຫຼັກຊັບຕ່າງປະເທດ

1303521 ພັນທະບັດຂອງລັດ ແລະ ຫຼັກຊັບປະເພດດຽວກັນ

1303522 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຄົງທີ່

1303523 ຮຸ້ນທຶນ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຜັນແປ

130357 ດອກເບ້ຍຫຼັກຊັບທີ່ໄດ້ໃຫ້ກູ້ຢືມຄ້າງຮັບ

1303571 ດອກເບ້ຍຫຼັກຊັບພາຍໃນປະເທດ

1303572 ດອກເບ້ຍຫຼັກຊັບຕ່າງປະເທດ

13037 ດອກເບ້ຍ ແລະ ເງິນປັນຜົນຈາກຫຼັກຊັບຊື້ເພື່ອຂາຍຄ້າງຮັບ

130371 ດອກເບ້ຍຄ້າງຮັບ

1303711 ດອກເບ້ຍຫຼັກຊັບພາຍໃນປະເທດ

1303712 ດອກເບ້ຍຫຼັກຊັບຕ່າງປະເທດ

130372 ເງິນປັນຜົນຄ້າງຮັບ

1303721 ເງິນປັນຜົນຈາກຫຼັກຊັບພາຍໃນປະເທດ

1303722 ເງິນປັນຜົນຈາກຫຼັກຊັບຕ່າງປະເທດ

13039 ເງິນແຮຄ່າເສື່ອມມູນຄ່າຂອງຫຼັກຊັບຊື້ເພື່ອຂາຍ

130391 ເງິນແຮຄ່າເສື່ອມມູນຄ່າຂອງຫຼັກຊັບພາຍໃນປະເທດ

1303911 ພັນທະບັດຂອງລັດ ແລະ ຫຼັກຊັບປະເພດດຽວກັນ

1303912 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຄົງທີ່

1303913 ຮຸ້ນທຶນ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຜັນແປ

1303914 ຮຸ້ນທຶນຕົນເອງ

130392 ເງິນແຮຄ່າເສື່ອມມູນຄ່າຂອງຫຼັກຊັບຕ່າງປະເທດ

1303921 ພັນທະບັດຂອງລັດ ແລະ ຫຼັກຊັບປະເພດດຽວກັນ

1303922 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຄົງທີ່

1303923 ຮຸ້ນທຶນ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຜັນແປ

**ຫລັກຊັບຊື້ເພື່ອຂາຍ** : ໝາຍເຖິງເງິນລົງທຶນໃນ " ຫລັກຊັບໜີ້ " ທຸກຊະນິດ ຫລື " ຫລັກຊັບທຶນ " ໃນຄວາມຕ້ອງການຂອງຕະຫລາດ ຊຶ່ງບໍ່ຖືເປັນ "ຫລັກຊັບເພື່ອຄ້າ" ( ຖືຄອງໄວ້ເກີນ 6 ເດືອນ ຂຶ້ນໄປ ແຕ່ບໍ່ເຖິງກໍານົດໄຖ່ຖອນ) ແລະ ໃນເວລາດຽວກັນ ບໍ່ຖືເປັນຫລັກຊັບໜີ້ທີ່ຈະຖືຄອງໄວ້ຈົນຄົບກໍານົດ ຫລື ບໍ່ຖືເປັນເງິນລົງທຶນໃນວິສາຫະກິດໃນກຸ່ມ ຫລື ບໍລິສັດຮ່ວມທຶນ ຫລື ເງິນລົງທຶນໃນກິດຈະການຄຸ້ມຄອງຫລັກຊັບ.

ນອກຈາກນັ້ນ ຫລັກຊັບຊື້ເພື່ອຂາຍຍັງປະກອບດ້ວຍບັນດາຫລັກຊັບທີ່ໄດ້ໂອນມາຈາກ "ຫລັກຊັບເພື່ອຄ້າ" ຍ້ອນວ່າ ທະນາຄານໄດ້ມີການປ່ຽນແປງວັດຖຸປະສົງ ຫລື ຊ່ວງເວລາທີ່ຖືຄອງຫລັກຊັບນັ້ນໄດ້ເກີນ 6 ເດືອນ ແລ້ວ.

ຫຼັກຊັບຊື້ເພື່ອຂາຍຖືກລົງບັນຊີຕາມຈໍານວນເງິນ/ລາຄາໄດ້ມາເປັນກໍາມະສິດລວມທັງຄ່າໃຊ້ຈ່າຍຕ່າງໆ ແລະ ລວມທັງດອກເບ້ຍຄ້າງຮັບຖ້າໄດ້ຄິດໄລ່ໄວ້.

ໃນເວລາປິດບັນຊີແຕ່ລະຄັ້ງ ໃຫ້ຕີມູນຄ່າຫຼັກຊັບຊື້ເພື່ອຂາຍ ຕາມລາຄາຕະຫຼາດ ແລະ ໃຫ້ຈົດສ່ວນຜິດດ່ຽງອັນເນື່ອງມາຈາກການປ່ຽນແປງຂອງລາຄາ (ລາຄາໃນຕະຫຼາດ ແລະ ລາຄາໃນບັນຊີ) ເຂົ້າໃນບັນຊີຜົນໄດ້ຮັບ ແລະ ຕ້ອງມີການ ສໍາຫຼວດຄືນກ່ຽວກັບການຈັດປະເພດຫຼັກຊັບຊື້ເພື່ອຂາຍເປັນແຕ່ລະຊ່ວງໄລຍະ. ຖ້າຖືກໍາມະສິດຫຼັກຊັບ ຊື້ເພື່ອຂາຍຈົນຄົບກໍານົດໄຖ່ຖອນ ຕ້ອງໂອນໄປເປັນຫຼັກຊັບລົງທຶນຕາມລາຄາຕະຫຼາດ ໃນມື້ໂອນຫຼັກຊັບດັ່ງກ່າວ.

ບັນຊີ 13031 ໃຊ້ເພື່ອບັນທຶກມູນຄ່າຫຼັກຊັບທີ່ໄດ້ມາເປັນກໍາມະສິດ: ພັນທະບັດຂອງລັດ ແລະ ຫຼັກຊັບປະເພດດຽວກັນ, ຫຼັກຊັບອື່ນ ທີ່ມີລາຍໄດ້ຄົງທີ່, ຮຸ້ນ ແລະ ຫຼັກຊັບອື່ນທີ່ມີລາຍໄດ້ຜັນແປ ແລະ ຮຸ້ນສະເພາະ(ຮຸ້ນສາມັນ).

**ເບື້ອງໜີ້ຈົດ**: ຈໍານວນເງິນຕາມມູນຄ່າຫຼັກຊັບໄດ້ມາເປັນກໍາມະສິດ
**ເບື້ອງມີຈົດ**: ຈໍານວນເງິນຫຼຸດຜ່ອນມູນຄ່າຫຼັກຊັບດ້ວຍການຂາຍຫຼັກຊັບອອກ ຫຼື ໂອນໄປບັນຊີອື່ນ
**ຍອດເຫຼືອໜີ້**: ສະແດງເຖິງມູນຄ່າຍັງເຫຼືອ ຂອງຫຼັກຊັບຊື້ເພື່ອຂາຍຢູ່ໃນຄັງ

ບັນຊີ 13035 ໃຊ້ເພື່ອບັນທຶກມູນຄ່າໃນນາມຫຼັກຊັບຊື້ເພື່ອຂາຍທີ່ໄດ້ໃຫ້ກູ້ຢືມ: ພັນທະບັດ ແລະ ຫຼັກຊັບ ປະເພດດຽວກັນ ຫຼື ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຄົງທີ່; ຮຸ້ນ ແລະ ຫຼັກຊັບທີ່ມີລາຍໄດ້ຜັນແປ ແລະ ຮຸ້ນສະເພາະ ທີ່ໄດ້ໃຫ້ກູ້ຢືມແກ່ທະນາຄານອື່ນ ແລະ ລູກຄ້າ.

**ເບື້ອງໜີ້ຈົດ**: ຈໍານວນມູນຄ່າໃນນາມ(ໜ້າບັດ) ຂອງຫຼັກຊັບຊື້ເພື່ອຂາຍທີ່ໄດ້ໃຫ້ກູ້ຢືມ
**ເບື້ອງມີຈົດ**: ຈໍານວນມູນຄ່າຂອງຫຼັກຊັບທີ່ໄດ້ຮັບການທົດແທນຄືນ ກ່ຽວກັບຫຼັກຊັບທີ່ໄດ້ໃຫ້ກູ້ຢືມ
**ຍອດເຫຼືອໜີ້**: ສະແດງເຖິງມູນຄ່າຍັງເຫຼືອຂອງຫຼັກຊັບຊື້ເພື່ອຂາຍທີ່ໄດ້ໃຫ້ກູ້ຢືມແກ່ທະນາຄານທຸລະກິດອື່ນ

ບັນຊີ 130357 ໃຊ້ເພື່ອຕິດຕາມຈໍານວນດອກເບ້ຍຄ້າງຮັບຂອງຫຼັກຊັບຊື້ເພື່ອຂາຍທີ່ໄດ້ໃຫ້ກູ້ຢືມຊຶ່ງໄດ້ຄິດໄລ່ໄວ້ ເມື່ອປັບປຸງບັນຊີທ້າຍເດືອນ (ອັດຕາດອກເບ້ຍອີງຕາມສັນຍາການກູ້ຢືມ).

**ເບື້ອງໜີ້ຈົດ**: ຈໍານວນດອກເບ້ຍທີ່ໄດ້ຄິດໄລ່ໄວ້
**ເບື້ອງມີຈົດ**: ຈໍານວນເງິນທີ່ຊໍາລະ ຫຼື ໂອນໄປບັນຊີອື່ນ
**ຍອດເຫຼືອໜີ້**: ສະແດງເຖິງຈໍານວນເງິນດອກເບ້ຍທີ່ຍັງບໍ່ທັນໄດ້ຮັບຊໍາລະ

ບັນຊີ 13037 ໃຊ້ເພື່ອບັນທຶກຈຳນວນດອກເບ້ຍຄ້າງຮັບ (ໃນນາມ) ຂອງພັນທະບັດ ແລະ ຮຸ້ນກູ້ ຫຼື ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຄົງທີ່ ແລະ ເງິນປັນຜົນຈາກຫຼັກຊັບຊື້ເພື່ອຂາຍຄ້າງຮັບ (ຂອງຮຸ້ນທຶນ ແລະ ຫຼັກຊັບອື່ນທີ່ໃຫ້ລາຍໄດ້ຜັນແປ) ທີ່ໄດ້ຄິດໄລ່ແຕ່ລະງວດເພື່ອຈົດເຂົ້າບັນຊີລາຍຮັບ ແຕ່ຍັງບໍ່ທັນໄດ້ຮັບການຊຳລະ ກ່ຽວກັບຫຼັກຊັບເພື່ອຂາຍທີ່ໄດ້ຊື້ມາ.

**ເບື້ອງໜີ້ຈົດ:** ຈຳນວນດອກເບ້ຍ ແລະ ເງິນປັນຜົນ ທີ່ໄດ້ຄິດໄລ່ໄວ້

**ເບື້ອງມີຈົດ:** ຈຳນວນດອກເບ້ຍ ແລະ ເງິນປັນຜົນ ທີ່ຖືກຊຳລະ ຫຼື ໂອນໄປບັນຊີອື່ນ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນດອກເບ້ຍ ແລະ ເງິນປັນຜົນ ທີ່ຍັງບໍ່ທັນໄດ້ຮັບຊຳລະ

ບັນຊີ 13039 ໃຊ້ເພື່ອບັນທຶກເງິນແຮຄ່າເສື່ອມມູນຄ່າຂອງຫຼັກຊັບຊື້ເພື່ອຂາຍ ທີ່ມີການຕີມູນຄ່າຄືນໃໝ່ໃນແຕ່ລະງວດ ໃນນັ້ນປະກອບມີເງິນແຮຄ່າເສື່ອມມູນຄ່າຂອງຫຼັກຊັບພາຍໃນ ແລະ ຕ່າງປະເທດ.

**ເບື້ອງມີຈົດ:** ຈຳນວນເງິນແຮຄ່າເສື່ອມມູນຄ່າຂອງຫຼັກຊັບຊື້ເພື່ອຂາຍທີ່ຄິດໄລ່ຫັກແຮໄວ້ໃນແຕ່ລະງວດ ໂດຍອີງຕາມລາຄາຕະຫຼາດ

**ເບື້ອງໜີ້ຈົດ:** ຈຳນວນເງິນເກັບຄືນເງິນແຮຄ່າເສື່ອມມູນຄ່າຂອງຫຼັກຊັບຊື້ເພື່ອຂາຍ

**ຍອດເຫຼືອມີ:** ສະແດງຈຳນວນເງິນແຮຄ່າເສື່ອມມູນຄ່າຍັງເຫຼືອຂອງຫຼັກຊັບຊື້ເພື່ອຂາຍທີ່ໄດ້ຫັກແຮໄວ້

ບັນຊີ 1304 ຫຼັກຊັບລົງທຶນ ໝາຍເຖິງເງິນລົງທຶນໃນຫລັກຊັບປະເພດ ຫລັກຊັບໜີ້ ທີ່ທະນາຄານມີຄວາມຕັ້ງໃຈຢ່າງຄັກແນ່ ແລະ ມີຄວາມສາມາດທີ່ຈະຖືຄອງໄວ້ຈົນຄົບກຳນົດໄຖ່ຖອນ. ແຫຼ່ງທຶນທີ່ຈະນຳໃຊ້ເຂົ້າໃນການລົງທຶນໃນຫຼັກຊັບປະເພດນີ້ຕ້ອງໄດ້ມາຈາກແຫຼ່ງທຶນຂອງທະນາຄານເອງ.

***ລາຄາຕົ້ນທຶນຂອງຫລັກຊັບລົງທຶນປະກອບດ້ວຍ:***

- ລາຄາຈ່າຍຊື້ຫລັກຊັບໂດຍບໍ່ລວມເອົາຄ່າໃຊ້ຈ່າຍໃນການໄດ້ຫລັກຊັບມາເປັນ ກຳມະສິດເຂົ້ານຳ.
- ສ່ວນດອກເບ້ຍຄ້າງຮັບທີ່ເກີດຂື້ນກ່ອນທີ່ຈະໄດ້ຫລັກຊັບນັ້ນມາເປັນກຳມະສິດ ຊຶ່ງທະນາຄານໄດ້ຈ່າຍໃຫ້ແກ່ຜູ້ຂາຍໃນເວລາຊື້ຫລັກຊັບນັ້ນຈະລວມ ຫລື ບໍ່ລວມເຂົ້າໃນລາຄາຕົ້ນທຶນຂອງຫລັກຊັບແມ່ນຂື້ນກັບວິທີການບັນຊີ ທີ່ທະນາຄານເລືອກໃຊ້ດັ່ງນີ້:

▪ <u>ໃນກໍລະນີທີ່ທະນາຄານເລືອກໃຊ້ວິທີເສັ້ນຊື່ ຫລື ວິທີດອກເບ້ຍໃນນາມ</u> :

ໃນກໍລະນີນີ້ດອກເບ້ຍຄ້າງຮັບດັ່ງກ່າວບໍ່ໄດ້ລວມເຂົ້າໃນລາຄາຕົ້ນທຶນຂອງຫລັກຊັບແຕ່ໃຫ້ບັນທຶກລົງໃນ ບັນຊີ " ດອກເບ້ຍຄ້າງຮັບ " ດັ່ງນີ້ :

- ບັນຊີ : 13047xx ສຳຫລັບຫລັກຊັບລົງທຶນ

▪ <u>ໃນກໍລະນີທີ່ທະນາຄານເລືອກໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ ( EAR Method )</u>

ໃນກໍລະນີນີ້ໃຫ້ລວມເອົາດອກເບ້ຍດັ່ງກ່າວເຂົ້າໃນລາຄາຕົ້ນທຶນຂອງຫລັກຊັບໂດຍກົງ. ສ່ວນຄ່າໃຊ້ຈ່າຍໃນການໄດ້ຫລັກຊັບມາເປັນກຳມະສິດທີ່ບໍ່ໄດ້ຖືກລວມເຂົ້າໃນລາຄາຕົ້ນທຶນຂອງຫລັກຊັບນັ້ນໃຫ້ບັນທຶກລົງໃນບັນຊີລາຍຈ່າຍທີ່ກ່ຽວຂ້ອງດັ່ງນີ້:

- ບັນຊີ : 410341 ສຳຫລັບຫລັກຊັບລົງທຶນ

1. **ຫລັກຊັບລົງທຶນ** : ໃນເວລາປິດບັນຊີແຕ່ລະຄັ້ງ:

(ກ) ມູນຄ່າສ່ວນຫລຸດບໍ່ມຊ້ອນອັນເກີດຈາກສ່ວນຜິດດ່ຽງລະຫວ່າງມູນຄ່າຕາມບັນຊີພາຍຫລັງທີ່ໄດ້ຕັດຈຳໜ່າຍສ່ວນເກີນ ຫລື ສ່ວນຫລຸດມູນຄ່າໜ້າບັດແລ້ວ ກັບມູນຄ່າຍຸດຕິທຳຂອງຫລັກຊັບແມ່ນບໍ່ອະນຸຍາດໃຫ້ຫັກເງິນແຮຄ່າເສື່ອມມູນຄ່າ ເວັ້ນໄວ້ແຕ່ມີຂໍ້ບົ່ງຊີ້ອັນໜ້າເຊື່ອຖືໄດ້ວ່າ :

- ມີຄວາມເປັນໄປໄດ້ຢ່າງສູງວ່າທະນາຄານ ຈະຂາຍຫລັກຊັບເຫລົ່ານັ້ນອອກກ່ອນວັນກຳນົດໄຖ່ຖອນ ຫລື ມີຄວາມເປັນໄປໄດ້ຂ້ອນຂ້າງແນ່ວ່າທະນາຄານຈະບໍ່ສາມາດຮຽກເກັບເງິນຕົ້ນ ຫລື ດອກເບ້ຍທັງໝົດ ຫລື ບາງສ່ວນທີ່ລະບຸໃນສັນຍາໄດ້ທະນາຄານ ຈຶ່ງຈຳເປັນຕ້ອງໄດ້ຫັກເງິນແຮຄ່າເສື່ອມມູນຄ່າອັນຈຳເປັນໄວ້.

**ເບື້ອງໜີ້ຈິດ:** ຈຳນວນເງິນຕາມມູນຄ່າຫຼັກຊັບລົງທຶນທີ່ໄດ້ຊື້ມາ
**ເບື້ອງມີຈິດ:** ຈຳນວນເງິນຫຼຸດຜ່ອນ ຫຼື ຊຳລະກ່ຽວກັບຫຼັກຊັບລົງທຶນທີ່ໄດ້ຊື້ມາ
**ຍອດເຫຼືອໜີ້:** ຕາມຈຳນວນມູນຄ່າຫຼັກຊັບລົງທຶນຢູ່ໃນຄັງທີ່ຍັງບໍ່ໄດ້ຊຳລະ

130411 ຫຼັກຊັບພາຍໃນປະເທດ
1304111 ພັນທະບັດຂອງລັດ ແລະ ຫຼັກຊັບປະເພດດຽວກັນ
1304112 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຄົງທີ່
130412 ຫຼັກຊັບຕ່າງປະເທດ
1304121 ພັນທະບັດຂອງລັດ ແລະ ຫຼັກຊັບປະເພດດຽວກັນ
1304122 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຄົງທີ່
13045 ຫຼັກຊັບລົງທຶນທີ່ໄດ້ໃຫ້ກູ້ຢືມ
130451 ຫຼັກຊັບພາຍໃນປະເທດ
1304511 ພັນທະບັດຂອງລັດ ແລະ ຫຼັກຊັບປະເພດດຽວກັນ
1304512 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຄົງທີ່
130452 ຫຼັກຊັບຕ່າງປະເທດ
1304521 ພັນທະບັດຂອງລັດ ແລະ ຫຼັກຊັບປະເພດດຽວກັນ
1304522 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຄົງທີ່
130457 ດອກເບ້ຍຄ້າງຮັບຈາກຫຼັກຊັບທີ່ໄດ້ໃຫ້ກູ້ຢືມ
1304571 ດອກເບ້ຍຄ້າງຮັບຈາກຫຼັກຊັບພາຍໃນປະເທດ
1304572 ດອກເບ້ຍຄ້າງຮັບຈາກຫຼັກຊັບຕ່າງປະເທດ
13046 ສ່ວນຜິດດ່ຽງຈາກການຕີມູນຄ່າຫຼັກຊັບລົງທຶນທີ່ເປັນເງິນຕາຕ່າງປະເທດ
130461 ຫຼັກຊັບພາຍໃນປະເທດ
1304611 ພັນທະບັດຂອງລັດ ແລະ ຫຼັກຊັບປະເພດດຽວກັນ
1304612 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຄົງທີ່
130462 ຫຼັກຊັບຕ່າງປະເທດ
1304621 ພັນທະບັດຂອງລັດ ແລະ ຫຼັບຊັບປະເພດດຽວກັນ
1304622 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຄົງທີ່

ບັນຊີ 13046 ແມ່ນໝາຍເຖິງສ່ວນຜິດດ່ຽງຈາກການຕີມູນຄ່າຫຼັກຊັບລົງທຶນທີ່ເປັນ ເງິນຕາຕ່າງປະເທດ ເຊິ່ງປະກອບດ້ວຍ ຫຼັກຊັບພາຍໃນ ແລະ ຫຼັກຊັບຕ່າງປະເທດ.

**ເບື້ອງໜີ້ຈິດ:** ມູນຄ່າຜິດດ່ຽງຂອງຫຼັກຊັບທີ່ໄດ້ຊື້ມາ
**ເບື້ອງມີຈິດ:** ຈຳນວນເງິນຫຼຸດຜ່ອນ ຫຼື ຊຳລະກ່ຽວກັບຫຼັກຊັບທີ່ໄດ້ຊື້ມາ
**ຍອດເຫຼືອໜີ້:** ຈຳນວນມູນຄ່າຜິດດ່ຽງຂອງຫຼັກຊັບທີ່ຍັງເຫຼືອ

13047 ດອກເບ້ຍຄ້າງຮັບຂອງເງິນລົງທຶນໃນຫຼັກຊັບ

130471 ດອກເບ້ຍຄ້າງຮັບຈາກຫຼັກຊັບພາຍໃນປະເທດ

1304711 ດອກເບ້ຍພັນທະບັດຂອງລັດ ແລະ ຫຼັກຊັບປະເພດດຽວກັນ

1304712 ດອກເບ້ຍຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຄົງທີ່

130472 ດອກເບ້ຍຄ້າງຮັບຫຼັກຊັບຕ່າງປະເທດ

1304721 ດອກເບ້ຍພັນທະບັດຂອງລັດ ແລະ ຫຼັກຊັບພາຍໃນປະເທດ

1304722 ດອກເບ້ຍຮຸ້ນກູ້ ແລະ ຫຼັກຊັບຕ່າງປະເທດ

ບັນຊີ 13047 ໃຊ້ເພື່ອບັນທຶກຈຳນວນດອກເບ້ຍຄ້າງຮັບຈາກຫຼັກຊັບລົງທຶນ ທີ່ຄິດໄລ່ໄວ້ເຂົ້າເປັນລາຍຮັບແຕ່ລະງວດບັນຊີ ເມື່ອຮອດກຳນົດເວລາ.

**ເບື້ອງໜີ້ຈິດ:** ຈຳນວນດອກເບ້ຍຄ້າງຮັບຫຼັກຊັບລົງທຶນທີ່ຄິດໄລ່ໄວ້
**ເບື້ອງມີຈິດ:** ຈຳນວນດອກເບ້ຍຄ້າງຮັບຫຼັກຊັບລົງທຶນທີ່ໄດ້ຮັບຊຳລະ ຫຼື ໂອນໄປບັນຊີອື່ນ
**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນດອກເບ້ຍຄ້າງຮັບຫຼັກຊັບລົງທຶນທີ່ຍັງບໍ່ທັນໄດ້ຮັບຊຳລະ

13049 ເງິນແຮຄ່າເສື່ອມມູນຄ່າຂອງຫຼັກຊັບລົງທຶນ

130491 ເງິນແຮຄ່າເສື່ອມມູນຄ່າຂອງຫຼັກຊັບລົງທຶນພາຍໃນປະເທດ

1304911 ພັນທະບັດຂອງລັດ ແລະ ຫຼັກຊັບປະເພດດຽວກັນ

1304912 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຄົງທີ່

130492 ເງິນແຮຄ່າເສື່ອມມູນຄ່າຂອງຫຼັກຊັບລົງທຶນຕ່າງປະເທດ

1304921 ພັນທະບັດຂອງລັດ ແລະ ຫຼັກຊັບປະເພດດຽວກັນ

1304922 ຮຸ້ນກູ້ ແລະ ຫຼັກຊັບອື່ນໆ ທີ່ໃຫ້ລາຍໄດ້ຄົງທີ່

ບັນຊີ 13049 ໃຊ້ເພື່ອບັນທຶກຈຳນວນເງິນແຮຄ່າເສື່ອມມູນຄ່າຂອງຫຼັກຊັບລົງທຶນ ທີ່ມີການຕີມູນຄ່າຄືນໃໝ່ຕາມລາຄາຕະຫຼາດຂອງແຕ່ລະຄັ້ງ. ບັນຊີເງິນແຮຄ່າເສື່ອມມູນຄ່າຂອງຫຼັກຊັບລົງທຶນພາຍໃນປະເທດ ແລະ ຕ່າງປະເທດ (ຍອດເຫຼືອມີ).

**ເບື້ອງມີຈິດ:** ຈຳນວນເງິນແຮຄ່າເສື່ອມມູນຄ່າຂອງຫຼັບຊັບລົງທຶນ ທີ່ຄິດໄລ່ໄວ້ເປັນແຕ່ລະຄັ້ງ ໂດຍອີງຕາມລາຄາຕະຫຼາດ
**ເບື້ອງໜີ້ຈິດ:** ຈຳນວນເງິນຫຼຸດຜ່ອນ ຫຼື ຈຳນວນເງິນເກັບຄືນເງິນແຮຄ່າເສື່ອມມູນຄ່າຂອງຫຼັກຊັບລົງທຶນ
**ຍອດເຫຼືອມີ:** ສະແດງເຖິງຈຳນວນເງິນຍັງເຫຼືອຂອງເງິນແຮຄ່າເສື່ອມມູນຄ່າຂອງຫຼັກຊັບລົງທຶນ

131 ເອກະສານອະນຸພັນ ທີ່ມີກຳນົດເງື່ອນໄຂ

1311 ເອກະສານອະນຸພັນ ທີ່ມີກຳນົດເງື່ອນໄຂ ທີ່ໄດ້ຊື້

13111 ເອກະສານອະນຸພັນ ທີ່ມີກຳນົດເງື່ອນໄຂທາງດ້ານອັດຕາດອກເບ້ຍ

13112 ເອກະສານອະນຸພັນ ທີ່ມີກຳນົດເງື່ອນໄຂທາງດ້ານອັດຕາແລກປ່ຽນ

13113 ເອກະສານອະນຸພັນທີ່ມີກຳນົດເງື່ອນໄຂທາງດ້ານຮຸ້ນທຶນ ແລະ ທາງດ້ານດັດສະນີຕະຫຼາດຫຼັກຊັບ

13118 ເອກະສານອະນຸພັນ ທີ່ມີກຳນົດເງື່ອນໄຂທາງດ້ານອື່ນໆ

1319 ເງິນແຮຄ່າເສື່ອມມູນຄ່າຂອງເອກະສານອະນຸພັນທີ່ມີກຳນົດເງື່ອນໄຂ

13191 ເອກະສານອະນຸພັນ ທີ່ກຳນົດເງື່ອນໄຂທາງດ້ານອັດຕາດອກເບ້ຍ

13192 ເອກະສານອະນຸພັນ ທີ່ມີກຳນົດເງື່ອນໄຂທາງດ້ານອັດຕາແລກປ່ຽນ

13193 ເອກະສານອະນຸພັນ ທີ່ກຳນົດເງື່ອນໄຂທາງດ້ານຮຸ້ນທຶນ ແລະ ທາງດ້ານດັດສະນີຕະຫຼາດຫຼັກຊັບ

13198 ເອກະສານອະນຸພັນ ທີ່ມີກຳນົດເງື່ອນໄຂທາງດ້ານອື່ນໆ

ບັນຊີ 131 ເອກະສານອະນຸພັນ ທີ່ມີກຳນົດເງື່ອນໄຂ ໃຊ້ເພື່ອບັນທຶກມູນຄ່າຂອງເອກກະສານສິດທາງເລືອກ (Option) ຊື້ຫຼັກຊັບອ້າງອີງຢູ່ໃນຕະຫຼາດທີ່ມີການຈັດຕັ້ງ, ລາຍການຄ້າຍຄືກັນ ຫຼື ຊື້ຂາຍກັນຕາມລາຄາຕົກລົງກັນ. ໃນການໄດ້ໃບຮຸ້ນມາເປັນກຳມະສິດ ຫຼື ພັນທະບັດມາເປັນກຳມະສິດ ແມ່ນຖືຄືກັນກັບເອກະສານອະນຸພັນທີ່ມີກຳນົດເງື່ອນໄຂ.

**ເບື້ອງໜີ້ຈິດ:** ຈຳນວນເງິນຕາມມູນຄ່າເອກະສານອະນຸພັນທີ່ມີກຳນົດເງື່ອນໄຂອື່ນໆ

**ເບື້ອງມີຈິດ:** ຈຳນວນເງິນທີ່ຖືກຊຳລະ ຫຼື ໂອນໄປບັນຊີອື່ນ

**ຍອດເຫຼືອໜີ້:** ສະແດງເຖິງຍອດເຫຼືອຈຳນວນເງິນຕາມມູນຄ່າເອກະສານອະນຸພັນທີ່ມີກຳນົດເງື່ອນໄຂທາງດ້ານອື່ນໆ

ບັນຊີ 1319 ເງິນແຮຄ່າເສື່ອມມູນຄ່າຂອງເອກະສານອະນຸພັນທີ່ກຳນົດເງື່ອນໄຂໃຊ້ເພື່ອບັນທຶກຈຳນວນເງິນແຮຄ່າເສື່ອມມູນຄ່າ ຂອງເຄື່ອງມືອະນຸພັນ ທີ່ມີການຕີມູນຄ່າຕາມລາຄາຕະຫຼາດຂອງແຕ່ລະງວດບັນຊີ.

**ເບື້ອງມີຈິດ:** ຈຳນວນເງິນແຮຄ່າເສື່ອມມູນຄ່າຂອງເຄື່ອງມືອະນຸພັນ ທີ່ຄິດໄລ່ແຮໄວ້ເປັນແຕ່ລະງວດບັນຊີໂດຍອີງຕາມລາຄາຕະຫຼາດ

**ເບື້ອງໜີ້ຈິດ:** ຈຳນວນເງິນຫຼຸດຜ່ອນ ຫຼື ຈຳນວນເງິນເກັບຄືນເງິນແຮຄ່າເສື່ອມມູນຄ່າຂອງເຄື່ອງມືອະນຸພັນ

**ຍອດເຫຼືອມີ:** ສະແດງເຖິງຈຳນວນເງິນຍັງເຫຼືອຂອງເງິນແຮຄ່າເສື່ອມມູນຄ່າ ຂອງເຄື່ອງມືອະນຸພັນ

**136** ລູກໜີ້ອື່ນໆ

1361 ລູກໜີ້ພາຍນອກ

13611 ອາກອນກຳໄລມອບລ່ວງໜ້າ

13612 ອາກອນມູນຄ່າເພີ່ມທີ່ຕ້ອງຮັບຄືນ

13613 ພາສີອາກອນອື່ນໆທີ່ຕ້ອງຮັບຄືນ

13614 ເງິນຈ່າຍລ່ວງໜ້າຕົ້ນທຶນ ແລະ ດອກເບ້ຍພັນທະບັດຂອງລັດ

136141 ພັນທະບັດທະນາຄານແຫ່ງ ສປປ ລາວ

1361411 ຕົ້ນທຶນພັນທະບັດທະນາຄານແຫ່ງ ສປປ ລາວ

1361412 ດອກເບ້ຍພັນທະບັດທະນາຄານແຫ່ງ ສປປ ລາວ

136142 ພັນທະບັດຄັງເງິນ

1361421 ຕົ້ນທຶນພັນທະບັດຄັງເງິນ

1361422 ດອກເບ້ຍພັນທະບັດຄັງເງິນ

136143 ພັນທະບັດ ຫຼື ຮຸ້ນກູ້ລັດຖະບານ

1361431 ຕົ້ນທຶນພັນທະບັດ ຫຼື ຮຸ້ນກູ້ລັດຖະບານ

1361432 ດອກເບ້ຍພັນທະບັດ ຫຼື ຮຸ້ນກູ້ລັດຖະບານ

13615 ເງິນວາງຄ້ຳປະກັນທີ່ໄດ້ຖອກແລ້ວ

13616 ເງິນຖືກຍັກຍອກຈາກພາຍນອກ

13618 ລູກໜີ້ພາຍນອກອື່ນໆ

13621 ເງິນຈ່າຍລ່ວງໜ້າເພື່ອເຄື່ອນໄຫວວຽກງານ

13622 ເງິນເດືອນ ແລະ ເງິນໄປເຮັດວຽກທີ່ໄດ້ຈ່າຍລ່ວງໜ້າ

136221 ເງິນເດືອນຈ່າຍລ່ວງໜ້າ

136222 ເງິນໄປເຮັດວຽກຈ່າຍລ່ວງໜ້າ

13623 ເງິນຂາດຄັງ ແລະ ເງິນຖືກລັກໂລບ

136231 ເງິນຂາດຄັງ

136232 ເງິນຖືກລັກໂລບ

13625 ເງິນຈ່າຍລ່ວງໜ້າໃຫ້ສາຂາ ຫຼື ສຳນັກງານໃຫ່ຍ

136251 ເງິນຈ່າຍລ່ວງໜ້າໃຫ້ສາຂາພາຍໃນປະເທດ

136252 ເງິນຈ່າຍລ່ວງໜ້າໃຫ້ສຳນັກງານຕົວແທນ ແລະ ສາຂາຢູ່ຕ່າງປະເທດ

136253 ເງິນຈ່າຍລ່ວງໜ້າໃຫ້ສຳນັກງານໃຫ່ຍ

13628 ລູກໜີ້ພາຍໃນອື່ນໆ

ບັນຊີ 1361 ລູກໜີ້ພາຍນອກ ໃຊ້ເພື່ອບັນທຶກຈຳນວນເງິນ ເງິນວາງຄ້ຳປະກັນ ທີ່ທະນາຄານທຸລະກິດໄດ້ຖອກແລ້ວ (ເງິນວາງຄ້ຳປະກັນໜັງສືສິນເຊື່ອ), ຈຳນວນເງິນອາກອນທີ່ໄດ້ມອບລ່ວງໜ້າໃຫ້ແກ່ງົບປະມານ ອາກອນມູນຄ່າເພີ່ມ ແລະ ພາສີອາກອນອື່ນທີ່ຕ້ອງຮັບຄືນ, ເງິນຈ່າຍລ່ວງໜ້າຕົ້ນທຶນ ແລະ ດອກເບ້ຍພັນທະບັດຂອງລັດ, ເງິນຖືກຍັກຍອກຈາກພາຍນອກ ແລະ ອື່ນໆ.

**ເບື້ອງໜີ້ຈິດ:** ຕິດຕາມຈຳນວນເງິນວາງຄ້ຳປະກັນທີ່ໄດ້ຖອກແລ້ວ...
**ເບື້ອງມີຈິດ:** ຕິດຕາມຈຳນວນເງິນຮັບຊຳລະ ຫຼື ທີ່ໄດ້ໂອນໄປບັນຊີອື່ນ
**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນຍັງເຫຼືອຂອງລູກໜີ້ພາຍນອກ

ບັນຊີ 1362 ລູກໜີ້ພາຍໃນ ໃຊ້ເພື່ອບັນທຶກຈຳນວນເງິນເດືອນ ແລະ ເງິນໄປເຮັດວຽກ ທີ່ໄດ້ຈ່າຍລ່ວງໜ້າ, ເງິນຂາດຄັງ, ເງິນຈ່າຍລ່ວງໜ້າໃຫ້ສາຂາ ຫຼື ສຳນັກງານໃຫຍ່ ແລະ ອື່ນໆ.

**ເບື້ອງໜີ້ຈິດ:** ຕິດຕາມຈຳນວນເງິນວາງຄ້ຳປະກັນທີ່ໄດ້ຖອກແລ້ວ...
**ເບື້ອງມີຈິດ:** ຕິດຕາມຈຳນວນເງິນຮັບຊຳລະ ຫຼື ທີ່ໄດ້ໂອນໄປບັນຊີອື່ນ
**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນຍັງເຫຼືອຂອງລູກໜີ້ພາຍໃນ

137 ເຄື່ອງໃນສາງ ແລະ ການນຳໃຊ້ຕ່າງໆ
- 1371 ຊັບສິນລໍຖ້າການຂາຍ
- 1373 ວັດຖຸອື່ນໆ
  - 13731 ສະແຕັມ
  - 13732 ທະນາບັດບໍ່ມີຄຸນຄ່າຊຳລະສະສາງ
  - 13733 ເຄື່ອງໃຊ້ຫ້ອງການ
  - 13734 ແບບພິມຕ່າງໆ
  - 13738 ອື່ນໆ (ວັດຖຸເພື່ອໃຊ້ເປັນຂອງຂັວນ ແລະ ອື່ນໆ)
- 1376 ການນຳໃຊ້ຕ່າງໆ (ວັດຖຸລາຄາຕ່ຳເພໄວ)
- 1378 ອື່ນໆ
- 1379 ເງິນແຮຄ່າເສື່ອມມູນຄ່າຂອງເຄື່ອງໃນສາງ
  - 13791 ຊັບສິນລໍຖ້າການຂາຍ
  - 13793 ວັດຖຸອື່ນໆ
  - 13796 ການນຳໃຊ້ຕ່າງໆ
  - 13798 ອື່ນໆ

ບັນຊີ 137 ເຄື່ອງໃນສາງ ແລະ ການນຳໃຊ້ຕ່າງໆ ໃຊ້ເພື່ອບັນທຶກຊັບສິນລໍຖ້າການຂາຍ ສະແຕັມອາກອນໄປສະນີ, ທະນາບັດ ແລະ ເງິນຫຼຽນທີ່ບໍ່ມີຄຸນຄ່າຊຳລະສະສາງໃນປັດຈຸບັນ, ຈຳນວນເງິນຕິດຕາມໃນບັນຊີເຄື່ອງໃຊ້ຫ້ອງການ, ແບບພິມຕ່າງໆ ແລະ ວັດຖຸອື່ນໆ ນອກຈາກນັ້ນຍັງຕິດຕາມຈຳນວນເງິນ ຄ່າເສື່ອມມູນຄ່າຂອງວັດຖຸໃນສາງ.

**ເບື້ອງໜີ້ຈິດ:** ຈຳນວນເງິນຕາມມູນຄ່າຮັບເຂົ້າຂອງຊັບສິນລໍຖ້າຂາຍ, ວັດຖຸອຸປະກອນ, ການນຳໃຊ້ຕ່າງໆ ແລະ ລາຍການອື່ນໆ
**ເບື້ອງມີຈິດ:** ຈຳນວນເງິນຕາມມູນຄ່າຈ່າຍອອກຂອງເຄື່ອງໃນສາງ
**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນຕາມມູນຄ່າຍັງເຫຼືອຕົວຈິງຂອງເຄື່ອງໃນສາງ

ບັນຊີ 1379 ເງິນແຮຄ່າເສື່ອມມູນຄ່າຂອງເຄື່ອງໃນສາງ ໃຊ້ເພື່ອບັນທຶກຈຳນວນເງິນແຮຄ່າເສື່ອມມູນຄ່າ ວັດຖຸໃນສາງໃນເວລາກວດນັບ ທີ່ມີມູນຄ່າການນຳໃຊ້ຕ່ຳກ່ວາມູນຄ່າຍັງເຫຼືອໃນບັນຊີ ຊຶ່ງເປັນການຄາດຄະເນໄວ້ລ່ວງໜ້າ. ຖ້າມີການສູນເສຍ ຫຼື ເສື່ອມມູນຄ່າຕົວຈິງເກີດຂື້ນ ຈຶ່ງເກັບຄືນເງິນແຮຄ່າເສື່ອມ ດັ່ງກ່າວແລ້ວຈິດເປັນລາຍຈ່າຍ.

**ເບື້ອງມີຈິດ:** ຈຳນວນເງິນແຮ ຄ່າເສື່ອມມູນຄ່າ ຂອງວັດຖຸໃນສາງ

**ເບື້ອງໜີ້ຈິດ:** ຈຳນວນເງິນເກັບຄືນ ຄ່າເສື່ອມມູນຄ່າ

**ຍອດເຫຼືອມີ:** ສະແດງເຖິງ ຈຳນວນຍັງເຫຼືອ ຂອງເງິນແຮຄ່າເສື່ອມມູນຄ່າວັດຖຸໃນສາງທີ່ໄດ້ສຳຮອງໄວ້

138 ບັນຊີລໍຖ້າສະສາງດ້ານຊັບສິນ

1381 ຫຼັກຊັບທີ່ໄດ້ຮັບໄວ້ລໍຖ້າຮຽກເກັບ

13812 ຫຼັກຊັບທີ່ໄດ້ຮັບໄວ້ລໍຖ້າຮຽກເກັບ

138121 ຫຼັກຊັບທີ່ໄດ້ຈິດເຂົ້າບັນຊີລູກຄ້າໃນທັນທີ

1381211 ແຊັກພາຍໃນປະເທດ

1381212 ແຊັກຕ່າງປະເທດ

1381213 ມັງດາໄປສະນີຕ່າງປະເທດ

1381214 ມັງດາໄປສະນີຕ່າງປະເທດ

1381215 ໃບຢັ້ງຢືນການຄ້າພາຍໃນປະເທດ

1381216 ໃບຢັ້ງຢືນການຄ້າຕ່າງປະເທດ

1381217 ຫຼັກຊັບອື່ນໆພາຍໃນປະເທດ

1381218 ຫຼັກຊັບອື່ນໆຕ່າງປະເທດ

138123 ຫຼັກຊັບທີ່ໄດ້ຮັບໄວ້ຊົ່ວຄາວ

1381231 ແຊັກພາຍໃນປະເທດ

1381232 ແຊັກຕ່າງປະເທດ

1381233 ມັງດາໄປສະນີລາວ

1381234 ມັງດາໄປສະນີຕ່າງປະເທດ

1381235 ໃບຢັ້ງຢືນການຄ້າພາຍໃນປະເທດ

1381236 ໃບຢັ້ງຢືນການຄ້າຕ່າງປະເທດ

1381237 ຫຼັກຊັບອື່ນໆພາຍໃນປະເທດ

1381238 ຫຼັກຊັບອື່ນໆຕ່າງປະເທດ

13813 ຫຼັກຊັບກຳລັງສົ່ງໄປຮຽກເກັບ

138131 ຫຼັກຊັບທີ່ໄດ້ຈິດເຂົ້າບັນຊີລູກຄ້າແລ້ວ

1381311 ແຊັກພາຍໃນປະເທດ

1381312 ແຊັກຕ່າງປະເທດ

1381313 ມັງດາໄປສະນີລາວ

1381314 ມັງດາໄປສະນີຕ່າງປະເທດ

1381315 ໃບຢັ້ງຢືນການຄ້າພາຍໃນປະເທດ

1381316 ໃບຢັ້ງຢືນການຄ້າຕ່າງປະເທດ

1381317 ຫຼັກຊັບອື່ນໆພາຍໃນປະເທດ

1381318 ຫຼັກຊັບອື່ນໆຕ່າງປະເທດ

138133 ຫຼັກຊັບທີ່ໄດ້ຮັບໄວ້ຊົ່ວຄາວ

1381331 ແຊັກພາຍໃນປະເທດ

1381332 ແຊັກຕ່າງປະເທດ

1381333 ມັງດາໄປສະນີລາວ

1381334 ມັງດາໄປສະນີຕ່າງປະເທດ

1381335 ໃບຢັ້ງຢືນການຄ້າພາຍໃນປະເທດ

1381336 ໃບຢັ້ງຢືນການຄ້າຕ່າງປະເທດ

1381337 ຫຼັກຊັບອື່ນໆພາຍໃນປະເທດ

1381338 ຫຼັກຊັບອື່ນໆຕ່າງປະເທດ

138136 ໃບຢັ້ງຢືນຊັບປະຕິເສດຈ່າຍກຳລັງສົ່ງໄປຮຽກເກັບ

13815 ໃບຢັ້ງຢືນຊັບປະຕິເສດຈ່າຍລໍຖ້າສົ່ງຄືນໃຫ້ລູກຄ້າ

138151 ໃບຢັ້ງຢືນຊັບທີ່ໄດ້ຈົດເຂົ້າບັນຊີລູກຄ້າແລ້ວ

1381511 ແຊັກພາຍໃນປະເທດ

1381512 ແຊັກຕ່າງປະເທດ

1381513 ມັງດາໄປສະນີລາວ

1381514 ມັງດາໄປສະນີຕ່າງປະເທດ

1381515 ໃບຢັ້ງຢືນການຄ້າພາຍໃນປະເທດ

1381516 ໃບຢັ້ງຢືນການຄ້າຕ່າງປະເທດ

1381517 ໃບຢັ້ງຢືນການຄ້າພາຍໃນປະເທດ

1381518 ໃບຢັ້ງຢືນຊັບອື່ນໆຕ່າງປະເທດ

138152 ໃບຢັ້ງຢືນຊັບທີ່ໄດ້ຮັບໄວ້ຊົ່ວຄາວ

1381521 ແຊັກພາຍໃນປະເທດ

1381522 ແຊັກຕ່າງປະເທດ

1381523 ມັງດາໄປສະນີລາວ

1381524 ມັງດາໄປສະນີຕ່າງປະເທດ

1381525 ໃບຢັ້ງຢືນການຄ້າພາຍໃນປະເທດ

1381526 ໃບຢັ້ງຢື້ນການຄ້າຕ່າງປະເທດ

1381527 ໃບຢັ້ງຢືນຊັບອື່ນໆພາຍໃນປະເທດ

1381528 ໃບຢັ້ງຢືນຊັບອື່ນໆຕ່າງໃນປະເທດ

ບັນຊີ 138 ບັນຊີລໍຖ້າສະສາງດ້ານຊັບສິນ ໃຊ້ເພື່ອບັນທຶກຈຳນວນເງິນລໍຖ້າຊຳລະສະສາງກ່ຽວກັບ ການເກັບຊື້ແຊັກ ຫຼື ໃບຢັ້ງຢືນທີ່ມີຄ່າຄືເງິນ, ຊຶ່ງໄດ້ຈົດມີບັນຊີຂອງຜູ້ມາມອບ ຫຼື ຂາຍ, ຈຳນວນເງິນຕິດຕາມ ບັນຊີ ທີ່ຕ້ອງແບ່ງສ່ວນ, ບັນຊີຈ່າຍລ່ວງໜ້າ, ລາຍຮັບຄ້າງຮັບ ແລະ ບັນຊີລໍຖ້າຊຳລະສະສາງອື່ນໆ.

ບັນຊີ 1381 ຫຼັກຊັບທີ່ໄດ້ຮັບໄວ້ລໍຖ້າຮຽກເກັບ ປະກອບມີ:ຫຼັກຊັບທີ່ໄດ້ຮັບໄວ້ລໍຖ້າຮຽກເກັບ ແລະ ຫຼັກຊັບກຳລັງສົ່ງໄປຮຽກເກັບ ແລະ ໃບຢັ້ງຢືນຊັບປະຕິເສດຈ່າຍລໍຖ້າສົ່ງຄືນໃຫ້ລູກຄ້າ.

**ເບື້ອງໜີ້ຈິດ:** ຈຳນວນເງິນຕາມມູນຄ່າຫຼັກຊັບທີ່ໄດ້ຊື້, ຈຳນວນເງິນຫຼັກຊັບພວມສົ່ງໄປຮຽກເກັບເງິນ ແລະ ຈຳນວນເງິນປະຕິເສດຈ່າຍລໍຖ້າສົ່ງ ຄືນໃຫ້ລູກຄ້າ

**ເບື້ອງມີຈິດ:** ຈຳນວນເງິນຕາມຫຼັກຊັບສົ່ງໄປຮຽກເກັບ, ຈຳນວນເງິນທີ່ໄດ້ຮັບການຊຳລະ ແຊັກທີ່ຮຽກເກັບເງິນບໍ່ໄດ້ ແລະ ແຊັກສົ່ງຄືນແລ້ວ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນຍັງເຫຼືອຂອງຫຼັກຊັບທີ່ຊື້ແລ້ວຕ້ອງສົ່ງຮຽກເກັບ, ຈຳນວນສົ່ງໄປຮຽກເກັບລໍຖ້າຮັບຊຳລະ ແລະ ຈຳນວນເງິນຍັງເຫຼືອ ຂອງແຊັກຮຽກເກັບເງິນບໍ່ໄດ້ ລໍຖ້າສົ່ງຄືນໃຫ້ລູກຄ້າ

1386 ລາຍຈ່າຍລໍຖ້າແບ່ງສ່ວນ

- 13861 ສ່ວນຫຼຸດມູນຄ່າຂອງຮຸ້ນກູ້ ຫຼື ພັນທະບັດທີ່ໄດ້ຈຳໜ່າຍອອກ
- 13862 ສ່ວນເກີນການທົດແທນຄືນຫຼັກຊັບທີ່ມີລາຍໄດ້ຄົງທີ່
- 13868 ລາຍຈ່າຍອື່ນໆ ລໍຖ້າແບ່ງສ່ວນ

1388 ລາຍການອື່ນໆ ລໍຖ້າສະສາງ

- 13881 ລາຍຈ່າຍ ຈ່າຍລ່ວງໜ້າ
- 13883 ລາຍຮັບອື່ນໆ ຄ້າງຮັບ
- 13888 ລາຍການອື່ນໆ ລໍຖ້າສະສາງ

ບັນຊີ 1386 ລາຍຈ່າຍລໍຖ້າແບ່ງສ່ວນ ໃຊ້ເພື່ອບັນທຶກສ່ວນເກີນມູນຄ່າຫຼັກຊັບ ທີ່ມີລາຍໄດ້ຄົງທີ່ (ສ່ວນເກີນມູນຄ່າຫຼັກຊັບຝາກໝູນ ແລະ ຫຼັກຊັບລົງທຶນ) ຊຶ່ງຕ້ອງແບ່ງສ່ວນອອກເປັນລາຍຈ່າຍຕາມ ອາຍຸຂອງຫຼັກຊັບນັ້ນໆ ແລະ ລາຍຈ່າຍອື່ນໆລໍຖ້າແບ່ງສ່ວນ.

**ເບື້ອງໜີ້ຈິດ:** ຕິດຕາມຈຳນວນເງິນສ່ວນເກີນມູນຄ່າຫຼັກຊັບ ຊຶ່ງຕ້ອງແບ່ງສ່ວນອອກເປັນລາຍຈ່າຍ ແລະ ລາຍຈ່າຍອື່ນໆ ລໍຖ້າແບ່ງສ່ວນ

**ເບື້ອງມີຈິດ:** ຕິດຕາມຈຳນວນເງິນທີ່ໄດ້ຊຳລະເຂົ້າບັນຊີລາຍຈ່າຍແລ້ວ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນຍັງເຫຼືອສ່ວນເກີນມູນຄ່າຫຼັກຊັບ ຊຶ່ງຕ້ອງແບ່ງສ່ວນອອກເປັນລາຍຈ່າຍ

139 ໜີ້ຕ້ອງຮັບທວງຍາກ ກ່ງວກັບຫຼັກຊັບ ແລະ ລາຍການອື່ນໆ

1391 ໜີ້ຕ້ອງຮັບທວງຍາກ ກ່ງວກັບຫຼັກຊັບ

13911 ຫຼັກຊັບທີ່ໄດ້ຊື້ ໂດຍມີສັນຍາຂາຍຄືນທວງຍາກ

13912 ຫຼັກຊັບຊື້ເພື່ອຄ້າທວງຍາກ

13913 ຫຼັກຊັບເພື່ອຂາຍທວງຍາກ

13914 ຫຼັກຊັບລົງທຶນ

1392 ໜີ້ຕ້ອງຮັບທວງຍາກກ່ງວກັບລາຍການອື່ນໆ

1397 ດອກເບ້ຍຄ້າງຮັບຂອງຫຼັກຊັບທວງຍາກ

13971 ດອກເບ້ຍຄ້າງຮັບຂອງຫຼັກຊັບທວງຍາກ

139711 ດອກເບ້ຍຫຼັກຊັບທີ່ໄດ້ຊື້ ໂດຍມີສັນຍາຂາຍຄືນ

139712 ດອກເບ້ຍຫຼັກຊັບຊື້ເພື່ອຄ້າ

139713 ດອກເບ້ຍຫຼັກຊັບເພື່ອຂາຍ

139714 ດອກເບ້ຍຫຼັກຊັບລົງທຶນ

13972 ດອກເບ້ຍຄ້າງຮັບຂອງລາຍການອື່ນໆ ທວງຍາກ

ບັນຊີ 139 ໜີ້ຕ້ອງຮັບທວງຍາກ ກ່ງວກັບຫຼັກຊັບ ແລະ ລາຍການອື່ນໆ ໃຊ້ເພື່ອບັນທຶກຈຳນວນເງິນຫຼັກຊັບ ທີ່ມີຄວາມສ່ຽງ ທີ່ອາດເກີດຂື້ນໄດ້ ຫຼື ແນ່ນອນທີ່ເກັບຄືນບໍ່ໄດ້ທັງໝົດ ຫຼື ສ່ວນໃດສ່ວນໜຶ່ງທີ່ມີລັກສະນະເປັນຄະດີ (ລົ້ມລະລາຍ) ແລະ ຫຼັກຊັບທີ່ບໍ່ຮັບປະກັນໃນການຊື້ຂາຍໄດ້ອີກ.

ບັນຊີ 13911 ໜີ້ຕ້ອງຮັບທວງຍາກ ກ່ງວກັບຫຼັກຊັບ ໃຊ້ເພື່ອບັນທຶກຈຳນວນເງິນຫຼັກຊັບຂອງພາຍໃນ ແລະ ຕ່າງປະເທດ ການເຄື່ອນໄຫວອື່ນທີ່ມີຄວາມສ່ຽງ ທີ່ອາດເກີດຂື້ນໄດ້ ຫຼື ແນ່ນອນທີ່ເກັບຄືນບໍ່ໄດ້ທັງໝົດ ຫຼື ສ່ວນໃດສ່ວນໜຶ່ງທີ່ມີລັກສະນະເປັນຄະດີ, ຫຼັກຊັບທີ່ບໍ່ຮັບປະກັນການຊື້ຂາຍໄດ້ອີກ.

**ເບື້ອງໜີ້ຈິດ:** ຈຳນວນເງິນທີ່ໂອນມາຈາກບັນຊີ ຫຼັກຊັບປະເພດຕ່າງໆ ຂອງພາຍໃນ ແລະ ຕ່າງປະເທດ ( ຫຼັກຊັບປົກກະຕິ)

**ເບື້ອງມີຈິດ:** ຈຳນວນເງິນທີ່ອະນຸຍາດໃຫ້ຊຳລະອອກຈາກບັນຊີ ເປັນຂາດທຶນ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນຍັງເຫຼືອຂອງຫຼັກຊັບຊຶ່ງຕ້ອງຕິດຕາມ

ບັນຊີ 1397 ດອກເບ້ຍຄ້າງຮັບຂອງຫຼັກຊັບ ແລະ ລາຍການອື່ນໆທວງຍາກ ໃຊ້ເພື່ອບັນທຶກຈຳນວນເງິນດອກເບ້ຍຄ້າງຮັບປົກກະຕິຂອງຫຼັກຊັບ ພາຍໃນ ແລະ ຕ່າງປະເທດ.

**ເບື້ອງໜີ້ຈິດ:** ຈຳນວນເງິນດອກເບ້ຍຄ້າງຮັບທີ່ໄດ້ໂອນມາ

**ເບື້ອງມີຈິດ:** ຈຳນວນເງິນດອກເບ້ຍຄ້າງຮັບ ທີ່ຖືກຊຳລະ ຫຼື ໂອນໄປບັນຊີອື່ນ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນດອກເບ້ຍຄ້າງຮັບລໍຖ້າສະສາງ

13991 ເງິນແຮຄ່າເສື່ອມມູນຄ່າຂອງຫຼັກຊັບທວງຍາກ

139911 ຫຼັກຊັບທີ່ໄດ້ຊື້ ໂດຍມີສັນຍາຂາຍຄືນ

139912 ຫຼັກຊັບຊື້ເພື່ອຄ້າ

139913 ຫຼັກຊັບເພື່ອຂາຍ

139914 ຫຼັກຊັບທີ່ຈະຖືຄອງໄວ້ຈົນຄົບກຳນົດ

13992 ເງິນແຮຄ່າເສື່ອມມູນຄ່າຂອງລາຍການອື່ນໆ ທວງຍາກ

ບັນຊີ 1399 ເງິນແຮຄ່າເສື່ອມມູນຄ່າຂອງຫຼັກຊັບ ແລະ ລາຍການອື່ນໆທວງຍາກ ໃຊ້ເພື່ອບັນທຶກຈຳນວນເງິນແຮຄ່າເສື່ອມມູນຄ່າໜີ້ຕ້ອງຮັບທວງຍາກກ່ຽວກັບຫຼັກຊັບ ຂອງພາຍໃນ ແລະ ຕ່າງປະເທດ.

ເບື້ອງໜີ້ຈິດ: ຈຳນວນເງິນແຮຫັກໄວ້ ເປັນແຕ່ລະໄລຍະ

ເບື້ອງມີຈິດ: ຈຳນວນເງິນຫຼຸດຜ່ອນ ຫຼື ຈຳນວນເງິນເກັບຄືນ

ຍອດເຫຼືອມີ: ສະແດງເຖິງຈຳນວນເງິນຍັງເຫຼືອຂອງເງິນແຮຄ່າເສື່ອມມູນຄ່າໜີ້ຕ້ອງຮັບທວງຍາກ ກ່ຽວກັບຫຼັກຊັບ ພາຍໃນ ແລະ ຕ່າງປະເທດ.

- **ໝວດທີ 4 ຊັບສິນຄົງທີ່**

ບັນຊີຊັບສິນຄົງທີ່ ໃຊ້ເພື່ອບັນທຶກ ຊັບສົມບັດຄົງທີ່ ແລະ ໜີ້ຕ້ອງຮັບທີ່ມີລັກສະນະຍາວນານ ໂດຍສະເພາະແລ້ວແມ່ນເງິນໃຫ້ກູ້ຢືມສຳຮອງ, ຮຸ້ນ ແລະ ເງິນລົງທຶນຮ່ວມກັບວິສາຫະກິດໃນເຄືອ, ໃບຢັ້ງຢືນຮ່ວມປະກອບ ທຶນ, ຮຸ້ນຢູ່ໃນບັນດາວິສາຫະກິດອື່ນ, ຊັບສົມບັດຄົງທີ່ໃນການທຸລະກິດ ແລະນອກການທຸລະກິດ ລວມທັງ ຊັບສົມບັດຄົງທີ່ ທີ່ໄດ້ເອົາໃຫ້ເຊົ່າ - ຊື້ ແລະ ຍັງປະກອບດ້ວຍ ບັນຊີ ຄ່າຫຼຸ້ຍຫ້ຽນ ແລະ ບັນຊີ ຄ່າເສື່ອມ ມູນຄ່າ ທີ່ຈະນຳໃຊ້ເພື່ອຫັກອອກຈາກມູນຄ່າຊັບສົມບັດຄົງທີ່ ທີ່ກ່ຽວຂ້ອງ.

ບັນຊີ 140 ເງິນໃຫ້ກູ້ຢືມສຳຮອງ ແມ່ນເງິນໃຫ້ກູ້ຢືມແກ່ທະນາຄານທຸລະກິດອື່ນ ແລະ ລູກຄ້າ ແນໃສ່ເພື່ອຈຸດປະສົງຊ່ວຍເຫຼືອຊຶ່ງກັນ ແລະ ກັນທາງດ້ານທຸລະກິດ ເພື່ອໃຫ້ດຳລົງຄົງຕົວຢູ່ໄດ້ (ໃນໄລຍະຟື້ນຟູ) . ເງິນໃຫ້ກູ້ຢືມປະເພດນີ້ ບໍ່ມີການຄ້ຳປະກັນ, ຊຶ່ງຜູ້ໃຫ້ກູ້ຢືມໄດ້ຍິນຍອມ ໃຫ້ເຈົ້າໜີ້ອື່ນ ຮັບຜົນປະໂຫຍດກ່ອນ ໃນກໍລະນີທີ່ຜູ້ກູ້ຢືມ ຍົກເລີກກິດຈະການ ຫຼື ລົ້ມລະລາຍ (ແມ່ນໜີ້ຕ້ອງຮັບລຳດັບສຸດທ້າຍ).

140 ເງິນໃຫ້ກູ້ຢືມສຳຮອງ
- 1401 ໃຫ້ທະນາຄານອື່ນກູ້ຢືມ
  - 14011 ໃຫ້ກູ້ຢືມສຳຮອງມີກຳນົດ
  - 14012 ໃຫ້ກູ້ຢືມສຳຮອງບໍ່ມີກຳນົດ
- 1402 ໃຫ້ລູກຄ້າກູ້ຢືມ
  - 14021 ໃຫ້ກູ້ຢືມສຳຮອງມີກຳນົດ
  - 14022 ໃຫ້ກູ້ຢືມສຳຮອງບໍ່ມີກຳນົດ
- 1407 ດອກເບ້ຍເງິນໃຫ້ກູ້ຢືມສຳຮອງຄ້າງຮັບ
  - 14071 ຈາກທະນາຄານອື່ນ
    - 140711 ດອກເບ້ຍເງິນໃຫ້ກູ້ຢືມສຳຮອງມີກຳນົດ
    - 140712 ດອກເບ້ຍເງິນໃຫ້ກູ້ຢືມສຳຮອງບໍ່ມີກຳນົດ
  - 14072 ຈາກລູກຄ້າ
    - 140721 ດອກເບ້ຍເງິນໃຫ້ກູ້ຢືມສຳຮອງມີກຳນົດ
    - 140722 ດອກເບ້ຍເງິນໃຫ້ກູ້ຢືມສຳຮອງບໍ່ມີກຳນົດ

ບັນຊີ 1401, 1402 ໃຊ້ເພື່ອບັນທຶກຈຳນວນເງິນໃຫ້ກູ້ຢືມສຳຮອງ ມີກຳນົດ ແລະ ບໍ່ມີກຳນົດ ຊຶ່ງທະນາຄານໄດ້ໃຫ້ກູ້ຢືມແກ່ທະນາຄານທຸລະກິດອື່ນ ແລະ ລູກຄ້າ. ຖ້າເປັນເງິນໃຫ້ກູ້ຢືມສຳຮອງມີກຳນົດ ຕ້ອງໄດ້ລະບຸວັນທີແນ່ນອນມື້ຊຳລະຄືນ ດອກເບ້ຍຈະຄິດໄລ່ ຫຼື ບໍ່ດັ່ງນັ້ນຂຶ້ນກັບສັນຍາຂອງຄູ່ກໍລະນີ.

**ເບື້ອງໜີ້ຈິດ:** ຈຳນວນເງິນທີ່ໄດ້ໃຫ້ກູ້ຢືມແກ່ທະນາຄານທຸລະກິດອື່ນ ແລະ ລູກຄ້າ
**ເບື້ອງມີຈິດ:** ຈຳນວນເງິນທີ່ໄດ້ຮັບທົດແທນຄືນ ຫຼື ໂອນໄປບັນຊີອື່ນ
**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນຍັງເຫຼືອຂອງເງິນໃຫ້ກູ້ຢືມສຳຮອງມີກຳນົດ ແລະ ບໍ່ມີກຳນົດ

ບັນຊີ 1407 ໃຊ້ເພື່ອບັນທຶກຈຳນວນເງິນ ດອກເບ້ຍຄ້າງຮັບຂອງເງິນໃຫ້ກູ້ຢືມສຳຮອງ ຊຶ່ງໄດ້ຄິດໄລ່ໄວ້ ເມື່ອປັບປຸງບັນຊີທ້າຍເດືອນ.

**ເບື້ອງໜີ້ຈິດ:** ຈຳນວນດອກເບ້ຍທີ່ໄດ້ຄິດໄລ່ໄວ້

**ເບື້ອງມີຈິດ:** ຈຳນວນເງິນທີ່ຊຳລະ ຫຼື ໂອນໄປບັນຊີອື່ນ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນດອກເບ້ຍທີ່ຍັງບໍ່ທັນໄດ້ຊຳລະ

ບັນຊີ 141 ເງິນລົງທຶນໃນວິສາຫະກິດໃນກຸ່ມ, ບໍລິສັດຮ່ວມທຶນ ແລະ ຫຼັກຊັບໃນກິດຈະການຄຸ້ມຄອງຫຼັກຊັບແມ່ນຫຼັກຊັບທີ່ສະໜອງລາຍໄດ້ຜັນແປ (ບໍ່ຄົງທີ່) ຊຶ່ງບໍລິສັດທີ່ຖືກຄວບຄຸມ ໄດ້ຈຳໜ່າຍອອກ. ຮຸ້ນດັ່ງກ່າວຖືກລົງບັນຊີ ໃນມື້ໄດ້ມາເປັນກຳມະສິດຕາມລາຄາຊື້, ບໍ່ລວມຄ່າໃຊ້ຈ່າຍຕ່າງໆເຂົ້ານຳ. ໃນເວລາປິດບັນຊີແຕ່ລະຄັ້ງ ໃຫ້ຕີມູນຄ່າຮຸ້ນຕາມລາຄາຕະຫຼາດ ຖ້າລາຄາຕະຫຼາດຕ່ຳກ່ວາມູນຄ່າຕົ້ນທຶນໄດ້ມາເປັນກຳມະສິດ, ຕ້ອງໄດ້ຄິດໄລ່ຫັກຄ່າເສື່ອມມູນຄ່າໄວ້.

ໃບຢັ້ງຢືນຮ່ວມປະກອບທຶນ ແມ່ນຫຼັກຊັບ ທີ່ສະໜອງລາຍໄດ້ຜັນແປ (ບໍ່ຄົງທີ່) ຊຶ່ງມີການກຳນົດການຖືກຳມະສິດຢ່າງຍາວນານ ແລະ ຕ້ອງແມ່ນປະເພດຫຼັກຊັບທີ່ກວມເອົາ 10% ຫຼືຫຼາຍກ່ວາທຶນຂອງວິສາຫະກິດນັ້ນ. ຖ້າເປັນຫຼັກຊັບ ຊຶ່ງຈຳນວນເງິນຫຼຸດ 10% ຂອງທຶນຂອງວິສາຫະກິດຕ້ອງປະຕິບັດຕາມໜຶ່ງ ໃນເງື່ອນໄຂດັ່ງລຸ່ມນີ້:

- ເປັນກຳມະການບໍລິຫານ ຫຼື ເປັນຜູ້ນຳພາຮ່ວມກັບຜູ້ອອກຫຼັກຊັບ;
- ຜູ້ອອກຫຼັກຊັບ ຕ້ອງຖືສ່ວນໃດສ່ວນໜຶ່ງ ຂອງຊັບສິນຂອງທະນາຄານແຫ່ງ ສປປ ລາວ
- ສັງເກດຢູ່ໃນກຸ່ມດຽວກັນ ຊຶ່ງຄວບຄຸມ ໂດຍບຸກຄົນ ຫຼື ນິຕິບຸກຄົນ ທີ່ດຳເນີນການຄວບຄຸມກຸ່ມທັງໝົດ ແລະ ມີບົດບາດເປັນຫົວໜ່ວຍຕັດສິນບັນຫາ.

ໃຫ້ລົງບັນຊີໃບຢັ້ງຢືນຮ່ວມປະກອບທຶນໃນມື້ໄດ້ມາເປັນກຳມະສິດ ຕາມລາຄາຊື້, ບໍ່ໄລ່ຄ່າໃຊ້ຈ່າຍເຂົ້ານຳ. ໃນມື້ປິດສະຫຼຸບບັນຊີ ໃຫ້ຕີມູນຄ່າຂອງໃບຢັ້ງຢືນຮ່ວມປະກອບທຶນ ຕາມມູນຄ່າຕົ້ນທຶນໄດ້ມາເປັນກຳມະສິດ ແລະ ຕາມມູນຄ່ານຳໃຊ້. ໃນກໍລະນີ ທີ່ມູນຄ່ານຳໃຊ້ ຫາກຕ່ຳກ່ວາມູນຄ່າຕົ້ນທຶນໄດ້ມາເປັນກຳມະສິດ, ຕ້ອງໄດ້ຫັກຄ່າເສື່ອມມູນຄ່າໄວ້.

<u>**ໃບຢັ້ງຢືນຊັບ ໃນກິດຈະການຄຸ້ມຄອງຫຼັກຊັບ**</u>: ແມ່ນໃບຢັ້ງຢືນຊັບທີ່ໃຫ້ລາຍໄດ້ຜັນແປ (ບໍ່ຄົງທີ່) ຊຶ່ງການໄດ້ມາເປັນກຳມະສິດແມ່ນແນໃສ່ໃນໄລຍະຍາວ ໃຫ້ມີປະສິດທິຜົນຢ່າງໜ້າພໍໃຈ. ກິດຈະການດັ່ງກ່າວດຳເນີນໂດຍບໍ່ມີການແຊກແຊງ ເຂົ້າໃນການຄຸ້ມຄອງວິສາຫະກິດທີ່ຖືຫຼັກຊັບ. ໃບຢັ້ງຢືນເຫຼົ່ານີ້ຕ່າງກັນກັບໃບຢັ້ງຢືນຮ່ວມ ປະກອບທຶນໃນສອງປະເດັນຄື:

- ວັດຖຸປະສົງ ແມ່ນແນໃສ່ໃຫ້ມີປະສິດທິຜົນ ບໍ່ແມ່ນ ເພື່ອຄຸນປະໂຫຍດ;
- ບໍ່ມີການແຊກແຊງເຂົ້າໃນການຄຸ້ມຄອງຫຼັກຊັບ.

ການລົງບັນຊີ ແລະ ການຕີມູນຄ່າຫຼັກຊັບເຫຼົ່ານີ້ ໃນມື້ປິດສະຫຼຸບບັນຊີ ໃຫ້ປະຕິບັດຄືກັນກັບບັນຊີຮຸ້ນ ແລະ ໃບຢັ້ງຢືນຮ່ວມປະກອບທຶນ.

141 ເງິນລົງທຶນໃນວິສາຫະກິດໃນກຸ່ມ, ບໍລິສັດຮ່ວມທຶນ ແລະ ຫຼັກຊັບໃນກິດຈະການຄຸ້ມຄອງຫຼັກຊັບ

1411 ເງິນລົງທຶນຢູ່ໃນວິສາຫະກິດໃນກຸ່ມ

14111 ເງິນລົງທຶນໃນບັນດາທະນາຄານ ແລະ ສະຖາບັນສິນເຊື່ອຕ່າງໆ

14112 ເງິນລົງທຶນໃນບັນດາວິສາຫະກິດທີ່ມີລັກສະນະການເງິນ

14113 ເງິນລົງທຶນຢູ່ໃນບັນດາວິສາຫະກິດທີ່ບໍ່ມີລັກສະນະການເງິນ

1412 ເງິນລົງທຶນໃນບໍລິສັດຮ່ວມທຶນ

14121 ເງິນລົງທຶນຢູ່ໃນບັນດາທະນາຄານ ແລະ ສະຖາບັນສິນເຊື່ອຕ່າງໆ

14122 ເງິນລົງທຶນໃນບັນດາວິສາຫະກິດທີ່ມີລັກສະນະການເງິນ

14123 ເງິນລົງທຶນຢູ່ໃນບັນດາວິສາຫະກິດທີ່ບໍ່ມີລັກສະນະການເງິນ

1413 ຫຼັກຊັບໃນກິດຈະການຄຸ້ມຄອງຫຼັກຊັບ

1414 ສ່ວນຜິດດ່ຽງຈາກການຕີມູນຄ່າ

14141 ເງິນລົງທຶນໃນບັນດາວິສາຫະກິດໃນກຸ່ມ

14142 ເງິນລົງທຶນໃນບໍລິສັດຮ່ວມທຶນ

14143 ຫຼັກຊັບໃນກິດຈະການຄຸ້ມຄອງຫຼັກຊັບ

1415 ຫຼັກຊັບທີ່ໄດ້ໃຫ້ກູ້ຢືມ

14151 ເງິນລົງທຶນໃນບັນດາວິສາຫະກິດໃນກຸ່ມ

14152 ເງິນລົງທຶນໃນບໍລິສັດຮ່ວມທຶນ

14153 ຫຼັກຊັບໃນກິດຈະການຄຸ້ມຄອງຫຼັກຊັບ

ບັນຊີ 1411 ໃຊ້ເພື່ອບັນທຶກ ຈຳນວນເງິນຂອງມູນຄ່າຮຸ້ນ ທີ່ຖືຢູ່ໃນບັນດາວິສາຫະກິດອື່ນ ທີ່ຄວບຄຸມ ຫຼື ມີຄວາມອາດສາມາດຄວບຄຸມໄດ້ໂດຍເຕັມສ່ວນ, ວິສາຫະກິດໃນເຄືອປະກອບດ້ວຍບັນດາບໍລິສັດທີ່ຖືຮຸ້ນຢ່າງໜ້ອຍເກີນກວ່າ 50% ຂຶ້ນໄປ.

ບັນຊີ 1412 ໃຊ້ເພື່ອບັນທຶກຈຳນວນເງິນຂອງມູນຄ່າຫຼັກຊັບທີ່ບໍ່ແມ່ນຮຸ້ນ ຢູ່ໃນບໍລິສັດໃນເຄືອ, ແມ່ນໃບຢັ້ງຢືນຊັບທີ່ມີລັກສະນະຍາວນານ ແລະ ມີມູນຄ່າເກີນກວ່າ 10% ຂອງທຶນເຈົ້າຂອງວິສາຫະກິດ ທີ່ຈຳໜ່າຍໃບຢັ້ງຢືນຮ່ວມປະກອບທຶນ ແຕ່ຈະບໍ່ເກີນ 50%.

ບັນຊີ 1413 ໃຊ້ເພື່ອບັນທຶກຈຳນວນເງິນຂອງມູນຄ່າຫຼັກຊັບທີ່ບໍ່ແມ່ນຮຸ້ນ ແລະ ໃບຢັ້ງຢືນຮ່ວມປະກອບທຶນແມ່ນຫຼັກຊັບທີ່ໃຫ້ລາຍໄດ້ຜັນແປ (ບໍ່ຄົງທີ່) ຊຶ່ງການໄດ້ມາເປັນກຳມະສິດ ແນໃສ່ ໃນໄລຍະຍາວ, ເພື່ອປະສິດທິຜົນຂອງການລົງທຶນ ແຕ່ບໍ່ມີການແຊກແຊງເຂົ້າໃນການຄຸ້ມຄອງບໍລິສັດ ຂອງຜູ້ຈຳໜ່າຍຫຼັກຊັບປະເພດນີ້.

**ເບື້ອງໜີ້ຈິດ:** ມູນຄ່າຮຸ້ນທີ່ໄດ້ລົງທຶນນຳວິສາຫະກິດໃນເຄືອ, ໃບຢັ້ງຢືນຮ່ວມປະກອບທຶນ ແລະຮຸ້ນຢູ່ໃນວິສາຫະກິດອື່ນ ຕາມລາຄາໄດ້ມາເປັນກຳມະສິດບໍ່ລວມ ຄ່າໃຊ້ຈ່າຍເຂົ້ານຳເພື່ອເປັນຕົ້ນທຶນ

**ເບື້ອງມີຈິດ:** ຈຳນວນເງິນຫຼຸດຜ່ອນ ຫຼື ໂອນໄປບັນຊີອື່ນ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນຍັງເຫຼືອ ຂອງມູນຄ່າຮຸ້ນຢູ່ໃນວິສາຫະກິດໃນເຄືອ, ໃບຢັ້ງຢືນຮ່ວມປະກອບທຶນ ແລະ ຮຸ້ນຢູ່ໃນວິສາຫະກິດອື່ນ ທີ່ທະນາຄານທຸລະກິດ ມີໄວ້ເປັນການ ລົງທຶນໄລຍະຍາວ

ບັນຊີ 1414 ໃຊ້ເພື່ອບັນທຶກຈຳນວນເງິນຜິດດ່ຽງຈາກການຕີມູນຄ່າຂອງເງິນລົງທຶນໃນບັນດາວິສາຫະກິດໃນກຸ່ມ, ເງິນລົງທຶນໃນບໍລິສັດຮ່ວມທຶນ ແລະ ຫຼັກຊັບໃນກິດຈະການ ການຄຸ້ມຄອງຫຼັກຊັບ ຊຶ່ງທະນາຄານໄດ້ມີການປະເມີນມູນຄ່າໃນທຸກໆທ້າຍເດືອນ (ປິດບັນຊີປະຈຳງວດ) ເພື່ອສະແດງໃຫ້ເປັນມູນຄ່າທີ່ແທ້ຈິງຂອງເງິນລົງທຶນ.

**ເບື້ອງໜີ້ຈິດ:** ຈຳນວນເງິນຜິດດ່ຽງທີ່ເກີດຈາກການຕີມູນຄ່າ.
**ເບື້ອງມີຈິດ:** ຈຳນວນເງິນຫຼຸດຜ່ອນ ຫຼື ໂອນໄປບັນຊີອື່ນ.
**ຍອດເຫຼືອໜີ້:** ສະແດງເຖິງຍອດເຫຼືອຂອງຈຳນວນເງິນຜິດດ່ຽງຈາກການຕີມູນຄ່າ.

ບັນຊີ 1415 ໃຊ້ເພື່ອບັນທຶກຈຳນວນເງິນມູນຄ່າຂອງຫຼັກຊັບທີ່ໄດ້ໃຫ້ກູ້ຢືມໃນບັນດາວິສາຫະກິດໃນກຸ່ມ, ເງິນລົງທຶນໃນບໍລິສັດຮ່ວມທຶນ ແລະ ຫຼັກຊັບໃນກິດຈະການຄຸ້ມຄອງຫຼັກຊັບ.

**ເບື້ອງໜີ້ຈິດ:** ຈຳນວນເງິນມູນຄ່າຂອງຫຼັກຊັບທີ່ໄດ້ໃຫ້ກູ້ຢືມ.
**ເບື້ອງມີຈິດ:** ຈຳນວນເງິນຫຼຸດຜ່ອນ ຫຼື ໂອນໄປບັນຊີອື່ນ.
**ຍອດເຫຼືອໜີ້:** ສະແດງເຖິງຍອດເຫຼືອຂອງຈຳນວນເງິນຜິດດ່ຽງຈາກການຕີມູນຄ່າ.

**ບັນຊີ 1417** ໃຊ້ເພື່ອບັນທຶກຈຳນວນເງິນປັນຜົນຈາກບໍລິສັດຮ່ວມທຶນ, ຜົນໄດ້ຮັບຈາກວິສາຫະກິດໃນກຸ່ມ, ຜົນໄດ້ຮັບຈາກຫຼັກຊັບໃນກິດຈະການຄຸ້ມຄອງຫຼັກຊັບ ແລະ ດອກເບ້ຍຄ້າງຮັບຫຼັກຊັບທີ່ໄດ້ໃຫ້ກູ້ຢືມ

**ເບື້ອງໜີ້ຈິດ:** ຈຳນວນເງິນດອກເບ້ຍທີ່ຄິດໄລ່ໄດ້ເມື່ອປັບປຸງບັນຊີທ້າຍເດືອນ.
**ເບື້ອງມີຈິດ:** ຈຳນວນເງິນທີ່ຊຳລະ ຫຼື ໂອນໄປບັນຊີອື່ນ
**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນດອກເບ້ຍຍັງບໍ່ທັນໄດ້ຮັບການຊຳລະ

1418 ໃຊ້ເພື່ອບັນທຶກ ເງິນຕ້ອງຖອກເພີ່ມກ່ຽວກັບເງິນລົງທຶນ ຢູ່ໃນວິສາຫະກິດໃນກຸ່ມ, ເງິນລົງທຶນໃນບໍລິສັດຮ່ວມທຶນ ແລະ ເງິນລົງທຶນໃນຕະຫຼາດຫຼັກຊັບ (ເຫຼືອມີ)

**ເບື້ອງໜີ້ຈິດ:** ຈຳນວນເງິນຕ້ອງຖອກເພີ່ມເຂົ້າເງິນລົງທຶນ.
**ເບື້ອງມີຈິດ:** ຈຳນວນເງິນທີ່ຊຳລະ
**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນຍັງເຫຼືອ ຕ້ອງຖອກຕື່ມ.

1419 ໃຊ້ເພື່ອບັນທຶກຈຳນວນເງິນແຮຄ່າເສື່ອມມູນຄ່າຂອງເງິນລົງທຶນໃນວິສາຫະກິດໃນກຸ່ມ, ເງິນລົງທຶນໃນບໍລິສັດຮ່ວມທຶນ ແລະ ຫຼັກຊັບໃນກິດຈະການຄຸ້ມຄອງຫຼັກຊັບ

ເບື້ອງມີ**ຈິດ**: ຈຳນວນເງິນແຮຄິດໄລ່ຫັກແຮໄວ້ໃນກໍລະນີມູນຄ່ານຳໃຊ້ຕ່ຳກວ່າມູນຄ່າຕົ້ນທຶນ
ເບື້ອງໜີ້**ຈິດ**: ຈຳນວນເງິນເກັບຄືນເງິນແຮ
ຍອດເຫຼືອມີ: ສະແດງເຖິງຈຳນວນເງິນແຮຕົວຈິງ ທີ່ໄດ້ຫັກແຮໄວ້ ໂດຍອີງຕາມການຕີມູນຄ່າຫຼັກຊັບໃນມື້ປິດສະຫຼຸບບັນຊີ

ບັນຊີ 142 ທຶນປະກອບໃຫ້ສາຂາຢູ່ຕ່າງປະເທດ ໃຊ້ເພື່ອບັນທຶກຈຳນວນເງິນໃຫ້ສາຂາຢູ່ຕ່າງປະເທດ. ຖ້າວ່າເງິນປະກອບໃຫ້ສາຂາ ເປັນເງິນກີບຕ້ອງໄດ້ບັນທຶກ ຈຳນວນເງິນຜິດດ່ຽງທີ່ເກີດຈາກການປ່ຽນແປງເງິນກີບ ຢູ່ໃນລາຍການບັນຊີຂອງສຳນັກງານໃຫ່ຍ.

142 ທຶນປະກອບໃຫ້ສາຂາຢູ່ຕ່າງປະເທດ

1421 ທຶນປະກອບ

1422 ສ່ວນຜິດດ່ຽງຈາກການຕີມູນຄ່າ

ບັນຊີ 1421 ໃຊ້ເພື່ອບັນທຶກຈຳນວນເງິນ ທີ່ໄດ້ໂອນໄປ ເພື່ອປະກອບໃຫ້ ສາຂາຢູ່ຕ່າງປະເທດ.

ບັນຊີ 1422 ໃຊ້ເພື່ອບັນທຶກລາຍການຢູ່ໃນບັນຊີຂອງສຳນັກງານໃຫຍ່ຈຳນວນເງິນຜິດດ່ຽງທີ່ເກີດຈາກ ການແລກປ່ຽນເປັນເງິນກີບ ກ່ຽວກັບເງິນປະກອບໃຫ້ສາຂາຢູ່ຕ່າງປະເທດ ຖ້າວ່າເງິນປະກອບດັ່ງກ່າວໄດ້ປະກອບໃຫ້ສາຂາເປັນເງິນກີບ.

**ເບື້ອງໜີ້ຈິດ:** ຈຳນວນເງິນທີ່ໄດ້ປະກອບໃຫ້ສາຂາຢູ່ຕ່າງປະເທດຈຳນວນເງິນ ຜິດດ່ຽງ ທີ່ເກີດຈາກ ການຕີມູນຄ່າເງິນປະກອບໃຫ້ສາຂາຢູ່ຕ່າງປະເທດ

**ເບື້ອງມີຈິດ:** ຈຳນວນເງິນທີ່ໄດ້ຖອນຄືນຈາກການປະກອບໃຫ້ສາຂາຢູ່ຕ່າງປະເທດ ຈຳນວນເງິນຫຼຸດຜ່ອນຜິດດ່ຽງທີ່ເກີດຈາກການຕີມູນຄ່າເງິນປະກອບໃຫ້ສາຂາ ຢູ່ຕ່າງປະເທດ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນຍັງເຫຼືອຂອງຈຳນວນເງິນທີ່ໄດ້ປະກອບໃຫ້ສາຂາຢູ່ຕ່າງປະເທດ ຈຳນວນເງິນຜິດດ່ຽງຈາກການຕີມູນຄ່າເງິນ ປະກອບໃຫ້ສາຂາຢູ່ຕ່າງປະເທດ

143 ຊັບສິນບັດຄົງທີ່ພວມຊື້ ແລະ ພວມກໍ່ສ້າງ

1431 ຊັບສິນບັດຄົງທີ່ບໍ່ມີຕົວຕົນ

1432 ຊັບສິນບັດຄົງທີ່ມີຕົວຕົນ

1439 ເງິນແຮຄ່າເສື່ອມມູນຄ່າຊັບສິນບັດຄົງທີ່ພວມຊື້ ຫຼື ພວມກໍ່ສ້າງ

14391 ເງິນແຮຄ່າເສື່ອມມູນຄ່າຊັບສິນບັດຄົງທີ່ບໍ່ມີຕົວຕົນ

14392 ເງິນແຮຄ່າເສື່ອມມູນຄ່າຊັບສິນບັດຄົງທີ່ມີຕົວຕົນ

ບັນຊີ 143 ຊັບສິນບັດຄົງທີ່ໃນການທຸລະກິດ ໃຊ້ເພື່ອບັນທຶກຕິດຕາມຊັບສິນບັດຄົງທີ່ພວມຊື້ ຫຼື ພວມກໍ່ສ້າງ ມີຕົວຕົນ ແລະ ບໍ່ມີຕົວຕົນ.

ບັນຊີ 1431,1432 ໃຊ້ເພື່ອບັນທຶກຈຳນວນເງິນ ທີ່ໄດ້ຈ່າຍລ່ວງໜ້າ ຫຼື ຈ່າຍກ່ອນສ່ວນໃດສ່ວນໜຶ່ງກ່ຽວກັບຊັບສິນບັດຄົງທີ່ບໍ່ມີຕົວຕົນ ຫຼື ມີຕົວຕົນກ່ອນທີ່ຈະຈົດເຂົ້າເປັນຕົ້ນທຶນ ຊັບສິນບັດຄົງທີ່ນຳໃຊ້ເຂົ້າໃນທຸລະກິດ. ລາຍການດັ່ງກ່າວປະກອບດ້ວຍ: ລາຍການຊື້ຊັບສິນບັດ, ພາສີ, ຄ່າຂົນສົ່ງ, ຄ່າຕິດຕັ້ງ ແລະ ທົດລອງ, ຄ່າປະກອບເຄື່ອງຈັກ.

**<u>ຊັບສິນບັດຄົງທີ່ບໍ່ມີຕົວຕົນ</u>**: ແມ່ນຊັບສິນບັດຄົງທີ່ ທີ່ເປັນກຳມະສິດຂອງທະນາຄານເຊັ່ນ: ສິດນຳໃຊ້ທີ່ດິນ, ສິດໃນການເຊົ່າ, ຊຸດຄຳສັ່ງຄອມພິວເຕີ, ລິຂະສິດ, ຄ່າໃຊ້ຈ່າຍສ້າງຕັ້ງ.

**<u>ຊັບສິນບັດຄົງທີ່ ມີຕົວຕົນ</u>**: ແມ່ນຊັບສິນບັດຄົງທີ່ລວມຂອງທະນາຄານ ທີ່ມີອາຍຸການໃຊ້ງານເກີນກ່ວາ 1 ປີຂຶ້ນໄປ ແລະ ມີມູນຄ່າຕົ້ນທຶນສູງ ເຊັ່ນ: ຕຶກອາຄານ, ຍານພາຫະນະ, ວັດຖຸອຸປະກອນ, ເຄື່ອງໃຊ້ສຳນັກງານ,ສິ່ງຈັດວາງ, ຕູ້ນິລະໄພ.

**ເບື້ອງໜີ້ຈິດ:** ຈຳນວນເງິນທີ່ໄດ້ຈ່າຍກ່ອນສ່ວນໃດ ສ່ວນໜຶ່ງ ກ່ຽວກັບການຈະໄດ້ຊັບສິນບັດສຳເລັດຮູບເພື່ອນຳໃຊ້ ເຂົ້າໃນທຸລະກິດ

**ເບື້ອງມີຈິດ:** ຈຳນວນເງິນທີ່ໂອນໄປເປັນຊັບສິນບັດຄົງທີ່ ນຳໃຊ້ເຂົ້າໃນທຸລະກິດ.

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນ ທີ່ໄດ້ຈ່າຍກ່ອນສ່ວນໜຶ່ງ ກ່ອນຈະໄດ້ຊັບສິນ ບັດສຳເລັດຮູບນຳໃຊ້ເຂົ້າໃນທຸລະກິດ.

ບັນຊີ 1439 ເງິນແຮຄ່າເສື່ອມມູນຄ່າຊັບສິນບັດຄົງທີ່ພວມຊື້ ຫຼື ພວມກໍ່ສ້າງ ໃຊ້ເພື່ອບັນທຶກຈຳນວນເງິນແຮທີ່ເກີດຈາກການປະເມີນມູນຄ່າການກໍ່ສ້າງທີ່ພວມດຳເນີນງານ ແຕ່ມີລັກສະນະຍາວນານ.

**ເບື້ອງມີຈິດ:** ຈຳນວນເງິນແຮຄ່າເສື່ອມມູນຄ່າຂອງຊັບສິນບັດຄົງທີ່ພວມຊື້ ຫຼື ພວມກໍ່ສ້າງ

**ເບື້ອງໜີ້ຈິດ:** ຈຳນວນເງິນເກັບຄືນເງິນແຮຄ່າເສື່ອມມູນຄ່າຂອງຊັບສິນບັດຄົງທີ່ພວມຊື້ ຫຼື ພວມກໍ່ສ້າງ

**ຍອດເຫຼືອ ມີ:** ສະແດງເຖິງຈຳນວນເງິນແຮທີ່ໄດ້ສຳຮອງໄວ້

144 ຊັບສິນບັດຄົງທີ່ໃນການທຸລະກິດ
- 1441 ຊັບສິນບັດຄົງທີ່ ບໍ່ມີຕົວຕົນ
  - 14411 ຊັບສິນທາງການຄ້າ
    - 144111 ສິດໃນການເຊົ່າ
    - 144118 ອື່ນໆ
  - 14412 ຄ່າໃຊ້ຈ່າຍໃນການສ້າງຕັ້ງ
  - 14413 ສິດນຳໃຊ້ທີ່ດິນ
  - 14418 ຊັບສິນບັດຄົງທີ່ບໍ່ມີຕົວຕົນອື່ນໆ
    - 144181 Software
    - 144188 ອື່ນໆ
- 1442 ຊັບສິນບັດຄົງທີ່ ມີຕົວຕົນ
  - 14422 ສິ່ງປຸກສ້າງ
  - 14424 ພາຫະນະຂົນສົ່ງ
  - 14425 ສິ່ງຈັດວາງ ແລະ ສິ່ງຕິດຕັ້ງໃນສິ່ງປຸກສ້າງ
  - 14426 ເຄື່ອງຈັກຮັບໃຊ້ຫ້ອງການ
  - 14427 ເຄື່ອງໃຊ້ສຳນັກງານ

14428 ອື່ນໆ

1449 ເງິນແຮຄ່າເສື່ອມມູນຄ່າ (ເວລາກວດນັບທ້າຍປີ)

14491 ເງິນແຮຄ່າເສື່ອມມູນຄ້າຊັບສິນບັດຄົງທີ່ ບໍ່ມີຕົວຕົນ

14492 ເງິນແຮຄ່າເສື່ອມມູນຄ້າຊັບສິນບັດຄົງທີ່ ມີຕົວຕົນ

ບັນຊີ 144 ໃຊ້ເພື່ອບັນທຶກຕິດຕາມຊັບສິນບັດຄົງທີ່ ໃນການທຸລະກິດ ມີຕົວຕົນ ແລະ ບໍ່ມີຕົວຕົນ **ຊັບສິນບັດຄົງທີ່ໃນການທຸລະກິດ** ແມ່ນຊັບສິນບັດຄົງທີ່ໃນກຳມະສິດຂອງທະນາຄານ ນຳໃຊ້ໂດຍກົງເຂົ້າໃນທຸລະກິດເຊັ່ນ: ຕຶກອາຄານ ຫ້ອງການ, ສຳນັກງານ ສາຂາ, ບ່ອນບໍລິການ, ສິ່ງຕິດຕັ້ງ, ສິ່ງຈັດວາງ, ເຄື່ອງຈັກຮັບໃຊ້ຫ້ອງການ, ເຄື່ອງໃຊ້ສຳນັກງານ, ຍານພາຫະນະ ຮັບໃຊ້ລວມໃນກຸ່ມທຸລະກິດ ແລະ ອື່ນໆ.....

ຊັບສິນບັດຄົງທີ່ໃນການທຸລະກິດ ແຍກອອກເປັນ ຊັບສິນບັດຄົງທີ່ ບໍ່ມີຕົວຕົນ ແລະ ຊັບສິນບັດຄົງທີ່ ມີຕົວຕົນ.

ບັນຊີ 1441 ໃຊ້ເພື່ອບັນທຶກມູນຄ່າຂອງຊັບສິນບັດຄົງທີ່ ບໍ່ມີຕົວຕົນ ນຳໃຊ້ເຂົ້າໃນທຸລະກິດ ຊຶ່ງໂອນມາຈາກ ຊັນຊີ 1431 ທັງໝົດ.

ບັນຊີ 1442 ໃຊ້ເພື່ອບັນທຶກຈຳນວນເງິນມູນຄ່າຕົ້ນທຶນ ຊັບສິນບັດຄົງທີ່ ມີຕົວຕົນ ນຳໃຊ້ເຂົ້າໃນທຸລະກິດ ຊຶ່ງໂອນມາຈາກບັນຊີ 1432 ທັງໝົດ.

**ເບື້ອງໜີ້ຈິດ** : ຈຳນວນເງິນມູນຄ່າຕົ້ນທຶນຊັບສິນບັດຄົງທີ່ ບໍ່ມີຕົວຕົນ ທີ່ໄດ້ຮັບເຂົ້າເພື່ອນຳໃຊ້ເຂົ້າໃນທຸລະກິດ

**ເບື້ອງມີຈິດ**: ຈຳນວນເງິນມູນຄ່າຊັບສິນບັດຄົງທີ່ ບໍ່ມີຕົວຕົນ ແລະ ມີຕົວຕົນ ທີ່ໄດ້ໂອນອອກຈາກການນຳໃຊ້ຊັບສິນບັດທີ່ມີຢູ່ ດ້ວຍການຂາຍນະໂຍບາຍ ຫຼື ມອບໃຫ້ແກ່ພາກສ່ວນອື່ນ

**ຍອດເຫຼືອໜີ້**: ສະແດງເຖິງຈຳນວນເງິນມູນຄ່າຊັບສິນບັດຄົງທີ່ ບໍ່ມີຕົວຕົນ ແລະ ມີຕົວຕົນທັງໝົດນຳໃຊ້ໃນທຸລະກິດ

ບັນຊີ 1449 ເງິນແຮຄ່າເສື່ອມມູນຄ່າ (ເວລາກວດນັບທ້າຍປີ) ໃຊ້ເພື່ອບັນທຶກຕິດຕາມເງິນແຮຄ່າເສື່ອມມູນຄ່າຂອງຊັບສິນບັດຄົງທີ່ ໃນການທຸລະກິດ ທີ່ທະນາຄານໄດ້ປະເມີນ ແລະ ຕີມູນຄ່າໃນເວລາກວດນັບທ້າຍປີ.

**ເບື້ອງມີຈິດ**: ຈຳນວນເງິນແຮຫັກຄ່າເສື່ອມມູນຄ່າຂອງຊັບສິນບັດຄົງທີ່ ໃນການທຸລະກິດ

**ເບື້ອງໜີ້ຈິດ**: ຈຳນວນມູນຄ່າເກັບຄືນເງິນແຮ ຄ່າເສື່ອມມູນຄ່າ

**ຍອດເຫຼືອມີ**: ສະແດງເຖິງຈຳນວນເງິນແຮຄ່າເສື່ອມມູນຄ່າຂອງຊັບສິນບັດຄົງທີ່ທີ່ໄດ້ຫັກສຳຮອງໄວ້ເງິນເກັບຄືນຄ່າເສື່ອມມູນຄ່າໃນການທຸລະກິດ

ບັນຊີ 145 ໃຊ້ເພື່ອບັນທຶກຕິດຕາມຊັບສິນບັດຄົງທີ່ ນອກການທຸລະກິດ ມີຕົວຕົນ ແລະ ບໍ່ມີຕົວຕົນ.

**<u>ຊັບສິນບັດຄົງທີ່ນອກການທຸລະກິດ</u>** ແມ່ນຊັບສິນບັດຄົງທີ່ ທຸກປະເພດ ທີ່ທະນາຄານເປັນເຈົ້າກຳມະສິດແຕ່ບໍ່ໄດ້ນຳໃຊ້ ໂດຍກົງ ເຂົ້າໃນທຸລະກິດ.

**<u>ຕົວຢ່າງ</u>**: ເຮືອນພະນັກງານ, ເຮືອນລ້ຽງເດັກ ແລະ ຊັບສິນບັດອື່ນ ລວມທັງສັງຫາລິມະຊັບ ແລະ ອະສັງຫາລິມມະຊັບທີ່ ທະນາຄານໄດ້ມາເປັນກຳມະສິດ ຈາກການມອບຊັບສິນ ຂອງບາງລູກຄ້າທີ່ບໍ່ສາມາດຊຳລະໜີ້ເງິນກູ້ໃຫ້ແກ່ທະນາຄານ.

145 ຊັບສິນບັດຄົງທີ່ນອກການທຸລະກິດ
- 1451 ຊັບສິນບັດຄົງທີ່ ບໍ່ມີຕົວຕົນ
  - 14511 ສິດນຳໃຊ້ທີ່ດິນ
  - 14518 ອື່ນໆ
- 1452 ຊັບສິນບັດຄົງທີ່ ມີຕົວຕົນ
  - 14522 ສິ່ງປຸກສ້າງ
  - 14524 ພາຫະນະຂົນສົ່ງ
  - 14525 ສິ່ງຈັດວາງ ແລະ ສິ່ງຕິດຕັ້ງໃນສິ່ງປຸກສ້າງ
  - 14526 ເຄື່ອງຈັກຮັບໃຊ້ຫ້ອງການ
  - 14527 ເຄື່ອງໃຊ້ສຳນັກງານ
  - 14528 ອື່ນໆ
- 1459 ຄ່າເສື່ອມມູນຄ່າ ຊັບສິນບັດຄົງທີ່ ນອກການທຸລະກິດ
  - 14591 ຊັບສິນບັດຄົງທີ່ ບໍ່ມີຕົວຕົນ
  - 14592 ຊັບສິນບັດຄົງທີ່ ມີຕົວຕົນ

ບັນຊີ 1451, 1452, ໃຊ້ເພື່ອບັນທຶກຈຳນວນເງິນມູນຄ່າຕົ້ນທຶນຊັບສິນບັດຄົງທີ່ ນອກການທຸລະກິດມີຕົວຕົນ ແລະ ບໍ່ມີຕົວຕົນ, ທີ່ໄດ້ຈັດເຂົ້າເປັນຊັບສິນລວມຂອງທະນາຄານ.

**ເບື້ອງໜີ້ຈັດ:** ຈຳນວນເງິນມູນຄ່າຊັບສິນບັດຄົງທີ່ ນອກການທຸລະກິດ ມີຕົວຕົນ ແລະ ບໍ່ມີຕົວຕົນ

**ເບື້ອງມີຈັດ:** ຈຳນວນເງິນມູນຄ່າຊັບສິນບັດຄົງທີ່ ນອກການທຸລະກິດ ທີ່ໄດ້ໂອນອອກຈາກກຳມະສິດຂອງທະນາຄານ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນມູນຄ່າຂອງຊັບສິນບັດຄົງທີ່ນອກການທຸລະກິດ

ບັນຊີ 1459 ຈຳນວນເງິນແຮຄ່າເສື່ອມມູນຄ່າຂອງຊັບສິນບັດຄົງທີ່ ມີຕົວຕົນ ແລະ ບໍ່ມີຕົວຕົນ ນອກການ ທຸລະກິດ.

**ເບື້ອງມີຈັດ:** ຈຳນວນເງິນແຮຄ່າເສື່ອມມູນຄ່າຊັບສິນບັດຄົງທີ່ ນອກການທຸລະທີ່ໄດ້ຄິດໄລ່ ຫັກແຮໄວ້

**ເບື້ອງໜີ້ຈັດ:** ຈຳນວນເງິນເກັບຄືນເງິນແຮຄ່າເສື່ອມມູນຄ່າຂອງຊັບສິນບັດຄົງທີ່ນອກການທຸລະກິດ

**ຍອດເຫຼືອມີ:** ຈຳນວນເງິນແຮຄ່າເສື່ອມມູນຄ່າຂອງຊັບສິນບັດ ທີ່ໄດ້ຄິດໄລ່ສຳຮອງໄວ້

**ບັນຊີ 146** ສິນເຊື່ອເຊົ່າ-ຊື້ ແລະ ກິດຈະກຳປະເພດດຽວກັນ

**ການເຄື່ອນໄຫວເຊົ່າ-ຊື້** ແມ່ນພາຫະນະປະກອບທຶນປະເພດໜຶ່ງ ທີ່ທະນາຄານຜູ້ເຄື່ອນໄຫວປະເພດນີ້ ມີຈຸດປະສົງໃຫ້ສະຖາບັນການເງິນ ຫຼື ລູກຄ້າ ຜູ້ເຊົ່າ ໄດ້ນຳໃຊ້ຊັບສິນບັດໃດໜຶ່ງ ໃນຊ່ວງເວລາໃດໜຶ່ງ ໃນລາຄາຕາມຄ່າເຊົ່າທີ່ໄດ້ຮັບ. ທະນາຄານຜູ້ເຄື່ອນໄຫວເຊົ່າ-ຊື້ ຈະເປັນຜູ້ຊື້ຊັບສິນບັດມາ ສຳລັບພາກສ່ວນອື່ນ. ສິ່ງດຽວ ທີ່ຕົນຕ້ອງການຄື ຄ່າເຊົ່າ ແລະ ກໍ່ໃຫ້ສິດເລືອກຊື້ໄດ້ແກ່ຜູ້ເຊົ່າ ພາຍຫຼັງສິ້ນສຸດສັນຍາເຊົ່າ ຕາມລາຄາທີ່ໄດ້ ຕົກລົງກັນໄວ້. ຜົນດີສຳລັບທະນາຄານຜູ້ເຄື່ອນໄຫວເຊົ່າ-ຊື້ ຄືທະນາຄານຕົນຍັງເປັນເຈົ້າກຳມະສິດຂອງ ຊັບສິນບັດນັ້ນຢູ່, ຖ້າຊັບສິນບັດຫາກເປ່ເພ, ຜູ້ເຊົ່າຈະຕ້ອງຮັບປະກັນສ້ອມແປງ ແລະ ບຳລຸງຮັກສາ ການເຄື່ອນໄຫວເຊົ່າ-ຊື້ ແມ່ນລາຍການເຄື່ອນໄຫວທຸລະກິດປະເພດໜຶ່ງ ກ່ຽວກັບການໄດ້ຮັບຄຳໝັ້ນສັນຍາໄລຍະຍາວ ຊຶ່ງທະນາຄານມີຜົນປະໂຫຍດຕ້ອງໄດ້ຮັບຄ່າເຊົ່າເປັນເວລາຍາວ. ດັ່ງນັ້ນ, ໃນທາງບັນຊີ ທະນາຄານຕ້ອງ ໄດ້ເອົາຊັບສິນບັດທີ່ໄດ້ໃຫ້ເຊົ່າ-ຊື້ ອອກຈາກບັນຊີຊັບສິນບັດຂອງຕົນ ໄປເປັນຊັບສິນບັດທີ່ເອົາໃຫ້ເຊົ່າ-ຊື້.

146 ສິນເຊື່ອເຊົ່າ-ຊື້ ແລະ ກິດຈະກຳປະເພດດຽວກັນ

- 1461 ຊັບສິນບັດຄົງທີ່ ທີ່ໄດ້ໃຫ້ເຊົ່າ-ຊື້
  - 14611 ສັງຫາລິມະຊັບ (ສາມາດເຄື່ອນຍ້າຍໄດ້)
  - 14612 ອະສັງຫາລິມະຊັບ
  - 14613 ຊັບສິນບໍ່ມີຕົວຕົນ (ເຊົ່າລິຂະສິດ)
- 1462 ຊັບສິນບັດຄົງທີ່ ທີ່ໃຫ້ເຊົ່າ-ຊື້ ພວມຊື້ ຫຼື ພວມກໍ່ສ້າງ
  - 14621 ສັງຫາລິມະຊັບ
  - 14622 ອະສັງຫາລິມະຊັບ
  - 14623 ບໍ່ມີຕົວຕົນ
- 1463 ຊັບສິນບັດຄົງທີ່ ບໍ່ໄດ້ໃຫ້ເຊົ່າພາຍຫຼັງລົບລ້າງສັນຍາ
- 1467 ເງິນຄ່າງວດຄ້າງຮັບ
  - 14671 ຈາກສັງຫາລິມະຊັບ
  - 14672 ຈາກອະສັງຫາລິມະຊັບ
  - 14673 ຈາກຊັບສິນບໍ່ມີຕົວຕົນ
- 1468 ຄ່າຫຼຸ້ຍຫ້ຽນສະສົມ ຂອງຊັບສິນບັດຄົງທີ່ໃຫ້ເຊົ່າ-ຊື້
  - 14681 ຄ່າຫຼຸ້ຍຫ້ຽນສະສົມ ຂອງຊັບສິນບັດຄົງທີ່ໃຫ້ເຊົ່າ-ຊື້
    - 146811 ຂອງສັງຫາລິມະຊັບ
    - 146812 ຂອງອະສັງຫາລິມະຊັບ
    - 146813 ຂອງຊັບສິນບໍ່ມີຕົວຕົນ
  - 14683 ຄ່າຫຼຸ້ຍຫ້ຽນສະສົມ ຂອງ ຊຄທ ຄົງທີ່ບໍ່ໄດ້ໃຫ້ເຊົ່າພາຍຫຼັງລົບລ້າງສັນຍາ
- 1469 ເງິນແຮຄ່າເສື່ອມ
  - 14691 ຂອງຊັບສິນບັດຄົງທີ່ ໃຫ້ເຊົ່າ-ຊື້
    - 146911 ສັງຫາລິມະຊັບ

146912 ອະສັງຫາລິມະຊັບ

146913 ບໍ່ມີຕົວຕົນ

14692 ຂອງຊັບສິນບັດຄົງທີ່ ໃຫ້ເຊົ່າ-ຊື້ ທີ່ພວມຊື້ ຫຼື ພວມກໍ່ສ້າງ

14693 ຂອງຊັບສິນບັດຄົງທີ່ບໍ່ໄດ້ໃຫ້ເຊົ່າ ພາຍຫຼັງລົບລ້າງສັນຍາ

ບັນຊີ 14611, 14612, 14613 ໃຊ້ເພື່ອບັນທຶກຈຳນວນເງິນມູນຄ່າໄດ້ມາຂອງຊັບສິນບັດສັງຫາລິມມະຊັບ ແລະ ອະສັງຫາລິມະຊັບ ລວມທັງຊັບສິນບໍ່ມີຕົວຕົນ (ລິຂະສິດ, ໃບຢັ້ງຢືນ...) ທີ່ໄດ້ເອົາໃຫ້ເຊົ່າ-ຊື້ ແກ່ສະຖາບັນການເງິນອື່ນ ແລະ ລູກຄ້າໂດຍໃຫ້ສິດເລືອກຊື້ໄດ້.

**ເບື້ອງໜີ້ຈິດ:** ຈຳນວນເງິນມູນຄ່າໄດ້ມາຂອງຊັບສິນບັດທີ່ໄດ້ເອົາໃຫ້ເຊົ່າ-ຊື້ໃຫ້ແກ່ສະຖາບັນການເງິນ ແລະ ລູກຄ້າ

**ເບື້ອງມີຈິດ:** ຈຳນວນຊັບສິນບັດຮັບຄືນຈາກການເຊົ່າ-ຊື້ ຫຼື ຂາຍໃຫ້ຜູ້ເຊົ່າຕາມສັນຍາ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນຍອດເຫຼືອຂອງຊັບສິນຄົງທີ່ ເຊົ່າ-ຊື້

ບັນຊີ 14621, 14622, 14623 ໃຊ້ເພື່ອບັນທຶກຈຳນວນເງິນມູນຄ່າໄດ້ມາຂອງຊັບສິນບັດສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ແລະ ຊັບສິນບໍ່ມີຕົວຕົນ ທີ່ໄດ້ຈ່າຍລ່ວງໜ້າແກ່ເຈົ້າຂອງຊັບສິນບັດເຫຼົ່ານັ້ນ (ພວມຊື້ ຫຼື ພວມກໍ່ສ້າງ ຫຼື ກຳລັງເຄື່ອນຍ້າຍໃຫ້ຜູ້ນຳໃຊ້ ແຕ່ຍັງບໍ່ທັນເຖິງ ໄລຍະຂອງການໃຫ້ເຊົ່າ-ຊື້ເທື່ອ (ໄລຍະກຽມໃຫ້ເຊົ່າ-ຊື້).

**ເບື້ອງໜີ້ຈິດ:** ຈຳນວນເງິນມູນຄ່າຂອງຊັບສິນບັດທີ່ໄດຈ່າຍລ່ວງໜ້າກ່ອນເຖິງວັນເຊົ່າ-ຊື້

**ເບື້ອງມີຈິດ:** ຈຳນວນເງິນທີ່ໄດ້ໂອນມາເປັນຊັບສິນບັດຄົງທີ່ເຊົ່າ-ຊື້

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນຍອດເຫຼືອຂອງຊັບສິນຄົງທີ່ ເຊົ່າ-ຊື້

ບັນຊີ 1463 ໃຊ້ເພື່ອບັນທຶກຈຳນວນເງິນຕາມມູນຄ່າຍັງເຫຼືອ ຂອງຊັບສິນບັດ ພາຍຫຼັງສິ້ນສຸດສັນຍາເຊົ່າ-ຊື້.

**ເບື້ອງໜີ້ຈິດ:** ຈຳນວນມູນຄ່າຂອງຊັບສິນບັດຄົງທີ່ເຊົ່າ-ຊື້ ພາຍຫຼັງສິ້ນສຸດສັນຍາ

**ເບື້ອງມີຈິດ:** ຈຳນວນມູນຄ່າຊຳລະສະສາງມູນຄ່າເຊົ່າ-ຊື້ ຫຼືໂອນໄປບັນຊີອື່ນ

**ຍອດເຫຼືອໜີ້:** ສະແດງເຖິງມູນຄ່າຍັງເຫຼືອຂອງຊັບສິນບັດຄົງທີ່ເຊົ່າ-ຊື້

ບັນຊີ 1467 ເງິນຄ່າງວດຄ້າງຮັບ ໃຊ້ເພື່ອບັນທຶກຈຳນວນເງິນຄ່າເຊົ່າທີ່ໄດ້ຖືກຄິດໄລ່(ຊຶ່ງລວມທັງຕົ້ນທຶນ ແລະ ດອກເບ້ຍ) ຫຼື ຈຳນວນ ເງິນພວມຮຽກເກັບສຳລັບເວລາຕ່ຳກວ່າ 3 ເດືອນລົງມາ.

**ເບື້ອງໜີ້ຈິດ:** ຈຳນວນເງິນຄ່າງວດຄ້າງຮັບຂອງຊັບສິນບັດຄົງທີ່ພາຍຫຼັງລົບລ້າງສັນຍາ

**ເບື້ອງມີຈິດ:** ຈຳນວນເງິນທີ່ໄດ້ຮັບການຊຳລະຄ່າງວດຄ້າງຮັບ ຫຼື ໂອນໄປເປັນໜີ້ເກີນກຳນົດ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນມູນຄ່າຍັງເຫຼືອທີ່ບໍ່ທັນໄດ້ຮັບການຊຳລະ

ບັນຊີ 1468, ໃຊ້ເພື່ອບັນທຶກຄ່າຫຼູ້ຍຫ້ຽນສະສົມຕາມອາຍຸການນຳໃຊ້ ຂອງຊັບສົມບັດຄົງທີ່ ທີ່ໄດ້ເອົາໃຫ້ເຊົ່າ-ຊື້.

**ເບື້ອງມີຈິດ:** ຈຳນວນຄ່າຫຼູ້ຍຫ້ຽນຂອງຊັບສົມບັດຄົງທີ່ ທີ່ໄດ້ເອົາໃຫ້ເຊົ່າ-ຊື້
**ເບື້ອງໜີ້ຈິດ:** ຈຳນວນເງິນໂອນໄປບັນຊີອື່ນ ຫຼື ລົບລ້າງອອກຈາກຊັບສົມບັດທີ່ໃຫ້ເຊົ່າ-ຊື້
**ຍອດເຫຼືອມີ:** ສະແດງເຖິງຈຳນວນເງິນມູນຄ່າ ຄ່າຫຼູ້ຍຫ້ຽນທີ່ໄດ້ຫັກສະສົມໄວ້

ບັນຊີ 1469 ໃຊ້ເພື່ອບັນທຶກເງິນແຮຄ່າເສື່ອມມູນຄ່າຂອງຊັບສົມບັດທີ່ໃຫ້ເຊົ່າ-ຊື້ ຖ້າວ່າມູນຄ່າຍັງເຫຼືອ ໃນບັນຊີສູງກວ່າ ລາຄາຕະຫຼາດ.

**ເບື້ອງມີຈິດ:** ຈຳນວນເງິນແຮຄ່າເສື່ອມມູນຄ່າຂອງຂອງຊັບສົມບັດຄົງທີ່ໃຫ້ເຊົ່າ-ຊື້
**ເບື້ອງໜີ້ຈິດ:** ເກັບຄືນເງິນແຮຄ່າເສື້ອມມູນຄ່າຂອງຊັບສົມບັດຄົງທີ່ໃຫ້ເຊົ່າ-ຊື້
**ຍອດເຫຼືອມີ:** ສະແດງເຖິງຍອດເຫຼືອຂອງຄ່າເສື່ອມມູນຄ່າຂອງຊັບສົມບັດຄົງທີ່ໃຫ້ເຊົ່າ-ຊື້

ບັນຊີ 147 ລາຍການເຄື່ອນໄຫວໃຫ້ເຊົ່າທຳມະດາ ໃຊ້ເພື່ອບັນທຶກປະເພດ ຊັບສົມບັດຄົງທີ່ ແລະລາຍການທີ່ກ່ຽວຂ້ອງ ໄດ້ຊື້ເຂົ້າມາເປັນກຳມະສິດ ໂດຍຊັບສິນດັ່ງກ່າວແມ່ນ ທະນາຄານບໍ່ໄດ້ໃຊ້ເອງທະນາຄານມີໄວ້ໃຫ້ລູກຄ້າເຊົ່າ ຜູ້ທີ່ເຊົ່າໄດ້ນຳໃຊ້ຊັບສົມບັດດັ່ງກ່າວໃນໄລຍະເວລາໃດໜຶ່ງ ທີ່ແນ່ນອນຕາມສັນຍາ ພາຍຫຼັງສິ້ນສຸດສັນຍາ ທະນາຄານຕ້ອງນຳເອົາຊັບສິນດັ່ງກ່າວກັບຄືນມາ ຫຼື ຈະເຮັດສັນຍາຕໍ່ກັບລູກຄ້າ. ດັ່ງນັ້ນທະນາຄານຈຶ່ງຈຳເປັນຕ້ອງເປັນຜູ້ຫັກຄ່າຫຼູ້ຍຫ້ຽນ ຄ່າເສື່ອມມູນຄ່າຂອງຊັບສົມບັດຄົງທີ່.

147 ລາຍການເຄື່ອນໄຫວໃຫ້ເຊົ່າທຳມະດາ
1471 ຊັບສົມບັດຄົງທີ່ ໃຫ້ເຊົ່າທຳມະດາ
1477 ຄ່າເຊົ່າຄ້າງຮັບ
1478 ຄ່າຫຼູ້ຍຫ້ຽນ
1479 ເງິນແຮຄ່າເສື່ອມມູນຄ່າ

ບັນຊີ 1471 ໃຊ້ເພື່ອບັນທຶກ ຈຳນວນມູນຄ່າຍັງເຫຼືອຂອງຊັບສົມບັດຄົງທີ່ໃຫ້ເຊົ່າທຳມະດາ.

**ເບື້ອງໜີ້ຈິດ:** ຈຳນວນມູນຄ່າຊັບສົມບັດຄົງທີ່ໃຫ້ເຊົ່າທຳມະດາ
**ເບື້ອງມີຈິດ:** ຈຳນວນເງິນທີ່ໄດ້ໂອນໄປບັນຊີອື່ນ
**ຍອດເຫຼືອໜີ້:** ສະແດງເຖິງຈຳນວນມູນຄ່າຍັງເຫຼືອຂອງຊັບສົມບັດຄົງທີ່ໃຫ້ເຊົ່າທຳມະດາ

ບັນຊີ 1477 ໃຊ້ເພື່ອບັນທຶກ ຈຳນວນລາຍຮັບກ່ຽວກັບຊັບສົມບັດຄົງທີ່ໃຫ້ເຊົ່າທຳມະດາທີ່ໄດ້ຈົດເຂົ້າລາຍຮັບແລ້ວ ແຕ່ຍັງບໍ່ທັນໄດ້ຮັບຊຳລະເທື່ອ.

**ເບື້ອງໜີ້ຈິດ:** ຈຳນວນເງິນຄ່າເຊົ່າຄ້າງຮັບ ທີ່ໄດ້ຄິດໄລ່ໄວ້
**ເບື້ອງມີຈິດ:** ຈຳນວນເງິນທີ່ຊຳລະ ຫຼື ໂອນໄປບັນຊີອື່ນ
**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນຄ່າເຊົ່າຄ້າງຮັບທີ່ຍັງບໍ່ທັນໄດ້ຮັບຊຳລະ

ບັນຊີ 1478 ໃຊ້ເພື່ອບັນທຶກຕິດຕາມ ຄ່າຫຼູ້ຍຫ້ຽນສະສົມຂອງ ຊັບສົມບັດຄົງທີ່ ໃຫ້ເຊົ່າທຳມະດາ.

**ເບື້ອງມີຈິດ:** ຈຳນວນເງິນຫັກຄ່າຫຼູ້ຍຫ້ຽນຊັບສົມບັດຄົງທີ່ໃຫ້ເຊົ່າທຳມະດາ ທີ່ໄດ້ຫັກສະສົມໄວ້ໃນແຕ່ລະເດືອນ ຕາມອາຍຸການຂອງຊັບສົມບັດຄົງທີ່ໃຫ້ເຊົ່າທຳມະດາ

**ເບື້ອງໜີ້ຈິດ:** ຈຳນວນເງິນຄ່າຫຼູ້ຍຫ້ຽນ ທີ່ໄດ້ໂອນອອກຈາກລາຍການບັນຊີ ຊັບສົມບັດໃຫ້ເຊົ່າທຳມະດາ

**ຍອດເຫຼືອມີ:** ສະແດງເຖິງຈຳນວນເງິນສະສົມທັງໝົດຂອງຄ່າຫຼູ້ຍຫ້ຽນຊັບສົມບັດຄົງທີ່ໃຫ້ເຊົ່າທຳມະດາ ທີ່ໄດ້ສະສົມໄວ້

ບັນຊີ 1479 ໃຊ້ເພື່ອບັນທຶກຕິດຕາມ ເງິນແຮຄ່າເສື່ອມມູນຄ່າ ຂອງຊັບສົມບັດຄົງທີ່ໃຫ້ເຊົ່າທຳມະດາ ຊຶ່ງໄດ້ຫັກແຮໄວ້ເພື່ອປ້ອງກັນຄວາມສ່ຽງ ໃນການສູນເສຍ.

**ເບື້ອງມີຈິດ:** ຈຳນວນເງິນແຮຫັກຄ່າເສື່ອມມູນຄ່າ ຊັບສົມບັດຄົງທີ່ໃຫ້ເຊົ່າທຳມະດາ

**ເບື້ອງໜີ້ຈິດ:** ຈຳນວນເງິນເກັບຄືນເງິນຫັກຄ່າເສື່ອມມູນຄ່າຊັບສົມບັດຄົງທີ່ໃຫ້ເຊົ່າທຳມະດາ ເມື່ອມີການ ສະສາງບັນຊີ

**ຍອດເຫຼືອມີ:** ຈຳນວນເງິນແຮຫັກຄ່າເສື່ອມມູນຄ່າຂອງຊັບສົມບັດຄົງທີ່ໃຫ້ເຊົ່າທຳມະດາ

148 ຄ່າຫຼູ້ຍຫ້ຽນສະສົມ ຂອງຊັບສົມບັດຄົງທີ່
- 1481 ຄ່າຫຼູ້ຍຫ້ຽນຂອງຊັບສົມບັດຄົງທີ່ໃນການທຸລະກິດ
  - 14811 ຊັບສົມບັດຄົງທີ່ບໍ່ມີຕົວຕົນ
    - 148111 ຊັບສິນທາງການຄ້າ
      - 1481111 ສິດໃນການເຊົ່າ
      - 1481118 ອື່ນໆ
    - 148112 ຄ່າໃຊ້ຈ່າຍສ້າງຕັ້ງ
    - 148118 ຊັບສົມບັດຄົງທີ່ບໍ່ມີຕົວຕົນອື່ນໆ
      - 1481181 Software
      - 1481188 ອື່ນໆ
  - 14812 ຊັບສົມບັດຄົງທີ່ ມີຕົວຕົນ
    - 148122 ສິ່ງປຸກສ້າງ
    - 148124 ພາຫະນະຂົນສົ່ງ
    - 148125 ສິ່ງຕິດຕັ້ງ ແລະ ສິ່ງຈັດວາງໃນສິ່ງປຸກສ້າງ
    - 148126 ເຄື່ອງຈັກຮັບໃຊ້ຫ້ອງການ
    - 148127 ເຄື່ອງໃຊ້ສຳນັກງານ
    - 148128 ອື່ນໆ
- 1482 ຄ່າຫຼູ້ຍຫ້ຽນສະສົມຊັບສົມບັດຄົງທີ່ນອກການທຸລະກິດ
  - 14821 ຊັບສົມບັດຄົງທີ່ນອກການທຸລະກິດ ບໍ່ມີຕົວຕົນ

148211 ຊັບສິນທາງການຄ້າ

1482111 ສິດໃນການເຊົ່າ

1482118 ອື່ນໆ

148212 ຄ່າໃຊ້ຈ່າຍສ້າງຕັ້ງ

148218 ຊັບສິນບັດຄົງທີ່ບໍ່ມີຕົວຕົນອື່ນໆ

1482181 Software

1482188 ອື່ນໆ

14822 ຊັບສິນບັດຄົງທີ່ນອກການທຸລະກິດ ມີຕົວຕົນ

148222 ສິ່ງປຸກສ້າງ

148224 ພາຫະນະຂົນສົ່ງ

148225 ສິ່ງຕິດຕັ້ງ ແລະ ສິ່ງຈັດວາງໃນສິ່ງປຸກສ້າງ

148226 ເຄື່ອງຮັບໃຊ້ຫ້ອງການ

148227 ເຄື່ອງໃຊ້ສຳນັກງານ

148228 ອື່ນໆ

ບັນຊີ 148 ຄ່າຫຼູ້ຍຫ້ຽນສະສົມ ຂອງຊັບສິນບັດຄົງທີ່ ໃຊ້ເພື່ອບັນທຶອຕິດຕາມຄ່າຫຼູ້ຍຫ້ຽນຊັບສິນບັດຄົງທີ່ໃນການທຸລະກິດ ແລະ ນອກການທຸລະກິດ ມີຕົວຕົນ ແລະ ບໍ່ມີຕົວຕົນ.

**ເບື້ອງມີຈິດ:** ຈຳນວນເງິນຫັກຄ່າຫຼູ້ຍຫ້ຽນຊັບສິນບັດຄົງທີ່ ມີຕົວຕົນ ແລະ ບໍ່ມີຕົວຕົນ ທັງໃນ ແລະ ນອກການທຸລະກິດ ທີ່ໄດ້ຫັກສະສົມໄວ້ເປັນແຕ່ລະເດືອນ ຕາມອາຍຸການນຳໃຊ້ຂອງຊັບສິນບັດຄົງທີ່ນັ້ນໆ

**ເບື້ອງໜີ້ຈິດ:** ຈຳນວນເງິນຄ່າຫຼູ້ຍຫ້ຽນ ທີ່ໄດ້ໂອນອອກຈາກລາຍການບັນຊີ ຊັບສິນບັດ ຂອງທະນາຄານ ດ້ວຍການຂາຍອອກ ຫຼື ມອບໃຫ້ແກ່ພາກສ່ວນອື່ນ

**ຍອດເຫຼືອມີ:** ສະແດງເຖິງຈຳນວນເງິນສະສົມທັງໝົດຂອງຄ່າຫຼູ້ຍຫ້ຽນຊັບສິນບັດຄົງທີ່ທີ່ໄດ້ສະສົມໄວ້

**ບັນຊີ 149** ໜີ້ຕ້ອງຮັບທວງຍາກ ໃຊ້ເພື່ອບັນທຶກຕິດຕາມໜີ້ຕ້ອງຮັບທວງຍາກ ທີ່ສະແດງເຖິງ:

- ຄວາມສ່ຽງທີ່ອາດເກີດຂຶ້ນໄດ້ ຫຼື ແນ່ນອນວ່າ ຈະເກັບຄືນບໍ່ໄດ້ທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ;
- ມີລັກສະນະເປັນຄະດີ ຫຼື ລົ້ມລະລາຍ;
- ຈະເກັບຄືນໄດ້ຕ້ອງຜ່ານການຮ້ອງຟ້ອງຄະດີເທົ່ານັ້ນ.

149 ໜີ້ຕ້ອງຮັບທວງຍາກ

1491 ໜີ້ຕ້ອງຮັບທວງຍາກ

14911 ເງິນໃຫ້ກູ້ຢືມສຳຮອງທວງຍາກ

149111 ຈາກສະຖາບັນການເງິນ

149112 ຈາກລູກຄ້າ

14912 ເງິນລົງທຶນໃນວິສາຫະກິດໃນກຸ່ມ, ເງິນລົງທຶນໃນບໍລິສັດຮ່ວມທຶນ ແລະ ຫຼັກຊັບໃນກິດຈະການຄຸ້ມຄອງຫຼັກຊັບ

149121 ເງິນລົງທຶນໃນວິສາຫະກິດໃນກຸ່ມ

149122 ເງິນລົງທຶນໃນບໍລິສັດຮ່ວມທຶນ

149123 ຫຼັກຊັບໃນກິດຈະການຄຸ້ມຄອງຫຼັກຊັບ

14916 ສິນເຊື່ອເຊົ່າ-ຊື້ ທວງຍາກ

14917 ຄ່າເຊົ່າທຳມະດາ

ບັນຊີ 1491 ໃຊ້ເພື່ອບັນທຶກໜີ້ທວງຍາກທີ່ກ່ຽວກັບເງິນໃຫ້ກູ້ຢືມສຳຮອງ ເງິນລົງທຶນໃນວິສາຫະກິດໃນກຸ່ມ ເງິນລົງທຶນໃນບໍລິສັດຮ່ວມທຶນ ແລະ ຫຼັກຊັບໃນກິດຈະການຄຸ້ມຄອງຫຼັກຊັບ.

- ຄວາມສ່ຽງທີ່ອາດເກີດຂື້ນໄດ້ ຫຼື ແນ່ນອນວ່າຈະເກັບຄືນບໍ່ໄດ້ທັງໝົດ ຫຼື ສ່ວນໃດ ສ່ວນໜຶ່ງ;
- ມີລັກສະນະເປັນຄະດີ ຫຼື ລົ້ມລະລາຍ;
- ຈະເກັບຄືນໄດ້ ຕ້ອງຜ່ານການຮ້ອງຟ້ອງຄະດີເທົ່ານັ້ນ.

**ເບື້ອງໜີ້ຈິດ:** ຈຳນວນເງິນໃຫ້ກູ້ຢືມສຳຮອງ, ເງິນລົງທຶນ ... ທີ່ໄດ້ໂອນມາຈາກລາຍການປົກກະຕິ

**ເບື້ອງມີຈິດ:** ຈຳນວນເງິນທີ່ໄດ້ຮັບຊຳລະ ຫຼື ທີ່ໄດ້ຕັດເປັນໜີ້ສູນ

**ຍອດເຫຼືອໜີ້:** ສະແດງເຖິງ ຍອດເຫຼືອຂອງໜີ້ທວງຍາກກ່ຽວກັບ ເງິນໃຫ້ກູ້ຢືມສຳຮອງ, ເງິນລົງທຶນ ...

1497 ດອກເບ້ຍເງິນໃຫ້ກູ້ຢືມສຳຮອງທວງຍາກ

14971 ດອກເບ້ຍຄ້າງຮັບທວງຍາກຈາກເງິນໃຫ້ກູ້ຢືມສຳຮອງ

149711 ຈາກສະຖາບັນການເງິນອື່ນ

149712 ຈາກລູກຄ້າ

14972 ດອກເບ້ຍຄ້າງຮັບຈາກເງິນລົງທຶນໃນວິສາຫະກິດໃນກຸ່ມ, ໃນບໍລິສັດຮ່ວມທຶນ ແລະ ຫຼັກຊັບໃນກິດຈະການຄຸ້ມຄອງຫຼັກຊັບທວງຍາກ

149721 ດອກເບ້ຍຄ້າງຮັບເງິນລົງທຶນໃນວິສາຫະກິດໃນກຸ່ມ

149722 ດອກເບ້ຍຄ້າງຮັບເງິນລົງທຶນໃນບໍລິສັດຮ່ວມທຶນ

149723 ດອກເບ້ຍຄ້າງຮັບເງິນລົງທຶນໃນຕະຫຼາດຫຼັກຊັບ

ບັນຊີ 1497 ໃຊ້ເພື່ອບັນທຶກ ຈຳນວນດອກເບ້ຍທວງຍາກເງິນໃຫ້ກູ້ຢືມສຳຮອງ... ທີ່ໄດ້ໂອນມາຈາກດອກເບ້ຍຄ້າງຮັບປົກກະຕິ ທີ່ໄດ້ຄິດໄລ່ໄວ້ເມື່ອປັບປຸງບັນຊີທ້າຍເດືອນ.

**ເບື້ອງໜີ້ຈິດ:** ຈຳນວນດອກເບ້ຍຄ້າງຮັບທວງຍາກທີ່ໄດ້ໂອນມາຈາກດອກເບ້ຍຄ້າງຮັບປົກກະຕິ

**ເບື້ອງມີຈິດ:** ຈຳນວນເງິນທີ່ຊຳລະ ຫຼື ໂອນໄປບັນຊີອື່ນ

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນດອກເບ້ຍຄ້າງຮັບທວງຍາກທີ່ຍັງບໍ່ທັນໄດ້ຮັບຊຳລະ

1499 ເງິນແຮຄ່າເສື່ອມມູນຄ່າໜີ້ຕ້ອງຮັບທວງຍາກ

14991 ຂອງເງິນໃຫ້ກູ້ຢືມສຳຮອງທວງຍາກ

149911 ຈາກສະຖາບັນການເງິນອື່ນ

149912 ຈາກລູກຄ້າ

14992 ຂອງເງິນລົງທຶນໃນວິສາຫະກິດໃນກຸ່ມ, ໃນບໍລິສັດຮ່ວມທຶນ ແລະ ຫຼັກຊັບໃນ

ກິດຈະການຄຸ້ມຄອງຫຼັກຊັບ.

149921 ເງິນລົງທຶນໃນວິສາຫະກິດໃນກຸ່ມ

149922 ເງິນລົງທຶນໃນບໍລິສັດຮ່ວມທຶນ

149923 ຫຼັກຊັບໃນກິດຈະການຄຸ້ມຄອງຫຼັກຊັບ

14996 ຂອງສິນເຊື່ອເຊົ່າ-ຊື້

14997 ຂອງການໃຫ້ເຊົ່າທຳມະດາ

ບັນຊີ 1499 ໃຊ້ເພື່ອບັນທຶກຈຳນວນເງິນແຮຄ່າເສື່ອມມູນຄ່າໜີ້ຕ້ອງຮັບທວງຍາກ ຊຶ່ງໄດ້ຫັກແຮໄວ້ ເພື່ອ ປ້ອງກັນຄວາມສ່ຽງ ໃນການສູນເສຍ.

**ເບື້ອງມີຈິດ:** ຈຳນວນເງິນແຮຄ່າເສື່ອມມູນຄ່າໜີ້ຕ້ອງຮັບທວງຍາກຂອງເງິນໃຫ້ກູ້ຢືມສຳຮອງ...

**ເບື້ອງໜີ້ຈິດ:** ຈຳນວນເງິນເກັບຄືນເງິນແຮຫັກຄ່າເສື່ອມມູນຄ່າ ຂອງໜີ້ທວງຍາກ

**ຍອດເຫຼືອມີ:** ຈຳນວນເງິນແຮຫັກຄ່າເສື່ອມມູນຄ່າຂອງໜີ້ທວງຍາກທີ່ໄດ້ສຳຮອງໄວ້ເພື່ອປ້ອງກັນໜີ້ສູນ

# ປະເພດ 2
# ໜີ້ສິນຂອງທະນາຄານ

- **ໝວດທີ1 ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ**

ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນປະກອບມີ:

- ໜີ້ຕ້ອງສົ່ງໃຫ້ທະນາຄານກາງ, ຄັງເງິນແຫ່ງຊາດ ແລະ ສະຖາບັນການເງິນ
- ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ
- ເງິນກູ້ຢືມຈາກທະນາຄານອື່ນ ໂດຍມີມູນຄ່າຫຼັກຊັບຄໍ້າປະກັນ
- ຈຳນວນເງິນອື່ນໆ ຕ້ອງຊຳລະໃຫ້ທະນາຄານອື່ນ

212 ໜີ້ຕ້ອງສົ່ງໃຫ້ທະນາຄານກາງ, ສະຖາບັນເງິນຝາກໄປສະນີລາວ, ຄັງເງິນແຫ່ງຊາດ ແລະ ກອງທຶນປົກປ້ອງຜູ້ຝາກເງິນ

2121 ເງິນຝາກຂອງສະຖາບັນເງິນຝາກໄປສະນີລາວ,ຄັງເງິນແຫ່ງຊາດ ແລະ ກອງທຶນປົກປ້ອງຜູ້ຝາກເງິນ

21212 ເງິນຝາກຂອງສະຖາບັນເງິນຝາກໄປສະນີລາວ

212121 ເງິນຝາກກະແສລາຍວັນ

212123 ເງິນຝາກປະຢັດ

212125 ເງິນຝາກມີກຳນົດ

2121251 ໜຶ່ງປີລົງມາ

2121252 ໜຶ່ງປີຂຶ້ນໄປ

21213 ເງິນຝາກຂອງຄັງເງິນແຫ່ງຊາດ

21214 ເງິນຝາກຂອງກອງທຶນປົກປ້ອງຜູ້ຝາກເງິນ

212141 ເງິນຝາກກະແສລາຍວັນ

212143 ເງິນຝາກປະຢັດ

212145 ເງິນຝາກມີກຳນົດ

2121451 ໜຶ່ງປີລົງມາ

2121452 ໜຶ່ງປີຂຶ້ນໄປ

2122 ເງິນກູ້ຢືມມາຈາກທະນາຄານກາງ ແລະ ຄັງເງິນແຫ່ງຊາດ

21221 ເງິນກູ້ຢືມມາຈາກທະນາຄານກາງ

212211 ເງິນກູ້ຢືມເປັນປະຈຳວັນ

212212 ເງິນກູ້ເບີກເກີນບັນຊີ

212215 ເງິນກູ້ຢືມມີກຳນົດ

2122151 ໜຶ່ງປີລົງມາ

2122152 ໜຶ່ງປີຂຶ້ນໄປ ແຕ່ບໍ່ເກີນຫ້າປີ

2122153 ເກີນຫ້າປີຂຶ້ນໄປ

21222 ເງິນກູ້ຢືມມາຈາກທະນາຄານກາງຕ່າງປະເທດ

212221 ເງິນກູ້ຢືມເປັນປະຈໍາວັນ

212222 ເງິນກູ້ເບີກເກີນບັນຊີ

212225 ເງິນກູ້ຢືມມີກໍານົດ

2122251 ໜຶ່ງປີລົງມາ

2122252 ໜຶ່ງປີຂຶ້ນໄປ ແຕ່ບໍ່ເກີນຫ້າປີ

2122253 ເກີນຫ້າປີຂຶ້ນໄປ

21223 ເງິນກູ້ຢືມມາຈາກຄັງເງິນແຫ່ງຊາດ

2127 ດອກເບ້ຍຄ້າງຈ່າຍ

21271 ດອກເບ້ຍເງິນຝາກຄ້າງຈ່າຍ

212712 ໃຫ້ສະຖາບັນເງິນຝາກໄປສະນີລາວ

212713 ໃຫ້ຄັງເງິນແຫ່ງຊາດ

212714 ໃຫ້ກອງທຶນປົກປ້ອງຜູ້ຝາກເງິນ

21272 ດອກເບ້ຍເງິນກູ້ຢືມມາຄ້າງຈ່າຍ

212721 ໃຫ້ທະນາຄານແຫ່ງ ສປປ ລາວ

212722 ໃຫ້ທະນາຄານກາງຕ່າງປະເທດ

212723 ໃຫ້ຄັງເງິນແຫ່ງຊາດ

ບັນຊີ 212121 ແລະ 212141 ບັນຊີເງິນຝາກກະແສລາຍວັນ ໃຊ້ເພື່ອຕິດຕາມເງິນຝາກກະແສລາຍວັນ ເປັນປະເພດເງິນຝາກທີ່ສາມາດຮັບຝາກ ແລະ ຖອນໄດ້ທຸກຍາມໂດຍບໍ່ມີການແຈ້ງໃຫ້ຊາບລ່ວງໜ້າ.

**ເບື້ອງ ມີຈິດ:** ຈໍານວນເງິນຮັບຝາກ ຫຼື ໂອນມາຈາກບັນຊີອື່ນ

**ເບື້ອງໜີ້ຈິດ:** ຈໍານວນເງິນຖອນອອກ ຫຼື ໂອນໄປບັນຊີອື່ນ

**ຍອດເຫຼືອມີ:** ສະແດງເຖິງຈໍານວນເງິນຂອງສະຖາບັນເງິນຝາກໄປສະນີລາວທີ່ຝາກໄວ້ນໍາທະນາຄານ

ບັນຊີ 212123 ແລະ 212143 ບັນຊີເງິນຝາກປະຢັດ ໃຊ້ເພື່ອບັນທຶກຕິດຕາມການຮັບຝາກ ແລະ ຖອນເງິນຝາກປະຢັດ, ເປັນປະເພດເງິນຝາກທີ່ຕ້ອງຈ່າຍ ດອກເບ້ຍເຊິ່ງທະນາຄານທຸລະກິດຈະຄິດໄລ່ດອກເບ້ຍໃຫ້ ສອງຄັ້ງຕໍ່ປີ.

**ເບື້ອງ ມີຈິດ:** ຈໍານວນເງິນຮັບຝາກ ຫຼື ໂອນມາຈາກບັນຊີອື່ນ

**ເບື້ອງໜີ້ຈິດ:** ຈໍານວນເງິນຖອນອອກ ຫຼື ໂອນໄປບັນຊີອື່ນ

**ຍອດເຫຼືອມີ:** ສະແດງເຖິງຈໍານວນເງິນເຫຼືອຝາກໄວ້ນໍາທະນາຄານ

ບັນຊີ 212125 ເງິນຝາກມີກຳນົດ ໃຊ້ເພື່ອບັນທຶກຕິດຕາມການຮັບຝາກ ແລະ ຖອນເງິນຝາກທີ່ມີກຳນົດເວລາໜຶ່ງປີລົງມາ ແລະ ເກີນໜຶ່ງປີຂຶ້ນໄປ. ເງິນຝາກປະເພດນີ້ ຈະໃຊ້ບັດເງິນຝາກ ຫຼື ປຶ້ມເງິນຝາກປະຈຳ ເປັນຄູ່ມືໃນການຝາກ ແລະ ຖອນ.

**ເບື້ອງ ມີຈິດ**: ຈຳນວນເງິນຮັບຝາກ ຫຼື ໂອນມາຈາກບັນຊີອື່ນ
**ເບື້ອງໜີ້ຈິດ**: ຈຳນວນເງິນຖອນອອກ ຫຼື ໂອນໄປບັນຊີອື່ນ
**ຍອດເຫຼືອມີ**: ສະແດງເຖິງຈຳນວນເງິນເຫຼືອຝາກໄວ້ນຳທະນາຄານ

ບັນຊີ 212211 ບັນຊີເງິນກູ້ຢືມເປັນປະຈຳວັນ ໃຊ້ເພື່ອບັນທຶກຕິດຕາມການກູ້ຢືມເງິນເປັນປະຈຳວັນ (ໂດຍບໍ່ມີຫຼັກຊັບຄ້ຳປະກັນ) ແຕ່ໄດ້ເຊັນສັນຍາການກູ້ຢືມເງິນນຳກັນບົນພື້ນຖານມີຂໍ້ຕົກລົງນຳກັນ ກຳນົດຫຼາຍສຸດເທົ່າກັບໜຶ່ງວັນລັດຖະການ.

**ເບື້ອງ ມີຈິດ**: ຈຳນວນເງິນກູ້ຢືມມາຈາກທະນາຄານອື່ນ
**ເບື້ອງໜີ້ຈິດ**: ຈຳນວນເງິນທີ່ໄດ້ຊຳລະເງິນກູ້ໃຫ້ແກ່ທະນາຄານອື່ນ
**ຍອດເຫຼືອມີ**: ສະແດງເຖິງຈຳນວນເງິນທີ່ຍັງຕິດໜີ້ທະນາຄານອື່ນໆ

ບັນຊີ 212212 ເງິນກູ້ເບີກເກີນບັນຊີ ໃຊ້ເພື່ອບັນທຶກຈຳນວນເງິນທີ່ໄດ້ກູ້ຢືມຈາກທະນາຄານກາງໃນກໍລະນີທີ່ຍອດເຫຼືອເງິນຝາກຂອງທະນາຄານ ເຫຼືອມີ(ບັນຊີແດງ).

**ເບື້ອງ ມີຈິດ**: ຈຳນວນເງິນກູ້ຢືມມາຈາກທະນາຄານກາງ
**ເບື້ອງໜີ້ຈິດ**: ຈຳນວນເງິນທີ່ໄດ້ຊຳລະເງິນກູ້ໃຫ້ແກ່ທະນາຄານກາງ
**ຍອດເຫຼືອມີ**: ສະແດງເຖິງຈຳນວນເງິນທີ່ຍັງຕິດໜີ້ທະນາຄານກາງ

ບັນຊີ 212215 ເງິນກູ້ຢືມມີກຳນົດ ໃຊ້ເພື່ອບັນທຶກຕິດຕາມການກູ້ຢືມເງິນມີກຳນົດ (ໂດຍມີຫຼັກຊັບຄ້ຳປະກັນ) ແລະ ໄດ້ເຊັນສັນຍາການກູ້ຢືມເງິນບົນພື້ນຖານມີຂໍ້ຕົກລົງນຳກັນ ທີ່ມີກຳນົດເວລາໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ.

**ເບື້ອງ ມີຈິດ**: ຈຳນວນເງິນກູ້ຢືມມາຈາກທະນາຄານກາງ
**ເບື້ອງໜີ້ຈິດ**: ຈຳນວນເງິນທີ່ໄດ້ຊຳລະເງິນກູ້ໃຫ້ທະນາຄານກາງ
**ຍອດເຫຼືອມີ**: ສະແດງເຖິງຈຳນວນເງິນທີ່ຍັງຕິດໜີ້ທະນາຄານກາງ

ບັນຊີ 21223 ເງິນກູ້ຢືມມາຈາກຄັງເງິນແຫ່ງຊາດ ໃຊ້ເພື່ອບັນທຶກຕິດຕາມຈຳນວນເງິນທີ່ໄດ້ກູ້ຢືມມາຈາກຄັງເງິນແຫ່ງຊາດ ເພື່ອເປັນແຫຼ່ງທຶນສະເພາະໃຊ້ໃນໂຄງການໃດໜຶ່ງ.

**ເບື້ອງ ມີຈິດ**: ຈຳນວນເງິນກູ້ຢືມມາຈາກຄັງເງິນແຫ່ງຊາດ
**ເບື້ອງໜີ້ຈິດ**: ຈຳນວນເງິນທີ່ໄດ້ຊຳລະເງິນກູ້ໃຫ້ແກ່ຄັງເງິນແຫ່ງຊາດ
**ຍອດເຫຼືອມີ**: ສະແດງເຖິງຈຳນວນເງິນທີ່ຍັງຕິດໜີ້ຄັງເງິນແຫ່ງຊາດ

ບັນຊີ 21271, 21272 ໃຊ້ເພື່ອບັນທຶກຕິດຕາມດອກເບ້ຍຄ້າງຈ່າຍຂອງເງິນຝາກ ແລະ ເງິນກູ້ຢືມມາ ທີ່ໄດ້ຄິດໄລ່ໄວ້ເມື່ອປັບປຸງບັນຊີທ້າຍເດືອນ.

**ເບື້ອງມີຈິດ:** ຈຳນວນດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວແຕ່ຍັງບໍ່ທັນໄດ້ຊຳລະສະສາງ
**ເບື້ອງໜີ້ຈິດ:** ການຊຳລະສະສາງຈຳນວນດອກເບ້ຍທີ່ໄດ້ຄິດໄລ່ໄວ້
**ຍອດເຫຼືອມີ:** ສະແດງເຖິງຈຳນວນດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວແຕ່ຍັງບໍ່ທັນໄດ້ຊຳລະສະສາງ(ດອກເບ້ຍຄ້າງຊຳລະ)

213 ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ
2131 ເງິນຮັບຝາກຈາກທະນາຄານ ແລະ ສະຖາບັນການເງິນອື່ນ.
21311 ເງິນຮັບຝາກຈາກທະນາຄານ ແລະ ສະຖາບັນການເງິນພາຍໃນປະເທດ.
213111 ເງິນຝາກກະແສລາຍວັນ
213113 ເງິນຝາກປະຢັດ
213114 ເງິນຝາກເປັນປະຈຳວັນ
213115 ເງິນຝາກມີກຳນົດ
2131151 ໜຶ່ງປີລົງມາ
2131152 ເກີນໜຶ່ງປີຂຶ້ນໄປ
21312 ເງິນຮັບຝາກຈາກທະນາຄານ ແລະ ສະຖາບັນການເງິນຕ່າງປະເທດ.
213121 ເງິນຝາກກະແສລາຍວັນ
213123 ເງິນຝາກປະຢັດ
213124 ເງິນຝາກເປັນປະຈຳວັນ
213125 ເງິນຝາກມີກຳນົດ
2131251 ໜຶ່ງປີລົງມາ
2131252 ເກີນໜຶ່ງປີຂຶ້ນໄປ
2132 ເງິນກູ້ມາຈາກທະນາຄານ ແລະ ສະຖາບັນການເງິນອື່ນ
21321 ເງິນກູ້ມາຈາກທະນາຄານ ແລະ ສະຖາບັນການເງິນອື່ນພາຍໃນປະເທດ
213211 ເງິນກູ້ຢືມເປັນປະຈຳວັນ
213212 ເງິນກູ້ເບີກເກີນບັນຊີ
213215 ເງິນກູ້ຢືມມີກຳນົດ
2132151 ໜຶ່ງປີລົງມາ
2132152 ເກີນໜຶ່ງປີຂຶ້ນໄປ ແຕ່ບໍ່ເກີນຫ້າປີ
2132153 ເກີນຫ້າປີຂຶ້ນໄປ
21322 ເງິນກູ້ມາຈາກທະນາຄານ ແລະ ສະຖາບັນການເງິນຕ່າງປະເທດ
213221 ເງິນກູ້ຢືມເປັນປະຈຳວັນ
213222 ເງິນກູ້ເບີກເກີນບັນຊີ
213225 ເງິນກູ້ຢືມມີກຳນົດ

2132251 ໜຶ່ງປີລົງມາ

2132252 ເກີນໜຶ່ງປີຂຶ້ນໄປ ແຕ່ບໍ່ເກີນຫ້າປີ

2132253 ເກີນຫ້າປີຂຶ້ນໄປ

2137 ດອກເບ້ຍຄ້າງຈ່າຍ

21371 ດອກເບ້ຍຄ້າງຈ່າຍຂອງເງິນຝາກທະນາຄານອື່ນ

213711 ດອກເບ້ຍຄ້າງຈ່າຍຂອງເງິນຝາກທະນາຄານພາຍໃນປະເທດ

213712 ດອກເບ້ຍຄ້າງຈ່າຍຂອງເງິນຝາກທະນາຄານຕ່າງປະເທດ

21372 ດອກເບ້ຍຄ້າງຈ່າຍຂອງເງິນກູ້ຢືມມາຈາກທະນາຄານອື່ນ

213721 ດອກເບ້ຍຄ້າງຈ່າຍຂອງເງິນກູ້ຢືມມາຈາກທະນາຄານອື່ນພາຍໃນປະເທດ

213722 ດອກເບ້ຍຄ້າງຈ່າຍຂອງເງິນກູ້ຢືມຈາກທະນາຄານຕ່າງປະເທດ

ບັນຊີ 21311 ເງິນຮັບຝາກຈາກທະນາຄານ ແລະ ສະຖາບັນການເງິນພາຍໃນປະເທດ ໃຊ້ບັນທຶກຕິດຕາມເງິນຝາກກະແສລາຍວັນ, ເງິນຝາກປະຢັດ, ເງິນຝາກເປັນປະຈຳວັນ ແລະ ເງິນຝາກມີກຳນົດ ໜຶ່ງປີລົງມາ ແລະ ໜຶ່ງປີຂຶ້ນໄປ ຂອງທະນາຄານພາຍໃນປະເທດ.

**ເບື້ອງມີ ຈົດ:** ຈຳນວນເງິນທີ່ຮັບຝາກ ຫລື ໂອນມາແຕ່ບັນຊີອື່ນ

**ເບື້ອງ ໜີ້ ຈົດ:** ຈຳນວນເງິນທີ່ຈ່າຍອອກ ຫລື ໂອນໄປບັນຊີອື່ນ

**ຍອດເຫລືອ ມີ:** ສະແດງເຖິງ ຈຳນວນເງິນຝາກທີ່ເຫລືອຝາກໄວ້ນຳທະນາຄານ

ບັນຊີ 21312 ເງິນຮັບຝາກຈາກທະນາຄານ ແລະ ສະຖາບັນການເງິນຕ່າງປະເທດ ໃຊ້ເພື່ອບັນທຶກຕິດຕາມເງິນຝາກປະເພດຕ່າງໆ ຂອງທະນາຄານຕ່າງປະເທດທີ່ຝາກໄວ້ນຳທະນາຄານເຮົາ.

**ເບື້ອງມີ ຈົດ:** ຈຳນວນເງິນທີ່ຝາກເຂົ້າ ຫລື ໂອນມາແຕ່ບັນຊີອື່ນ

**ເບື້ອງ ໜີ້ ຈົດ:** ຈຳນວນເງິນທີ່ຖອນອອກ ຫລື ໂອນໄປບັນຊີອື່ນ

**ຍອດເຫລືອ ມີ:** ສະແດງເຖິງ ຍອດເງິນຝາກທີ່ເຫລືອຝາກໄວ້

ບັນຊີ 21322 ເງິນກູ້ຢືມມາຈາກທະນາຄານ ແລະ ສະຖາບັນການເງິນຕ່າງປະເທດ ໃຊ້ເພື່ອຕິດຕາມການກູ້ຢືມເງິນຈາກຕ່າງປະເທດ ເງິນກູ້ຢືມເປັນປະຈຳວັນ, ເບີກເກີນບັນຊີ ແລະ ກູ້ຢືມມີກຳນົດ.

**ເບື້ອງ ມີຈົດ:** ຈຳນວນເງິນກູ້ຢືມມາຈາກທະນາຄານຕ່າງປະເທດ

**ເບື້ອງໜີ້ຈົດ:** ຈຳນວນເງິນທີ່ໄດ້ຊຳລະເງິນກູ້ຢືມໃຫ້ທະນາຄານຕ່າງປະເທດ

**ຍອດເຫຼືອມີ:** ສະແດງເຖິງຈຳນວນເງິນທີ່ຍັງຕິດໜີ້ທະນາຄານຕ່າງປະເທດ

ບັນຊີ 2137 ດອກເບ້ຍຄ້າງຈ່າຍ ໃຊ້ເພື່ອຕິດຕາມດອກເບ້ຍຄ້າງຈ່າຍທີ່ໄດ້ຄິດໄລ່ໄວ້ເມື່ອປັບປຸງບັນຊີທ້າຍເດືອນ ທັງດອກເບ້ຍເງິນຝາກ ແລະ ດອກເບ້ຍເງິນທີ່ກູ້ຢືມມາ.

**ເບື້ອງ ມີຈົດ:** ຈຳນວນດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ

**ເບື້ອງໜີ້ຈົດ:** ການຊຳລະດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ

**ຍອດເຫຼືອມີ:** ສະແດງເຖິງດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວແຕ່ຍັງບໍ່ທັນໄດ້ຊຳລະສະສາງ

214 ເງິນກູ້ຢືມຈາກທະນາຄານອື່ນ ໂດຍມີມູນຄ່າຫຼັກຊັບຄໍ້າປະກັນ

2141 ເງິນກູ້ຢືມມາຈາກທະນາຄານ ແລະ ສະຖາບັນການເງິນອື່ນພາຍໃນປະເທດ

21411 ເງິນກູ້ຢືມເປັນປະຈໍາວັນ

21412 ເງິນກູ້ຢືມມີກໍານົດ

2142 ເງິນກູ້ຢືມມາຈາກທະນາຄານ ແລະ ສະຖາບັນການເງິນອື່ນຕ່າງປະເທດ

21421 ເງິນກູ້ຢືມເປັນປະຈໍາວັນ

21422 ເງິນກູ້ຢືມມີກໍານົດ

2147 ດອກເບ້ຍຄ້າງຈ່າຍ

21471 ດອກເບ້ຍເງິນກູ້ຢືມມາຈາກທະນາຄານ ແລະ ສະຖາບັນການເງິນອື່ນພາຍໃນປະເທດ

21472 ດອກເບ້ຍເງິນກູ້ຢືມມາຈາກທະນາຄານ ແລະ ສະຖາບັນການເງິນ ອື່ນຕ່າງປະເທດ

ບັນຊີ 2141 ໃຊ້ເພື່ອບັນທຶກຈໍານວນເງິນທີ່ໄດ້ກູ້ຢືມມາຈາກທະນາຄານອື່ນພາຍໃນປະເທດ ໂດຍມີມູນຄ່າຫຼັກຊັບຄໍ້າປະກັນ ແລະ ມີອາຍຸການຊໍາລະຄືນບໍ່ເກີນ ໜຶ່ງເດືອນ.

**ເບື້ອງ ມີຈິດ:** ຈໍານວນເງິນກູ້ຢືມມາຈາກທະນາຄານອື່ນພາຍໃນປະເທດ

**ເບື້ອງໜີ້ຈິດ:** ຈໍານວນເງິນທີ່ໄດ້ຊໍາລະໃຫ້ທະນາຄານອື່ນພາຍໃນປະເທດ

**ຍອດເຫຼືອມີ:** ສະແດງເຖິງຈໍານວນເງິນທີ່ຍັງຕິດໜີ້ທະນາຄານອື່ນພາຍໃນປະເທດ

ບັນຊີ 2142 ໃຊ້ເພື່ອບັນທຶກຈໍານວນເງິນທີ່ໄດ້ກູ້ຢືມມາຈາກທະນາຄານອື່ນຕ່າງປະເທດ ໂດຍມີມູນຄ່າຫຼັກຊັບຄໍ້າປະກັນ ແລະ ມີອາຍຸການຊໍາລະຄືນບໍ່ເກີນ ໜຶ່ງເດືອນ.

**ເບື້ອງ ມີຈິດ:** ຈໍານວນເງິນກູ້ຢືມມາຈາກທະນາຄານອື່ນຕ່າງປະເທດ.

**ເບື້ອງໜີ້ຈິດ:** ຈໍານວນເງິນທີ່ໄດ້ຊໍາລະໃຫ້ທະນາຄານອື່ນຕ່າງປະເທດ.

**ຍອດເຫຼືອມີ:** ສະແດງເຖິງຈໍານວນເງິນທີ່ຍັງຕິດໜີ້ທະນາຄານອື່ນຕ່າງປະເທດ.

ບັນຊີ 2147 ດອກເບ້ຍຄ້າງຈ່າຍ ໃຊ້ເພື່ອຕິດຕາມດອກເບ້ຍຄ້າງຈ່າຍທີ່ໄດ້ຄິດໄລ່ໄວ້ເມື່ອປັບປຸງບັນຊີທ້າຍເດືອນ.

**ເບື້ອງ ມີຈິດ:** ຈໍານວນດອກເບ້ຍໄດ້ຄິດໄລ່ໄວ້ແລ້ວ

**ເບື້ອງໜີ້ຈິດ:** ການຊໍາລະດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ

**ຍອດເຫຼືອມີ:** ສະແດງເຖິງດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວແຕ່ຍັງບໍ່ທັນໄດ້ຊໍາລະສະສາງ

216 ຈຳນວນເງິນອື່ນໆທີ່ຕ້ອງຊຳລະໃຫ້ທະນາຄານອື່ນ

2161 ຈຳນວນເງິນອື່ນໆຕ້ອງຊຳລະໃຫ້ທະນາຄານອື່ນ

21611 ແຊັກເດີນທາງຂອງທະນາຄານອື່ນທີ່ໄດ້ຂາຍອອກ

21612 ແຊັກເງິນສົດ

21613 ແຊັກເດີນທາງຂອງທະນາຄານ

21614 ເງິນໂອນຕ້ອງຈ່າຍໃຫ້ທະນາຄານອື່ນ

21616 ແຊັກທະນາຄານອື່ນ

21618 ອື່ນໆ

2167 ດອກເບ້ຍຄ້າງຈ່າຍ

ບັນຊີ 2161 ຈຳນວນເງິນອື່ນໆ ທີ່ຕ້ອງຊຳລະໃຫ້ທະນາຄານອື່ນ ໃຊ້ເພື່ອບັນທຶກຕິດຕາມຈຳນວນເງິນລໍຖ້າຊຳລະໃຫ້ແກ່ທະນາຄານອື່ນ.

**ເບື້ອງ ມີຈິດ:** ສະແດງເຖິງຈຳນວນເງິນທີ່ຕ້ອງຊຳລະໃຫ້ທະນາຄານອື່ນ
**ເບື້ອງໜີ້ຈິດ:** ສະແດງເຖິງຈຳນວນເງິນທີ່ໄດ້ຊຳລະໃຫ້ທະນາຄານອື່ນ
**ຍອດເຫຼືອມີ:** ສະແດງເຖິງຈຳນວນເງິນທີ່ຄ້າງຊຳລະໃຫ້ແກ່ທະນາຄານອື່ນ

ບັນຊີ 2167 ດອກເບ້ຍຄ້າງຈ່າຍ ໃຊ້ເພື່ອບັນທຶກຕິດຕາມດອກເບ້ຍຄ້າງຈ່າຍ ທີ່ໄດ້ຄິດໄລ່ໄວ້ເມື່ອປັບປຸງບັນຊີທ້າຍເດືອນ ໂດຍການຈົດໜີ້ບັນຊີລາຍຈ່າຍ 41013 ດອກເບ້ຍຈ່າຍໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ.

**ເບື້ອງ ມີຈິດ:** ຈຳນວນດອກເບ້ຍໄດ້ຄິດໄລ່ໄວ້ແລ້ວ
**ເບືອງໜີ້ຈິດ:** ການຊຳລະດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ
**ຍອດເຫຼືອມີ:** ສະແດງເຖິງດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວແຕ່ຍັງບໍ່ທັນໄດ້ຊຳລະສະສາງ

- **ໝວດທີ 2 ໜີ້ຕ້ອງສົ່ງໃຫ້ລູກຄ້າ**

ໜີ້ຕ້ອງສົ່ງໃຫ້ລູກຄ້າ ປະກອບມີ :

- ເງິນຝາກຂອງລູກຄ້າ
- ເງິນກູ້ຢືມມາຈາກລູກຄ້າວົງການການເງິນ.
- ເງິນກູ້ຢືມມາຈາກລູກຄ້າໂດຍມີມູນຄ່າຫຼັກຊັບຄໍ້າປະກັນ.
- ຈຳນວນເງິນຕ້ອງຊຳລະໃຫ້ລູກຄ້າ

220 ເງິນຝາກຂອງລູກຄ້າ

2201 ເງິນຝາກຂອງລູກຄ້າ

22011 ເງິນຝາກກະແສລາຍວັນ

22012 ເງິນວາງຄໍ້າປະກັນທີ່ໄດ້ຮັບ

220121 ເງິນວາງຄໍ້າປະກັນໃນການເປີດໜັງສືສິນເຊື່ອ (L/C)

220122 ເງິນວາງຄໍ້າປະກັນໃນການອອກໜັງສືສິນເຊື່ອ (L/C)

220128 ເງິນວາງຄໍ້າປະກັນອື່ນໆ

22013 ເງິນຝາກປະຢັດ

22014 ເງິນຝາກເປັນປະຈຳວັນ

22015 ເງິນຝາກມີກຳນົດ

220151 ໜຶ່ງປີລົງມາ

220152 ເກີນໜຶ່ງປີຂຶ້ນໄປ

22016 ໃບຢັ້ງຢືນກູ້ຢືມເງິນ

220161 ບັດເງິນສົດ

220162 ສະຫລາກປະຢັດ

22017 ເງິນຝາກທີ່ບໍ່ມີການເຄື່ອນໄຫວ

2207 ດອກເບ້ຍຄ້າງຈ່າຍ

22071 ດອກເບ້ຍເງິນຝາກກະແສລາຍວັນຄ້າງຈ່າຍ

22073 ດອກເບ້ຍເງິນຝາກປະຢັດຄ້າງຈ່າຍ

22074 ດອກເບ້ຍເງິນຝາກເປັນປະຈຳວັນຄ້າງຈ່າຍ

22075 ດອກເບ້ຍເງິນຝາກມີກຳນົດຄ້າງຈ່າຍ

220751 ກຳນົດໜຶ່ງປີລົງມາ

220752 ກຳນົດໜຶ່ງປີຂຶ້ນໄປ

22076 ດອກເບ້ຍໃບຢັ້ງຢືນກູ້ຢືມເງິນຄ້າງຈ່າຍ

220761 ດອກເບ້ຍບັດເງິນສົດຄ້າງຈ່າຍ

220762 ສະຫລາກປະຢັດຄ້າງຈ່າຍ

ບັນຊີ 2201 ເງິນຝາກລູກຄ້າ ໃຊ້ເພື່ອບັນທຶກຕິດຕາມຈຳນວນເງິນຝາກ ແລະ ຖອນຂອງລູກຄ້າ ເຊິ່ງແຍກຕາມປະເພດເງິນຝາກ.

**ເບື້ອງ ມີຈິດ**: ຈຳນວນເງິນຮັບຝາກຫຼືໂອນມາຈາກບັນຊີອື່ນ
**ເບື້ອງໜີ້ຈິດ**: ຈຳນວນເງິນທີ່ຖອນອອກຫຼືໂອນໄປບັນຊີອື່ນ
**ຍອດເຫຼືອມີ**: ສະແດງເຖິງຈຳນວນເງິນເຫຼືອຝາກຢູ່ທະນາຄານ

ບັນຊີ 2207 ດອກເບ້ຍຄ້າງຈ່າຍ ໃຊ້ເພື່ອບັນທຶກຕິດຕາມດອກເບ້ຍຄ້າງຈ່າຍຂອງເງິນຝາກ ແລະ ໃບຢັ້ງຢືນກູ້ຢືມເງິນ, ທີ່ໄດ້ຄິດໄລ່ເມື່ອປັບປຸງບັນຊີທ້າຍເດືອນ.

**ເບື້ອງ ມີຈິດ**: ຈຳນວນດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ
**ເບື້ອງໜີ້ຈິດ**: ການຊຳລະເງິນດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ
**ຍອດເຫຼືອມີ**: ສະແດງເຖິງຈຳນວນເງິນດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ,ແຕ່ຍັງບໍ່ທັນໄດ້ຊຳລະສະສາງ

223 ເງິນກູ້ຢືມມາ ຈາກລູກຄ້າວິງການການເງິນ
- 2231 ເງິນກູ້ຢືມເປັນປະຈຳວັນ
- 2235 ເງິນກູ້ຢືມມາມີກຳນົດ
  - 22351 ໜຶ່ງປີລົງມາ
  - 22352 ເກີນໜຶ່ງປີຂຶ້ນໄປ ແຕ່ບໍ່ເກີນຫ້າປີ
  - 22353 ເກີນຫ້າປີຂຶ້ນໄປ
- 2237 ດອກເບ້ຍຄ້າງຈ່າຍ
  - 22371 ດອກເບ້ຍເງິນກູ້ຢືມມາເປັນປະຈຳວັນຄ້າງຈ່າຍ
  - 22375 ດອກເບ້ຍເງິນກູ້ຢືມມາມີກຳນົດຄ້າງຈ່າຍ
    - 223751 ໜຶ່ງປີລົງມາ
    - 223752 ເກີນໜຶ່ງປີຂຶ້ນໄປ ແຕ່ບໍ່ເກີນຫ້າປີ
    - 223753 ເກີນຫ້າປີຂຶ້ນໄປ

ບັນຊີ 2231 ເງິນກູ້ຢືມເປັນປະຈຳວັນ ໃຊ້ເພື່ອບັນທຶກຕິດຕາມຈຳນວນເງິນທີ່ໄດ້ກູ້ຢືມມາເປັນປະຈຳວັນ.

**ເບື້ອງ ມີຈິດ**: ຈຳນວນເງິນທີ່ໄດ້ກູ້ຢືມມາຈາກລູກຄ້າວົງການ ການເງິນ
**ເບື້ອງໜີ້ຈິດ**: ຈຳນວນເງິນທີ່ໄດ້ຊຳລະໃຫ້ແກ່ລູກຄ້າວົງການ ການເງິນ
**ຍອດເຫຼືອມີ**: ສະແດງເຖິງຈຳນວນເງິນທີ່ຍັງຕິດໜີ້ລູກຄ້າວົງການ ການເງິນ

ບັນຊີ 2235 ເງິນກູ້ຢືມມີກຳນົດ ໃຊ້ເພື່ອບັນທຶກຕິດຕາມຈຳນວນເງິນທີ່ໄດ້ກູ້ຢືມມາ ໂດຍມີກຳນົດ ເວລາເຊັ່ນວ່າ: ໜຶ່ງປີລົງມາ,ໜຶ່ງປີຂຶ້ນໄປແຕ່ບໍ່ເກີນຫ້າປີ, ເກີນຫ້າປີຂຶ້ນໄປ.

**ເບື້ອງ ມີຈິດ**: ຈຳນວນເງິນທີ່ໄດ້ກູ້ຢືມມາຈາກລູກຄ້າວົງການ ການເງິນ
**ເບື້ອງໜີ້ຈິດ**: ຈຳນວນເງິນທີ່ໄດ້ຊຳລະໃຫ້ແກ່ລູກຄ້າວົງການ ການເງິນ
**ຍອດເຫຼືອມີ**: ສະແດງເຖິງຈຳນວນເງິນທີ່ຍັງຕິດໜີ້ລູກຄ້າວົງການ ການເງິນ

ບັນຊີ 2237 ດອກເບ້ຍຄ້າງຈ່າຍ ໃຊ້ເພື່ອບັນທຶກຕິດຕາມດອກເບ້ຍຄ້າງຈ່າຍຂອງເງິນກູ້, ທີ່ໄດ້ຄິດໄລ່ດອກເບ້ຍໄວ້ເມື່ອປັບປຸງບັນຊີທ້າຍເດືອນ.

**ເບື້ອງ ມີຈິດ**: ຈຳນວນດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ

**ເບື້ອງໜີ້ຈິດ**: ການຊຳລະເງິນດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ

**ຍອດເຫຼືອມີ**: ສະແດງເຖິງຈຳນວນດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ,ແຕ່ຍັງບໍ່ທັນໄດ້ຊຳລະ

224 ເງິນກູ້ຢືມມາຈາກລູກຄ້າໂດຍມີມູນຄ່າຫຼັກຊັບຄ້ຳປະກັນ

2241 ເງິນກູ້ຢືມມາໂດຍມີມູນຄ່າຫຼັກຊັບຄ້ຳປະກັນ

22411 ເງິນກູ້ຢືມເປັນປະຈຳວັນ

22415 ກູ້ຢືມມີກຳນົດ(ບໍ່ເກີນ 1 ເດືອນ)

2247 ດອກເບ້ຍຄ້າງຈ່າຍ

22471 ດອກເບ້ຍເງິນກູ້ຢືມເປັນປະຈຳວັນຄ້າງຈ່າຍ

22475 ດອກເບ້ຍເງິນກູ້ຢືມມາມີກຳນົດຄ້າງຈ່າຍ

ບັນຊີ 22411,22415 ໃຊ້ເພື່ອບັນທຶກຕິດຕາມການກູ້ຢືມເງິນ ໂດຍມີການມອບມູນຄ່າໃບຢັ້ງຢືນຊັບເພື່ອຄ້ຳປະກັນເງິນກູ້ ແລະ ໄດ້ເຊັນສັນຍາການກູ້ຢືມເງິນນຳກັນ ບົນພື້ນຖານມີຂໍ້ຕົກລົງກັບທະນາຄານທຸລະກິດ ແລະ ລູກຄ້າໃດໜຶ່ງໃນກຳນົດເວລາຫຼາຍທີ່ສຸດເທົ່າກັບໜຶ່ງວັນລັດຖະການ ຫຼື ມີກຳນົດຊຳລະຄືນບໍ່ເກີນໜຶ່ງເດືອນ.

**ເບື້ອງ ມີຈິດ**: ຈຳນວນເງິນກູ້ຢືມມາຈາກລູກຄ້າ

**ເບື້ອງໜີ້ຈິດ**: ຈຳນວນເງິນທົດແທນ (ຊຳລະ) ຄືນໃຫ້ທີ່ກູ້ຢືມມາ

**ຍອດເຫຼືອມີ**: ສະແດງເຖິງຈຳນວນເງິນຕິດໜີ້ທະນາຄານອື່ນ ແລະ ລູກຄ້າ

ບັນຊີ 2247 ດອກເບ້ຍຄ້າງຈ່າຍ ໃຊ້ເພື່ອບັນທຶກຕິດຕາມດອກເບ້ຍຄ້າງຈ່າຍຂອງເງິນກູ້, ທີ່ໄດ້ຄິດໄລ່ດອກເບ້ຍ ໄວ້ເມື່ອປັບປຸງບັນຊີທ້າຍເດືອນ.

**ເບື້ອງ ມີຈິດ**: ຈຳນວນດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ

**ເບື້ອງໜີ້ຈິດ**: ການຊຳລະເງິນດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ

**ຍອດເຫຼືອມີ**: ສະແດງເຖິງຈຳນວນດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ,ແຕ່ຍັງບໍ່ທັນໄດ້ຊຳລະສະສາງ

226 ຈຳນວນເງິນຕ້ອງຊຳລະໃຫ້ລູກຄ້າ

2261 ຈຳນວນເງິນອື່ນໆຕ້ອງຊຳລະໃຫ້ລູກຄ້າ

22614 ເງິນໂອນມາຕ້ອງຈ່າຍໃຫ້ລູກຄ້າ

22615 ແຊັກຢັ້ງຢືນ

22618 ຈຳນວນເງິນອື່ນໆຕ້ອງຊຳລະໃຫ້ລູກຄ້າ

2267 ດອກເບ້ຍຄ້າງຈ່າຍ

ບັນຊີ 2261 ຈຳນວນເງິນຕ້ອງຊຳລະໃຫ້ລູກຄ້າ ໃຊ້ເພື່ອບັນທຶກ ຕິດຕາມເງິນໂອນມາທີ່ຕ້ອງຈ່າຍໃຫ້ລູກຄ້າ, ໃນກໍລະນີທະນາຄານໄດ້ຮັບໃບແຈ້ງການໂອນເງິນຈາກທະນາຄານທັງທະນາຄານພາຍໃນ ແລະ ທະນາຄານຕ່າງປະເທດ,ແຕ່ບໍ່ສາມາດຕິດຕໍ່ກັບຜູ້ໄດ້ຮັບປະໂຫຍດ(ຜູ້ຮັບເງິນ) ໃຫ້ບັນທຶກໄວ້ບັນຊີນີ້ກ່ອນແລ້ວຈຶ່ງຄ່ອຍລ້າງບັນຊີອອກເມື່ອມີຜູ້ມາຮັບເງິນ.

**ເບື້ອງມີຈິດ**: ຈຳນວນເງິນໂອນມາລໍຖ້າຈ່າຍໃຫ້ລູກຄ້າ
**ເບື້ອງໜີ້ຈິດ**: ຈຳນວນເງິນທີ່ຈ່າຍໃຫ້ລູກຄ້າ
**ຍອດເຫລືອມີ**: ສະແດງເຖິງຈຳນວນເງິນທີ່ໂອນມາແຕ່ຍັງບໍ່ທັນໄດ້ຈ່າຍໃຫ້ແກ່ລູກຄ້າ

ບັນຊີ 2267 ດອກເບ້ຍຄ້າງຈ່າຍ ໃຊ້ເພື່ອບັນທຶກຕິດຕາມດອກເບ້ຍທີ່ຕ້ອງຊຳລະ, ທີ່ໄດ້ຄິດໄລ່ດອກເບ້ຍໄວ້ເມື່ອປັບປຸງບັນຊີທ້າຍເດືອນ.

**ເບື້ອງ ມີຈິດ**: ຈຳນວນດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ
**ເບື້ອງໜີ້ຈິດ**: ການຊຳລະດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ
**ຍອດເຫຼືອມີ**: ສະແດງເຖິງຈຳນວນດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ,ແຕ່ຍັງບໍ່ທັນໄດ້ຊຳລະສະສາງ

- **ໝວດທີ 3 ໜີ້ຕ້ອງສົ່ງກ່ຽວກັບຫຼັກຊັບ ແລະ ໜີ້ຕ້ອງສົ່ງອື່ນໆ**

ໜີ້ກ່ຽວກັບຫຼັກຊັບ ແລະ ໜີ້ຕ້ອງສົ່ງອື່ນໆປະກອບມີ :

- ໜີ້ກ່ຽວກັບຫຼັກຊັບ
- ເຄື່ອງມືອະນຸພັນທີ່ກຳນົດເງື່ອນໄຂທີ່ໄດ້ຂາຍ
- ໜີ້ຕ້ອງສົ່ງກ່ຽວກັບຫລັກຊັບ
- ບັນຊີຊຳລະສະສາງກ່ຽວກັບການເຄື່ອນໄຫວດ້ານຫລັກຊັບ(ເຫລືອ ໜີ້ ຫລື ມີ )
- ບັນຊີພົວພັນລະຫວ່າງສຳນັກງານໃຫຍ່ກັບສາຂາ
- ເຈົ້າໜີ້ອື່ນ
- ບັນຊີລໍຖ້າສະສາງ

230 ໜີ້ຕ້ອງສົ່ງກ່ຽວກັບຫຼັກຊັບ

2301 ຫຼັກຊັບທີ່ໄດ້ຂາຍ ໂດຍມີສັນຍາຊື້ຄືນ

23011 ຫຼັກຊັບທີ່ໄດ້ຂາຍໂດຍມີສັນຍາຊື້ຄືນ

230111 ໃຫ້ທະນາຄານອື່ນ

230112 ໃຫ້ລູກຄ້າ

23017 ດອກເບ້ຍຄ້າງຈ່າຍ

230171 ໃຫ້ທະນາຄານອື່ນ

230172 ໃຫ້ລູກຄ້າ

2302 ໜີ້ຕ້ອງສົ່ງບ້ວງຫຼັກຊັບ

23021 ໜີ້ຕ້ອງສົ່ງບ້ວງຫຼັກຊັບທີ່ໄດ້ກູ້ຢືມມາ

23022 ໜີ້ຕ້ອງສົ່ງບ້ວງຫຼັກຊັບອື່ນໆ

23027 ດອກເບ້ຍຄ້າງຈ່າຍ

230271 ດອກເບ້ຍຫຼັກຊັບທີ່ໄດ້ກູ້ຢືມມາຄ້າງຈ່າຍ

230272 ດອກເບ້ຍຫຼັກຊັບອື່ນໆຄ້າງຈ່າຍ

ບັນຊີ 23011 ຫລັກຊັບທີ່ໄດ້ຂາຍໂດຍມີສັນຍາຊື້ຄືນ ໃຊ້ເພື່ອບັນທຶກຕິດຕາມຈຳນວນເງິນຂອງຫຼັກຊັບທີ່ໄດ້ຂາຍເພື່ອຊື້ຄືນ ເມື່ອເຖິງກຳນົດເວລາ.

**ເບື້ອງ ມີຈິດ:** ຈຳນວນເງິນຂອງຫຼັກຊັບທີ່ໄດ້ຂາຍອອກ

**ເບື້ອງໜີ້ຈິດ:** ຈຳນວນເງິນຂອງຫຼັກຊັບທີ່ໄດ້ຊື້ຄືນ

**ຍອດເຫຼືອມີ:** ສະແດງເຖິງຈຳນວນເງິນຂອງຫຼັກຊັບທີ່ໄດ້ຂາຍອອກ ແຕ່ຍັງບໍ່ທັນໄດ້ຊື້ຄືນ

ບັນຊີ 23027 ດອກເບ້ຍຄ້າງຈ່າຍ ໃຊ້ເພື່ອບັນທຶກຕິດຕາມດອກເບ້ຍຄ້າງຈ່າຍຂອງຫຼັກຊັບ ທີ່ໄດ້ຂາຍໂດຍມີສັນຍາຊື້ຄືນ, ທີ່ໄດ້ຄິດໄລ່ດອກເບ້ຍໄວ້ເມື່ອປັບປຸງບັນຊີທ້າຍເດືອນ.

**ເບື້ອງ ມີຈິດ:** ຈຳນວນດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ

**ເບື້ອງໜີ້ຈິດ:** ການຊຳລະດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ

**ຍອດເຫຼືອມີ:** ສະແດງເຖິງຈຳນວນດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ,ແຕ່ຍັງບໍ່ທັນໄດ້ ຊຳລະສະສາງ

ບັນຊີ 23021, 23022 ໃຊ້ເພື່ອບັນທຶກຕິດຕາມຈຳນວນເງິນໜີ້ຕ້ອງສົ່ງບ້ວງຫຼັກຊັບທີ່ໄດ້ກູ້ຢືມມາ ແລະ ບ້ວງຫຼັກຊັບອື່ນໆ (ສະເພາະຕົ້ນທຶນ).

**ເບື້ອງ ມີຈິດ:** ຈຳນວນມູນຄ່າໜີ້ຕ້ອງສົ່ງບ້ວງຫຼັກຊັບທີ່ໄດ້ກູ້ຢືມມາ
**ບື້ອງໜີ້ຈິດ:** ຈຳນວນມູນຄ່າໜີ້ຕ້ອງສົ່ງບ້ວງຫຼັກຊັບທີ່ໄດ້ຊຳລະ
**ຍອດເຫຼືອມີ:** ຈຳນວນມູນຄ່າໜີ້ຕ້ອງສົ່ງບ້ວງຫຼັກຊັບທີ່ຍັງຄ້າງຊຳລະ

ບັນຊີ 23027 ດອກເບ້ຍຄ້າງຈ່າຍ ໃຊ້ເພື່ອບັນທຶກຕິດຕາມດອກເບ້ຍຄ້າງຈ່າຍບ້ວງຫຼັກຊັບທີ່ໄດ້ກູ້ຢືມມາ ແລະ ບ້ວງຫຼັກຊັບອື່ນໆ ທີ່ໄດ້ຄິດໄລ່ໄວ້ເມື່ອປັບປຸງບັນຊີທ້າຍເດືອນ.

**ເບື້ອງ ມີຈິດ:** ຈຳນວນດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ
**ເບື້ອງໜີ້ຈິດ:** ການຊຳລະດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ
**ຍອດເຫຼືອມີ:** ສະແດງເຖິງຈຳນວນດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ,ແຕ່ຍັງບໍ່ທັນໄດ້ຊຳລະສະສາງ

231 ເອກະສານອະນຸພັນ ທີ່ກຳນົດເງື່ອນໄຂທີ່ໄດ້ຂາຍ
2311 ເອກະສານອະນຸພັນ ທີ່ກຳນົດເງື່ອນໄຂທາງດ້ານອັດຕາດອກເບ້ຍ
2312 ເອກະສານອະນຸພັນ ທີ່ກຳນົດເງື່ອນໄຂທາງດ້ານອັດຕາແລກປ່ຽນ
2313 ເອກະສານອະນຸພັນ ທີ່ກຳນົດເງື່ອນໄຂທາງດ້ານຮຸ້ນທຶນ ແລະ ດັດສະນີຕະຫລາດຫຼັກຊັບ
2318 ເອກະສານອະນຸພັນ ທີ່ກຳນົດເງື່ອນໄຂທາງດ້ານອື່ນໆ

ບັນຊີ 231 ເອກະສານອະນຸພັນທີ່ກຳນົດເງື່ອນໄຂທີ່ໄດ້ຂາຍ ໃຊ້ເພື່ອບັນທຶກສ່ວນເພີ່ມສິດທາງເລືອກທີ່ໄດ້ຂາຍ ຢູ່ໃນຕະຫຼາດທີ່ມີການຈັດຕັ້ງ, ລາຍການຄ້າຍຄືກັນ ຫຼື ຊື້ຂາຍກັນຕາມລາຄາຕົກລົງກັນໃນການໄດ້ໃບ ຮຸ້ນມາເປັນກຳມະສິດ ຫຼື ພັນທະບັດມາເປັນກຳມະສິດ.

**ເບື້ອງ ມີຈິດ:** ຈຳນວນເງິນຂອງເອກະສານທີ່ກຳນົດເງື່ອນໄຂທີ່ໄດ້ຂາຍ
**ເບື້ອງໜີ້ຈິດ:** ຈຳນວນເງິນຂອງເອກະສານທີ່ກຳນົດເງື່ອນໄຂຊື້ຄືນ ຫຼື ໂອນໄປບັນຊີອື່ນ
**ຍອດເຫຼືອມີ:** ສະແດງເຖິງຈຳນວນເງິນຂອງເອກະສານທີ່ກຳນົດເງື່ອນໄຂທີ່ຍັງເຫຼືອຢູ່ໃນຄັງ

233 ພັນທະບັດ ຫຼື ຮຸ້ນກູ້ທີ່ໄດ້ຈຳໜ່າຍອອກ
2331 ຫຼັກຊັບໃນຕະຫຼາດລະຫວ່າງທະນາຄານ
23311 ຫຼັກຊັບໃນຕະຫຼາດລະຫວ່າງທະນາຄານ
23317 ດອກເບ້ຍຄ້າງຈ່າຍ
2332 ຫຼັກຊັບທີ່ສາມາດປ່ຽນມືໄດ້
23321 ຫຼັກຊັບທີ່ສາມາດປ່ຽນມືໄດ້
2337 ດອກເບ້ຍຄ້າງຈ່າຍ

2335 ພັນທະບັດ ຫຼື ຮຸ້ນກູ້

23351 ພັນທະບັດຫຼືຮຸ້ນກູ້

23357 ດອກເບ້ຍຄ້າງຈ່າຍ

2336 ໜີ້ຕ້ອງສົ່ງອື່ນໆ ທີ່ກຳເນີດຈາກຫຼັກຊັບ

23361 ໜີ້ຕ້ອງສົ່ງອື່ນໆ ທີ່ກຳເນີດຈາກຫຼັກຊັບ

23367 ດອກເບ້ຍຄ້າງຈ່າຍ

ບັນຊີ 23311 ຫຼັກຊັບໃນຕະຫຼາດລະຫວ່າງທະນາຄານ ໃຊ້ເພື່ອບັນທຶກຕິດຕາມລາຍການເຄື່ອນໄຫວກ່ຽວກັບການຊື້ຂາຍຫຼັກຊັບ(ທຸກປະເພດ) ໃນຕະຫຼາດລະຫວ່າງທະນາຄານ.

**ເບື້ອງ ມີຈິດ**: ຈຳນວນເງິນຫຼັກຊັບທີ່ໄດ້ຈຳໜ່າຍອອກ
**ເບື້ອງໜີ້ຈິດ**: ສະແດງເຖິງຫຼັກຊັບທີ່ໄດ້ໄຖ່ຖອນຄືນ
**ຍອດເຫຼືອມີ**: ສະແດງເຖິງຫຼັກຊັບທີ່ຍັງບໍ່ທັນໄດ້ຊຳລະ

ບັນຊີ 23321 ຫຼັກຊັບທີ່ສາມາດປ່ຽນມືໄດ້ ໃຊ້ເພື່ອບັນທຶກຕິດຕາມຫຼັກຊັບທີ່ໄດ້ຈຳໜ່າຍອອກຊຶ່ງສາມາດປ່ຽນມືໄດ້.

**ເບື້ອງ ມີຈິດ**: ສະແດງເຖິງຫຼັກຊັບທີ່ໄດ້ຈຳໜ່າຍອອກ
**ບື້ອງໜີ້ຈິດ**: ສະແດງເຖິງຫຼັກຊັບທີ່ໄດ້ໄຖ່ຖອນຄືນ
**ຍອດເຫຼືອມີ**: ສະແດງເຖິງຫຼັກຊັບທີ່ຍັງບໍ່ທັນໄດ້ຊຳລະ

ບັນຊີ 23351 ພັນທະບັດ ຫຼື ຮຸ້ນກູ້ ໃຊ້ເພື່ອບັນທຶກຕິດຕາມຈຳນວນເງິນແຫຼ່ງທຶນທີ່ໄດ້ມາດ້ວຍການຈຳໜ່າຍພັນທະບັດ ຫຼື ຮຸ້ນກູ້.

**ເບື້ອງ ມີຈິດ**: ສະແດງເຖິງຫຼັກຊັບທີ່ໄດ້ຈຳໜ່າຍອອກ
**ບື້ອງໜີ້ຈິດ**: ສະແດງເຖິງຫຼັກຊັບທີ່ໄດ້ໄຖ່ຖອນຄືນ
**ຍອດເຫຼືອມີ**: ສະແດງເຖິງຫຼັກຊັບທີ່ຍັງບໍ່ທັນໄດ້ຊຳລະ

ບັນຊີ 23361 ໜີ້ຕ້ອງສົ່ງອື່ນໆ ທີ່ກຳເນີດຈາກຫຼັກຊັບ ໃຊ້ເພື່ອບັນທຶກຕິດຕາມໜີ້ຕ້ອງສົ່ງ ທີ່ເກີດຈາກການຈຳໜ່າຍໃບຢັ້ງຢືນຊັບ ໃນຕະຫຼາດລະຫວ່າງທະນາຄານ ໃບຢັ້ງຢືນຊັບ ທີ່ສາມາດຊື້ຂາຍໄດ້ (ປ່ຽນມືໄດ້) ລວມທັງພັນທະບັດ ແລະ ຮຸ້ນກູ້ໄລຍະຍາວ ແລະ ໃບຢັ້ງຢືນຊັບໃຫ້ກອງທຶນສາກົນ.

**ເບື້ອງ ມີຈິດ**: ຈຳນວນເງິນໜີ້ຕ້ອງສົ່ງອື່ນໆ ທີ່ກຳເນີດຈາກຫຼັກຊັບທີ່ໄດ້ຈຳໜ່າຍອອກ
**ບື້ອງໜີ້ຈິດ**: ຈຳນວນເງິນໜີ້ຕ້ອງສົ່ງອື່ນໆ ທີ່ກຳເນີດຈາກຫຼັກຊັບທີ່ໄດ້ຈຳໜ່າຍອອກທີ່ໄດ້ໄຖ່ ຖອນຄືນ
**ຍອດເຫຼືອມີ**: ສະແດງເຖິງໜີ້ຕ້ອງສົ່ງຂອງຫຼັກຊັບທີ່ຍັງບໍ່ທັນໄດ້ຊຳລະ

ບັນຊີ 23317, 23327, 23357 ແລະ 23367 ດອກເບ້ຍຄ້າງຈ່າຍ ໃຊ້ເພື່ອບັນທຶກຕິດຕາມດອກເບ້ຍຄ້າງຈ່າຍຂອງພັນທະບັດ ຫຼື ຮຸ້ນກູ້ ທີ່ໄດ້ຈຳໜ່າຍອອກ, ທີ່ໄດ້ຄິດໄລ່ດອກເບ້ຍໄວ້ເມື່ອປັບປຸງບັນຊີທ້າຍເດືອນ.

**ເບື້ອງ ມີຈິດ:** ຈຳນວນເງິນດອກເບ້ຍທີ່ໄດ້ຄິດໄລ່ໄວ້

**ເບື້ອງໜີ້ຈິດ:** ຈຳນວນເງິນຊຳລະດອກເບ້ຍຄ້າງຈ່າຍທີ່ໄດ້ຄິດໄລ່ໄວ້ແລ້ວ

**ຍອດເຫຼືອມີ:** ສະແດງເຖິງຍອດເຫຼືອຈຳນວນເງິນດອກເບ້ຍຄ້າງຈ່າຍບໍ່ທັນໄດ້ຊຳລະສະສາງ

234 ບັນຊີຊຳລະສະສາງກ່ຽວກັບການເຄື່ອນໄຫວດ້ານຫຼັກຊັບ

2341 ບັນຊີຊຳລະສະສາງກັບບັນດາທະນາຄານ ແລະ ສະຖາບັນສິນເຊື່ອອື່ນ

2342 ບັນຊີຊຳລະສະສາງກັບບັນດາບໍລິສັດເງິນທຶນ ແລະ ຫຼັກຊັບ

2343 ບັນຊີຊຳລະສະສາງກັບສະຖາບັນການເງິນອື່ນ

2344 ບັນຊີຊຳລະສະສາງກັບລູກຄ້າທົ່ວໄປ

2346 ບັນຊີຊຳລະສະສາງອື່ນໆ ກ່ຽວກັບການເຄື່ອນໄຫວດ້ານຫຼັກຊັບ

2347 ດອກເບ້ຍຄ້າງຮັບ ແລະ ຄ້າງຈ່າຍ

23471 ດອກເບ້ຍຄ້າງຮັບ

234711 ບັນດາທະນາຄານ ແລະ ສະຖາບັນການເງິນອື່ນ

234712 ຈາກບັນດາບໍລິສັດເງິນທຶນ ແລະ ຫຼັກຊັບ

234713 ຈາກສະຖາບັນການເງິນອື່ນໆ

234714 ຈາກລູກຄ້າທົ່ວໄປ

234716 ຈາກໜີ້ຕ້ອງສົ່ງອື່ນໆກ່ຽວກັບການເຄື່ອນໄຫວດ້ານຫຼັກຊັບ

23472 ດອກເບ້ຍຄ້າງຈ່າຍ

234721 ໃຫ້ບັນດາທະນາຄານ ແລະ ສະຖາບັນສິນເຊື່ອອື່ນໆ

234722 ໃຫ້ບັນດາບໍລິສັດເງິນທຶນ ແລະ ຫຼັກຊັບ

234723 ໃຫ້ສະຖາບັນການເງິນອື່ນໆ

237424 ໃຫ້ລູກຄ້າທົ່ວໄປ

234726 ໃຫ້ບັນຊີຊຳລະສະສາງອື່ນໆ ກ່ຽວກັບການເຄື່ອນໄຫວດ້ານຫຼັກຊັບ

ບັນຊີ 2341, 2342, 2343, 2344, 2346 ໃຊ້ເພື່ອບັນທຶກຕິດຕາມຈຳນວນເງິນທີ່ທະນາຄານທຸລະກິດຂາຍຫຼັກຊັບຂອງ ສະຖາບັນການເງິນ, ບໍລິສັດຫຼັກຊັບ, ຕະຫຼາດຫຼັກຊັບ, ລູກຄ້າວົງການການເງິນ ແລະ ລູກຄ້າທົ່ວໄປ ເພື່ອລໍຖ້າຊຳລະສະສາງ.

**ເບື້ອງ ມີຈິດ:** ຈຳນວນເງິນຕິດຕາມເພື່ອລໍຖ້າຊຳລະ

**ເບື້ອງໜີ້ຈິດ:** ຈຳນວນເງິນໂອນໄປເຂົ້າບັນຊີເງິນຝາກຂອງທະນາຄານອື່ນ,ສະຖາບັນການເງິນ, ບໍລິສັດຫຼັກຊັບ, ຕະຫຼາດຫຼັກຊັບ, ລູກຄ້າວົງການການເງິນ ແລະ ລູກຄ້າທົ່ວໄປ (ເຈົ້າຂອງຈຳໜ່າຍຫຼັກຊັບ)

**ຍອດເຫຼືອມີ:** ສະແດງເຖິງຈຳນວນເງິນເຫຼືອລໍຖ້າຊຳລະສະສາງ

ບັນຊີ 23471 ດອກເບ້ຍຄ້າງຮັບ ໃຊ້ເພື່ອບັນທຶກຕິດຕາມດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວເປັນລາຍຮັບເມື່ອປັບປຸງບັນຊີທ້າຍເດືອນ.

**ເບື້ອງໜີ້ຈິດ**: ຈຳນວນດອກເບ້ຍທີ່ໄດ້ຄິດໄລ່ໄວ້ ຫຼື ຈຳນວນດອກເບ້ຍທີ່ໄດ້ຈ່າຍລ່ວງໜ້າ
**ເບື້ອງ ມີຈິດ**: ຈຳນວນເງິນທີ່ໄດ້ຮັບການຊຳລະ ຫຼື ໂອນໄປບັນຊີອື່ນ
**ຍອດເຫຼືອໜີ້**: ຈຳນວນດອກເບ້ຍທີ່ໄດ້ຄິດໄລ່ ຫຼື ຈຳນວນດອກເບ້ຍທີ່ໄດ້ຈ່າຍລ່ວງໜ້າຄ້າງຮັບຊຳລະ

ບັນຊີ 23472 ດອກເບ້ຍຄ້າງຈ່າຍ ໃຊ້ເພື່ອບັນທຶກຕິດຕາມຄິດໄລ່ດອກເບ້ຍຄ້າງຈ່າຍທີ່ໄດ້ຄິດໄລ່ໄວ້ ເມື່ອປັບປຸງບັນຊີທ້າຍເດືອນ.

**ເບື້ອງ ມີຈິດ**: ຈຳນວນເງິນດອກເບ້ຍທີ່ໄດ້ຄິດໄລ່ໄວ້
**ເບື້ອງໜີ້ຈິດ**: ການຊຳລະຈຳນວນດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ
**ຍອດເຫຼືອມີ**: ສະແດງເຖິງຈຳນວນດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວແຕ່ຍັງບໍ່ທັນໄດ້ຊຳລະສະສາງ

235 ບັນຊີພົວພັນລະຫວ່າງສຳນັກງານໃຫ່ຍກັບສາຂາ

2351 ສຳນັກງານໃຫຍ່ກັບສາຂາພາຍໃນປະເທດ
2352 ສາຂາກັບໜ່ວຍບໍລິການ
2353 ສຳນັກງານໃຫຍ່ກັບສາຂາຕ່າງປະເທດ
2358 ອື່ນໆ

ບັນຊີ 235 ໃຊ້ບັນທຶກລາຍການເຄື່ອນໄຫວ ລະຫວ່າງສຳນັກງານໃຫຍ່ກັບສາຂາພາຍໃນປະເທດ, ສຳນັກງານໃຫ່ຍກັບສາຂາຕ່າງປະເທດ, ສາຂາກັບໜ່ວຍບໍລິການ ແລະ ອື່ນໆ ນອກນັ້ນຍັງມີການໂອນຍອດເຫຼືອລະຫວ່າງ ສາຂາຜ່ານສຳນັກງານໃຫຍ່ ແລະ ໂອນລາຍຮັບ - ລາຍຈ່າຍ ຂອງສາຂາເມື່ອເຖິງວັນປິດບັນຊີທ້າຍປີ. ຖ້າຍອດເຫຼືອບັນຊີດັ່ງກ່າວຫາກເຫຼືອໜີ້ ໝາຍຄວາມວ່າສຳນັກງານໃຫຍ່ເປັນໜີ້ສາຂາ, ຖ້າຍອດ ເຫຼືອມີໝາຍຄວາມວ່າ ສາຂາເປັນໜີ້ສຳນັກງານໃຫຍ່

**ເບື້ອງ ມີຈິດ**: ຈຳນວນເງິນທີ່ສຳນັກງານໃຫຍ່ສັ່ງໃຫ້ສາຂາຈ່າຍຊ່ວຍ, ດຸ່ນດ່ຽງການຂາດທຶນທີ່ໂອນມາຈາກສາຂາ ແລະ ດອກເບ້ຍທີ່ໄດ້ຈ່າຍໃຫ້ສາຂາ
**ເບື້ອງໜີ້ຈິດ**: ຈຳນວນເງິນທີ່ສຳນັກງານໃຫຍ່ເຄື່ອນຍ້າຍເງິນສົດໃຫ້ສາຂາ, ຊື້ຊັບສິນ, ດຸ່ນດ່ຽງກຳໄລທີ່ໂອນມາຈາກສາຂາ ແລະ ດອກເບ້ຍ ທີ່ໄດ້ຮັບຈາກສາຂາ
**ຍອດເຫຼືອມີ**: ສະແດງເຖິງສຳນັກງານໃຫຍ່ເປັນລູກໜີ້ສາຂາ
**ຍອດເຫຼືອໜີ້**: ສະແດງເຖິງສຳນັກງານໃຫຍ່ເປັນເຈົ້າໜີ້ສາຂາ

236 ເຈົ້າໜີ້ອື່ນໆ

2361 ເຈົ້າໜີ້ພາຍນອກ

23611 ຈຳນວນເງິນທີ່ຕ້ອງມອບໃຫ້ງົບປະມານ

236111 ອາກອນກຳໄລທີ່ຕ້ອງມອບຕື່ມ

236112 ພາສີມູນຄ່າເພີ່ມທີ່ຕ້ອງສົ່ງມອບ

236113 ພາສີ ແລະ ອາກອນຕ່າງໆ ທີ່ໄດ້ຫັກໄວ້ບ່ອນຈ່າຍ ຕ້ອງສົ່ງມອບ

236114 ອາກອນເງິນເດືອນຕ້ອງສົ່ງມອບ

236118 ຈຳນວນເງິນອື່ນໆຕ້ອງສົ່ງມອບງົບປະມານ

23612 ເງິນທີ່ໄດ້ຮັບຈາກການຂາຍພັນທະບັດຂອງລັດຕ້ອງສົ່ງມອບ

236121 ພັນທະບັດທະນາຄານແຫ່ງ ສປປ ລາວ

236122 ພັນທະບັດຄັງເງິນ

236123 ຮຸ້ນກູ້ ແລະ ພັນທະບັດລັດຖະບານ

236128 ອື່ນໆ

23613 ເງິນທີ່ຕ້ອງປະກອບສ່ວນເຂົ້າໃນກອງທຶນເບັຍບຳນານ

236131 ຫັກຈາກເງິນເດືອນພະນັກງານ

236132 ປະກອບສ່ວນຈາກທະນາຄານ

23614 ຜູ້ສະໜອງສິນຄ້າ ແລະ ບໍລິການ

23615 ເງິນວາງຄ້ຳປະກັນກ່ຽວກັບສິນເຊື່ອ

23618 ເຈົ້າໜີ້ພາຍນອກອື່ນໆ

2362 ເຈົ້າໜີ້ພາຍໃນ

23622 ລາຍການທີ່ຕ້ອງຈ່າຍໃຫ້ພະນັກງານ

23623 ເງິນເກີນຄັງ(ເຫລືອຄັງ) ລໍຖ້າແກ້ໄຂ

23625 ລາຍການທີ່ຕ້ອງຈ່າຍໃຫ້ສຳນັກງານໃຫຍ່ ຫຼື ສາຂາ

236251 ເງິນທີ່ຕ້ອງຈ່າຍໃຫ້ສາຂາພາຍໃນປະເທດ(ໃຊ້ສະເພາະສຳນັກງານໃຫຍ່)

236252 ເງິນທີ່ຕ້ອງຈ່າຍໃຫ້ສາຂາຢູ່ຕ່າງປະເທດ(ໃຊ້ສະເພາະສຳນັກງານໃຫຍ່)

236253 ເງິນລ່ວງໜ້າໃຫ້ສຳນັກງານ(ໃຊ້ສະເພາະສາຂາ)

23626 ເງິນປັນຜົນຈ່າຍໃຫ້ຂາຮຸ້ນ

23628 ເຈົ້າໜີ້ພາຍໃນອື່ນໆ

2367 ດອກເບ້ຍຄ້າງຈ່າຍ

23671 ດອກເບ້ຍຄ້າງຈ່າຍໃຫ້ເຈົ້າໜີ້ພາຍນອກ

23672 ດອກເບ້ຍຄ້າງຈ່າຍໃຫ້ເຈົ້າໜີ້ພາຍໃນ

ບັນຊີ 2361 ເຈົ້າໜີ້ພາຍນອກ ໃຊ້ເພື່ອບັນທຶກຕິດຕາມຈຳນວນເງິນທີ່ຕ້ອງສົ່ງມອບໃຫ້ງົບປະມານ, ເງິນທີ່ໄດ້ຮັບຈາກການຂາຍພັນທະບັດຂອງລັດຕ້ອງສົ່ງມອບ, ເງິນທີ່ຕ້ອງປະກອບສ່ວນເຂົ້າໃນກອງທຶນເບັຍບຳນານ, ຜູ້ສະໜອງສິນຄ້າແລະບໍລິການ, ເງິນວາງຄ້ຳປະກັນກ່ຽວກັບສິນເຊື່ອເຊົ່າຊື້ທີ່ໄດ້ຮັບ ແລະ ເຈົ້າໜີ້ພາຍນອກອື່ນໆ ທີ່ຄ້າງຈ່າຍ.

**ເບື້ອງ ມີຈິດ**: ຈຳນວນເງິນຕ້ອງຊຳລະໃຫ້ເຈົ້າໜີ້ພາຍນອກ

**ເບື້ອງໜີ້ຈິດ**: ຈຳນວນເງິນທີ່ໄດ້ຊຳລະໃຫ້ເຈົ້າໜີ້ພາຍນອກ

**ຍອດເຫຼືອມີ**: ສະແດງເຖິງຈຳນວນເງິນທີ່ຍັງຄ້າງຊຳລະໃຫ້ເຈົ້າໜີ້ພາຍນອກ

ບັນຊີ 2362 ເຈົ້າໜີ້ພາຍໃນ ໃຊ້ເພື່ອບັນທຶກຕິດຕາມ ເງິນເຫຼືອຄັງລໍຖ້າແກ້ໄຂ, ລາຍການທີ່ຕ້ອງຈ່າຍໃຫ້ພະນັກງານ, ລາຍການທີ່ຕ້ອງຈ່າຍໃຫ້ສາຂາ(ສະເພາະສຳນັກງານໃຫຍ່), ລາຍການທີ່ຕ້ອງຈ່າຍໃຫ້ສຳນັກງານໃຫຍ່(ສະເພາະສາຂາ), ເງິນປັນຜົນທີ່ຕ້ອງຈ່າຍໃຫ້ຜູ້ຖືຮຸ້ນ ແລະ ເຈົ້າໜີ້ພາຍໃນອື່ນໆ.

**ເບື້ອງ ມີຈິດ**: ສະແດງເຖິງຈຳນວນຕ້ອງຊຳລະ

**ເບື້ອງໜີ້ຈິດ**: ສະແດງເຖິງຈຳນວນເງິນທີ່ໄດ້ຊຳລະແລ້ວ

**ຍອດເຫຼືອມີ**: ສະແດງເຖິງຈຳນວນເງິນທີ່ຍັງຄ້າງຊຳລະ

ບັນຊີ 2367 ດອກເບ້ຍຄ້າງຈ່າຍ ໃຊ້ເພື່ອບັນທຶກ ຈຳນວນດອກເບ້ຍ ທີ່ຖືກຄິດໄລໄວ້ແລ້ວ ເມື່ອປັບປຸງບັນຊີທ້າຍເດືອນ.

**ເບື້ອງ ມີຈິດ**: ຈຳນວນດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ

**ເບື້ອງໜີ້ຈິດ**: ການຊຳລະເງິນດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ

**ຍອດເຫຼືອມີ**: ສະແດງເຖິງຈຳນວນເງິນດອກເບ້ຍທີ່ໄດ້ຄິດໄລ່ໄວ້ແລ້ວ, ແຕ່ຍັງບໍ່ທັນໄດ້ຊຳລະສະສາງ

238 ບັນຊີລໍຖ້າສະສາງດ້ານໜີ້ສິນ

- 2381 ເງິນບໍ່ມີໃນກຳມະສິດໂຮງພອນຮຽກເກັບ (ຄູ່ກົງກັບບັນຊີ 138123)
- 2382 ບັນຊີດັດແກ້ (ປັບປຸງ)
  - 23821 ບັນຊີດັດແກ້ກ່ຽວກັບເງິນຕາຕ່າງປະເທດ
    - 238211 ບັນຊີດັດແກ້ກ່ຽວກັບເງິນຕາຕ່າງປະເທດ
    - 238212 ຖານະການແລກປ່ຽນ ແລະ ຄູ່ມູນຄ່າຖານະການແລກປ່ຽນເງິນຕາ ຕ່າງປະເທດ
  - 23822 ບັນຊີດັດແກ້ກັບເຄື່ອງມືອະນຸພັນ
  - 23828 ບັນຊີດັດແກ້ກ່ຽວກັບອົງປະກອບອື່ນໆ ນອກໃບສະຫຼຸບຊັບສົມບັດ
- 2383 ບັນຊີຜິດດ່ຽງ
  - 23831 ຜິດດ່ຽງກັບເງິນຕາຕ່າງປະເທດ
  - 23832 ຜິດດ່ຽງກັບການຂາຍຫຼັກຊັບທີ່ມີເງື່ອນໄຂຊື້ຄືນ
  - 23838 ຜິດດ່ຽງອື່ນໆ
- 2384 ສ່ວນໄດ້ບົ່ມຊ້ອນກ່ຽວກັບສັນຍາຄ້ຳປະກັນ ເອກະສານອະນຸພັນລ່ວງໜ້າເຊິ່ງເຫດການບໍ່ທັນສິ້ນສຸດ
- 2385 ສ່ວນໄດ້ບົ່ມຊ້ອນກ່ຽວກັບສັນຍາຄ້ຳປະກັນ ເອກະສານອະນຸພັນລ່ວງໜ້າເຊິ່ງເຫດການສິ້ນສຸດແລ້ວ
- 2388 ບັນຊີລໍຖ້າສະສາງອື່ນໆ

23881 ລາຍຮັບ ຮັບລ່ວງໜ້າ

23883 ລາຍຈ່າຍຄ້າງຈ່າຍ

23885 ດອກເບ້ຍທວງຍາກລໍຖ້າສະສາງ

23888 ລາຍການອື່ນໆລໍຖ້າສະສາງ

ບັນຊີ 2381 ເງິນບໍ່ມີໃນກຳມືບ້ວງພວມຮຽກເກັບ ໃຊ້ເພື່ອບັນທຶກຕິດຕາມຈຳນວນເງິນທີ່ລູກຄ້າເອົາໃບຢັ້ງຢືນຊັບຝາກໃຫ້ທະນາຄານສົ່ງໄປຮຽກເກັບເງິນກ່ອນ.

**ເບື້ອງ ມີຈິດ:** ຈຳນວນເງິນຕາມໃບຢັ້ງຢືນຊັບທີ່ສົ່ງໄປຮຽກເກັບ

**ເບື້ອງໜີ້ຈິດ:** ຈຳນວນເງິນທີ່ຮຽກເກັບໄດ້ ແລະ ຊຳລະໃຫ້ແກ່ລູກຄ້າ

**ຍອດເຫຼືອມີ:** ສະແດງເຖິງຈຳນວນເງິນເຫຼືອລໍຖ້າຊຳລະເງິນໃຫ້ແກ່ລູກຄ້າ

ບັນຊີ 238211 ບັນຊີດັດແກ້ກ່ຽວກັບເງິນຕາຕ່າງປະເທດ ໃຊ້ເພື່ອບັນທຶກຈຳນວນເງິນທີ່ຊື້ຂາຍເງິນຕາຕ່າງປະເທດກັບທີ່ (ເຊິ່ງເກີດຈາກຄຳໝັ້ນສັນຍາທີ່ໄດ້ໃຫ້) ກ່ຽວກັບການຊື້ຂາຍເງິນຕາຕ່າງປະເທດ, ຄຳໝັ້ນສັນຍາດັ່ງກ່າວໄດ້ພົວພັນກັບອັດຕາແລກປ່ຽນເງິນຕາຕ່າງປະເທດ (9403, 9404, 9405).

**ເບື້ອງ ມີຈິດ:** ຈຳນວນເງິນຜິດດ່ຽງເງິນຕາຕ່າງປະເທດທີ່ຊື້ເຂົ້າມາ

**ເບື້ອງໜີ້ຈິດ:** ຈຳນວນເງິນຜິດດ່ຽງເງິນຕາຕ່າງປະເທດທີ່ຂາຍອອກ

**ຍອດເຫຼືອມີ:** ສະແດງການຊື້ເງິນຕາຕ່າງປະເທດຫຼາຍກ່ວາການຂາຍເງິນຕາຕ່າງປະເທດ

**ຍອດເຫຼືອໜີ້:** ສະແດງການຂາຍເງິນຕາຕ່າງປະເທດຫຼາຍກ່ວາຊື້ເງິນຕາຕ່າງປະເທດ

ບັນຊີ 238212 ຖານະການແລກປ່ຽນ ແລະ ຄູ່ມູນຄ່າການແລກປ່ຽນເງິນຕາຕ່າງປະເທດ ໃຊ້ເພື່ອ ບັນທຶກຈຳນວນເງິນທີ່ຊື້ຂາຍເງິນຕາຕ່າງປະເທດກັບທີ່ຊຳລະພ້ອມ.

**ເບື້ອງ ມີຈິດ:** ຈຳນວນເງິນຕາຕ່າງປະເທດທີ່ຊື້ເຂົ້າ

**ເບື້ອງ ໜີ້ຈິດ:** ຈຳນວນເງິນຕາຕ່າງປະທດທີ່ຂາຍອອກ

**ຍອດເຫລືອ ມີ:** ສະແດງເຖິງການຊື້ເງິນຕາຕ່າງປະເທດ ຫຼາຍກ່ວາການຂາຍເງິນຕາຕ່າງປະເທດ

**ຍອດເຫລືອ ໜີ້:** ສະແດງເຖິງການຂາຍເງິນຕາຕ່າງປະເທດ ຫຼາຍກ່ວາການຊື້ເງິນຕາຕ່າງປະເທດ

ບັນຊີ 23822 ບັນຊີດັດແກ້ກ່ຽວກັບເຄື່ອງມືອະນຸພັນ ໃຊ້ເພື່ອບັນທຶກຕິດຕາມຈຳນວນເງິນຜິດດ່ຽງຈາກການຕີມູນຄ່າທາງດ້ານອັດຕາດອກເບ້ຍກ່ຽວກັບຄຳໝັ້ນສັນຍາ ຊື້ - ຂາຍ ເຄື່ອງມືອະນຸພັນລ່ວງໜ້າ (ຫຼັກຊັບທີ່ໄດ້ເຊັນກັນແລ້ວກັບມູນຄ່າ) (ອັດຕາດອກເບ້ຍ) ໃນມື້ລົງບັນຊີ (ລາຍການຄູ່ກົງກັບຜົນໄດ້ຮັບ). ຄຳໝັ້ນສັນຍາດັ່ງກ່າວພົວພັນກັບການກຳນົດອັດຕາດອກເບ້ຍ ບັນຊີ 9404, 9405, 9406

**ເບື້ອງ ມີຈິດ:** ຈຳນວນເງິນຜິດດ່ຽງຈາກການຕີມູນຄ່າທາງດ້ານອັດຕາດອກເບ້ຍ (ຖ້າທຽບໃສ່ມື້ເຊັນສັນຍາ) ຫຼຸດລົງ

**ເບື້ອງໜີ້ຈິດ:** ຈຳນວນເງິນຊຳລະສະສາງເຂົ້າບັນຊີລາຍຮັບ

**ຍອດເຫຼືອມີ:** ສະແດງເຖິງຈຳນວນເງິນເພື່ອລໍຖ້າຊຳລະສະສາງ

ບັນຊີ 23881 ບັນຊີລາຍຮັບ ຮັບລ່ວງໜ້າ ໃຊ້ບັນທຶກຕິດຕາມຈຳນວນດອກເບ້ຍທີ່ໄດ້ຮັບລ່ວງໜ້າກ່ຽວກັບການຊື້ຫຼຸດຫຼັກຊັບຈາກສະຖາບັນການເງິນ ແລະ ລູກຄ້າ, ເມື່ອຫຼັກຊັບຄົບກຳນົດເວລາ ຫຼື ທຸກໆທ້າຍເດືອນຈະຕ້ອງຊຳລະລາຍຮັບ ຮັບລ່ວງໜ້າໄປເຂົ້າບັນຊີລາຍຮັບຕົວຈິງ (ປະເພດ 5)ເຊິ່ງເປັນການເຄື່ອນໄຫວນອກຈາກບັນຊີດອກເບ້ຍຄ້າງຈ່າຍ.

**ເບື້ອງ ມີຈີດ:** ຈຳນວນດອກເບ້ຍທີ່ໄດ້ຮັບລ່ວງໜ້າກ່ຽວກັບການຊື້ຫຼຸດຫຼັກຊັບ
**ເບື້ອງໜີ້ຈີດ:** ຈຳນວນເງິນຊຳລະສະສາງເຂົ້າບັນຊີລາຍຮັບ
**ຍອດເຫຼືອມີ:** ສະແດງເຖິງຈຳນວນເງິນເຫຼືອລໍຖ້າຊຳລະສະສາງ

ບັນຊີ 23883 ລາຍຈ່າຍຄ້າງຈ່າຍ ໃຊ້ເພື່ອບັນທຶກຕິດຕາມຈຳນວນເງິນທີ່ຄ້າງຈ່າຍເຊັ່ນ: ຄ່ານ້ຳປະປາ, ຄ່າໄຟຟ້າ, ຄ່າໂທລະສັບ ແລະ ອື່ນໆ. ເຊິ່ງຈຳນວນດັ່ງກ່າວນີ້ຕ້ອງໄດ້ຈົດອອກບັນຊີລາຍຈ່າຍຂອງທະນາຄານ (ປະເພດ 4) ເຊິ່ງເປັນການເຄື່ອນໄຫວນອກຈາກບັນຊີດອກເບ້ຍຄ້າງຈ່າຍ.

**ເບື້ອງ ມີຈີດ:** ຈຳນວນເງິນຄ້າງຈ່າຍແຕ່ທະນາຄານໄດ້ຈົດເປັນລາຍຈ່າຍຮຽບຮ້ອຍແລ້ວ
**ເບື້ອງໜີ້ຈີດ:** ຈຳນວນເງິນທີ່ໄດ້ຊຳລະ
**ຍອດເຫຼືອມີ:** ສະແດງເຖິງຈຳນວນເງິນເຫຼືອລໍຖ້າຊຳລະສະສາງ

ບັນຊີ 23885 ບັນຊີດອກເບ້ຍທວງຍາກລໍຖ້າສະສາງ ໃຊ້ເພື່ອບັນທຶກຕິດຕາມດອກເບ້ຍທວງຍາກທີ່ໄດ້ໂອນຈາກລາຍຮັບມາໄວ້ເພື່ອລໍຖ້າຊຳລະສະສາງ.

**ເບື້ອງມີ ຈົດ:** ສະແດງເຖິງຈຳນວນດອກເບ້ຍລໍຖ້າສະສາງ
**ເບື້ອງ ໜີ້ ຈົດ:** ສະແດງເຖິງຈຳນວນດອກເບ້ຍລໍຖ້າສະສາງທີ່ໄດ້ຮັບຊຳລະ ຫຼື ໂອນເປັນຂາດທຶນ
**ຍອດເຫລືອ ມີ:** ສະແດງເຖິງຈຳນວນດອກເບ້ຍລໍຖ້າສະສາງທີ່ຍັງຄ້າງຊຳລະ

ບັນຊີ 23888 ລາຍການອື່ນໆລໍຖ້າສະສາງ ໃຊ້ເພື່ອບັນທຶກຕິດຕາມຈຳນວນເງິນທີ່ລໍຖ້າຊຳລະສະສາງອື່ນ, ນອກຈາກບັນຊີຕ່າງໆ ທີ່ໄດ້ກຳນົດໄວ້ຂ້າງເທິງນັ້ນ.

**ເບື້ອງ ມີຈີດ:** ຈຳນວນເງິນທີ່ຮັບຝາກເພື່ອລໍຖ້າຊຳລະສະສາງ
**ເບື້ອງໜີ້ຈີດ:** ຈຳນວນເງິນຖອນອອກ ຫຼື ໂອນໄປບັນຊີໃໝ່
**ຍອດເຫຼືອມີ:** ສະແດງເຖິງຈຳນວນເງິນເຫຼືອລໍຖ້າຊຳລະສະສາງ

## ປະເພດ 3
## ທຶນທະນາຄານ

ບັນຊີ ທຶນຂອງທະນາຄານ ປະກອບມີ ທຶນຈົດທະບຽນ, ຄັງຂອງທະນາຄານ,ເງິນແຮເພື່ອຄວາມສ່ຽງໄພ ແລະ ລາຍຈ່າຍ, ເງິນແຮທັກໄວ້ຕາມຂໍ້ກຳນົດ, ຄັງສຳຮອງເພື່ອຄວາມສ່ຽງໄພລວມຂອງທະນາຄານ, ໜີ້ຕ້ອງສົ່ງສຳຮອງ, ທຶນຊ່ວຍໜູນ ແລະ ເງິນທຶນທີ່ລັດໄດ້ຈັດສັນ,ກຳໄລ-ຂາດທຶນສະສົມ ແລະ ຜົນໄດ້ຮັບໃນປີ.

310 ທຶນຈົດທະບຽນ

- 3101 ທຶນຮຽກໃຫ້ປະກອບ
- 3102 ທຶນບໍ່ທັນຮຽກໃຫ້ປະກອບ
- 3103 ໃບຢັ້ງຢືນການລົງທຶນ
- 3104 ລາຍການທີ່ຖືວ່າຄືທຶນ
- 3018 ຜູ້ຖືຮຸ້ນ (ຍອດເຫຼືອໜີ້)
  - 31081 ທຶນຈົດທະບຽນບໍ່ທັນຮຽກໃຫ້ປະກອບ
  - 31082 ທຶນຈົດທະບຽນຮຽກໃຫ້ປະກອບບໍ່ທັນໃຫ້ຖອກ

ບັນຊີ 310 ໃຊ້ເພື່ອບັນທຶກຕິດຕາມ ທຶນຈົດທະບຽນ ຂອງທະນາຄານ ຫຼື ສະຖາບັນການເງິນ. ທຶນຮຽກໃຫ້ປະກອບ, ຫຼື ທຶນທີ່ຍັງບໍ່ທັນຮຽກໃຫ້ປະກອບ ແລະ ລາຍການທີ່ຖືຄືທຶນ.

ບັນຊີ 3101 ທຶນຮຽກໃຫ້ປະກອບ ໃຊ້ເພື່ອບັນທຶກຈຳນວນເງິນຂອງມູນຄ່າໃນນາມຂອງທຶນປະກອບທີ່ຂາຮຸ້ນໄດ້ປະກອບໃນເວລາສ້າງຕັ້ງສະຖາບັນການເງິນ ຫຼື ໃນເວລາມີການປ່ຽນແປງທຶນຕາມຫຼັງ.

ບັນຊີ 3102 ທຶນທີ່ຍັງບໍ່ທັນຮຽກໃຫ້ປະກອບ ໃຊ້ເພື່ອບັນທຶກຈຳນວນທຶນ ທີ່ຍັງບໍ່ທັນຮຽກໃຫ້ປະກອບຕາມ ມູນຄ່າໃນນາມຂອງໃບຮຸ້ນ

ບັນຊີ 3104 ລາຍການທີ່ຖືຄືທຶນ ໃຊ້ເພື່ອບັນທຶກຈຳນວນເງິນທີ່ໂອນມາຈາກຄັງສະສົມຕ່າງໆເພື່ອຈົດເພີ້ມເຂົ້າໃນສ່ວນຂອງທຶນ.

**ເບື້ອງມີຈົດ**: ຈຳນວນເງິນທຶນຈົດທະບຽນຖອກແລ້ວ, ຈຳນວນເງິນທຶນຈົດທະບຽນຕ້ອງຖອກ, ຈຳນວນເງິນທຶນທີ່ຍັງບໍ່ທັນຮຽກໃຫ້ປະກອບ, ຈຳນວນເງິນທີ່ໂອນມາຈາກຄັງສະສົມຕ່າງໆ ເພື່ອເພີ້ມເຂົ້າໃນສ່ວນຂອງທຶນ.

**ເບື້ອງໜີ້ຈົດ**: ຈຳນວນເງິນຫຼຸດຜ່ອນທຶນ, ຈຳນວນເງິນທີ່ຖອກແລ້ວ, ຈຳນວນເງິນຮຽກໃຫ້ປະກອບ, ຈຳນວນເງິນຫຼຸດຜ່ອນລາຍການທີ່ຖືຄືທຶນ

**ຍອດເຫຼືອມີ**: ສະແດງເຖິງຍອດເຫຼືອຈຳນວນເງິນທຶນຈົດທະບຽນ ແລະ ຍອດເຫຼືອຈຳນວນເງິນຂອງລາຍການທີ່ຖືຄືທຶນ

320 ຄັງຂອງທະນາຄານ

3201 ສ່ວນເພີ່ມມູນຄ່າທີ່ຕິດພັນກັບທຶນ

32011 ສ່ວນເພີ່ມມູນຄ່າຮຸ້ນ, ການປະກອບທຶນ, ການຄວບວິສາຫະກິດເຂົ້າກັນ, ການແຍກຕົວບໍລິສັດ

32018 ສ່ວນເພີ່ມມູນຄ່າອື່ນໆ

3202 ຄັງສຳຮອງຕາມກົດໝາຍ

3203 ຄັງຂະຫຍາຍທຸລະກິດຂອງທະນາຄານ

3204 ຄັງສຳຮອງຕາມລະບຽບ ແລະ ຕາມສັນຍາ

3205 ຄັງສຳຮອງຕາມຂໍ້ກຳນົດ

32051 ຄັງສຳຮອງຕາມຂໍ້ກຳນົດກ່ຽວກັບການຕີມູນຄ່າຄືນໃໝ່

32052 ສ່ວນເພີ່ມມູນຄ່າໄລຍະຍາວ

32058 ຄັງສຳຮອງຕາມຂໍ້ກຳນົດອື່ນໆ

3206 ຜິດດ່ຽງຈາກການຕີລາຄາມູນຄ່າຄືນໃໝ່

32061 ຜິດດ່ຽງຈາກການຕີມູນຄ່າຊັບສິນບັດຄົງທີ່ຄືນໃໝ່

32062 ຜິດດ່ຽງຈາກການຕີລາຄາຄຳຄືນໃໝ່

32063 ຜິດດ່ຽງຈາກການຕີຊັບສິນບັດຄືນໃໝ່

32068 ຜິດດ່ຽງອື່ນໆ

3208 ຄັງສຳຮອງອື່ນໆ

ບັນຊີ 320 ໃຊ້ເພື່ອບັນທຶກຕິດຕາມ ສ່ວນເພີ່ມທີ່ຕິດພັນກັບທຶນ ແລະ ຄັງສະສົມລວມມີສ່ວນເພີ່ມມູນຄ່າ, ຄັງສະສົມຕາມລະບຽບການ, ຄັງສະສົມຕາມກົດລະບຽບ ແລະ ຕາມສັນຍາ, ຄັງສະສົມຕາມຂໍ້ກຳນົດ, ຜິດດ່ຽງຈາກການຕີມູນຄ່າຄືນໃໝ່, ຄັງຂະຫຍາຍການຜະລິດຂອງທະນາຄານ, ຄັງສຳຮອງພິເສດ ( ສະເພາະຂອງທະນາຄານແຫ່ງ ສປປ ລາວ) ແລະ ຄັງສະສົມອື່ນໆ.

ບັນຊີ 3201 ໃຊ້ເພື່ອບັນທຶກສ່ວນເພີ່ມມູນຄ່າໃນການຈຳໜ່າຍຮຸ້ນ, ການປະກອບທຶນ, ການຄວບວິສາຫະກິດເຂົ້າກັນ, ການແຍກຕົວບໍລິສັດ, ການປ່ຽນຮູບບໍລິສັດ ແລະ ສ່ວນເພີ່ມອື່ນໆທີ່ຕິດພັນກັບທຶນ.

ບັນຊີ 3202 ໃຊ້ເພື່ອບັນທຶກຈຳນວນເງິນທີ່ໄດ້ແບ່ງປັນມາຈາກກຳໄລ ຫຼັງການມອບອາກອນໃຫ້ລັດແລ້ວໃນອັດຕາ 10% ຂອງກຳໄລສຸດທິ ເພື່ອສ້າງເປັນຄັງສຳຮອງໄວ້ໃນແຕ່ລະປີ( ອີງຕາມມາດຕາ 214 ຂອງກົດໝາຍວ່າດ້ວຍວິສາຫະກິດ ປີ 2005)ເມື່ອຄັງສຳຮອງນີ້ເທົ່າກັບ ເຄິ່ງໜຶ່ງຂອງທຶນຈົດທະບຽນແລ້ວ ທະນາຄານຈະຫັກຕື່ມ ຫຼື ບໍ່ຫັກກໍ່ໄດ້ ເວັ້ນເສຍແຕ່ກົດລະບຽບຂອງທະນາຄານໄດ້ກຳນົດໄວ້ຢ່າງອື່ນ (ການນຳໃຊ້ຄັງສຳຮອງໃຫ້ປະຕິບັດຕາມມາດຕາ 152 ຂອງກົດໝາຍສະບັບນີ້).

ບັນຊີ 3203 ຄັງຂະຫຍາຍການຜະລິດຂອງທະນາຄານ ໃຊ້ເພື່ອບັນທຶກຈຳນວນເງິນທີ່ສະພາບໍລິຫານຕົກລົງ ເຫັນດີແບ່ງປັນມາຈາກກຳໄລສຸດທິເພື່ອເປົ້າໝາຍສະເພາະໃດໜຶ່ງເຊັ່ນ:

- ຂະຫຍາຍອຸປະກອນເຕັກນິກ ແລະ ຂະຫຍາຍທຸລະກິດ
- ປັບປຸງປ່ຽນໃໝ່ອຸປະກອນຮັບໃຊ້ທຸລະກິດຄົບຊຸດໃຫ້ທັນສະໄໝຂຶ້ນ
- ເພີ່ມເຕີມເງິນທຶນໝູນວຽນ
- ຮ່ວມປະກອບທຶນກັບທຸລະກິດອື່ນ

ບັນຊີ 3204 ຄັງສຳຮອງຕາມລະບຽບ ແລະ ຕາມສັນຍາ ໃຊ້ເພື່ອບັນທຶກຈຳນວນເງິນທີ່ສະພາບໍລິຫານຕົກລົງເຫັນດີແບ່ງປັນມາຈາກກຳໄລສຸດທິ ເພື່ອລໍຖ້າແບ່ງເຂົ້າຄັງສະສົມໃດໜຶ່ງ.

ບັນຊີ 3205 ຄັງສຳຮອງຕາມຂໍ້ກຳນົດ ໃຊ້ເພື່ອບັນທຶກການດັດແກ້ທຶນຕົນເອງ ພາຍຫຼັງການຕີມູນຄ່າຊັບສົມບັດຄົງທີ່ ແລະ ວັດຖຸມີຄ່າ ຄືນໃໝ່ ຕາມລະບຽບກົດໝາຍ.

ບັນຊີ 3206 ຜົດດ່ຽງຈາກການຕີມູນຄ່າຄືນໃໝ່ ໃຊ້ເພື່ອບັນທຶກ ຈຳນວນເງິນຜົດດ່ຽງຈາກການຕີມູນຄ່າຄືນໃໝ່ ກ່ຽວກັບຊັບສົມບັດຄົງທີ່ ແລະ ວັດຖຸມີຄ່າ.

ບັນຊີ 3208 ຄັງສຳຮອງອື່ນໆ ໃຊ້ເພື່ອບັນທຶກຈຳນວນເງິນທີ່ສະພາບໍລິຫານຕົກລົງແບ່ງປັນມາຈາກກຳໄລສຸດທິເພື່ອ:

- ສະສາງຂາດທຶນທີ່ບໍ່ສາມາດຖົມຂຸມໄດ້ດ້ວຍກຳໄລໃນປີ
- ປະກັນການເສຍຫາຍຕ່າງໆ ຊຶ່ງອາດຈະເກີດຂຶ້ນໂດຍບໍ່ມີເງິນແຮຄ້ຳປະກັນໄວ້ກ່ອນ
- ເພີ່ມທຶນຂອງທຸລະກິດເອງ

**ເບື້ອງມີຈິດ**: ຈຳນວນເງິນສ່ວນເພີ່ມມູນຄ່າໃນການຈຳໜ່າຍຮຸ້ນ, ການຄວບວິສາຫະກິດເຂົ້າກັນ, ການແຍກຕົວບໍລິສັດ, ການປ່ຽນຮູບບໍລິສັດ ແລະ ສ່ວນເພີ່ມອື່ນໆ, ຈຳນວນເງິນທີ່ແບ່ງປັນມາຈາກການຕີມູນຄ່າ ຄືນໃໝ່ຊັບສົມບັດຄົງທີ່ ແລະ ວັດຖຸມີຄ່າ, ຈຳນວນເງິນຜົດດ່ຽງຈາກການຕີມູນຄ່າຄືນໃໝ່, ສ່ວນເພີ່ມຈາກການຕີມູນຄ່າຄືນໃໝ່ຊັບສົມບັດຄົງທີ່ ແລະ ວັດຖຸມີຄ່າ.

**ເບື້ອງໜີ້ຈິດ**: ຈຳນວນເງິນທີ່ໂອນໄປເພີ່ມເປັນທຶນ

**ຍອດເຫຼືອມີ**: ສະແດງເຖິງຍອດເຫຼືອຂອງສ່ວນເພີ້ມມູນຄ່າທີ່ຕິດພັນກັບທຶນ ແລະ ຄັງສະສົມ

330 ເງິນແຮເພື່ອຄວາມສ່ຽງ ແລະ ລາຍຈ່າຍ

3301 ເງິນແຮເພື່ອລາຍຈ່າຍບຳນານ

33011 ເງິນແຮເພື່ອລາຍຈ່າຍເງິນບຳນານ ພະນັກງານພວມເຮັດການ

33012 ເງິນແຮເພື່ອລາຍຈ່າຍບຳນານ ພະນັກງານທີ່ໄດ້ອອກການ

3302 ເງິນແຮເພື່ອຄວາມສ່ຽງໃນການປະຕິບັດຄຳໃຫ້ສັນຍາ ທີ່ເປັນລາຍລັກອັກສອນ

3304 ເງິນແຮເພື່ອຄວາມສ່ຽງຂອງປະເທດ

3308 ເງິນແຮເພື່ອຄວາມສ່ຽງ ແລະ ລາຍຈ່າຍອື່ນໆ

ບັນຊີ 330 ໃຊ້ເພື່ອບັນທຶກ ເງິນແຮເພື່ອຄວາມສ່ຽງໄພ ແລະ ລາຍຈ່າຍ ຊຶ່ງລວມມີເງິນແຮເພື່ອລາຍຈ່າຍເງິນບຳນານ, ເງິນແຮເພື່ອຄວາມສ່ຽງໃນການປະຕິບັດຄຳໃຫ້ສັນຍາ ທີ່ເປັນລາຍລັກອັກສອນ, ເງິນແຮເພື່ອຄວາມສ່ຽງ ຂອງປະເທດ ແລະ ເງິນແຮອື່ນໆ.

ບັນຊີ 3301 ເງິນແຮເພື່ອລາຍຈ່າຍເງິນບໍານານ ໃຊ້ເພື່ອບັນທຶກຈໍານວນເງິນທີ່ສະຖາບັນໄດ້ຈິດອອກຈາກລາຍຈ່າຍ ເພື່ອສ້າງເປັນຄັງແຮຈ່າຍເງິນບໍານານ ຊຶ່ງການກໍານົດອັດຕາສ່ວນຫັກເງິນແຮດັ່ງກ່າວ ແມ່ນອີງຕາມການຕົກລົງເຫັນດີຂອງສະພາບໍລິຫານ.

**ເບື້ອງມີຈິດ**: ຈໍານວນເງິນບໍານານທີ່ທະນາຄານຫັກໄວ້ເພື່ອສ້າງເປັນເງິນແຮ

**ເບື້ອງໜີ້ຈິດ**: ຈໍານວນເງິນເກັບຄືນເຂົ້າລາຍຮັບໃນກໍລະນີທີ່ມີການຈ່າຍເງິນບໍານານຈິງ

**ຍອດເຫຼືອມີ**: ສະແດງເຖິງຍອດເຫຼືອຂອງເງິນແຮເພື່ອລາຍຈ່າຍເງິນບໍານານ

ບັນຊີ 3302 ໃຊ້ເພື່ອບັນທຶກເງິນແຮ ກ່ຽວກັບລາຍການທີ່ອາດຈະເກີດຂື້ນ ໄດ້ທາງດ້ານການໃຫ້ສັນຍາຄໍ້າປະກັນແທນ, ການຮັບປະກັນໃບຢັ້ງຢືນການຄ້າໃນການຊໍາລະແທນ.

ບັນຊີ 3304 ໃຊ້ເພື່ອບັນທຶກເງິນແຮ ເພື່ອຄວາມສ່ຽງໄພຂອງປະເທດ ເຊັ່ນ: ສົງຄາມກາງເມືອງ, ລັດຖະປະຫານ,ແຜ່ນດິນໄຫວ, ນໍ້າຖ້ວມ...

ບັນຊີ 3308 ໃຊ້ເພື່ອບັນທຶກເງິນແຮອື່ນໆ ເຊັ່ນ: ເງິນແຮເພື່ອລາຍຄະດີ, ການຂາດທຶນຈາກການແລກປ່ຽນເງິນຕາຕ່າງປະເທດ ແລະ ລາຍການບັງເອີນອື່ນໆ ທີ່ສ່ຽງຕໍ່ການເກີດຄວາມເສຍຫາຍ.

**ເບື້ອງມີຈິດ**: ຈໍານວນເງິນແຮທີ່ໄດ້ຫັກໄວ້

**ເບື້ອງໜີ້ຈິດ**: ຈໍານວນເງິນທີ່ໄດ້ເກັບຄືນເຂົ້າລາຍຮັບໃນກໍລະນີທີ່ມີການຈ່າຍຕົວຈິງເກີດຂື້ນ

**ຍອດເຫຼືອມີ**: ສະແດງເຖິງຍອດເຫຼືອຂອງເງິນແຮທີ່ໄດ້ຫັກແຮໄວ້

340 ເງິນແຮຕາມຂໍ້ກໍານົດ

3401 ເງິນແຮເພື່ອຄວາມສ່ຽງໃນການໃຫ້ກູ້ຢືມ

34011 ເງິນແຮ ໃຫ້ກູ້ຢືມແກ່ສະຖາບັນການເງິນ

34012 ເງິນໃຫ້ກູ້ຢືມແກ່ລູກຄ້າ

34013 ເງິນໃຫ້ກູ້ຢືມແກ່ລູກຄ້າວົງການການເງິນ

34016 ສິນເຊື່ອເຊົ່າຊື້

3408 ເງິນແຮອື່ນໆ

ບັນຊີ 340 ໃຊ້ເພື່ອບັນທຶກເງິນແຮຫັກໄວ້ຕາມຂໍ້ກໍານົດທີ່ທະນາຄານຫັກແຮໄວ້ຕາມຂໍ້ກໍານົດຕ່າງໆ ທີ່ໄດ້ຮັບອະນຸຍາດທາງດ້ານສ່ວຍສາອາກອນ ເຊັ່ນ: ຂໍ້ກໍານົດເລກທີ 06 / ທຫລ ລົງວັນທີ 11 / 5 / 2004 ກ່ຽວກັບການຈັດສັນໜີ້ຂອງທະນາຄານທຸລະກິດ

**ເບື້ອງມີຈິດ**: ຈໍານວນເງິນທີ່ທະນາຄານຫັກແຮໄວ້

**ເບື້ອງໜີ້ຈິດ**: ຈໍານວນເງິນເກັບຄືນເຂົ້າລາຍຮັບ

**ຍອດເຫຼືອມີ** : ສະແດງເຖິງຍອດເຫຼືອຂອງເງິນແຮຕາມຂໍ້ກໍານົດ

## 350 ຄັງສຳຮອງເພື່ອຄວາມສ່ຽງລວມຂອງທະນາຄານ

ເງິນແຮເພື່ອຄວາມສ່ຽງລວມຂອງທະນາຄານ ໃຊ້ບັນທຶກຈຳນວນເງິນ ທີ່ຄະນະຮັບຜິດຊອບນຳພາທະນາຄານຕົກລົງແບ່ງປັນ ເພື່ອຄ້ຳປະກັນຕໍ່ຄວາມສ່ຽງລວມຂອງທະນາຄານ ຊຶ່ງຕ້ອງໄດ້ປະຕິບັດຕາມຫຼັກການ ແຫ່ງຄວາມຮອບຄອບ ເນື່ອງຈາກຄວາມສ່ຽງມີຄວາມກ່ຽວພັນກັບການເຄື່ອນໄຫວວຽກງານຂອງ ທະນາຄານ (ເຊັ່ນ: ເກີດໂຈນປຸ້ນ, ໄຟໃໝ້, ນ້ຳຖ້ວມ, ຟ້າຜ່າ ຫຼື ແຜ່ນດິນໄຫວ).

**ເບື້ອງມີຈິດ**: ຈຳນວນເງິນທີ່ຄະນະຮັບຜິດຊອບນຳພາສະຖາບັນເຫັນດີໃຫ້ຫັກແຮໄວ້
**ເບື້ອງໜີ້ຈິດ**: ຈຳນວນເງິນເກັບຄືນເຂົ້າລາຍຮັບ ເມື່ອມີຄວາມເສຍຫາຍເກີດຂຶ້ນຈິງ
**ຍອດເຫຼືອມີ**: ສະແດງເຖິງຍອດເຫຼືອຈຳນວນເງິນຫັກແຮໄວ້ເພື່ອຄວາມສ່ຽງລວມຂອງທະນາຄານ

360 ໜີ້ຕ້ອງສົ່ງສຳຮອງ

3601 ເງິນກູ້ຢືມສຳຮອງຈາກທະນາຄານອື່ນ
- 36011 ເງິນກູ້ຢືມສຳຮອງມີກຳນົດ
- 36012 ເງິນກູ້ຢືມສຳຮອງບໍ່ມີກຳນົດ

3602 ເງິນກູ້ຢືມສຳຮອງຈາກລູກຄ້າ
- 36021 ເງິນກູ້ຢືມສຳຮອງມີກຳນົດ
- 36022 ເງິນກູ້ຢືມສຳຮອງບໍ່ມີກຳນົດ

3067 ດອກເບ້ຍຕ້ອງຈ່າຍ
- 36071 ດອກເບ້ຍເງິນກູ້ຢືມສຳຮອງຈາກທະນາຄານອື່ນ
  - 360711 ດອກເບ້ຍເງິນກູ້ຢືມສຳຮອງມີກຳນົດ
  - 360712 ດອກເບ້ຍເງິນກູ້ຢືມສຳຮອງບໍ່ກຳນົດ
- 36072 ດອກເບ້ຍເງິນກູ້ຢືມສຳຮອງຈາກລູກຄ້າ
  - 360721 ດອກເບ້ຍເງິນກູ້ຢືມສຳຮອງມີກຳນົດ
  - 360722 ດອກເບ້ຍເງິນກູ້ຢືມສຳຮອງບໍ່ກຳນົດ

ບັນຊີ 360 ໃຊ້ເພື່ອບັນທຶກຕິດຕາມ ໜີ້ຕ້ອງສົ່ງສຳຮອງ ໂດຍແຍກເປັນໜີ້ຕ້ອງສົ່ງສຳຮອງມີກຳນົດ ແລະ ບໍ່ມີກຳນົດ.ໜີ້ຕ້ອງສົ່ງສຳຮອງ ແມ່ນໜີ້ຕ້ອງສົ່ງດ້ອຍສິດ ຊຶ່ງໝາຍເຖິງໜີ້ຕ້ອງສົ່ງອັນດັບສຸດທ້າຍທີ່ ທະນາຄານຈະທົດແທນຄືນໃຫ້ແກ່ເຈົ້າໜີ້ ໜີ້ຕ້ອງສົ່ງສຳຮອງ ອາດເກີດຂຶ້ນໃນຮູບຂອງໃບຢັ້ງຢືນຊັບສຳຮອງ ຫຼື ເງິນກູ້ຢືມມາສຳຮອງ ຊຶ່ງເຈົ້າໜີ້ (ສະຖາບັນການເງິນ, ທະນາຄານ ຫຼື ລູກຄ້າ) ຍິນຍອມໃຫ້ກູ້ຢືມ ແນໃສ່ຟື້ນຟູກິດຈະການຂອງສະຖາບັນເອງ ເພື່ອໃຫ້ດຳລົງຄົງຕົວຢູ່ໄດ້ ແລະ ການຊຳລະ ຫຼື ທົດແທນຄືນ ຈະເປັນໄປໄດ້ກໍ່ໃນເມື່ອເຈົ້າໜີ້ອື່ນໆສະຫຼະສິດ. ຖ້າເປັນໜີ້ຕ້ອງສົ່ງສຳຮອງມີກຳນົດຕ້ອງກຳນົດມື້ໃຫ້ທົດແທນຄືນແຕ່ຫົວທີໂລດ ພ້ອມດ້ວຍ ອັດຕາສ່ວນຮ້ອຍຂອງດອກເບ້ຍຄ້າງຈ່າຍ.

ບັນຊີ 36011, 36012, ໃຊ້ເພື່ອບັນທຶກ ໜີ້ຕ້ອງສົ່ງສຳຮອງມີກຳນົດ ແລະ ບໍ່ມີກຳນົດທີ່ທະນາຄານໄດ້ຮັບຈາກເຈົ້າໜີ້ເພື່ອຟື້ນຟູກິດຈະການຂອງຕົນ.

**ເບື້ອງມີຈິດ**: ຈຳນວນເງິນທີ່ໄດ້ກູ້ຢືມຕາມມູນຄ່າຂອງໃບຢັ້ງຢືນຮຸ້ນຫຼືມູນຄ່າຂອງເງິນທີ່ທະນາຄານກູ້ຢືມມາ

**ເບື້ອງໜີ້ຈິດ**: ຈຳນວນເງິນຊຳລະຄືນແກ່ເຈົ້າໜີ້

**ຍອດເຫຼືອມີ**: ສະແດງເຖິງຍອດເຫຼືອຂອງໜີ້ຕ້ອງສົ່ງສຳຮອງມີກຳນົດ ແລະ ບໍ່ມີກຳນົດ

ບັນຊີ 3607 ດອກເບ້ຍຄ້າງຈ່າຍ ໃຊ້ເພື່ອບັນທຶກຕິດຕາມການຄິດໄລ່ດອກເບ້ຍ ຂອງໜີ້ຕ້ອງສົ່ງສຳຮອງມີກຳນົດທີ່ມີການກຳນົດມື້ທົດແທນຄືນພ້ອມດ້ວຍອັດຕາດອກເບ້ຍ.

**ເບື້ອງມີຈິດ;** ຈຳນວນເງິນດອກເບ້ຍຄ້າງຈ່າຍຄິດໄລ່ໄວ້ແລ້ວ

**ເບື້ອງໜີ້ຈິດ:** ຈຳນວນເງິນດອກເບ້ຍທີ່ຊຳລະແລ້ວ

**ຍອດເຫຼືອມີ**: ສະແດງເຖິງຍອດເຫຼືອຂອງດອກເບ້ຍຄ້າງຈ່າຍທີ່ທະນາຄານ ຕ້ອງຊຳລະ

370 ທຶນຊ່ວຍໜູນ ແລະ ເງິນທຶນທີ່ລັດໄດ້ຈັດສັນ

3701 ທຶນຊ່ວຍໜູນກໍ່ສ້າງພື້ນຖານ

37011 ທຶນຊ່ວຍໜູນກໍ່ສ້າງພື້ນຖານ (ເຫຼືອມີ)

37012 ທຶນຊ່ວຍໜູນກໍ່ສ້າງພື້ນຖານ ທີ່ຈົດເຂົ້າບັນຊີຜົນໄດ້ຮັບ( ເຫຼືອໜີ້)

3702 ທຶນຂອງລັດທີ່ໄດ້ຈັດສັນ

ບັນຊີ 370 ໃຊ້ເພື່ອບັນທຶກຕິດຕາມ ທຶນຊ່ວຍໜູນກໍ່ສ້າງພື້ນຖານ ແລະ ເງິນຂອງລັດທີ່ໄດ້ຈັດສັນ.

ບັນຊີ 3701 ທຶນຊ່ວຍໜູນກໍ່ສ້າງພື້ນຖານ ແມ່ນຈຳນວນເງິນທີ່ໄດ້ຮັບຈາກການຊ່ວຍເຫຼືອຂອງຕ່າງປະເທດ, ງົບປະມານສູນກາງ ຫຼື ງົບປະມານທ້ອງຖິ່ນ ທີ່ອະນຸມັດ ຫຼື ມອບໃຫ້ເພື່ອນຳໃຊ້ເຂົ້າໃນການປະກອບເຄື່ອງມືກໍ່ສ້າງພື້ນຖານຊຶ່ງທະນາຄານອາດຈະໄດ້ຮັບ ໃນລັກສະນະຂອງຊັບສົມບັດຄົງທີ່ ເຄື່ອງຈັກເຄື່ອງມືອຸປະກອນວັດຖຸເຕັກນິກຕ່າງໆ ຫຼື ເປັນເງິນໂດຍບໍ່ມີການທົດແທນຄືນ ໃຫ້ແກ່ພາກສ່ວນທີ່ໃຫ້ການຊ່ວຍເຫຼືອແຕ່ຈະແບ່ງສ່ວນຈົດເຂົ້າໃນບັນຊີຜົນໄດ້ຮັບຕາມອັດຕາ ການຫັກຄ່າຫຼຸ້ຍຫ້ຽນ ຂອງຊັບສົມບັດນັ້ນໆ.

ບັນຊີ 37011 ໃຊ້ເພື່ອບັນທຶກຕິດຕາມຈຳນວນທຶນຊ່ວຍໜູນກໍ່ສ້າງພື້ນຖານທີ່ໄດ້ຮັບຈາກການຊ່ວຍເຫຼືອຂອງຕ່າງປະເທດ ອົງການຈັດຕັ້ງສາກົນຕ່າງໆ ງົບປະມານສູນກາງ ງົບປະມານທ້ອງຖິ່ນ ດ້ວຍການປະເມີນລາຄາຕາມຕະຫຼາດເພື່ອຈົດເຂົ້າບັນຊີກ່ຽວຂ້ອງ ( ລາຍການຈົດມີ ແລະ ຈົດໜີ້ ຂອງບັນຊີ 37011 ຈະຈົດບັນຊີຄູ່ພົວພັນກັບບັນຊີ 144) (ບັນຊີເຫຼືອມີ).

**ເບື້ອງມີຈິດ**: ຈຳນວນເງິນທີ່ທະນາຄານໄດ້ຮັບຈາກການຊ່ວຍເຫຼືອດ້ວຍການປະເມີນຕາມລາຄາຕະຫຼາດ

**ເບື້ອງໜີ້ຈິດ**: ຈຳນວນເງິນທີ່ທະນາຄານໂອນມູນຄ່າເງິນຊ່ວຍໜູນກໍ່ສ້າງພື້ນຖານໃຫ້ແກ່ພາກສ່ວນອື່ນ

**ຍອດເຫຼືອມີ**: ສະແດງຈຳນວນເງິນມູນຄ່າເງິນຊ່ວຍໜູນກໍ່ສ້າງພື້ນຖານທີ່ທະນາຄານໄດ້ຮັບຈາກການຊ່ວຍເຫຼືອ

ບັນຊີ 37012 ໃຊ້ເພື່ອບັນທຶກຕິດຕາມຈຳນວນທຶນຊ່ວຍໜູນກໍ່ສ້າງພື້ນຖານທີ່ໄດ້ແບ່ງສ່ວນເຂົ້າບັນຊີຜົນໄດ້ຮັບຕາມອັດຕາການຫັກຄ່າຫຼຸ້ຍຫ້ຽນຂອງຊັບສິນບັດນັ້ນໆ (ບັນຊີເຫຼືອໜີ້).

**ເບື້ອງໜີ້ຈົດ**: ຈຳນວນເງິນຈົດເຂົ້າບັນຊີຜົນໄດ້ຮັບ
**ເບື້ອງມີຈົດ**: ຈຳນວນເງິນທີ່ໄດ້ໂອນໃຫ້ແກ່ພາກສ່ວນອື່ນ
**ຍອດເຫຼືອໜີ້**: ສະແດງເຖິງຈຳນວນເງິນທີ່ໄດ້ໂອນເຂົ້າບັນຊີຜົນໄດ້ຮັບແລ້ວ

ບັນຊີ 3702 ທຶນຂອງລັດທີ່ໄດ້ຈັດສັນ ແມ່ນຈຳນວນເງິນທີ່ອົງການຂອງລັດໃຫ້ຢືມເພື່ອແນໃສ່ປະກອບທຶນໃນການຊື້ຊັບສິນສະເພາະ ຊຶ່ງສະຖາບັນການເງິນຕ້ອງທົດແທນຄືນໃຫ້ອົງການທີ່ກ່ຽວຂ້ອງບົນເງື່ອນໄຂສະເພາະໃດໜຶ່ງ.

**ເບື້ອງມີຈົດ**: ຈຳນວນເງິນທີ່ລັດໄດ້ຈັດສັນໃຫ້ຕ້ອງທົດແທນຄືນ
**ເບື້ອງໜີ້ຈົດ**: ຈຳນວນເງິນທີ່ໄດ້ທົດແທນໃຫ້ລັດ
**ຍອດເຫຼືອມີ**: ສະແດງເຖິງຈຳນວນເງິນຍັງເຫຼືອທີ່ສະຖາບັນຕ້ອງທົດແທນຄືນໃຫ້ລັດ

### 380 ກຳໄລ-ຂາດທຶນສະສົມ

ບັນຊີ 380 ໃຊ້ເພື່ອບັນທຶກ ກຳໄລ - ຂາດທຶນສະສົມ ເລີ້ມແຕ່ເປີດ ທະນາຄານ ຊຶ່ງຂາຮຸ້ນ ຫຼື ຜູ້ຖືຮຸ້ນໄດ້ເຍື້ອນການແບ່ງປັນ(ບັນຊີເຫຼືອໜີ້/ເຫຼືອມີ).

**ເບື້ອງມີຈົດ**: ຈຳນວນເງິນກຳໄລສຸດທິ ເຫຼືອຈາກການແບ່ງປັນໃຫ້ຂາຮຸ້ນ, ຈຳນວນເງິນຊຳລະບ້ວງຂາດທຶນປີຜ່ານມາ
**ເບື້ອງໜີ້ຈົດ**: ຈຳນວນເງິນຂາດທຶນຍົກມາຈາກປີກ່ອນ, ຈຳນວນເງິນເຫຼືອຈາກການຈັດສັນປີກ່ອນເພື່ອເຂົ້າບັນຊີ 3908 ເພື່ອແບ່ງປັນໃນປີ
**ຍອດເຫຼືອມີ**: ສະແດງເຖິງຍອດຍົກມາທີ່ເປັນກຳໄລ
**ຍອດເຫຼືອໜີ້**: ສະແດງເຖິງຍອດຍົກມາທີ່ເປັນຂາດທຶນ

### 390 ຜົນໄດ້ຮັບໃນປີ

3901 ກຳໄລ ຫຼື ຂາດທຶນໃນປີ
3908 ຜົນໄດ້ຮັບລໍຖ້າໃຫ້ຮັບຮອງ

ບັນຊີ 390 ໃຊ້ເພື່ອບັນທຶກຕິດຕາມຜົນໄດ້ຮັບ ໝາຍເຖິງ ກຳໄລ-ຂາດທຶນໃນປີລໍຖ້າ ໃຫ້ຮັບຮອງ ຊຶ່ງບັນຊີດັ່ງກ່າວເກີດຂື້ນໃນທ້າຍປີ ທີ່ພົວພັນ ກັບບັນຊີປະເພດລາຍຮັບ, ປະເພດລາຍຈ່າຍ ເປັນສ່ວນຫຼາຍບັນຊີນີ້ກ່ອນຈະຂ້າມໄປປີໃໝ່ຈະຕ້ອງຊຳລະສະສາງໃຫ້ເຫຼືອສູນ.

ບັນຊີ 3901 ກຳໄລ ຫຼື ຂາດທຶນໃນປີ ໃຊ້ເພື່ອບັນທຶກຈຳນວນເງິນກຳໄລ ຫຼື ຂາດທຶນໃນປີ ຂອງທະນາຄານຊຶ່ງແມ່ນຈຳນວນເງິນຜິດດ່ຽງລະຫວ່າງລາຍຮັບທຸກປະເພດ ແລະ ລາຍຈ່າຍທຸກປະເພດໃນປີ ກຳໄລສຸດທິ ໝາຍເຖິງຈຳນວນເງິນຂອງກຳໄລ ເຫຼືອຈາກມອບອາກອນກຳໄລໃຫ້ລັດ.

**ເບື້ອງມີຈິດ**: ຈຳນວນເງິນໂອນມາຈາກລາຍຮັບທຸກປະເພດ,ຈຳນວນເງິນຂາດທຶນ ໂອນໄປບັນຊີ 3908 ເພື່ອລໍຖ້າແກ້ໄຂ

**ເບື້ອງໜີ້ຈິດ**: ຈຳນວນເງິນໂອນມາຈາກລາຍຈ່າຍທຸກປະເພດ,ຈຳນວນເງິນຈ່າຍອາກອນກຳໄລ, ກຳໄລສຸດທິໂອນໄປບັນຊີ 3908 ແລະ ຈຳນວນເງິນປັນຜົນໃຫ້ຂາຮຸ້ນ

**ຍອດເຫຼືອມີ**: ສະແດງເຖິງກຳໄລໃນປີ

**ຍອດເຫຼືອໜີ້**: ສະແດງເຖິງຂາດທຶນໃນປີ

ບັນຊີ 3908 ຜົນໄດ້ຮັບລໍຖ້າໃຫ້ຮັບຮອງ ໃຊ້ເພື່ອບັນທຶກກຳໄລສຸດທິຫຼັງມອບອາກອນກຳໄລໃຫ້ລັດເພື່ອລໍຖ້າແບ່ງປັນເຂົ້າຄັງຕ່າງໆ ຕາມການຕົກລົງຂອງສະພາບໍລິຫານ.

**ເບື້ອງມີຈິດ**: ກຳໄລສຸດທິໂອນມາຈາກບັນຊີ ກຳໄລ-ຂາດທຶນ, ຈຳນວນເງິນໂອນມາຈາກບັນຊີ 380 ເພື່ອແບ່ງເຂົ້າຄັງຕ່າງໆ, ຈຳນວນເງິນຂາດທຶນໂອນໄປບັນຊີກຳໄລ - ຂາດທຶນສະສົມ

**ເບື້ອງໜີ້ຈິດ**: ຈຳນວນເງິນໂອນໄປບັນດາຄັງຕ່າງໆ, ຈຳນວນເງິນໂອນໄປບັນຊີ 380

**ຍອດເຫຼືອມີ**: ສະແດງເຖິງກຳໄລສຸດທິລໍຖ້າແບ່ງປັນ

**ຍອດເຫຼືອໜີ້**: ສະແດງເຖິງຂາດທຶນໃນປີລໍຖ້າແກ້ໄຂ

## ປະເພດ 4
## ລາຍຈ່າຍ

ບັນຊີລາຍຈ່າຍ ໃຊ້ບັນທຶກບັນດາລາຍຈ່າຍທັງໝົດຂອງທະນາຄານ, ໂດຍໄດ້ລົງເລີກການຈຳແນກລະຫວ່າງ ດອກເບ້ຍ ແລະ ຄ່າທຳນຽມກ່ຽວກັບທຶນ, ໂດຍສະເພາະກ່ຽວກັບເງິນກູ້ຢືມ ຕ້ອງໄດ້ດຳເນີນການຄິດໄລ່ດອກເບ້ຍເພື່ອທົດແທນຄືນໃຫ້ແກ່ຕົ້ນທຶນທີ່ໄດ້ກູ້ຢືມຕົວຈິງ ຕາມຊ່ວງໄລຍະເວລາ, ຄ່າທຳນຽມປະກອບດ້ວຍຄ່າທຳນຽມທີ່ພົວພັນກັບລາຍການເຄື່ອນໄຫວທຸລະກິດຂອງທະນາຄານ ຍົກເວັ້ນຄ່າທຳນຽມທີ່ໄດ້ຄິດໄລ່ຕາມຊວ່ງໄລຍະເວລາ. ນອກຈາກນີ້ ບັນຊີລາຍຈ່າຍ ຍັງໄດ້ຈຳແນກເພື່ອບັນທຶກລາຍຈ່າຍ ລະອຽດດັ່ງນີ້:

- ລາຍຈ່າຍ ໃນທຸລະກິດທະນາຄານ
- ລາຍຈ່າຍ ບໍລິການຈາກທາງນອກ ແລະລາຍຈ່າຍອື່ນໆ ໃນທຸລະກິດ
- ພາສີ ອາກອນ
- ລາຍຈ່າຍໃຫ້ພະນັກງານ
- ພູດສ່ວນລາຍຈ່າຍ ໃນການເຄື່ອນໄຫວທຸລະກິດຮ່ວມກັນ
- ຫັກເງິນແຮ ເພື່ອຄວາມສ່ຽງໄພລວມຂອງທະນາຄານ
- ລາຍຈ່າຍພິເສດ
- ຫັກຄ່າຫລຸ້ຍຫ້ຽນ ແລະຄ່າເສື່ອມມູນຄ່າຊັບສົມບັດຄົງທີ່ ບໍ່ມີຕົວຕົນ ແລະມີຕົວຕົນ, ຫັກຄ່າເສື່ອມມູນຄ່າ ແລະ ຂາດທຶນບ້ວງໜີ້ຕ້ອງຮັບເກັບຄືນບໍ່ໄດ້
- ອາກອນກຳໄລ.

410 ລາຍຈ່າຍໃນການທຸລະກິດທະນາຄານ

4101 ລາຍຈ່າຍໃນການເຄື່ອນໄຫວດ້ານເງິນຕາ ແລະການເຄື່ອນໄຫວລະຫວ່າງທະນາຄານ

41011 ລາຍຈ່າຍກ່ຽວກັບຄຳ ແລະ ວັດຖຸມີຄ່າ

410111 ລາຍຈ່າຍກ່ຽວກັບຄຳ

410112 ລາຍຈ່າຍກ່ຽວກັບວັດຖຸມີຄ່າອື່ນໆ

41012 ດອກເບ້ຍຈ່າຍໃຫ້ທະນາຄານກາງ,ສະຖາບັນເງິນຝາກໄປສະນີ ແລະ ຄັງເງິນແຫ່ງຊາດ

410121 ດອກເບ້ຍຈ່າຍໃຫ້ທະນາຄານກາງ

4101211 ດອກເບ້ຍເງິນຝາກຂອງທະນາຄານກາງ

4101212 ດອກເບ້ຍເງິນກູ້ຢືມມາຈາກທະນາຄານກາງ

410122 ດອກເບ້ຍຈ່າຍໃຫ້ສະຖາບັນເງິນຝາກໄປສະນີ

410123 ດອກເບ້ຍຈ່າຍໃຫ້ຄັງເງິນແຫ່ງຊາດ

41013 ດອກເບ້ຍຈ່າຍໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນໆ

410131 ດອກເບ້ຍຈ່າຍໃຫ້ທະນາຄານອື່ນພາຍໃນປະເທດ

4101311 ດອກເບ້ຍເງິນຝາກຂອງທະນາຄານອື່ນພາຍໃນປະເທດ

4101312 ດອກເບ້ຍເງິນກູ້ຢືມມາຈາກທະນາຄານອື່ນພາຍໃນປະເທດ

410132 ດອກເບ້ຍຈ່າຍໃຫ້ທະນາຄານອື່ນຢູ່ຕ່າງປະເທດ

4101321 ດອກເບ້ຍເງິນຝາກຂອງທະນາຄານອື່ນຢູ່ຕ່າງປະເທດ

4101322 ດອກເບ້ຍເງິນກູ້ຢືມມາຈາກທະນາຄານຢູ່ຕ່າງປະເທດ

41014 ດອກເບ້ຍເງິນກູ້ຢືມມາໂດຍມີມູນຄ່າຫຼັກຊັບຄ້ຳປະກັນ

410141 ດອກເບ້ຍເງິນກູ້ຢືມມາເປັນປະຈຳວັນ

410142 ດອກເບ້ຍເງິນກູ້ຢືມມາມີກຳນົດ

41016 ດອກເບ້ຍອື່ນທີ່ພົວພັນກັບລາຍການເຄື່ອນໄຫວລະຫວ່າງທະນາຄານ

410161 ຄ່າໃຊ້ສິດຊື້ຄືນໄດ້ ແລະ ລາຍການປະເພດດຽວກັນ

410162  ສ່ວນຜິດດ່ຽງອັດຕາດອກເບ້ຍ

410168  ລາຍຈ່າຍດອກເບ້ຍອື່ນໆ

41018  ຄ່າທຳນຽມຕ່າງໆໃນການເຄື່ອນໄຫວລະຫວ່າງທະນາຄານ

4102 ລາຍຈ່າຍໃນການເຄື່ອນໄຫວກັບລູກຄ້າ

41021 ດອກເບ້ຍເງິນຝາກ

410211 ດອກເບ້ຍເງິນຝາກກະແສລາຍວັນ

410213 ດອກເບ້ຍເງິນຝາກປະຫຍັດ

410215 ດອກເບ້ຍເງິນຝາກມີກຳນົດ

4102151 ກຳນົດໜຶ່ງປີລົງມາ

4102152 ກຳນົດໜຶ່ງປີຂຶ້ນໄປ

41022 ດອກເບ້ຍຂອງໃບຢັ້ງຢືນກູ້ຢືມເງິນ

410221 ດອກເບ້ຍພັນທະບັດກູ້ຢືມເງິນໄລຍະສັ້ນ

410222 ດອກເບ້ຍສະຫຼາກປະຫຍັດ

41023 ດອກເບ້ຍເງິນກູ້ຢືມມາຈາກລູກຄ້າວົງການການເງິນ

410231 ເງິນກູ້ຢືມເປັນປະຈຳ

410232 ເງິນກູ້ຢືມມາມີກຳນົດ

4102321 ໜຶ່ງປີລົງມາ

4102322 ເກີນໜຶ່ງປີຂຶ້ນໄປ ແຕ່ບໍ່ເກີນຫ້າປີ

4102323 ເກີນຫ້າປີຂຶ້ນໄປ

41024 ດອກເບ້ຍເງິນກູ້ຢືມມາໂດຍມີມູນຄ່າຫຼັກຊັບຄ້ຳປະກັນ

410241 ເງິນກູ້ຢືມມາເປັນປະຈຳ

410242 ເງິນກູ້ຢືມມາມີກຳນົດ

41026 ດອກເບ້ຍອື່ນໆທີ່ພົວພັນກັບການເຄື່ອນໄຫວກັບລູກຄ້າ

410261 ຄ່າໃຊ້ສິດຊື້ຄືນໄດ້ ແລະ ລາຍການປະເພດດຽວກັນ

410262 ສ່ວນຜິດດ່ຽງອັດຕາດອກເບ້ຍ

410268  ລາຍຈ່າຍດອກເບ້ຍອື່ນໆ

41028 ຄ່າທຳນຽມໃນການເຄື່ອນໄຫວກັບລູກຄ້າ

**ບັນຊີ 41012, 4101212, 4101312, 41014, 41023, 41024, 41026 ໃຊ້ເພື່ອບັນທຶກລາຍຈ່າຍ:**

- ດອກເບ້ຍແລະ ລາຍຈ່າຍປະເພດດຽວກັນທີ່ພົວພັນກັບບັນຊີເງິນຝາກທີ່ທະນາຄານ ຫຼື ສະຖາບັນການເງິນຕ້ອງຈ່າຍດອກເບ້ຍໃຫ້ ທະນາຄານແຫ່ງ ສປປ ລາວ , ສຳນັກງານແຊັກໄປສະນີ ແລະ ຄັງແຫ່ງຊາດທີ່ເປີດບັນຊີເງິນຝາກໄວ້ກັບທະນາຄານຕົນ (ກົງກັບບັນຊີ 21271 ແລະ 21272).
- ດອກເບ້ຍແລະ ລາຍຈ່າຍປະເພດດຽວກັນທີ່ພົວພັນກັບບັນຊີເງິນຝາກລະຫວ່າງທະນາຄານພາຍໃນ ແລະ ຕ່າງປະເທດທີ່ເປີດບັນຊີເງິນຝາກໄວ້ກັບທະນາຄານຕົນ (ກົງກັບບັນຊີ 21371).
- ດອກເບ້ຍແລະ ລາຍຈ່າຍປະເພດດຽວກັນທີ່ພົວພັນກັບບ້ວງບັນຊີເງິນກູ້ເປັນປະຈຳວັນ ແລະ ມີກຳນົດທະນາຄານໄດ້ກູ້ຢືມຈາກທະນາຄານອື່ນ (ກົງກັບບັນຊີ 21372).
- ດອກເບ້ຍ ແລະ ລາຍຈ່າຍປະເພດດຽວກັນທີ່ພົວພັນກັບການເຄື່ອນໄຫວຮັບ-ມອບໂດຍມີໃບຢັ້ງຢືນຊັບຄ້ຳປະກັນເປັນປະຈຳວັນ ແລະ ມີກຳນົດໃຫ້ທະນາຄານອື່ນ(ກົງກັບບັນຊີ 21471 ແລະ 21472).
- ດອກເບ້ຍແລະ ລາຍຈ່າຍປະເພດດຽວກັນທີ່ພົວພັນກັບການເຄື່ອນໄຫວທີ່ໄດ້ເຊັນກັນ ບົນພື້ນຖານຂໍ້ຕົກລົງລະຫວ່າງບັນດາຕົວແທນການເງິນທີ່ບໍ່ແມ່ນສະຖາບັນການເງິນ ເຊັ່ນ ກອງທຶນເບ້ຍບຳນານ (ກົງກັບບັນຊີ 2167).
- ດອກເບ້ຍ ແລະ ລາຍຈ່າຍປະເພດດຽວກັນທີ່ພົວພັນກັບການເຄື່ອນໄຫວ ຮັບ-ມອບທີ່ໄດ້ດຳເນີນບົນພື້ນຖານຂໍ້ຕົກລົງກັບບັນດາຕົວແທນເສດຖະກິດ ທີ່ບໍ່ແມ່ນສະຖາບັນການເງິນ (ກົງກັບບັນຊີ 22071, 22073, 22074, 22075, 22076, 22371, 22375, 22471, 22475, 2267).
- ດອກເບ້ຍ ແລະ ລາຍຈ່າຍປະເພດດຽວກັນທີ່ພົວພັນກັບບັນຊີເງິນຝາກຂອງກອງທຶນປົກປ້ອງຜູ້ຝາກເງິນທີ່ເປີດບັນຊີໄວ້ກັບທະນາຄານຕົນ (ກົງກັບບັນຊີ 212714).
- ດອກເບ້ຍ ແລະ ລາຍຈ່າຍປະເພດດຽວກັນທີ່ໄດ້ຈ່າຍໃຫ້ສະຖາບັນການເງິນ ຫຼື ລູກຄ້າໃນກໍລະນີເຄື່ອນໄຫວຂາຍອີງປະກອບຊັບສິນ ໂດຍມີທາງເລືອກຊື້ຄືນ ຫຼື ເກັບຄືນໄດ້, ຈຳນວນເງິນຜົດໂຕນກັນທາງດ້ານອັດຕາດອກເບ້ຍທີ່ໄດ້ຈ່າຍໃຫ້ສະຖາບັນການເງິນ ຫຼື ລູກຄ້າໃນກໍລະນີມີການແລກປ່ຽນລ່ວງໜ້າທີ່ໄດ້ເຊັນສັນຍາກັນໃນຖານະຄ້ຳປະກັນ.

**ເບື້ອງໜີ້ຈັດ:** ຈຳນວນເງິນດອກເບ້ຍເມື່ອຮອດກຳນົດເວລາຄິດໄລ່ດອກເບ້ຍຄ້າງຈ່າຍໃນເວລາປັບປຸງບັນຊີທ້າຍເດືອນ ຫຼື ທ້າຍປີ

**ເບື້ອງມີຈັດ:** ຈຳນວນຫຼຸດຜ່ອນ ຫຼື ຈຳນວນເງິນລາຍຈ່າຍທັງໝົດຂອງປີເພື່ອໂອນໄປບັນຊີ 3901

**ຍອດເຫຼືອໜີ້:** ສະແດງເຖິງຍອດເຫຼືອບັນຊີລາຍຈ່າຍດອກເບ້ຍກ່ຽວກັບເງິນຝາກ, ເງິນກູ້ຢືມ ແລະ ໜີ້ສິນອື່ນໆ

4103 ລາຍຈ່າຍໃນການເຄື່ອນໄຫວກ່ຽວກັບຫຼັກຊັບ

41031 ດອກເບ້ຍຫຼັກຊັບທີ່ໄດ້ຂາຍໂດຍມີສັນຍາຊື້ຄືນ

410311 ດອກເບ້ຍຫຼັກຊັບທີ່ຂາຍໄດ້ໂດຍມີສັນຍາຊື້ຄືນຈາກທະນາຄານອື່ນ

410312 ດອກເບ້ຍຫຼັກຊັບທີ່ຂາຍໄດ້ໂດຍມີສັນຍາຊື້ຄືນຈາກລູກຄ້າ

41032 ສ່ວນຂາດທຶນກ່ຽວກັບຫຼັກຊັບເພື່ອຄ້າ

410321 ຂາດທຶນຈາກຫຼັກຊັບເພື່ອຄ້າ

410327 ດອກເບ້ຍຫຼັກຊັບເພື່ອຄ້າ ທີ່ໄດ້ກູ້ຢືມມາ

41033 ລາຍຈ່າຍກ່ຽວກັບຫຼັກຊັບຊື້ເພື່ອຂາຍ

410331 ຄ່າໃຊ້ຈ່າຍໃນການໄດ້ມາເປັນກຳມະສິດ

420332 ພູດສ່ວນເພີ່ມມູນຄ່າຂອງຫຼັກຊັບຊື້ເພື່ອຂາຍ

410336 ຂາດທຶນຈາກການຂາຍຫຼັກຊັບ ຊື້ເພື່ອຂາຍ

41034 ລາຍຈ່າຍກ່ຽວກັບຫຼັກຊັບລົງທຶນ

410341 ຄ່າໃຊ້ຈ່າຍໃນການໄດ້ມາເປັນກຳມະສິດ

410342 ພູດສ່ວນເພີ່ມມູນຄ່າຂອງຫຼັກຊັບລົງທຶນ

41036 ລາຍຈ່າຍກ່ຽວກັບໜີ້ຕ້ອງສົ່ງທີ່ກຳນົດຈາກຫຼັກຊັບ

410361 ດອກເບ້ຍຂອງຫຼັກຊັບຂອງຕະຫຼາດລະຫວ່າງທະນາຄານ

410362 ດອກເບ້ຍຂອງໃບຢັ້ງຢືນໜີ້ທີ່ປ່ຽນມືໄດ້

410364 ດອກເບ້ຍຫຸ້ນກູ້ທີ່ໄດ້ຈຳໜ່າຍອອກ

410366 ລາຍຈ່າຍອື່ນໆກ່ຽວກັບໜີ້ຕ້ອງສົ່ງທີ່ກຳເນີດຈາກຫຼັກຊັບ

41037 ລາຍຈ່າຍອື່ນໆໃນການເຄື່ອນໄຫວກ່ຽວກັບຫຼັກຊັບ

41038 ຄ່າທຳນຽມຕ່າງໆໃນການເຄື່ອນໄຫວດ້ານຫຼັກຊັບ

**ບັນຊີ 41031** ໃຊ້ເພື່ອບັນທຶກຕິດຕາມດອກເບ້ຍແລະ ລາຍຈ່າຍປະເພດດຽວກັນ ທີ່ຕ້ອງຊຳລະໃນການມອບໃຫ້ໃບຢັ້ງຢືນຊັບຄ້ຳປະກັນ ໂດຍມີການມອບໃບຢັ້ງຢືນຊັບພ້ອມກ່ຽວພັນກັບບັນຊີ 23017.

**ບັນຊີ 41032** ໃຊ້ເພື່ອບັນທຶກຕິດຕາມຈຳນວນເງິນຂາດທຶນໃນກໍລະນີຕີມູນຄ່າຄືນໃໝ່ຕາມລາຄາຕະຫຼາດ ຫຼື ໃນເວລາໂອນກຳມະສິດໃບຢັ້ງຢືນຊັບທີ່ສະແດງອອກຢູ່ໃນຄັງໃບຢັ້ງຢືນຊັບ ຊື້-ຂາຍ ໂດຍມີສັນຍາຊື້ຄືນ ຂາຍຄືນ ກໍ່ຄືການຕີມູນຄ່າໜີ້ຕ້ອງສົ່ງບ້ວງໃບຢັ້ງຢືນຊັບທີ່ໄດ້ກູ້ຢືມກ່ຽວພັນກັບບັນຊີ 23027.

**ບັນຊີ 41033** ໃຊ້ເພື່ອບັນທຶກຕິດຕາມລາຍຈ່າຍກ່ຽວກັບໃບຢັ້ງຢືນຊັບ ຝາກໝູນ ໂດຍໄດ້ແຍກບັນທຶກລາຍຈ່າຍຄື: ຄ່າໄດ້ມາເປັນກຳມະສິດ,ແບ່ງພູດສ່ວນເພີ້ມມູນຄ່າ ແລະ ຂາດທຶນຈາກການຂາຍໃບຢັ້ງຢືນຊັບກ່ຽວພັນກັບບັນຊີ 1303.

**ບັນຊີ 41034** ໃຊ້ເພື່ອບັນທຶກຕິດຕາມລາຍຈ່າຍກ່ຽວກັບໃບຢັ້ງຢືນຊັບລົງທຶນ ໂດຍໄດ້ແຍກບັນທຶກລາຍຈ່າຍຄື: ຄ່າໃຊ້ຈ່າຍໃນການມາເປັນກຳມະສິດ ແລະ ອົງປະກອບຂອງສ່ວນເພີ່ມມູນຄ່າກ່ຽວພັນກັບບັນຊີ 1304.

**ບັນຊີ 41036** ໃຊ້ເພື່ອບັນທຶກຕິດຕາມລາຍຈ່າຍບ້ວງໜີ້ຕ້ອງສົ່ງກຳເນີດຈາກໃບຢັ້ງຢືນຊັບເຊັ່ນ: ດອກເບ້ຍ ແລະ ລາຍຈ່າຍການເງິນ ລວມທັງຄ່າທຳນຽມ ແລະ ຄ່ານາຍໜ້າທີ່ໄດ້ຈ່າຍໃຫ້ສະຖາບັນບ່ອນໃຫ້ຈ່າຍເງິນບ້ວງເງິນກູ້ຢືມພັນທະບັດ, ຮຸ້ນກູ້ ທີ່ສະຖາບັນການເງິນທີ່ໄດ້ຈຳໜ່າຍອອກພົວພັນກັບບັນຊີ 23027 ຄ່າທົດແທນສ່ວນເພີ້ມການຈຳໜ່າຍພັນທະບັດ ແລະ ໃບຢັ້ງຢືນຊັບອື່ນໆ ທີ່ໃຫ້ລາຍໄດ້ຄົງທີ່ ທີ່ສະຖາບັນໄດ້ຈຳໜ່າຍອອກພົວພັນກັບບັນຊີ 23357 ແລະ 23367.

**ບັນຊີ 41038** ໃຊ້ເພື່ອບັນທຶກຕິດຕາມລາຍຈ່າຍ ຄ່າທຳນຽມທີ່ພົວພັນກັບລາຍການເຄື່ອນໄຫວທາງດ້ານເອກະສານລ່ວງໜ້າບ້ວງອັດຕາດອກເບ້ຍທີ່ໄດ້ເຊັນສັນຍາເພື່ອເປັນການຄ້ຳປະກັນ.

**ເບື້ອງໜີ້ຈິດ:** ຈຳນວນເງິນລາຍຈ່າຍເພື່ອຄ້ຳປະກັນຈຳນວນເງິນກູ້ຢືມມາທີ່ມີການຮັບ ມອບ ໃບຢັ້ງຢືນຮຸ້ນ,ຈຳນວນເງິນຂາດທຶນຈາກການຈຳໜ່າຍໃບຢັ້ງຢືນຮຸ້ນຊື້-ຂາຍ, ຈຳນວນເງິນລາຍຈ່າຍກ່ຽວກັບໃບຢັ້ງຢືນຮຸ້ນລົງທຶນ,ໃບຢັ້ງ ຢືນຮຸ້ນຝາກໝູນ ແລະ ໃບຢັ້ງຢືນກູ້ຢືມເງິນ, ຈຳນວນເງິນຄ່າທຳນຽມ ແລະ ລາຍຈ່າຍອື່ນໆທີ່ ພົວພັນກັບລາຍການເຄື່ອນໄຫວໃບຢັ້ງຢືນຮຸ້ນ.

**ເບື້ອງມີຈິດ:** ຈຳນວນຫຼຸດຜ່ອນ ຫຼື ຈຳນວນເງິນລາຍຈ່າຍທັງໝົດຂອງປີເພື່ອໂອນໄປບັນຊີ 3901

**ຍອດເຫຼືອໜີ້:** ສະແດງເຖິງຍອດເຫຼືອລາຍຈ່າຍໃນເດືອນ ຫຼື ໃນປີ

4104 ລາຍຈ່າຍໃນການໃຫ້ເຊົ່າ-ຊື້ ແລະ ໃຫ້ເຊົ່າທຳມະດາ

41041 ລາຍຈ່າຍໃນການເຄື່ອນໄຫວເຊົ່າຊື້

410411 ຄ່າຫຼຸ້ຍຫຼ້ຽນ ຊ.ຄ .ທໃຫ້ເຊົ່າ-ຊື້

410412 ຫັກເງິນແຮສະເພາະ

410413 ຫັກເງິນແຮກ່ຽວກັບ ຊ.ຄ.ທ ໃຫ້ເຊົ່າ-ຊື້

410415 ຫັກຄ່າເສື່ອມມູນຄ່າ ຊ.ຄ.ທ ໃຫ້ເຊົ່າ-ຊື້

410416 ຂາດທຶນຈາກການຂາຍ ຊ.ຄ.ທ ໃຫ້ເຊົ່າຊື້

410418 ລາຍຈ່າຍອື່ນໆກ່ຽວກັບການເຄື່ອນໄຫວໃຫ້ເຊົ່າ-ຊື້

**ບັນຊີ 41041** ໃຊ້ເພື່ອບັນທຶກບັນດາລາຍຈ່າຍທີ່ກ່ຽວກັບລາຍການເຄື່ອນໄຫວເຊົ່າ-ຊື້ ແລະ ລາຍການປະເພດດຽວກັນຊຶ່ງກົງກັບບັນຊີ 146 ແລະ ໄດ້ໃຈ້ແຍກຕາມເປົ້າໝາຍ ດັ່ງນີ້:

**ບັນຊີ 410411** ໃຊ້ເພື່ອບັນທຶກຈຳນວນເງິນຫັກຄ່າຫຼຸ້ຍຫຼ້ຽນຕໍ່ຊັບສິນບັດ ສັງຫາລິມະຊັບ ຫຼື ອະສັງຫາລິມະຊັບທີ່ໄດ້ໃຫ້ເຊົ່າ-ຊື້ ຫຼື ເອົາໃຫ້ເຊົ່າໂດຍມີທາງເລືອກຊື້ ຫຼື ບໍ່ເຊົ່າພາຍຫຼັງເລີກລົ້ມສັນຍາ.

**ບັນຊີ 410412** ໃຊ້ເພື່ອບັນທຶກຕິດຕາມຈຳນວນເງິນແຮຫັກສະເພາະເພື່ອປ້ອງກັນຄວາມເສຍຫາຍທີ່ອາດເກີດຂຶ້ນກ່ອນຊ່ວງອາຍຸການນຳໃຊ້ຊັບສິນບັດຄົງທີ່ ທີ່ໄດ້ເອົາໃຫ້ເຊົ່າ-ຊື້ ຫຼື ຊັບສິນບັດຄົງທີ່ປະເພດດຽວກັນ.

**ບັນຊີ 410413** ໃຊ້ເພື່ອບັນທຶກຈຳນວນເງິນຫັກຄ່າເສື່ອມມູນຄ່າຊັບສິນບັດຄົງທີ່ ທີ່ໄດ້ເອົາໃຫ້ເຊົ່າ-ຊື້ ແລະ ຊື້ຊັບສິນບັດຄົງທີ່ປະເພດດຽວກັນຊຶ່ງເກີດຂຶ້ນຈາກການຕີລາຄາຊັບສິນບັດນັ້ນໆໃນເວລາທ້າຍປີ ( ມູນຄ່າຍັງເຫຼືອໃນບັນຊີສູງກວ່າລາຄາຕະຫຼາດ).

**ບັນຊີ 410415** ໃຊ້ເພື່ອບັນທຶກຈຳນວນເງິນເສຍຫາຍທີ່ເກີດຈາກການປ່ຽນແປງມູນຄ່າໃຫ້ເຊົ່າພາຍຫຼັງໝົດສັນຍາເຊົ່າສະບັບເກົ່າແລ້ວເອົາໃຫ້ເຊົ່າໃໝ່ ຍ້ອນຜູ້ເຊົ່າເກົ່າບໍ່ຊື້.

**ບັນຊີ 410416** ໃຊ້ເພື່ອບັນທຶກຈຳນວນເງິນຂາດທຶນຈາກການຂາຍຊັບສິນບັດຄົງທີ່ ທີ່ໄດ້ໃຫ້ເຊົ່າ-ຊື້ ແລະ ຊັບສິນບັດຄົງທີ່ປະເພດດຽວກັນ.

**ບັນຊີ 410418** ໃຊ້ເພື່ອບັນທຶກຈຳນວນເງິນລາຍຈ່າຍທີ່ພົວພັນກັບການດຳເນີນການເອົາຊັບສິນບັດໃຫ້ເຊົ່າຊື້ເຊັ່ນ: ຊື້ເອກະສານປະກອບສັນຍາ ຄ່າເຊັນເອກະສານ ແລະ ແລ່ນເອກະສານ.

**ເບື້ອງໜີ້ຈິດ:** ຈຳນວນເງິນຫັກຄ່າຫຼູ້ຍຫ້ຽນຊັບສິນບັດທີ່ໄດ້ເອົາໃຫ້ເຊົ່າຊື້ ຈຳນວນເງິນຫັກແຮສະເພາະ ຈຳນວນເງິນຄ່າເສື່ອມມູນຄ່າ; ຈຳນວນເງິນເສຍຫາຍທີ່ເກີດຈາກການປ່ຽນແປງມູນຄ່າໃຫ້ເຊົ່າ; ຈຳນວນເງິນຂາດທຶນຈາກການຂາຍຊັບສິນບັດທີ່ເອົາໃຫ້ເຊົ່າຊື້;ຈຳນວນເງິນລາຍຈ່າຍອື່ນໆທີ່ກ່ຽວພັນກັບການເອົາຊັບສິນບັດໃຫ້ເຊົ່າຊື້

**ເບື້ອງມີຈິດ:** ຈຳນວນຫຼຸດຜ່ອນ ຫຼື ຈຳນວນເງິນລາຍຈ່າຍທັງໝົດຂອງປີເພື່ອໂອນໄປບັນຊີ 3901

**ຍອດເຫຼືອໜີ້:** ສະແດງເຖິງຍອດເຫຼືອຈຳນວນເງິນລາຍຈ່າຍໃນເດືອນ ຫຼືໃນປີ

41042 ລາຍຈ່າຍໃນການໃຫ້ເຊົ່າທຳມະດາ

410421 ຄ່າຫຼູ້ຍຫ້ຽນຊັບສິນບັດຄົງທີ່ໃຫ້ເຊົ່າທຳມະດາ

410423 ເງິນແຮກ່ຽວກັບຊັບສິນບັດຄົງທີ່ໃຫ້ເຊົ່າທຳມະດາ

410425 ຄ່າເສື່ອມມູນຄ່າຊັບສິນບັດຄົງທີ່ໃຫ້ເຊົ່າທຳມະດາ

410426 ຂາດທຶນຈາກການຂາຍຊັບສິນບັດຄົງທີ່ໃຫ້ເຊົ່າທຳມະດາ

410428 ລາຍຈ່າຍອື່ນໆ ກ່ຽວກັບການເຄື່ອນໄຫວໃຫ້ເຊົ່າທຳມະດາ

ບັນຊີ 41042 ໃຊ້ເພື່ອບັນທຶກຕິດຕາມລາຍຈ່າຍທີ່ພົວພັນກັບຊັບສິນບັດຄົງທີ່ ທີ່ໃຫ້ເຊົ່າທຳມະດາ (ກົງກັບບັນຊີ 147).

**ເບື້ອງໜີ້ຈິດ:** ຫັກຄ່າຫຼູ້ຍຫ້ຽນ, ເງິນແຮ, ຫັກຄ່າເສື່ອມມູນຄ່າ, ຂາດທຶນຈາກການຂາຍ ແລະ ລາຍຈ່າຍອື່ນໆ ທີ່ກ່ຽວພັນຊັບສິນບັດຄົງທີ່ ທີ່ໃຫ້ເຊົ່າທຳມະດາ

**ເບື້ອງ ມີຈິດ:** ຈຳນວນຫຼຸດຜ່ອນ ຫຼື ຈຳນວນເງິນລາຍຈ່າຍທັງໝົດຂອງປີເພື່ອໂອນໄປບັນຊີ 3901

**ຍອດເຫຼືອໜີ້:** ສະແດງເຖິງຍອດເຫຼືອຈຳນວນເງິນລາຍຈ່າຍໃນເດືອນ ຫຼືໃນປີ

4105 ລາຍຈ່າຍກ່ຽວກັບໜີ້ຕ້ອງສົ່ງສຳຮອງ ແລະ ທຶນທີ່ລັດໄດ້ຈັດສັນ

41051 ດອກເບ້ຍເງິນກູ້ຢືມສຳຮອງຈາກທະນາຄານອື່ນ

410511 ດອກເບ້ຍເງິນກູ້ຢືມສຳຮອງມີກຳນົດ

410512 ດອກເບ້ຍເງິນກູ້ຢືມສຳຮອງບໍ່ມີກຳນົດ

41052 ດອກເບ້ຍເງິນກູ້ຢືມສຳຮອງຈາກລູກຄ້າ

410521 ດອກເບ້ຍເງິນກູ້ຢືມສຳຮອງມີກຳນົດ

410522 ດອກເບ້ຍເງິນກູ້ຢືມສຳຮອງບໍ່ມີກຳນົດ

41053 ລາຍຈ່າຍກ່ຽວກັບທຶນລັດໄດ້ຈັດສັນ

41058 ລາຍຈ່າຍອື່ນໆກ່ຽວກັບໜີ້ຕ້ອງສົ່ງສຳຮອງ

ບັນຊີ 41051 ໃຊ້ເພື່ອບັນທຶກລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍປະເພດດຽວກັນບ້ວງເງິນກູ້ຢືມ ແລະ ໜີ້ຕ້ອງສົ່ງສຳຮອງມີກຳນົດ ຖ້າວ່າມີການກຳນົດເວລາທົດແທນຄືນ ແລະ ອັດຕາດອກເບ້ຍຊຶ່ງພົວພັນກັບບັນຊີ 36071.

ບັນຊີ 41052 ໃຊ້ເພື່ອບັນທຶກລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍປະເພດດຽວກັນບ້ວງເງິນກູ້ຢືມ ແລະ ໜີ້ຕ້ອງສົ່ງສຳຮອງ ບໍ່ມີກຳນົດ ຊຶ່ງພົວພັນກັບບັນຊີ 36071 ເຊັ່ນກັນ.

ບັນຊີ 41053 ໃຊ້ເພື່ອບັນທຶກລາຍຈ່າຍທີ່ກ່ຽວພັນກັບບ້ວງເງິນທຶນຂອງລັດທີ່ໄດ້ຈັດສັນ ໃນກໍລະນີທີ່ສະຖາບັນການເງິນ ໄດ້ຮັບເຄື່ອງຊ່ວຍເຫຼືອລ້າ ແລະ ຕ້ອງຈົດເປັນທຶນ ກົງກັບບັນຊີ 3702.

ບັນຊີ 41058 ໃຊ້ບັນທຶກໂດຍສະເພາະບັນດາລາຍຈ່າຍກ່ຽວກັບລາຍການລົງທຶນລ່ວງໜ້າທາງດ້ານອັດຕາດອກເບ້ຍທີ່ໄດ້ເຊັນສັນຍາເປັນເງິນຄ້ຳປະກັນຊຶ່ງກົງກັບບັນຊີ 3601 ຫຼື 3602.

**ເບື້ອງໜີ້ຈົດ:** ຈຳນວນເງິນລາຍຈ່າຍດອກເບ້ຍບ້ວງເງິນກູ້ຢືມ ແລະ ໜີ້ຕ້ອງສົ່ງສຳຮອງມີກຳນົດ ແລະ ບໍ່ມີກຳນົດ ຈຳນວນເງິນລາຍຈ່າຍທີ່ກ່ຽວພັນກັບບ້ວງເງິນທຶນຂອງລັດທີ່ໄດ້ຈັດສັນ ຈຳນວນເງິນລາຍຈ່າຍກ່ຽວກັບການລົງທຶນລ່ວງໜ້າດ້ານອັດຕາດອກເບ້ຍທີ່ໄດ້ເຊັນສັນຍາເປັນເງິນຄ້ຳປະກັນ.

**ເບື້ອງມີຈົດ:** ຈຳນວນຫຼຸດຜ່ອນ ຫຼື ຈຳນວນເງິນລາຍຈ່າຍທັງໝົດຂອງປີເພື່ອໂອນໄປບັນຊີ 3901

**ຍອດເຫຼືອໜີ້:** ສະແດງເຖິງຍອດເຫຼືອຈຳນວນເງິນລາຍຈ່າຍທັງໝົດຂອງເດືອນ ຫຼື ໃນປີ.

4106 ລາຍຈ່າຍໃນການເຄື່ອນໄຫວແລກປ່ຽນເງິນຕາຕ່າງປະເທດ

41061 ລາຍຈ່າຍສ່ວນຂາດທຶນຈາກການແລກປ່ຽນເງິນຕາຕ່າງປະເທດ

41068 ຄ່າທຳນຽມໃນການແລກປ່ຽນເງິນຕາຕ່າງປະເທດ

**ບັນຊີ 41061** ໃຫ້ໃຊ້ບັນທຶກຈຳນວນເງິນຂາດທຶນຈາກການແລກປ່ຽນເງິນຕາຕ່າງປະເທດ ແລະ ທຸລະກິດຫຼັກຊັບທີ່ຕິດພັນກັບອັດຕາແລກປ່ຽນ ລະຫວ່າງສະກຸນເງິນທີ່ເກີດຂຶ້ນຈາກ:

- ການຊື້-ຂາຍເງິນຕາຕ່າງປະເທດ
- ການຕີມູນຄ່າເປັນແຕ່ລະໄລຍະ ກ່ຽວກັບການເຄື່ອນໄຫວເປັນເງິນຕາຕ່າງປະເທດ ແລະ ໂລຫະປະເສີດ ທີ່ເປັນກຳມະສິດຂອງທະນາຄານ
- ການຕີມູນຄ່າເປັນແຕ່ລະໄລຍະລາຄາລ່ວງໜ້າທີ່ຍັງເຫຼືອ ຂອງລາຍການເຄື່ອນໄຫວແລກປ່ຽນເງິນຕາຕ່າງປະເທດລ່ວງໜ້າ

**ບັນຊີ 41068** ໃຊ້ເພື່ອບັນທຶກຈຳນວນເງິນຈ່າຍຄ່າທຳນຽມກ່ຽວກັບການຊື້-ຂາຍເງິນຕາຕ່າງປະເທດ ແລະ ເອກະສານທາງການເງິນທີ່ເປັນເງິນຕາຕ່າງປະເທດ

**ເບື້ອງໜີ້ຈົດ:** ຈຳນວນເງິນຂາດທຶນຈາກການຊື້-ຂາຍເງິນຕາຕ່າງປະເທດ; ຄ່າທຳນຽມກ່ຽວກັບການຊື້-ຂາຍເງິນຕາຕ່າງປະເທດ ແລະ ເອກະສານທາງການເງິນ.

**ເບື້ອງມີຈົດ:** ຈຳນວນຫຼຸດຜ່ອນ ຫຼື ຈຳນວນເງິນລາຍຈ່າຍທັງໝົດຂອງປີໂອນໄປບັນຊີ 3901.

**ຍອດເຫຼືອໜີ້:** ສະແດງເຖິງຍອດເຫຼືອຈຳນວນເງິນລາຍຈ່າຍໃນການຊື້-ຂາຍເງິນຕາຕ່າງປະເທດ ແລະ ເອກະສານທາງການເງິນ.

## 4107 ລາຍຈ່າຍກ່ຽວກັບການເຄື່ອນໄຫວນອກໃບສະຫຼຸບຊັບສິນບັດ

41071 ລາຍຈ່າຍກ່ຽວກັບຄຳສັນຍາປະກອບທຶນ ທີ່ໄດ້ຮັບ

4107110 ລາຍຈ່າຍກ່ຽວກັບຄຳສັນຍາປະກອບທຶນ ທີ່ໄດ້ຮັບຈາກທະນາຄານ

4107120 ລ່າຍຈ່າຍກ່ຽວກັບຄຳສັນຍາປະກອບທຶນ ທີ່ໄດ້ຮັບຈາກລູກຄ້າ

41072 ລາຍຈ່າຍກ່ຽວກັບຄຳສັນຍາຄ້ຳປະກັນ ທີ່ໄດ້ຮັບ

4107210 ລາຍຈ່າຍກ່ຽວກັບຄຳສັນຍາຄ້ຳປະກັນ ທີ່ໄດ້ຮັບຈາກທະນາຄານ

4107220 ລ່າຍຈ່າຍກ່ຽວກັບຄຳສັນຍາຄ້ຳປະກັນ ທີ່ໄດ້ຮັບຈາກລູກຄ້າ

41073 ລາຍຈ່າຍກ່ຽວກັບຄຳສັນຍາດ້ານຫຼັກຊັບ

4107310 ຂາດທຶນບ້ວງສັນຍາດ້ານຫຼັກຊັບ

4107380 ຄ່າທຳນຽມກ່ຽວກັບຄຳສັນຍາດ້ານຫຼັກຊັບ

41074 ລາຍຈ່າຍກ່ຽວກັບເອກະສານການເງິນມີກຳນົດ

4107410 ກ່ຽວກັບເອກະສານອະນຸພັນມີກຳນົດເງື່ອນໄຂດ້ານອັດຕາດອກເບ້ຍ

4107420 ກ່ຽວກັບເອກະສານອະນຸພັນມີກຳນົດເງື່ອນໄຂດ້ານອັດຕາແລກປ່ຽນ

4107460 ລາຍຈ່າຍກ່ຽວກັບເອກະສານອະນຸພັນມີກຳນົດເງື່ອນໄຂອື່ນໆ

4107480 ຄ່າທຳນຽມຕ່າງໆທີ່ພົວພັນກັບເອກະສານອະນຸພັນ

41078 ລາຍຈ່າຍທີ່ພົວພັນຄຳສັນຍາອື່ນໆທີ່ໄດ້ຮັບ

ບັນຊີ 4107 ໃຊ້ເພື່ອບັນທຶກລາຍຈ່າຍກ່ຽວກັບການເຄື່ອນໄຫວນອກໃບສະຫຼຸບຊັບສິນບັດ (ບັນຊີປະເພດ 9 ) ຊຶ່ງປະກອບດ້ວຍຄຳໃຫ້ສັນຍາປະກອບທຶນ, ຄຳສັນຍາຄ້ຳປະກັນ, ຄຳສັນຍາກ່ຽວ ກັບດ້ານຫຼັກຊັບ, ບ້ວງເອກະສານມີກຳນົດ ແລະ ຄຳໃຫ້ສັນຍາອື່ນໆ ຊຶ່ງໄດ້ແຍກຕາມຈຸດປະສົງດັ່ງນີ້:

ບັນຊີ 41071 ໃຊ້ເພື່ອບັນທຶກລາຍຈ່າຍກ່ຽວກັບຄຳໃຫ້ສັນຍາປະກອບທຶນທີ່ໄດ້ຮັບຈາກທະນາຄານອື່ນ ແລະ ຈາກລູກຄ້າຊຶ່ງພາກສ່ວນດັ່ງກ່າວເປັນຄົນຮຽກເກັບໃນລັກສະນະຄ່າບໍລິການ.

ບັນຊີ 41072 ໃຊ້ເພື່ອບັນທຶກລາຍຈ່າຍກ່ຽວກັບຄຳໃຫ້ສັນຍາຄ້ຳປະກັນທີ່ໄດ້ຮັບຈາກທະນາຄານອື່ນ ແລະ ຈາກລູກຄ້າໃນລັກສະນະຄ່າບໍລິການ.

ບັນຊີ 41073 ໃຊ້ເພື່ອບັນທຶກລາຍຈ່າຍກ່ຽວກັບຄຳສັນຍາດ້ານຫຼັກຊັບທີ່ໄດ້ຮັບເອົາຢ່າງຂາດຕົວ ແລະ ການຈັດປະເພດໃບຢັ້ງຢືນຊັບຄືນໃໝ່ໃນເວລາຈຳໜ່າຍ ກົງກັບບັນຊີ 930.

ບັນຊີ 41074 ໃຊ້ເພື່ອບັນທຶກລາຍຈ່າຍບ້ວງເອກະສານການເງິນ ທີ່ກຳນົດອັດຕາດອກເບ້ຍແລະກຳນົດອັດຕາແລກປ່ຽນເງິນຕາຕ່າງປະເທດ,ເອກະສານການເງິນອື່ນໆທີ່ມີກຳນົດ ແລະ ຄ່າທຳນຽມ.

ບັນຊີ 41078 ໃຊ້ເພື່ອບັນທຶກລາຍຈ່າຍກ່ຽວກັບຄຳສັນຍາອື່ນໆທີ່ໄດ້ຮັບ.

**ເບື້ອງໜີ້ຈິດ:** ຈຳນວນເງິນລາຍຈ່າຍຕົວຈິງທີ່ເກີດຂຶ້ນກ່ຽວກັບລາຍການເຄື່ອນໄຫວນອກໃບສະຫຼຸບ ຊັບສິນບັດ

**ເບື້ອງມີຈິດ:** ຈຳນວນຫຼຸດຜ່ອນ ຫຼື ຈຳນວນເງິນລາຍຈ່າຍທັງໝົດໃນປີເພື່ອໂອນໄປບັນຊີ 3901

**ຍອດເຫຼືອໜີ້:** ສະແດງເຖິງຍອດເຫຼືອຈຳນວນເງິນລາຍຈ່າຍກ່ຽວກັບລາຍການເຄື່ອນໄຫວນອກໃບສະຫຼຸບຊັບສິນບັດ.

## 4108 ລາຍຈ່າຍຄ່າບໍລິການທາງດ້ານການເງິນ

41082 ລາຍຈ່າຍຄ່າພາຫະນະຊໍາລະເງິນ

41088 ລາຍຈ່າຍອື່ນໆຈາກການບໍລິການທາງດ້ານການເງິນ

ບັນຊີ 4108 ໃຊ້ເພື່ອບັນທຶກລາຍຈ່າຍຄ່າບໍລິການທາງດ້ານການເງິນ ເຊັ່ນ: ຈ່າຍຄ່າພາຫະນະຊໍາລະເງິນ, ລາຍຈ່າຍໃນການບໍລິຫານທາງດ້ານການເງິນ ຫຼື ຄຸ້ມຄອງພາຫະນະຊໍາລະສະສາງໂດຍສະເພາະແລ້ວແມ່ນ:

- ຄ່າໃຊ້ຈ່າຍໂອນໃບຢັ້ງຢືນຊັບ
- ລາຍຈ່າຍທີ່ຕິດພັນກັບການເກັບກູ້ໃບຢັ້ງຢືນຊັບຄືນ
- ຄ່າໃຊ້ຈ່າຍພິມປື້ມແຊັກ, ແບບພິມຕ່າງໆ

**ເບື້ອງໜີ້ຈິດ:** ຈໍານວນເງິນລາຍຈ່າຍຄ່າພິມປື້ມແຊັກ ແລະ ແບບພິມຕ່າງໆ

**ເບື້ອງມີຈິດ:** ຈໍານວນຫຼຸດຜ່ອນ ຫຼື ຈໍານວນລາຍຈ່າຍທັງໝົດໃນປີເພື່ອໂອນໄປບັນຊີ 3901

**ຍອດເຫຼືອໜີ້:** ສະແດງເຖິງຍອດເຫຼືອລາຍຈ່າຍຄ່າບໍລິການທາງດ້ານການເງິນ

## 4109 ລາຍຈ່າຍອື່ນໆ ໃນການທຸລະກິດທະນາຄານ

41091 ເບ້ຍປະກັນເງິນຝາກຈ່າຍໃຫ້ກອງທຶນປົກປ້ອງຜູ້ຝາກເງິນ

41092 ພູດສ່ວນລາຍຈ່າຍໃນການດໍາເນີນທຸລະກິດທະນາຄານຮ່ວມກັນ

41093 ລາຍຮັບທີ່ໄດ້ສົ່ງຄືນ

41095 ລາຍຈ່າຍກ່ຽວກັບຊັບສິນລໍຖ້າການຂາຍ

41098 ລາຍຈ່າຍອື່ນໆໃນການທຸລະກິດທະນາຄານ

ບັນຊີ 4109 ໃຊ້ເພື່ອບັນທຶກ ລາຍຈ່າຍອື່ນໆໃນການທຸລະກິດທະນາຄານ ແລະ ລາຍຮັບທີ່ໄດ້ສົ່ງຄືນ ( ນອກຈາກລາຍຈ່າຍທີ່ໄດ້ບົ່ງໄວ້ແຕ່ບັນຊີ 4107 - 4108).

**ເບື້ອງໜີ້ຈິດ:** ຈໍານວນເງິນລາຍຮັບທີ່ໄດ້ສົ່ງຄືນ, ລາຍຈ່າຍອື່ນໆໃນການທຸລະກິດທະນາຄານ

**ເບື້ອງມີຈິດ:** ຈໍານວນຫຼຸດຜ່ອນ ຫຼື ຈໍານວນເງິນລາຍຈ່າຍຂອງປີເພື່ອໂອນໄປບັນຊີ 3901

**ຍອດເຫຼືອຈິດ:** ສະແດງເຖິງຍອດເຫຼືອຈໍານວນເງິນລາຍຈ່າຍໃນເດືອນ ຫຼື ປີ

## 420 ລາຍຈ່າຍທາງດ້ານພະນັກງານ

4201 ເງິນເດືອນ ແລະ ຄ່າແຮງງານ

42011 ເງິນເດືອນພະນັກງານໃນການຈັດຕັ້ງ

42013 ຄ່າແຮງງານ

42014 ເບ້ຍເພີ່ມ

4202 ລາຍຈ່າຍເງິນອຸດໜູນ ແລະ ສະຫວັດດີການພະນັກງານ

42021 ເງິນບຳນານ ແລະ ເງິນບຳເນັດ

42022 ລາຍຈ່າຍປະກັນສັງຄົມ ແລະ ຍ້ອງຍໍ

42028 ລາຍຈ່າຍສະຫວັດດີການພະນັກງານອື່ນໆ

4203 ລາຍຈ່າຍເພື່ອກໍ່ສ້າງພະນັກງານ

42031 ກໍ່ສ້າງຢູ່ພາຍໃນປະເທດ

42032 ກໍ່ສ້າງຢູ່ຕ່າງປະເທດ

4208 ລາຍຈ່າຍອື່ນໆທາງດ້ານພະນັກງານ

ບັນຊີ 420 ໃຊ້ເພື່ອບັນທຶກບັນດາລາຍຈ່າຍກ່ຽວກັບພະນັກງານຂອງສະຖາບັນການເງິນ ຊຶ່ງລວມມີເງິນເດືອນ, ເງິນແຮງງານ, ເບ້ຍເພີ້ມ, ສະຫວັດດີການ ແລະ ການກໍ່ສ້າງພະນັກງານຢູ່ພາຍໃນ ແລະ ຕ່າງປະເທດ.

ບັນຊີ 4201 ໃຊ້ເພື່ອບັນທຶກເງິນເດືອນ, ເງິນນະໂຍບາຍທົດແທນຄ່າແຮງງານ ( ນະໂຍບາຍ ອອກການ ນະໂຍບາຍຄອບຄົວ ....)

ບັນຊີ 4202 ໃຊ້ເພື່ອບັນທຶກລາຍຈ່າຍເງິນບຳລຸງ ຕາມລະບຽບສະຫວັດດີການສັງຄົມ, ເບ້ຍບຳນານ ແລະ ລະບອບຊ່ວຍເຫຼືອກັນ ວຽກງານສັງຄົມ ແລະ ຍ້ອງຍໍ

ບັນຊີ 4203 ໃຊ້ເພື່ອບັນທຶກລາຍຈ່າຍກໍ່ສ້າງພະນັກງານໄປທັດສະນະສຶກສາ ສຳມະນາ ຢູ່ພາຍໃນ ແລະ ຕ່າງປະເທດ.

ບັນຊີ 4208 ໃຊ້ເພື່ອບັນທຶກລາຍຈ່າຍອື່ນໆທາງດ້ານພະນັກງານ

**ເບື້ອງໜີ້ຈິດ:** ຈຳນວນລາຍຈ່າຍໄຈ້ແຍກຕາມແຕ່ລະລາຍການຈ່າຍຕົວຈິງ

**ເບື້ອງມີຈິດ:** ຈຳນວນຫຼຸດຜ່ອນ ຫຼື ຈຳນວນເງິນລາຍຈ່າຍຂອງປີເພື່ອໂອນໄປບັນຊີ 3901

**ຍອດເຫຼືອໜີ້:** ສະແດງເຖິງຍອດເຫຼືອລາຍຈ່າຍໃຫ້ພະນັກງານໃນເດືອນ ຫຼື ປີ

## 430 ລາຍຈ່າຍຄ່າພາສີ ແລະ ອາກອນ

ບັນຊີ 430 ໃຊ້ບັນທຶກລາຍການພາສີ ແລະ ອາກອນທີ່ບໍ່ພົວພັນກັບຄ່າໃຊ້ຈ່າຍໃຫ້ພະນັກງານເຊັ່ນ ພາສີທີ່ດິນ,ຄ່າທຳນຽມຍານພາຫະນະ ແລະ ອາກອນຕ່າງໆ ທີ່ທະນາຄານຕ້ອງຖອກໃຫ້ລັດ ແລະ ອຳນາດການປົກຄອງທ້ອງຖິ່ນ ຕາມທິດທາງນະໂຍບາຍຂອງລັດວາງອອກ ເພື່ອນຳໄປປະກອບເປັນທຶນທີ່ມີຜົນປະໂຫຍດທາງດ້ານເສດຖະກິດ ແລະ ສັງຄົມ ( ບໍ່ແມ່ນພາສີນຳເຂົ້າ ຫຼື ສົ່ງອອກ ແລະ ບໍ່ແມ່ນອາກອນກຳໄລ).

**ເບື້ອງ ໜີ້ຈິດ:** ຈຳນວນເງິນພາສີ ແລະ ອາກອນຈ່າຍໃຫ້ລັດ

**ເບື້ອງມີຈິດ:** ຈຳນວນຫຼຸດຜ່ອນ ຫຼື ຈຳນວນເງິນໂອນໄປບັນຊີ 3901

**ຍອດເຫຼືອໜີ້:** ສະແດງເຖິງຈຳນວນເງິນຍອດເຫຼືອພາສີອາກອນໃນເດືອນ ຫຼື ປີ

440 ລາຍຈ່າຍບໍລິການຈາກທາງນອກ

4401 ຄ່າງວດຂອງສິນເຊື່ອເຊົ່າ-ຊື້ ແລະ ລາຍການປະເພດດຽວກັນ

4402 ຄ່າເຊົ່າຕ່າງໆ

4403 ຄ່ານາຍໜ້າ ແລະ ຄ່າປ່ວຍການຕ່າງໆ

44031 ລາຍຈ່າຍຄ່ານາຍໜ້າ

44032 ລາຍຈ່າຍຄ່າທະນາຍຄວາມ

44033 ລາຍຈ່າຍຄ່າກວດສອບບັນຊີ

44038 ອື່ນໆ

4404 ຄ່າບໍລິການຕ່າງໆທີ່ບໍລິສັດໃນກຸ່ມເປັນຜູ້ສະໜອງໃຫ້

4405 ຄ່າຂົນສົ່ງ ແລະ ຄ່າໂດຍສານ

44051 ຄ່ານ້ຳມັນເຊື້ອໄຟ

44052 ຄ່າໂດຍສານໄປເຮັດວຽກ

44053 ຄ່າຂົນສົ່ງ

4406 ຄ່າໂຄສະນາ,ໜັງສືພິມ,ວາລະສານ, ແລະ ປື້ມຕ່າງໆ

44061 ຄ່າໂຄສະນາ

44062 ຄ່າຂອງຂວັນ

44063 ຄ່າໜັງສືພິມ ແລະ ວາລະສານ

44064 ປື້ມຕຳລາວິຊາການຕ່າງໆ

44068 ອື່ນໆ

4407 ຄ່າໃຊ້ຫ້ອງການ ແລະ ສິ່ງພິມຕ່າງໆ

44071 ເຄື່ອງໃຊ້ຫ້ອງການ

44072 ສິ່ງພິມຕ່າງໆ

4408 ຄ່າບໍລິການອື່ນໆຈາກທາງນອກ

44081 ຄ່າທຳນຽມປະກັນໄພ

44082 ຄ່າວັດຖຸປະກອບຕ່າງໆ

44083 ຄ່າໄປສະນີ ແລະ ຄ່າໂທລະຄົມມະນາຄົມ

44084 ຄ່າບຳລຸງຮັກສາ ແລະ ສ້ອມແປງ

44085 ຄ່າໄຟຟ້າ ແລະ ນ້ຳປະປາ

44086 ຄ່າໃຊ້ຈ່າຍເຂົ້າໃນກອງປະຊຸມ ແລະ ສຳມະນາ

44087 ຄ່າຮັບແຂກ, ຄ່າພັກເຊົ່າ ແລະ ອັດຕາກິນ

440871 ຄ່າຮັບແຂກ

440872 ອັດຕາກິນ

440873 ຄ່າພັກເຊົ່າ

44088 ອື່ນໆ

450 ລາຍຈ່າຍສຳຮອງອື່ນໆໃນທຸລະກິດ

4501 ລາຍຮັບອື່ນໆທີ່ໄດ້ສົ່ງຄືນ

4502 ພູດສ່ວນລາຍຈ່າຍໃນການດຳເນີນທຸລະກິດທີ່ບໍ່ແມ່ນທະນາຄານຮ່ວມກັນ

4503 ພູດສ່ວນລາຍຈ່າຍທີ່ໄດ້ຈ່າຍໃຫ້ສຳນັກງານໃຫຍ່(ໃຊ້ຢູ່ສາຂາ )

4504 ພູດສ່ວນລາຍຈ່າຍທີ່ໄດ້ຈ່າຍໃຫ້ສາຂາ(ໃຊ້ຢູ່ສຳນັກງານໃຫ່ຍ)

4506 ຂາດທຶນຈາກການຂາຍ ຫຼື ສະສາງຊັບສິນບັດຄົງທີ

45061 ຂາດທຶນຈາກການຂາຍ ຫຼື ສະສາງຊັບສິນບັດຄົງທີ່ ບໍ່ມີຕົວຕົນ

45062 ຂາດທຶນຈາກການຂາຍ ຫຼື ສະສາງຊັບສິນບັດຄົງທີ່ ມີຕົວຕົນ

45063 ຂາດທຶນຈາກການຂາຍ ຫຼື ສະສາງຊັບສິນບັດຄົງທີ່ ການເງິນ

450631 ຂາດທຶນຈາກການຂາຍຮຸ້ນນຳວິສາຫະກິດໃນກຸ່ມ

450632 ຂາດທຶນຈາກການຂາຍເງິນລົງທຶນກັບບໍລິສັດຮ່ວມທຶນ

450633 ຂາດທຶນຈາກການຂາຍເງິນລົງທຶນໃນບໍລິສັດຫຼັກຊັບ

450634 ຂາດທຶນຈາກການຂາຍຫຼັກຊັບລົງທຶນ

4508 ລາຍຈ່າຍອື່ນໆໃນທຸລະກິດ

ບັນຊີ 440 ໃຊ້ເພື່ອບັນທຶກຄ່າເຊົ່າ ທີ່ທະນາຄານໄດ້ຈ່າຍໃຫ້ເພື່ອການນຳໃຊ້ສັງຫາລິມະຊັບ ຫຼື ອະສັງຫາລິມະຊັບ ບົນພື້ນຖານສັນຍາເຊົ່າ-ຊື້, ສັນຍາເຊົ່າໂດຍມີທາງເລືອກຊື້ ຫຼື ເຊົ່າທຳມະດາ ໂດຍນຳໃຊ້ບັນຊີຄູ່ ກົງກັບບັນຊີ 144 ແລະ 146, ຄ່າທຳນຽມທີ່ໄດ້ຈ່າຍໃຫ້ຜູ້ນຳເອົາທຸລະກິດມາໃຫ້ຊຶ່ງບໍ່ແມ່ນພະນັກງານສັງກັດທະນາຄານ, ຄ່າບໍລິການຈາກທາງນອກສະໜອງໃຫ້ ໂດຍບໍລິສັດໃນກຸ່ມຄ່າຂົນສົ່ງ ແລະ ເຄື່ອນຍ້າຍ ແລະ ຄ່າບໍລິການອື່ນໆຈາກຂ້າງນອກເຊັ່ນ: ຄ່າບຳລຸງຮັກສາ ແລະ ຄ່າສ້ອມແປງວັດຖຸອຸປະກອນເຄຫາສະຖານ, ຄ່າໄຟຟ້າ, ຄ່ານ້ຳປະປາ, ຄ່າປະກັນໄພ, ຄ່ານາຍໜ້າ, ຄ່າປິ່ນປົວ, ຄ່າກວດສອບບັນຊີ, ຄ່າເດີນທາງ, ຄ່າຮັບແຂກ,ຄ່າເຄື່ອງໃຊ້ຫ້ອງການ, ຄ່າໄປສະນີ ແລະ ຄ່າຄົມມະນາຄົມ, ຄ່າສຳຫຼວດອອກແບບ ແລະ ຄົ້ນຄ້ວາ, ຄ່າກອງປະຊຸມ, ສຳມະນາ, ຄ່າໂຄສະນາ, ຂອງຂວັນ, ໜັງສືພິມ, ວາລະສານ, ປື້ມ ຕ່າງໆ, ຄ່າຊຸກຍູ້ສັງຄົມ ແລະ ອື່ນໆ.

**ເບື້ອງໜີ້ຈົດ:** ຈຳນວນເງິນລາຍຈ່າຍຄ່າບໍລິການຈາກທາງນອກແຕ່ລະປະເພດ

**ເບື້ອງ ມີຈົດ:** ຈຳນວນຫຼຸດຜ່ອນ ຫຼື ຈຳນວນເງິນລາຍຈ່າຍທັງໝົດຂອງປີເພື່ອໂອນໄປບັນຊີ 3901

**ຍອດເຫຼືອໜີ້:** ສະແດງເຖິງຍອດເຫຼືອຈຳນວນເງິນລາຍຈ່າຍໃນເດືອນ ຫຼື ປີ

ບັນຊີ 450 ໃຊ້ບັນທຶກເພື່ອລາຍຈ່າຍ ຈາກລາຍຮັບທີ່ໄດ້ສົ່ງຄືນລະຫວ່າງສຳນັກງານໃຫຍ່ກັບສາຂາ, ຂາດທຶນຈາກການຂາຍຊັບສິນບັດຄົງທີ່ ມີຕົວຕົນ ແລະ ບໍ່ມີຕົວຕົນ, ຂາດທຶນຈາກການຂາຍຮຸ້ນໃນວິສາຫະກິດໃນກຸ່ມ, ຮ່ວມທຶນ, ຂາດທຶນຈາກການຂາຍຫຼັກຊັບລົງທຶນ ແລະ ລາຍຈ່າຍສຳຮອງ ອື່ນໆ.

**ເບື້ອງໜີ້ຈົດ:** ຈຳນວນລາຍຈ່າຍສຳຮອງອື່ນໆໃນການທຸລະກິດ

**ເບື້ອງ ມີຈົດ:** ຈຳນວນຫຼຸດຜ່ອນ ຫຼື ຈຳນວນເງິນລາຍຈ່າຍທັງໝົດຂອງປີເພື່ອໂອນໄປບັນຊີ 3901

**ຍອດເຫຼືອໜີ້:** ສະແດງເຖິງຍອດເຫຼືອຈຳນວນເງິນລາຍຈ່າຍໃນເດືອນ ຫຼື ປີ

460 ຫັກຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າຂອງ ຊ.ຄ.ທ ທີ່ບໍ່ມີຕົວຕົນ ແລະ ມີຕົວຕົນ

4601 ຫັກຄ່າຫຼຸ້ຍຫ້ຽນ ຊ.ຄ.ທ ທີ່ບໍ່ມີຕົວຕົນ ແລະ ມີຕົວຕົນ

46011 ຫັກຄ່າຫຼຸ້ຍຫ້ຽນ ຊ.ຄ.ທ ທີ່ບໍ່ມີຕົວຕົນ ແລະ ມີຕົວຕົນໃນການທຸລະກິດ

460111 ຫັກຄ່າຫຼຸ້ຍຫ້ຽນ ຊ.ຄ.ທ ທີ່ບໍ່ມີຕົວຕົນ ໃນການທຸລະກິດ

460112 ຫັກຄ່າຫຼຸ້ຍຫ້ຽນ ຊ.ຄ.ທ ທີ່ມີຕົວຕົນ ໃນການທຸລະກິດ

46012 ຫັກຄ່າຫຼຸ້ຍຫ້ຽນ ຊ.ຄ.ທ ທີ່ບໍ່ມີຕົວຕົນ ແລະມີຕົວຕົນນອກການທຸລະກິດ

460121 ຫັກຄ່າຫຼຸ້ຍຫ້ຽນ ຊ.ຄ.ທ ທີ່ບໍ່ມີຕົວຕົນນອກການທຸລະກິດ

460122 ຫັກຄ່າຫຼຸ້ຍຫ້ຽນ ຊ.ຄ.ທ ທີ່ມີຕົວຕົນນອກການທຸລະກິດ

4602 ຫັກຄ່າເສື່ອມມູນຄ່າຂອງ ຊ.ຄ.ທ ທີ່ບໍ່ມີຕົວຕົນ ແລະ ມີຕົວຕົນ

46021 ຄ່າເສື່ອມມູນຄ່າຂອງ ຊ.ຄ.ທ ທີ່ບໍ່ມີຕົວຕົນ ແລະ ມີຕົວຕົນ ໃນການທຸລະກິດ

460211 ຄ່າເສື່ອມມູນຄ່າຂອງ ຊ.ຄ.ທ ທີ່ບໍ່ມີຕົວຕົນ ໃນການທຸລະກິດ

460212 ຄ່າເສື່ອມມູນຄ່າຂອງ ຊ.ຄ.ທ ທີ່ມີຕົວຕົນ ໃນການທຸລະກິດ

46022 ຄ່າເສື່ອມມູນຄ່າຂອງ ຊ.ຄ.ທ ທີ່ບໍ່ມີຕົວຕົນ ແລະມີຕົວຕົນນອກການທຸລະກິດ

460221 ຄ່າເສື່ອມມູນຄ່າຂອງ ຊ.ຄ.ທ ທີ່ບໍ່ມີຕົວຕົນ ນອກການທຸລະກິດ

460222 ຄ່າເສື່ອມມູນຄ່າຂອງ ຊ.ຄ.ທ ທີ່ມີຕົວຕົນ ນອກການທຸລະກິດ

470 ຫັກເງິນແຮຄ່າເສື່ອມມູນຄ່າ ແລະ ຂາດທຶນບ້ວງໜີ້ຕ້ອງຮັບເກັບຄືນບໍ່ໄດ້

4701 ຫັກຄ່າເສື່ອມມູນຄ່າໜີ້ທວງຍາກ

47011 ຫັກຄ່າເສື່ອມມູນຄ່າໜີ້ທວງຍາກຈາກສະຖາບັນການເງິນອື່ນ

47012 ຫັກຄ່າເສື່ອມມູນຄ່າໜີ້ທວງຍາກຈາກລູກຄ້າ

47013 ຫັກຄ່າເສື່ອມມູນຄ່າໜີ້ທວງຍາກຈາກຫຼັກຊັບ

470131 ກ່ຽວກັບຫຼັກຊັບທີ່ໄດ້ຊື້ໂດຍມີສັນຍາຂາຍຄືນທວງຍາກ

470132 ກ່ຽວກັບຫຼັກຊັບເພື່ອຄ້າທວງຍາກ

470133 ກ່ຽວກັບຫຼັກຊັບຊື້ເພື່ອຂາຍທວງຍາກ

47018 ຫັກຄ່າເສື່ອມມູນຄ່າກ່ຽວກັບລາຍການອື່ນໆທວງຍາກ

4702 ຫັກຄ່າເສື່ອມມູນຄ່າຄັງຫຼັກຊັບ ແລະ ລາຍການອື່ນໆ

47021 ຫັກຄ່າເສື່ອມມູນຄ່າຫຼັກຊັບຊື້ເພື່ອຂາຍ (ກົງກັບບັນຊີ 13039)

47022 ຫັກຄ່າເສື່ອມມູນຄ່າ ຊ.ຄ.ທ ການເງິນ

470221 ຄ່າເສື່ອມມູນຄ່າເງິນລົງທຶນໃນວິສາຫະກິດໃນກຸ່ມ

470222 ຄ່າເສື່ອມມູນຄ່າເງິນລົງທຶນໃນບໍລິສັດຮ່ວມທຶນ

470224 ຄ່າເສື່ອມມູນຄ່າຫຼັກຊັບລົງທຶນ

47028 ຄ່າເສື່ອມມູນຄ່າລາຍການອື່ນໆ

4703 ຫັກເງິນແຮເພື່ອຄວາມສ່ຽງ ແລະ ລາຍຈ່າຍ (ກົງກັບບັນຊີ 330)

47031 ຫັກເງິນແຮເພື່ອລາຍຈ່າຍເງິນບໍານານ

47032 ຫັກເງິນແຮເພື່ອການປະຕິບັດຄໍາໃຫ້ສັນຍາທີ່ເປັນລາຍລັກອັກສອນ

47034 ຫັກເງິນແຮເພື່ອຄວາມສ່ຽງຂອງປະເທດ

47038 ຫັກເງິນແຮເພື່ອຄວາມສ່ຽງ ແລະ ລາຍຈ່າຍອື່ນໆ

4704 ຫັກເງິນແຮຕາມຂໍ້ກຳນົດ

47041 ຫັກເງິນແຮເພື່ອຄວາມສ່ຽງໃນການກູ້ຢືມ

470411 ເງິນແຮເພື່ອຄວາມສ່ຽງໃນການກູ້ຢືມແກ່ສະຖາບັນການເງິນອື່ນ

470412 ເງິນແຮເພື່ອຄວາມສ່ຽງໃນການກູ້ຢືມແກ່ລູກຄ້າ

470413 ເງິນແຮເພື່ອຄວາມສ່ຽງໃນການກູ້ຢືມ

470416 ຫັກເງິນແຮເພື່ອຄວາມສ່ຽງ ໃນການໃຫ້ສິນເຊື່ອເຊົ່າຊື້

47048 ເງິນແຮອື່ນໆຕາມຂໍ້ກຳນົດ

4705 ຂາດທຶນບ້ວງໜີ້ທວງຍາກເກັບຄືນບໍ່ໄດ້

47051 ໜີ້ສູນທີ່ມີການຄຸ້ມກັນໂດຍເງິນແຮ

47052 ໜີ້ສູນທີ່ບໍ່ມີການຄຸ້ມກັນໂດຍເງິນແຮ

ບັນຊີ 4601 ໃຊ້ເພື່ອບັນທຶກຈຳນວນເງິນລາຍຈ່າຍຫັກຄ່າຫຼຸຍຫ້ຽນຂອງຊັບສິນບັດຄົງທີ່ ທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ ສະແດງການຫຼຸດມູນຄ່າຂອງອົງປະກອບບໍ່ມີຕົວຕົນ ແລະ ມີຕົວຕົນ ໃນການທຸລະກິດ ແລະ ນອກທຸລະກິດ ຊຶ່ງມີຜົນກະທົບທີ່ປ່ຽນປີ້ນຄືນບໍ່ໄດ້ ແລະ ພົວພັນກັບບັນຊີ 143,144, ແລະ 145.

ບັນຊີ 4602 ໃຊ້ເພື່ອບັນທຶກຈຳນວນເງິນລາຍຈ່າຍຫັກຄ່າເສື່ອມຂອງອົງປະກອບຊັບສິນ ບໍ່ມີຕົວຕົນແລະ ມີຕົວຕົນ ຊຶ່ງມີຜົນກະທົບ**ທີ່ປ່ຽນປີ້ນຄືນບໍ່ໄດ້** ແລະ ພົວພັນກັບບັນຊີ 1378,1439 ແລະ1459.

ບັນຊີ 4701 ໃຊ້ເພື່ອບັນທຶກຈຳນວນເງິນການຫັກຄ່າເສື່ອມ ຂອງລາຍການເຄື່ອນໄຫວກ່ຽວກັບໃບຢັ້ງຢືນຊັບ, ສິນເຊື່ອເຊົ່າ-ຊື້ ກັບສະຖາບັນການເງິນ ແລະ ລູກຄ້າພົວພັນກັບບັນຊີ 1199, 1299.

ບັນຊີ 47018 ໃຊ້ບັນທຶກຈຳນວນເງິນສະເພາະລາຍການຫັກຄ່າເສື່ອມມູນຄ່າກ່ຽວກັບລາຍການອື່ນໆທວງຍາກທີ່ໄດ້ຄຳນວນໄວ້ ເພື່ອປ້ອງກັນໜີ້ຕ້ອງຮັບທວງຍາກຂອງການເງິນໃຫ້ກູ້ຢືມສຳຮອງ, ສິນເຊື່ອເຊົ່າ-ຊື້ ແລະ ລາຍການປະເພດດຽວກັນ ແລະ ຄ່າເຊົ່າທຳມະດາພົວພັນກັບບັນຊີ 130491, 1419 ແລະ 1399.

ບັນຊີ 4702 ໃຊ້ເພື່ອບັນທຶກຈຳນວນເງິນ ລາຍການຫັກຄ່າເສື່ອມມູນຄ່າຄັງຫຼັກຊັບ ແລະ ລາຍການອື່ນໆ ກົງກັບບັນຊີ 13039.

ບັນຊີ 4703 ໃຊ້ບັນທຶກຈຳນວນເງິນລາຍຈ່າຍຫັກເງິນແຮເພື່ອລາຍສ່ຽງໄພລວມ ແລະ ລາຍຈ່າຍຊຶ່ງເຫດການໄດ້ເກີດຂຶ້ນ ຫຼື ພວມເກີດຂຶ້ນ ຊຶ່ງອາດເປັນໄປໄດ້ ແຕ່ການປະກົດຜົນເປັນຈິງຍັງບໍ່ທັນເປັນສິ່ງແນ່ນອນເທື່ອ ກົງກັບບັນຊີ 330.

ບັນຊີ 4704 ໃຊ້ເພື່ອບັນທຶກຈຳນວນເງິນ ລາຍຈ່າຍຫັກເງິນແຮຕາມຂໍ້ກຳນົດ ທີ່ໄດ້ກຳນົດໄວ້ບົນພື້ນຖານຂໍ້ກຳນົດທີ່ໄດ້ກຳນົດໄວ້ ກົງກັບບັນຊີ 340

ບັນຊີ 4705 ໃຊ້ເພື່ອບັນທຶກຈຳນວນເງິນລາຍຈ່າຍຂາດທຶນບ້ວງໜີ້ທວງຍາກເກັບຄືນບໍ່ໄດ້ ໜີ້ຕ້ອງຮັບ ຫຼື ພູດສ່ວນໜີ້ຕ້ອງຮັບທີ່ໃນໄລຍະຜ່ານມາໄດ້ຫັກເງິນແຮຄ່າເສື່ອມໄວ້ ທີ່ໄດ້ກາຍມາເປັນໜີ້ສູນ. ກ່ອນຈະຫັກເງິນແຮຄ່າເສື່ອມໄວ້ຕ້ອງໄດ້ຈົດເຂົ້າບັນຊີ 47052 ກ່ອນ (ຂາດທຶນບ້ວງໜີ້ຕ້ອງສົ່ງເກັບຄືນບໍ່ໄດ້ທີ່ບໍ່ມີການຄ້ຳປະກັນໂດຍເງິນແຮ).

ບັນຊີ 460 ມີການພົວພັນກັບບັນຊີ ຊັບສິນບັດຄົງທີ່, ບັນຊີຫັກຄ່າເສື່ອມມູນຄ່າ ຂອງບັນຊີປະເພດຊັບສິນ ແລະ ທຶນ ພ້ອມທັງບັນດາລາຍການນອກໃບສະຫຼຸບຊັບສິນບັດ.

**ເບື້ອງໜີ້ຈົດ:** ຈຳນວນຫັກຄ່າເສື່ອມມູນຄ່າ ແລະ ການຫັກເງິນແຮ ຈຳນວນເງິນຫັກຄ່າຊຳລະບັນຊີ ໜີ້ທວງຍາກ, ດອກເບ້ຍທວງຍາກ ເມື່ອໄດ້ຮັບອະນຸຍາດໃຫ້ຈົດເປັນຂາດທຶນ.

**ເບື້ອງມີ ຈົດ:** ຈຳນວນຫຼຸດຜ່ອນ ຫຼື ຈຳນວນເງິນລາຍຈ່າຍທັງໝົດໃນປີເພື່ອໂອນໄປບັນຊີ 3901

**ຍອດເຫຼືອໜີ້:** ສະແດງເຖິງຍອດເຫຼືອຄ່າເສື່ອມມູນຄ່າ ແລະ ເງິນແຮທີ່ຫັກໄວ້ໃນເດືອນ ຫຼື ປີ ຈຳນວນເງິນຂາດທຶນຈາກໜີ້ທວງຍາກເກັບຄືນບໍ່ໄດ້ ທີ່ມີການຄ້ຳປະກັນ ແລະ ບໍ່ມີການຄ້ຳປະກັນດ້ວຍເງິນແຮ.

**480 ລາຍຈ່າຍບັງເອີນ** ( ຫຼື ລາຍຈ່າຍພິເສດ )

ບັນຊີ 480 ໃຊ້ເພື່ອບັນທຶກຈຳນວນເງິນບັນດາລາຍຈ່າຍທີ່ມີລັກສະນະພິເສດ, ບໍ່ມີຜົນຕາມມາ ໂດຍສະເພາະແມ່ນລາຍຈ່າຍທີ່ເກີດຈາກການປ່ຽນແປງວິທີການຕີມູນຄ່າ ແລະ ບໍ່ຕິດພັນກັບກິດຈະການທະນາຄານຊຶ່ງລວມມີຄ່າປັບໄໝ, ຂອງຂວັນ ແລະ ລາຍຈ່າຍບ້ວງປີກ່ອນ.

<u>**ຄ່າປັບໄໝ**</u>: ແມ່ນຄ່າເສຍຫາຍຊຶ່ງຕ້ອງໄດ້ຈ່າຍ ເນື່ອງຈາກວ່າບໍ່ໄດ້ປະຕິບັດຕາມຂໍ້ກຳນົດໃນຂໍ້ຜູກພັນ ຫຼື ຍ້ອນໄດ້ທຳການເສຍຫາຍໃຫ້ແກ່ພາກສ່ວນອື່ນ. ເງິນປັບໄໝໄດ້ເກີດຂຶ້ນຍ້ອນໄດ້ມີການລ່ວງລະເມີດຕໍ່ບັນດາລະບຽບການ (ເງິນປັບໄໝດ້ານອາກອນ, ເງິນປັບໄໝລະເມີດກົດຈາລະຈອນ ແລະ ອື່ນໆ).

<u>**ຂອງຂັວນ:**</u> ແມ່ນຊ່ວຍເຫຼືອພິເສດປະກອບສ່ວນໃຫ້ແກ່ການຈັດພິທີໃດໜຶ່ງ ຫຼື ໃຫ້ແກ່ສະມາຄົມສົ່ງເສີມຜົນປະໂຫຍດຂອງສັງຄົມ ( ທີ່ບໍ່ກ່ຽວພັນກັບວຽກທະນາຄານ ).

<u>**ລາຍຈ່າຍບ້ວງປີກ່ອນ:**</u> ມີບັນດາລາຍຈ່າຍທີ່ພົວພັນກັບບັນດາລາຍການເກີດຂຶ້ນໃນປີກ່ອນໆ ໂດຍສະເພາະຜິດດ່ຽງລວມ ຕິດລົບກັບການຕີມູນຄ່າຄືນໃໝ່, ພູດສ່ວນທີ່ບໍ່ໄດ້ປະກອບເງິນແຮເພື່ອສ້ອມແປງຖ້າວ່າມີການຫັກເງິນແຮໄວ້.

**ເບື້ອງ ໜີ້ຈົດ:** ຈຳນວນເງິນລາຍຈ່າຍພິເສດ

**ເບື້ອງມີ ຈົດ:** ຈຳນວນຫຼຸດຜ່ອນ ຫຼື ຈຳນວນເງິນລາຍຈ່າຍໃນປີເພື່ອໂອນໄປບັນຊີ 3901

**ຍອດເຫຼືອໜີ້:** ສະແດງເຖິງຍອດເຫຼືອຈຳນວນເງິນລາຍຈ່າຍພິເສດ

## 490 ອາກອນກຳໄລ

ບັນຊີ 490 ອາກອນກຳໄລ ໃຊ້ເພື່ອບັນທຶກຈຳນວນເງິນຈ່າຍອາກອນກຳໄລ ໃນເວລາປິດບັນຊີທ້າຍປີເທົ່ານັ້ນ, ຊຶ່ງລາຍການເກີດຂຶ້ນຕາມຫຼັງການປິດບັນຊີລາຍຮັບ (ປະເພດ 5) ແລະ ບັນຊີລາຍຈ່າຍ ( ປະເພດ 4) ໄປຍັງບັນຊີ 3901 ກຳໄລ ຫຼື ຂາດທຶນໃນປີ , ຊຶ່ງກົງກັບບັນຊີ 13611 ອາກອນກຳໄລມອບລ່ວງໜ້າ ແລະ ບັນຊີ 236111 ອາກອນກຳໄລຕ້ອງມອບຕື່ມ.

**ເບື້ອງໜີ້ຈິດ:** ຈຳນວນເງິນສະສາງບັນຊີລ່ວງໜ້າໃຫ້ງົບປະມານແຫ່ງຊາດ, ຈຳນວນເງິນມອບອາກອນໃຫ້ລັດເພີ່ມ.

**ເບື້ອງມີ ຈິດ:** ຈຳນວນເງິນຫຼຸດຜ່ອນ ຫຼື ຈຳນວນລາຍຈ່າຍທັງໝົດໃນປີ ເພື່ອໂອນໄປບັນຊີ 3901 ກຳໄລ ຫຼື ຂາດທຶນໃນປີ

**ຍອດເຫຼືອໜີ້:** ສະແດງເຖິງຍອດເຫຼືອ ອາກອນກຳໄລມອບໃຫ້ລັດ

# ປະເພດ 5
# ລາຍຮັບ

ບັນຊີປະເພດຫ້າ ໃຊ້ເພື່ອບັນທຶກລາຍຮັບທຸກປະເພດຂອງທະນາຄານ ແລະ ສະຖາບັນການເງິນທັງໃນ ແລະ ນອກທຸລະກິດ ແລະ ໄດ້ໄຈ້ແຍກລະອຽດປະເພດລາຍຮັບດັ່ງນີ້:

- ລາຍຮັບໃນການທຸລະກິດທະນາຄານ ແລະ ສະຖາບັນການເງິນ
- ລາຍຮັບສຳຮອງ
- ລາຍຮັບອື່ນໆໃນທຸລະກິດ
- ພູດລາຍຮັບ ຈາກການເຄື່ອນໄຫວທຸລະກິດຮ່ວມກັນ
- ເກັບຄືນເງິນແຮເພື່ອສ່ຽງໄພລວມຂອງທະນາຄານ
- ລາຍຮັບບັງເອີນ
- ເກັບຄືນຄ່າເສື່ອມມູນຄ່າຊັບສິນບັດຄົງທີ່ ບໍ່ມີຕົວຕົນ ແລະ ມີຕົວຕົນ, ເງິນແຮ ແລະ ເກັບກູ້ຄືນໜີ້ຕ້ອງຮັບທີ່ໄດ້ຈົດເປັນການຂາດທຶນ

ການຈຳແນກ ລະຫວ່າງດອກເບ້ຍ ແລະ ຄ່າທຳນຽມບ້ວງທຶນທີ່ໄດ້ໃຫ້ກູ້ຢືມຕົວຈິງ ຕ້ອງຄຳນຶງເຖິງຫຼັກການດັ່ງຕໍ່ໄປນີ້ :

- ຕ້ອງໄດ້ຖືເປັນດອກເບ້ຍ ການທົດແທນຄ່າຂອງທຶນທີ່ໄດ້ໃຫ້ກູ້ຢືມຕົວຈິງ ຄິດໄລ່ບົນພື້ນຖານຊ່ວງກຳນົດເວລາດຽວກັນ
- ບັນຊີຄ່າທຳນຽມປະກອບດ້ວຍ ຄ່າທຳນຽມທີ່ພົວພັນກັບລາຍການເຄື່ອນໄຫວທີ່ກ່ຽວຂ້ອງ ຍົກເວັ້ນຄ່າທຳນຽມທີ່ຄິດໄລ່ບົນພື້ນຖານຊ່ວງໄລຍະເວລາດຽວກັນ.ລາຍຮັບບັງເອີນໄດ້ແກ່ລາຍຮັບທີ່ເກີດຂຶ້ນຊຶ່ງບໍ່ແມ່ນລາຍຮັບທີ່ກ່ຽວຂ້ອງກັບທຸລະກິດທະນາຄານ ແລະ ສະຖາບັນການເງິນ ແລະ ບໍ່ຂື້ນເປັນປະຈຳ.

510 ລາຍຮັບໃນທຸລະກິດທະນາຄານ

5101 ລາຍຮັບຈາກການເຄື່ອນໄຫວດ້ານເງິນຕາ

51011 ລາຍຮັບທີ່ພົວພັນກັບວັດຖຸມີຄ່າ

510111 ລາຍຮັບກ່ຽວກັບຄຳ

510112 ລາຍຮັບກ່ຽວກັບວັດຖຸມີຄ່າອື່ນໆ

51012 ດອກເບ້ຍຮັບຈາກທະນາຄານກາງ, ສະຖາບັນເງິນຝາກໄປສະນີ ແລະ ຄັງເງິນແຫ່ງຊາດ

510121 ດອກເບ້ຍຮັບຈາກທະນາຄານກາງ

510122 ດອກເບ້ຍຈາກສະຖາບັນເງິນຝາກໄປສະນີ

510123 ດອກເບ້ຍຮັບຈາກຄັງເງິນແຫ່ງຊາດ

51013 ດອກເບ້ຍຮັບຈາກທະນາຄານ ແລະ ສະຖາບັນການເງິນອື່ນ

510131 ດອກເບ້ຍຮັບຈາກທະນາຄານອື່ນຢູ່ພາຍໃນປະເທດ

5101311 ດອກເບ້ຍເງິນຝາກຢູ່ທະນາຄານອື່ນພາຍໃນປະເທດ

5101312 ດອກເບ້ຍເງິນໃຫ້ກູ້ຢືມແກ່ທະນາຄານອື່ນພາຍໃນປະເທດ

510132 ດອກເບ້ຍຮັບຈາກທະນາຄານອື່ນຢູ່ຕ່າງປະເທດ

5101321 ດອກເບ້ຍເງິນຝາກທະນາຄານອື່ນຢູ່ຕ່າງປະເທດ

5101322 ດອກເບ້ຍເງິນໃຫ້ກູ້ຢືມແກ່ທະນາຄານອື່ນຢູ່ຕ່າງປະເທດ

51014 ດອກເບ້ຍຮັບຈາກເງິນໃຫ້ກູ້ຢືມໂດຍມີມູນຄ່າຫຼັກຊັບຄ້ຳປະກັນ

510141 ດອກເບ້ຍເງິນໃຫ້ກູ້ຢືມເປັນປະຈຳວັນ

510145 ດອກເບ້ຍເງິນໃຫ້ກູ້ຢືມມີກຳນົດ

51016 ດອກເບ້ຍອື່ນໆທີ່ໄດ້ຮັບ

510161 ຄ່າໃຊ້ສິດຊື້ຄືນ ແລະ ລາຍການປະເພດດຽວກັນ

510162 ສ່ວນຜິດດ່ຽງອັດຕາດອກເບ້ຍ

510168 ລາຍຮັບດອກເບ້ຍອື່ນໆ

51018 ຄ່າທຳນຽມຕ່າງໆ ທີ່ພົວພັນກັບການເຄື່ອນໄຫວລະຫວ່າງທະນາຄານ

51019 ໜີ້ຕ້ອງຮັບທວງຍາກ

ບັນຊີ 51011 ໃຊ້ເພື່ອບັນທຶກຈຳນວນເງິນລາຍຮັບທີ່ພົວພັນກັບວັດຖຸມີຄ່າ ໃນກໍລະນີທີ່ມີກຳໄລຈາກການຂາຍວັດຖຸມີຄ່າ.

**ເບື້ອງມີຈິດ**: ຈຳນວນເງິນລາຍຮັບຈາກການຂາຍວັດຖຸມີຄ່າ

**ເບື້ອງໜີ້ຈິດ**: ຈຳນວນເງິນຫຼຸດຜ່ອນ ຫຼື ຈຳນວນເງິນລວມລາຍຮັບໃນປີ ເພື່ອໂອນໄປບັນຊີ 3901

**ຍອດເຫຼືອມີ**: ສະແດງເຖິງຈຳນວນເງິນລາຍຮັບໃນເດືອນ ຫຼື ປີ

ບັນຊີ 51012 ແລະ 51013 ໃຊ້ເພື່ອບັນທຶກຈຳນວນເງິນລາຍຮັບດອກເບ້ຍ ຮັບຈາກທະນາຄານກາງ, ສຳນັກງານ ໄປສະນີ ແລະ ຄັງເງິນແຫ່ງຊາດ, ດອກເບ້ຍເງິນຝາກ, ດອກເບ້ຍເງິນໃຫ້ກູ້ຢືມທະນາຄານ ທີ່ຢູ່ພາຍໃນ ແລະ ຕ່າງປະເທດ.

**ເບື້ອງມີຈິດ**: ຈຳນວນເງິນລາຍຮັບດອກເບ້ຍປະເພດຂອງເງິນຝາກ ແລະ ດອກເບ້ຍເງິນໃຫ້ກູ້ຢືມ

**ເບື້ອງໜີ້ຈິດ**: ຈຳນວນເງິນຫຼຸດຜ່ອນ ຫຼື ຈຳນວນເງິນລວມລາຍຮັບໃນປີ ເພື່ອໂອນໄປບັນຊີ 3901

**ຍອດເຫຼືອມີ**: ສະແດງເຖິງຈຳນວນເງິນລາຍຮັບໃນເດືອນ ຫຼື ໃນປີ

ບັນຊີ 51014 ໃຊ້ເພື່ອບັນທຶກຈຳນວນເງິນດອກເບ້ຍເງິນໃຫ້ກູ້ຢືມໂດຍມີມູນຄ່າຫຼັກຊັບຄ້ຳປະກັນຈາກລູກຄ້າ ເປັນປະຈຳວັນ ແລະ ມີກຳນົດ.

**ເບື້ອງມີ ຈິດ**: ຈຳນວນເງິນລາຍຮັບດອກເບ້ຍ

**ເບື້ອງໜີ້ຈິດ**: ຈຳນວນເງິນຫຼຸດຜ່ອນ ຫຼື ຈຳນວນເງິນລາຍຮັບໃນປີເພື່ອໂອນໄປບັນຊີ 3901

**ຍອດເຫຼືອມີ**: ສະແດງເຖິງຈຳນວນເງິນຍອດເຫຼືອລາຍຮັບຂອງແຕ່ລະປະເພດ

ບັນຊີ 51016, 51018 ແລະ 51019 ໃຊ້ເພື່ອບັນທຶກຈຳນວນເງິນດອກເບ້ຍອື່ນໆທີ່ໄດ້ຮັບ, ຄ່າທຳນຽມຕ່າງໆທີ່ເຄື່ອນໄຫວລະຫວ່າງທະນາຄານ ແລະ ດອກເບ້ຍໜີ້ທວງຍາກ.

**ເບື້ອງ ມີຈິດ**: ຈຳນວນເງິນລາຍຮັບດອກເບ້ຍ, ດອກເບ້ຍໜີ້ທວງຍາກ ແລະ ຄ່າທຳນຽມອື່ນໆ

**ເບື້ອງໜີ້ຈິດ**: ຈຳນວນເງິນຫຼຸດຜ່ອນ ຫຼື ຈຳນວນເງິນລາຍຮັບໃນປີເພື່ອໂອນໄປບັນຊີ 3901

**ຍອດເຫຼືອມີ**: ສະແດງເຖິງຈຳນວນເງິນລາຍຮັບໃນເດືອນ ຫຼື ໃນປີ .

5102 ລາຍຮັບຈາກການເຄື່ອນໄຫວກັບລູກຄ້າ

51021 ດອກເບ້ຍໜີ້ຕ້ອງຮັບການຄ້າ ແລະ ເງິນໃຫ້ກູ້ຢືມແກ່ລູກຄ້າ

510211 ດອກເບ້ຍບ້ວງໜີ້ຕ້ອງຮັບການຄ້າ

5102111 ດອກເບ້ຍຮັບຈາກການຊື້ຫຼຸດໃບຢັ້ງຢືນການຄ້າ

5102112 ດອກເບ້ຍຮັບຈາກໜີ້ຕ້ອງຮັບການຄ້າອື່ນໆ

510212 ດອກເບ້ຍບ້ວງສິນເຊື່ອເພື່ອການສົ່ງອອກ

510213 ດອກເບ້ຍສິນເຊື່ອຄັງເງິນລວມ

5102131 ດອກເບ້ຍສິນເຊື່ອເພື່ອການຂາຍຜ່ອນ

5102132 ດອກເບ້ຍເງິນໃຫ້ກູ້ຢືມແກ່ບຸກຄົນທົ່ວໄປ

5102133 ດອກເບ້ຍສິນເຊື່ອເພື່ອນຳໃຊ້ບັດເຄຣດິດ

5102134 ດອກເບ້ຍສິນເຊື່ອເພື່ອປະກອບທຶນ

5102135 ດອກເບ້ຍສິນເຊື່ອຕາມລະດູ

5102136 ດອກເບ້ຍສິນເຊື່ອຄັງເງິນລວມອື່ນໆ

510214 ດອກເບ້ຍບ້ວງສິນເຊື່ອເພື່ອປະກອບວັດຖຸເຕັກນິກ

510215 ດອກເບ້ຍບ້ວງສິນເຊື່ອເພື່ອການເຄຫາສະຖານ

510216 ດອກເບ້ຍສິນເຊື່ອອື່ນໆປ່ອຍໃຫ້ລູກຄ້າ

510217 ດອກເບ້ຍບັນຊີເງິນເບີກເກີນບັນຊີ

51023 ດອກເບ້ຍເງິນໃຫ້ກູ້ຢືມແກ່ລູກຄ້າວົງການການເງິນ

510231 ດອກເບ້ຍເງິນໃຫ້ກູ້ເປັນປະຈຳວັນ

510235 ດອກເບ້ຍເງິນໃຫ້ກູ້ຢືມມີກຳນົດ

5102351 ເງິນໃຫ້ກູ້ຢືມໄລຍະບໍ່ເກີນ 1 ປີ

5102352 ເງິນໃຫ້ກູ້ຢືມໄລຍະເກີນ 1 ປີ ແຕ່ບໍ່ເກີນ 5 ປີ

5102353 ເງິນໃຫ້ກູ້ຢືມໄລຍະເກີນ 5 ປີ ຂຶ້ນໄປ

51024 ດອກເບ້ຍເງິນໃຫ້ກູ້ຢືມໂດຍມີມູນຄ່າໃບຢັ້ງຢືນຊັບຄ້ຳປະກັນ

510241 ດອກເບ້ຍເງິນໃຫ້ກູ້ຢືມເປັນປະຈຳວັນ

510245 ດອກເບ້ຍເງິນໃຫ້ກູ້ຢືມມີກຳນົດ

51026 ດອກເບ້ຍອື່ນໆ

510261 ຄ່າໃຊ້ສິດຊື້ຄືນໄດ້ ແລະ ລາຍການປະເພດດຽວກັນ

510262 ດອກເບ້ຍຕິດບວກ/ດອກເບ້ຍຕິດລົບ

510268 ລາຍຮັບດອກເບ້ຍອື່ນໆ

51028 ຄ່າທຳນຽມຕ່າງໆ ທີ່ພົວພັນກັບການເຄື່ອນໄຫວກັບລູກຄ້າ

510281 ຄ່າທຳນຽມກັບແຊັກເດີນທາງ, ແຊັກທະນາຄານ, ບັດເຄຣດິດ

510282 ຄ່າທຳນຽມກ່ຽວກັບໜັງສືສິນເຊື່ອ

510283 ຄ່າທຳນຽມກ່ຽວກັບໜັງສືຄ້ຳປະກັນ

510284 ຄ່າທຳນຽມກ່ຽວກັບໂອນເງິນ

510285 ຄ່າທຳນຽມກ່ຽວກັບການຢັ້ງຢືນແຊັກ

510286 ຄ່າທຳນຽມກ່ຽວກັບການຖອນເງິນຕາຕ່າງປະເທດເປັນເງິນສົດ

510287 ຄ່າທຳນຽມກ່ຽວກັບເງິນໃຫ້ກູ້ຢືມ

510288 ລາຍຮັບຄ່າທຳນຽມອື່ນໆ

51029 ດອກເບ້ຍໜີ້ທວງຍາກ

ບັນຊີ 51021, 51023, 51024, 51026, 51028, 51029 ໃຊ້ເພື່ອບັນທຶກຈຳນວນເງິນລາຍຮັບດອກເບ້ຍທີ່ໄດ້ຮັບໜີ້ຕ້ອງຮັບການຄ້າ ແລະ ເງິນໃຫ້ກູ້ຢືມແກ່ລູກຄ້າລາຍຮັບດອກເບ້ຍເງິນໃຫ້ກູ້ຢືມແກ່ລູກຄ້າວິງການການເງິນ, ລາຍຮັບດອກເບ້ຍເງິນໃຫ້ກູ້ຢືມໂດຍມີມູນຄ່າໃບຢັ້ງຢືນຊັບຄ້ຳປະກັນ, ດອກເບ້ຍ ແລະ ຄ່າທຳນຽມທີ່ພົວພັນກັບການເຄື່ອນໄຫວກັບລູກຄ້າ, ດອກເບ້ຍຈາກໜີ້ຕ້ອງຮັບທວງຍາກ.

**ເບື້ອງ ມີຈິດ**: ຈຳນວນລາຍຮັບດອກເບ້ຍແຕ່ລະປະເພດລາຍຮັບ ແລະ ກຳນົດເວລາ

**ເບື້ອງໜີ້ຈິດ**: ຈຳນວນເງິນຫຼຸດຜ່ອນ ຫຼື ຈຳນວນລາຍຮັບໃນປີເພື່ອໂອນໄປບັນຊີ 3901

**ຍອດເຫຼືອມີ**: ສະແດງຈຳນວນເງິນຍອດເຫຼືອລາຍຮັບຂອງແຕ່ລະປະເພດ

**5103 ດອກເບ້ຍຫຼັກຊັບ**

51031 ດອກເບ້ຍຫຼັກຊັບທີ່ໄດ້ຊື້ໂດຍມີສັນຍາຂາຍຄືນ

510311 ດອກເບ້ຍຫຼັກຊັບທີ່ໄດ້ຊື້ໂດຍມີສັນຍາຂາຍຄືນໃຫ້ທະນາຄານອື່ນ

510312 ດອກເບ້ຍຫຼັກຊັບທີ່ໄດ້ຊື້ໂດຍມີສັນຍາຂາຍຄືນໃຫ້ລູກຄ້າ

51032 ດອກເບ້ຍຫຼັກຊັບເພື່ອຄ້າ

510321 ກຳໄລຈາກຫຼັກຊັບເພື່ອຄ້າ

510327 ດອກເບ້ຍຫຼັກຊັບເພື່ອຄ້າທີ່ໄດ້ໃຫ້ກູ້ຢືມ

51033 ລາຍຮັບຈາກຫຼັກຊັບຊື້ເພື່ອຂາຍ

510331 ດອກເບ້ຍຫຼັກຊັບຊື້ເພື່ອຂາຍ

510332 ສ່ວນຫຼຸດມູນຄ່າທີ່ໄດ້ແບ່ງສ່ວນ

510333 ເງິນປັນຜົນ ແລະ ລາຍຮັບປະເພດດຽວກັນ

510336 ກຳໄລຈາກການຂາຍຫຼັກຊັບຊື້ເພື່ອຂາຍ

510337 ດອກເບ້ຍຫຼັກຊັບຊື້ເພື່ອຂາຍທີ່ໄດ້ໃຫ້ກູ້ຢືມ

51034 ລາຍຮັບຈາກຫຼັກຊັບລົງທຶນ

510341 ດອກເບ້ຍຫຼັກຊັບທີ່ໃຫ້ລາຍໄດ້ຄົງທີ່

510342 ສ່ວນຫຼຸດມູນຄ່າທີ່ໄດ້ແບ່ງສ່ວນ

510347 ດອກເບ້ຍຫຼັກຊັບລົງທຶນທີ່ໄດ້ໃຫ້ກູ້ຢືມ

51036 ລາຍຮັບຈາກໜີ້ຕ້ອງສົງໃສທີ່ກໍາເນີດຈາກຫຼັກຊັບ

51037 ລາຍຮັບອື່ນໆຈາກການເຄື່ອນໄຫວດ້ານຫຼັກຊັບ

51038 ຄ່າທໍານຽມຕ່າງໆທີ່ພົວພັນກັບຫຼັກຊັບ

ບັນຊີ 51031, 51032, 51033, 51034, 51036, 51037, 51038 ໃຊ້ເພື່ອບັນທຶກຈໍານວນເງິນລາຍຮັບດອກເບ້ຍຂອງຫຼັກຊັບທີ່ໄດ້ຊື້ໂດຍມີສັນຍາຂາຍຄືນ ແລະ ລາຍຮັບປະເພດດຽວກັນທີ່ໄດ້ຮັບ ໃນກໍລະນີມີການມອບໃບຢັ້ງຢືນຊັບຄໍ້າປະກັນ, ລາຍຮັບທີ່ໄດ້ຮັບຈາກຫຼັກຊັບຊື້ເພື່ອຂາຍ ໃນຮູບແບບດອກເບ້ຍ, ສ່ວນຫຼຸດມູນຄ່າທີ່ໄດ້ແບ່ງສ່ວນ, ເງິນປັນຜົນ ແລະ ລາຍຮັບປະເພດດຽວກັນ, ລາຍຮັບຈາກຫຼັກຊັບລົງທຶນ ໃນຮູບແບບດອກເບ້ຍ, ສ່ວນຫຼຸດມູນຄ່າທີ່ໄດ້ແບ່ງສ່ວນ, ລາຍຮັບໜີ້ຕ້ອງສົງໃສທີ່ກໍາເນີດ ຈາກຫຼັກຊັບ, ລາຍຮັບຄ່າທໍານຽມຮັບຈາກການເຄື່ອນໄຫວກ່ຽວກັບຫຼັກຊັບ, ລາຍຮັບອື່ນໆຈາກການເຄື່ອນໄຫວດ້ານຫຼັກຊັບ

**ເບື້ອງ ມີຈິດ:** ຈໍານວນເງິນລາຍຮັບດອກເບ້ຍ ແລະ ລາຍຮັບປະເພດດຽວກັນ ຈາກການເຄື່ອນໄຫວດ້ານຫຼັກຊັບ

**ເບື້ອງໜີ້ຈິດ:** ຈໍານວນຫຼຸດຜ່ອນ ຫຼື ຈໍານວນເງິນລາຍຮັບທັງໝົດໃນປີເພື່ອໂອນໄປບັນຊີ 3901

**ຍອດເຫຼືອມີ:** ສະແດງເຖິງຍອດເຫຼືອລາຍຮັບໃນເດືອນ ຫຼື ປີ

5104 ລາຍຮັບຈາກການໃຫ້ເຊົ່າ ແລະ ເຊົ່າ - ຊື້

51041 ລາຍຮັບຈາກສິນເຊື່ອເຊົ່າ - ຊື້

510411 ຄ່າເຊົ່າ

510412 ເກັບຄືນເງິນແຮສະເພາະ

510413 ເກັບຄືນຄ່າເສື່ອມມູນຄ່າ ຊ.ຄ.ທ ໃຫ້ເຊົ່າ - ຊື້

510416 ກໍາໄລຈາກການຂາຍ ຊ.ຄ.ທ ໃຫ້ເຊົ່າ - ຊື້

510418 ລາຍຮັບອື່ນໆ ຈາກການເຄື່ອນໄຫວສິນເຊື່ອ ເຊົ່າ - ຊື້

51042 ລາຍຮັບຈາກການໃຫ້ເຊົ່າທໍາມະດາ

510421 ຄ່າເຊົ່າ

510423 ເກັບຄືນເງິນແຮກ່ຽວກັບການໃຫ້ເຊົ່າທໍາມະດາ

512425 ເກັບຄືນຄ່າເສື່ອມມູນຄ່າ ຊ.ຄ.ທ ໃຫ້ເຊົ່າ

510426 ກໍາໄລຈາກການຂາຍ ຊ.ຄ.ທ ໃຫ້ເຊົ່າທໍາມະດາ

510428 ລາຍຮັບອື່ນໆຈາກການໃຫ້ເຊົ່າທໍາມະດາ

51049 ກ່ຽວກັບສິນເຊື່ອເຊົ່າຊື້ ແລະ ເຊົ່າທໍາມະດາ

510491 ກ່ຽວກັບສິນເຊື່ອເຊົ່າຊື້

510492 ກ່ຽວກັບການໃຫ້ເຊົ່າທໍາມະດາ

ບັນຊີ 51041, 51042 ໃຊ້ເພື່ອບັນທຶກຈຳນວນເງິນລາຍຮັບຈາກສິນເຊື່ອເຊົ່າ - ຊື້ ແລະ ລາຍຮັບຈາກການໃຫ້ເຊົ່າທຳມະດາ, ເກັບຄືນຄ່າເສື່ອມມູນຄ່າ ຊ.ຄ.ທ ທີ່ໄດ້ໃຫ້ເຊົ່າ - ຊື້ ແລະ ເຊົ່າທຳມະດາ, ກຳໄລຈາກການຂາຍ ຊ.ຄ.ທ ທີ່ໄດ້ໃຫ້ເຊົ່າ-ຊື້ ແລະ ໃຫ້ເຊົ່າທຳມະດາ ແລະ ລາຍຮັບຈາກການໃຫ້ເຊົ່າ - ຊື້ ແລະ ໃຫ້ເຊົ່າທຳມະດາ.

**ເບື້ອງມີ ຈິດ:** ຈຳນວນເງິນລາຍຮັບຈາກການໃຫ້ເຊົ່າ ແລະ ເຊົ່າ - ຊື້
**ເບື້ອງໜີ້ຈິດ:** ຈຳນວນຫຼຸດຜ່ອນ ຫຼື ຈຳນວນເງິນລາຍຮັບທັງໝົດໃນປີເພື່ອໂອນໄປບັນຊີ 3901
**ຍອດເຫຼືອມີ:** ສະແດງເຖິງຍອດເຫຼືອລາຍຮັບຈາກມູນຄ່າເຊົ່າ-ຊື້ ແລະເຊົ່າທຳມະດາ ໃນເດືອນ ຫຼື ປີ

5105 ລາຍຮັບຈາກໜີ້ຕ້ອງຮັບສຳຮອງ ແລະ ເງິນລົງທຶນ
51051 ດອກເບ້ຍເງິນໃຫ້ກູ້ຢືມສຳຮອງແກ່ທະນາຄານອື່ນ
510511 ດອກເບ້ຍເງິນໃຫ້ກູ້ຢືມສຳຮອງມີກຳນົດ
510512 ດອກເບ້ຍເງິນໃຫ້ກູ້ຢືມສຳຮອງບໍ່ມີກຳນົດ
51052 ດອກເບ້ຍເງິນໃຫ້ກູ້ຢືມສຳຮອງແກ່ລູກຄ້າ
510521 ດອກເບ້ຍເງິນໃຫ້ກູ້ຢືມສຳຮອງມີກຳນົດ
510522 ດອກເບ້ຍເງິນໃຫ້ກູ້ຢືມສຳຮອງບໍ່ມີກຳນົດ
51053 ເງິນປັນຜົນຈາກເງິນໃຫ້ກູ້ຢືມສຳຮອງ

ບັນຊີ 5105 ໃຊ້ບັນທຶກຈຳນວນເງິນດອກເບ້ຍຈາກການໃຫ້ກູ້ຢືມສຳຮອງແກ່ທະນາຄານ ແລະ ລູກຄ້າ ມີກຳນົດ ແລະ ບໍ່ມີກຳນົດ, ເງິນປັນຜົນທີ່ໄດ້ຮັບຈາກການຮ່ວມປະກອບທຶນ.

ເບື້ອງມີ ຈິດ : ລາຍຮັບຈາກໜີ້ຕ້ອງຮັບສຳຮອງ ແລະ ເງິນລົງທຶນ
ເບື້ອງໜີ້ຈິດ : ຈຳນວນຫຼຸດຜ່ອນ ຫຼື ຈຳນວນເງິນລາຍຮັບໃນປີທັງໝົດເພື່ອໂອນໄປບັນຊີ 3901
ຍອດເຫຼືອມີ : ສະແດງເຖິງຍອດເຫຼືອໜີ້ຕ້ອງຮັບສຳຮອງ ແລະ ເງິນລົງທຶນໃນເດືອນ ຫຼື ປີ

5106 ລາຍຮັບຈາກການເຄື່ອນໄຫວແລກປ່ຽນເງິນຕາຕ່າງປະເທດ
51061 ກຳໄລຈາກການແລກປ່ຽນເງິນຕາຕ່າງປະເທດ
51068 ຄ່າທຳນຽມໃນການແລກປ່ຽນເງິນຕາຕ່າງປະເທດ

ບັນຊີ 5106 ໃຊ້ເພື່ອບັນທຶກລາຍການເຄື່ອນໄຫວແລກປ່ຽນເງິນຕາຕ່າງປະເທດ ທີ່ມີຜົນໄດ້ຮັບເປັນກຳໄລຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ.

**ເບື້ອງມີ ຈິດ:** ລາຍຮັບຈາກການເຄື່ອນໄຫວແລກປ່ຽນເງິນຕາຕ່າງປະເທດ
**ເບື້ອງໜີ້ຈິດ:** ຈຳນວນຫຼຸດຜ່ອນ ຫຼື ຈຳນວນລາຍຮັບໃນປີທັງໝົດເພື່ອໂອນໄປບັນຊີ 3901
**ຍອດເຫຼືອມີ:** ສະແດງເຖິງຍອດເຫຼືອລາຍຮັບຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ

5107 ລາຍຮັບຈາກການເຄື່ອນໄຫວນອກໃບສະຫຼຸບຊັບສິນບັດ

51071 ລາຍຮັບຈາກຄຳໝັ້ນສັນຍາທີ່ໄດ້ໃຫ້

510711 ລາຍຮັບຈາກຄຳໝັ້ນສັນຍາປະກອບທຶນທີ່ໄດ້ໃຫ້ແກ່ທະນາຄານ ແລະ ສະຖາບັນກ/ງ

510712 ລາຍຮັບຈາກຄຳໝັ້ນສັນຍາປະກອບທຶນທີ່ໄດ້ໃຫ້ແກ່ລູກຄ້າ

51072 ລາຍຮັບຈາກຄຳໝັ້ນສັນຍາຄ້ຳປະກັນທີ່ໄດ້ໃຫ້

510721 ລາຍຮັບຈາກຄຳໝັ້ນສັນຍາຄ້ຳປະກັນທີ່ໄດ້ໃຫ້ແກ່ສະຖາບັນການເງິນ

510722 ລາຍຮັບຈາກຄຳໝັ້ນສັນຍາຄ້ຳປະກັນທີ່ໄດ້ໃຫ້ແກ່ລູກຄ້າ

51073 ລາຍຮັບຈາກຄຳໝັ້ນສັນຍາດ້ານຫຼັກຊັບ

510731 ລາຍຮັບຈາກຄຳໝັ້ນສັນຍາດ້ານຫຼັກຊັບ

510738 ຄ່າທຳນຽມທີ່ພົວພັນກັບຄຳໝັ້ນສັນຍາດ້ານຫຼັກຊັບ

51074 ລາຍຮັບທີ່ພົວພັນກັບເອກະສານອະນຸພັນ

510741 ລາຍຮັບເອກະສານອະນຸພັນທີ່ກຳນົດອັດຕາດອກເບ້ຍ

510742 ລາຍຮັບຈາກເອກະສານອະນຸພັນທີ່ກຳນົດອັດຕາແລກປ່ຽນ

510746 ລາຍຮັບຈາກເອກະສານອະນຸພັນທີ່ກຳນົດເງື່ອນໄຂອື່ນໆ

510748 ຄ່າທຳນຽມທີ່ພົວພັນກັບເອກະສານອະນຸພັນ

51078 ລາຍຮັບຈາກຄຳໝັ້ນສັນຍາອື່ນໆ

ບັນຊີ 51071, 51072, 51073, 51074, 51078 ໃຊ້ເພື່ອບັນທຶກຈຳນວນເງິນລາຍຮັບຈາກຄຳໝັ້ນສັນຍາປະກອບທຶນທີ່ໄດ້ໃຫ້ແກ່ທະນາຄານ, ສະຖາບັນການເງິນ ແລະ ລູກຄ້າ, ລາຍຮັບຈາກຄຳໝັ້ນສັນຍາຄ້ຳປະກັນໃຫ້ແກ່ສະຖາບັນການເງິນ ແລະ ລູກຄ້າ, ລາຍຮັບທີ່ພົວພັນກັບເອກະສານອະນຸພັນທີ່ກຳນົດເງື່ອນໄຂຊຶ່ງໄຈ້ແຍກລາຍຮັບຈາກອັດຕາເມດອກເບ້ຍ ກຳນົດອັດຕາແລກປ່ຽນເງິນຕາຕ່າງປະເທດ ແລະ ເອກະສານການເງິນມີກຳນົດອື່ນໆ ລາຍຮັບຈາກຄຳໃຫ້ສັນຍາທີ່ໄດ້ໃຫ້ອື່ນໆ ຈາກລາຍການເຄື່ອນໄຫວນອກໃບສະຫຼຸບຊັບສິນບັດ

**ເບື້ອງມີ ຈິດ**: ຈຳນວນເງິນລາຍຮັບຈາກການເຄື່ອນໄຫວນອກໃບສະຫຼຸບຊັບສິນບັດ
**ເບື້ອງໜີ້ຈິດ**: ຈຳນວນຫຼຸດຜ່ອນ ຫຼື ຈຳນວນເງິນລາຍຮັບທັງໝົດໃນປີເພື່ອໂອນໄປບັນຊີ 3901
**ຍອດເຫຼືອມີ**: ສະແດງເຖິງຍອດເຫຼືອລາຍຮັບໃນເດືອນ ຫຼື ປີ

5108 ລາຍຮັບຈາກການໃຫ້ບໍລິການທາງດ້ານການເງິນ

51081 ຄ່າທຳນຽມຈາກຫຼັກຊັບທີ່ໄດ້ຄຸ້ມຄອງ ຫຼື ທີ່ໄດ້ຮັບຝາກ

510811 ຄ່າຮັກສາຫຼັກຊັບຂອງລູກຄ້າ

510818 ຄ່າທຳນຽມອື່ນໆກ່ຽວກັບຫຼັກຊັບທີ່ໄດ້ຄຸ້ມຄອງ ຫຼື ທີ່ໄດ້ຮັບຝາກ

51082 ຄ່າທຳນຽມກ່ຽວກັບການເຄື່ອນໄຫວດ້ານຫຼັກຊັບຕາງລູກຄ້າ

510821 ຄ່າທຳນຽມໃນການເຄື່ອນໄຫວຊື້ - ຂາຍຫຼັກຊັບຕາງລູກຄ້າ

510828 ຄ່າທຳນຽມອື່ນໆໃນການເຄື່ອນໄຫວດ້ານຫຼັກຊັບຕາງລູກຄ້າ

51083 ຄ່າທຳນຽມໃຫ້ຄຳປຶກສາແກ່ລູກຄ້າ

51085 ລາຍຮັບຈາກພາຫະນະການຊຳລະເງິນ

51088 ລາຍຮັບອື່ນໆຈາກການບໍລິການດ້ານການເງິນ

5109 ລາຍຮັບອື່ນໆຈາກການທຸລະກິດທະນາຄານ

51092 ພູດສ່ວນລາຍຮັບຈາກການດໍາເນີນທຸລະກິດທະນາຄານ

51093 ລາຍຈ່າຍທີ່ໄດ້ຮັບຄືນ

51094 ລາຍຮັບຈາກການໂອນລາຍຈ່າຍທຸລະກິດທະນາຄານ

51095 ລາຍຮັບກ່ຽວກັບຊັບສິນລໍຖ້າການຂາຍ

51098 ລາຍຮັບອື່ນໆຈາກການທຸລະກິດທະນາຄານ

ບັນຊີ 5108 ແລະ 5109 ໃຊ້ເພື່ອບັນທຶກ ຈໍານວນລາຍຮັບທີ່ໄດ້ຮັບຈາກການ ໃຫ້ບໍລິການດ້ານການເງິນ ໂດຍສະເພາະຄ່າທໍານຽມກ່ຽວກັບຫຼັກຊັບທີ່ໄດ້ຄຸ້ມຄອງ ຫຼື ທີ່ໄດ້ຮັບຝາກ, ຄ່າທໍານຽມກ່ຽວກັບການເຄື່ອນໄຫວຫຼັກຊັບແທນລູກຄ້າ, ຄ່າທໍານຽມກ່ຽວກັບກິດຈະການໃຫ້ຊ່ວຍເຫຼືອ ແລະ ໃຫ້ຄໍາປຶກສາ, ລາຍຮັບຈາກພາຫະນະຊໍາລະເງິນ, ລາຍຮັບອື່ນໆຈາກການບໍລິການດ້ານການເງິນ ແລະ ລາຍຮັບຈາກການທຸລະກິດທະນາຄານ ເປັນຕົ້ນແມ່ນລາຍຮັບຈາກການອອກໃບເກັບເງິນຄັ້ງໃໝ່ ຮັບຈາກການໂອນລາຍຈ່າຍທຸລະກິດທະນາຄານ ແລະ ອື່ນໆ.

**ເບື້ອງມີ ຈິດ:** ຈໍານວນເງິນລາຍຮັບໄຈ້ແຍກແຕ່ລະປະເພດລາຍຮັບ

**ເບື້ອງໜີ້ຈິດ:** ຈໍານວນຫຼຸດຜ່ອນ ຫຼື ຈໍານວນເງິນລາຍຮັບທັງໝົດໃນປີເພື່ອໂອນໄປບັນຊີ 3901

**ຍອດເຫຼືອມີ:** ສະແດງຍອດເຫຼືອຈໍານວນເງິນລາຍຮັບໃນເດືອນ ຫຼື ປີ

## 550 ລາຍຮັບສໍາຮອງອື່ນໆ

5501 ລາຍຮັບຈາກລາຍຈ່າຍທີ່ໄດ້ຖືກອອກໃບເກັບເງິນຄືນໃໝ່

55011 ໃຫ້ແກ່ບໍລິສັດໃນກຸ່ມ

55012 ໃຫ້ແກ່ວິສາຫະກິດອື່ນໆ

5502 ພູດສ່ວນລາຍຮັບຈາກການດໍາເນີນທຸລະກິດທີ່ບໍ່ແມ່ນທະນາຄານຮ່ວມກັນ

5503 ພູດສ່ວນລາຍຮັບທີ່ໄດ້ຮັບຈາກສໍານັກງານໃຫຍ່(ໃຊ້ຢູ່ສາຂາ)

5504 ພູດສ່ວນລາຍຮັບທີ່ໄດ້ຮັບຈາກສາຂາ (ໃຊ້ຢູ່ສໍານັກງານໃຫຍ່)

5506 ກໍາໄລຈາກການຂາຍ ຫຼື ສະສາງ ຊ.ຄ.ທ

55061 ກໍາໄລຈາກການຂາຍ ຫຼື ສະສາງຊ.ຄ.ທ ບໍ່ມີຕົວຕົນ

55062 ກໍາໄລຈາກການຂາຍ ຫຼື ສະສາງ ຊ.ຄ.ທ ມີຕົວຕົນ

55063 ກໍາໄລຈາກການຂາຍ ຫຼື ສະສາງ ຊ.ຄ.ທ ການເງິນ

550631 ກໍາໄລຈາກການຂາຍເງິນລົງທຶນໃນວິສາຫະກິດໃນກຸ່ມ

550632 ກໍາໄລຈາກການຂາຍເງິນລົງທຶນ

550633 ກໍາໄລຈາກການຂາຍຫຼັກຊັບໃນກິດຈະການຄຸ້ມຄອງຫຼັກຊັບ

550634 ກໍາໄລຈາກການຂາຍຫຼັກຊັບລົງທຶນ

5508 ລາຍຮັບສໍາຮອງອື່ນໆ

55081 ລາຍໄດ້ຈາກອະສັງຫາລິມະຊັບທີ່ພົວພັນກັບການເຄື່ອນໄຫວທຸລະກິດ

55082 ລາຍຮັບຈາກກິດຈະການທີ່ບໍ່ແມ່ນການທະນາຄານ

55083 ພູດສ່ວນເງິນຊ່ວຍໜູນກໍ່ສ້າງພື້ນຖານ

55084 ລາຍຮັບສໍາຮອງອື່ນໆ

ບັນຊີ 550 ໃຊ້ເພື່ອບັນທຶກຈຳນວນລາຍຮັບສຳຮອງອື່ນໆ ໃນການທຸລະກິດ ເປັນຕົ້ນລາຍຮັບຈາກລາຍຈ່າຍທີ່ໄດ້ຖືກອອກໃບເກັບເງິນຄັ້ງໃໝ່, ພູດສ່ວນລາຍຮັບຈາກການດຳເນີນທຸລະກິດທີ່ບໍ່ແມ່ນທະນາຄານຮ່ວມ, ພູດສ່ວນລາຍຮັບທີ່ໄດ້ຮັບຈາກສຳນັກງານໃຫຍ່ ແລະ ສາຂາ ກຳໄລຈາກການຂາຍ ຫຼື ສະສາງ ຊ.ຄ.ທ ແລະ ລາຍຮັບສຳຮອງອື່ນໆ

**ເບື້ອງມີ ຈົດ**: ຈຳນວນເງິນລາຍຮັບອື່ນໆໃນການທຸລະກິດ
**ເບື້ອງໜີ້ຈົດ**: ຈຳນວນຫຼຸດຜ່ອນ ຫຼື ຈຳນວນເງິນລາຍຮັບໃນປີເພື່ອໂອນໄປບັນຊີ 3901
**ຍອດເຫຼືອມີ**: ສະແດງເຖິງຍອດເຫຼືອຂອງບັນຊີລາຍຮັບອື່ນໆໃນການທຸລະກິດ

## 560 ເກັບຄືນຄ່າເສື່ອມມູນຄ່າຊັບສິນຄົງທີ່

5601 ເກັບຄືນຄ່າເສື່ອມມູນຄ່າ ຊ.ຄ.ທ ທີ່ບໍ່ມີ ແລະ ມີຕົວຕົນ ໃນການທຸລະກິດ
- 56011 ເກັບຄືນຄ່າເສື່ອມມູນຄ່າ ຊ.ຄ.ທ ບໍ່ມີຕົວຕົນ
- 56012 ເກັບຄືນຄ່າເສື່ອມມູນຄ່າ ຊ.ຄ.ທ ມີຕົວຕົນ

5602 ເກັບຄືນຄ່າເສື່ອມມູນຄ່າ ຊ.ຄ.ທ ທີ່ບໍ່ມີ ແລະ ມີຕົວຕົນ ນອກການທຸລະກິດ
- 56021 ເກັບຄືນຄ່າເສື່ອມມູນຄ່າ ຊ.ຄ.ທ ບໍ່ມີຕົວຕົນ
- 56022 ເກັບຄືນຄ່າເສື່ອມມູນຄ່າ ຊ.ຄ.ທ ມີຕົວຕົນ

ບັນຊີ 560 ໃຊ້ເພື່ອບັນທຶກ ຈຳນວນເງິນເກັບຄືນຄ່າເສື່ອມມູນຄ່າ ຈາກລາຍການທີ່ໄດ້ຫັກໄວ້ເປັນຄ່າເສື່ອມມູນຄ່າຊັບສົມບັດຄົງທີ່ ບໍ່ມີຕົວຕົນ ແລະ ມີຕົວຕົນ ໃນການ ແລະ ນອກການທຸລະກິດ.

**ເບື້ອງມີ ຈົດ**: ຈຳນວນເງິນເກັບຄືນຄ່າເສື່ອມມູນຄ່າ ຈາກລາຍການທີ່ໄດ້ຫັກໄວ້ເປັນຄ່າເສື່ອມມູນຄ່າ
**ເບື້ອງໜີ້ຈົດ**: ຈຳນວນຫຼຸດຜ່ອນ ຫຼື ຈຳນວນເງິນເກັບຄືນຄ່າເສື່ອມມູນຄ່າທັງໝົດຂອງປີເພື່ອໂອນໄປບັນຊີ 3901
**ຍອດເຫຼືອມີ**: ສະແດງເຖິງຍອດເຫຼືອຈຳນວນເງິນເກັບຄືນຄ່າເສື່ອມມູນຄ່າໃນເດືອນຫຼືປີ

## 570 ເກັບຄືນເງິນແຮ ແລະ ໜີ້ທວງຍາກທີ່ໄດ້ຈົດເປັນການຂາດທຶນ

5701 ເກັບຄືນເງິນແຮຄ່າເສື່ອມມູນຄ່າໜີ້ທວງຍາກ
- 57011 ເກັບຄືນເງິນແຮຄ່າເສື່ອມມູນຄ່າໜີ້ທວງຍາກຈາກສະຖາບັນການເງິນ
- 57012 ເກັບຄືນເງິນແຮຄ່າເສື່ອມມູນຄ່າໜີ້ທວງຍາກຈາກລູກຄ້າ
- 57013 ເກັບຄືນເງິນແຮຄ່າເສື່ອມມູນຄ່າຫຼັກຊັບທວງຍາກ
  - 570131 ກ່ຽວກັບຫຼັກຊັບທີ່ໄດ້ຊື້ໂດຍມີສັນຍາຂາຍຄືນທວງຍາກ
  - 570132 ກ່ຽວກັບຫຼັກຊັບທວງຍາກ
  - 570133 ກ່ຽວກັບຫຼັກຊັບຊື້ເພື່ອຂາຍທວງຍາກ
- 57018 ເກັບຄືນຄ່າເສື່ອມມູນຄ່າລາຍການອື່ນໆທວງຍາກ

5702 ເກັບຄືນຄ່າເສື່ອມມູນຄ່າຄັງຫຼັກຊັບ ແລະ ລາຍການເຄື່ອນໄຫວອື່ນໆ

57021 ເກັບຄືນຄ່າເສື່ອມມູນຄ່າຫຼັກຊັບຊື້ເພື່ອຂາຍ

57022 ເກັບຄືນຄ່າເສື່ອມມູນຄ່າ ຊ.ຄ.ທ ການເງິນ

570221 ເງິນລົງທຶນໃນວິສາຫະກິດໃນເຄືອ

570222 ເງິນລົງທຶນໃນບໍລິສັດຮ່ວມທຶນ

570223 ຫຼັກຊັບໃນກິດຈະການຄຸ້ມຄອງຫຼັກຊັບ

570224 ຫຼັກຊັບລົງທຶນ

57028 ເກັບຄືນຄ່າເສື່ອມມູນຄ່າລາຍການອື່ນໆ

ບັນຊີ 5701 ໃຊ້ເພື່ອບັນທຶກຈຳນວນເງິນເກັບຄືນຄ່າເສື່ອມມູນຄ່າ ໜີ້ທວງຍາກຈາກທະນາຄານ ,ສະຖາບັນການເງິນ ແລະ ລູກຄ້າ ຄ່າເສື່ອມມູນຄ່າຂອງຫຼັກຊັບ ແລະ ລາຍການທີ່ໄດ້ຫັກໄວ້ເປັນຄ່າເສື່ອມມູນຄ່າໜີ້ຕ້ອງຮັບທວງຍາກທັງໝົດ.

ບັນຊີ 5702 ໃຊ້ເພື່ອບັນທຶກຈຳນວນເງິນເກັບຄືນຄ່າເສື່ອມມູນຄ່າຄັງຫຼັກຊັບຈາກລາຍການທີ່ໄດ້ຫັກໄວ້ເປັນຄ່າເສື່ອມມູນຄ່າຂອງຫຼັກຊັບເພື່ອຄ້າ ຊັບສິນບັດຄົງທີ່ການເງິນ ແລະ ເກັບຄືນຄ່າເສື່ອມມູນຄ່າອື່ນໆ ກ່ຽວກັບລາຍການເຄື່ອນໄຫວ ຫຼັກຊັບ ເຊັ່ນ: ເອກະສານການ ເງິນທີ່ກຳນົດເງື່ອນ ໄຂທາງດ້ານຕ່າງໆ (ດອກເບ້ຍອັດຕາແລກປ່ຽນເງິນຕາຕ່າງປະເທດ ແລະ ອື່ນໆ).

**ເບື້ອງມີ ຈິດ:** ຈຳນວນເງິນເກັບຄືນຄ່າເສື່ອມມູນຄ່າຈາກລາຍການທີ່ໄດ້ຫັກໄວ້ເປັນຄ່າເສື່ອມມູນຄ່າ

**ເບື້ອງໜີ້ຈິດ:** ຈຳນວນຫຼຸດຜ່ອນ ຫຼື ຈຳນວນເງິນເກັບຄືນຄ່າເສື່ອມມູນຄ່າທັງໝົດຂອງປີເພື່ອໂອນໄປ ບັນຊີ 3901

**ຍອດເຫຼືອມີ:** ສະແດງເຖິງຍອດເຫຼືອຈຳນວນເງິນເກັບຄືນຄ່າເສື່ອມມູນຄ່າໃນເດືອນ ຫຼື ປີ

5703 ເກັບຄືນເງິນແຮເພື່ອຄວາມສ່ຽງ ແລະ ລາຍຈ່າຍ

57031 ເກັບຄືນເງິນແຮເພື່ອລາຍຈ່າຍເບ້ຍບຳນານ

57032 ເກັບຄືນເງິນແຮເພື່ອການປະຕິບັດຄຳໃຫ້ສັນຍາ

57034 ເກັບຄືນເງິນແຮເພື່ອຄວາມສ່ຽງຂອງປະເທດ

57038 ເກັບຄືນເງິນແຮເພື່ອຄວາມສ່ຽງໃນການໃຫ້ກູ້ຢືມ

5704 ເກັບຄືນເງິນແຮຕາມຂໍ້ກຳນົດ

57041 ເກັບຄືນຄວາມສ່ຽງໃນການໃຫ້ກູ້ຢືມ

570411 ເງິນໃຫ້ກູ້ຢືມແກ່ສະຖາບັນການເງິນອື່ນ

570412 ເງິນໃຫ້ກູ້ຢືມແກ່ລູກຄ້າ

570413 ເງິນໃຫ້ກູ້ຢືມແກ່ລູກຄ້າວົງການການເງິນ

57048 ເກັບຄືນເງິນແຮອື່ນໆຕາມຂໍ້ກຳນົດ

5705 ເກັບຄືນໜີ້ທວງຍາກທີ່ໄດ້ຈົດເປັນການຂາດທຶນ

ບັນຊີ 5703 ໃຊ້ເພື່ອບັນທຶກຈຳນວນເງິນເກັບຄືນຄ່າເສື່ອມມູນຄ່າທີ່ແນ່ໃສ່ປະກັນຄວາມສ່ຽງ ແລະ ລາຍຈ່າຍຊຶ່ງເຫດການໄດ້ເກີດຂື້ນ ຫຼື ພວມເກີດຂື້ນເຮັດໃຫ້ເປັນໄປໄດ້ຢ່າງຈະແຈ້ງທາງດ້ານຈຸດໝາຍ ແຕ່ການປະກົດຜົນເປັນຈິງຍັງບໍ່ທັນແນ່ນອນເທື່ອ.

ບັນຊີ 5704 ໃຊ້ເພື່ອບັນທຶກຈຳນວນເງິນເກັບຄືນຄ່າເສື່ອມມູນຄ່າ ທີ່ໄດ້ດຳເນີນການຖືກຕ້ອງຕາມ ຂໍ້ກຳນົດທາງດ້ານນິຕິບັນຍັດ, ທາງດ້ານບໍລິຫານ ແລະ ທາງດ້ານສ່ວຍສາອາກອນ.

ບັນຊີ 5705 ໃຊ້ເພື່ອບັນທຶກຈຳນວນເງິນທີ່ໄດ້ເກັບຄືນບ້ວງໜີ້ຕ້ອງຮັບ ຊຶ່ງໃນເມື່ອກ່ອນໄດ້ຖືວ່າ ເກັບຄືນບໍ່ໄດ້ຢ່າງຂາດຕົວ ແລະ ຈົດເຂົ້າເບື້ອງໜີ້ຂອງບັນຊີ 4705.

**ເບື້ອງມີ ຈົດ:** ຈຳນວນເງິນເກັບຄືນເງິນແຮເພື່ອຄວາມສ່ຽງໄພ ແລະ ລາຍຈ່າຍ ຈຳນວນເງິນເກັບຄືນເງິນແຮຕາມຂໍ້ກຳນົດຈຳນວນເງິນເກັບຄືນ ໜີ້ຕ້ອງຮັບທີ່ໄດ້ຈົດເປັນການຂາດທຶນ

**ເບື້ອງໜີ້ຈົດ:** ຈຳນວນເງິນເກັບຄືນເງິນແຮທັງໝົດໃນປີ ເພື່ອໂອນໄປບັນຊີ 3901

**ຍອດເຫຼືອມີ:** ສະແດງເຖິງຍອດເຫຼືອຈຳນວນເງິນເກັບຄືນເງິນແຮ

## 580 ລາຍຮັບບັງເອີນ (ລາຍຮັບພິເສດ)

ບັນຊີ 580 ໃຊ້ເພື່ອບັນທຶກຈຳນວນເງິນລາຍຮັບທີ່ເກີດຂື້ນໂດຍບັງເອີນ ທີ່ບໍ່ມາຈາກການດຳເນີນ ທຸລະກິດປົກກະຕິ ແລະ ບໍ່ເປັນລາຍຮັບທີ່ເກີດຂື້ນຕາມຫຼັງເຊັ່ນ: ລາຍຮັບທີ່ເກີດ ຈາກການປ່ຽນແປງວິທີ ການຕີມູນຄ່າລາຍຮັບຈາກການປັບໃໝ, ຂອງຂັວນ ແລະ ລາຍຮັບບ້ວງປີກ່ອນ.

**ເບື້ອງມີ ຈົດ:** ຈຳນວນເງິນລາຍຮັບພິເສດ

**ເບື້ອງໜີ້ຈົດ:** ຈຳນວນຫຼຸດຜ່ອນ ຫຼື ຈຳນວນເງິນລາຍຮັບທັງໝົດໃນປີເພື່ອໂອນໄປບັນຊີ 3901

**ຍອດເຫຼືອມີ:** ສະແດງເຖິງຍອດເຫຼືອຈຳນວນເງິນລາຍຮັບໃນເດືອນ ຫຼື ປີ